# ຊູຄັນທຸງອັນຍິ່ງໃຫຍ່ແຫ່ງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ
# ສາມັກຄີກັນບາກບັ່ນສູ້ຊົນ
# ເພື່ອສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານ

ບົດລາຍງານການເມືອງທີ່ສະເໜີໃນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ

ຄັ້ງທີ XX ຂອງພັກກອມມູນິດຈີນ

(ວັນທີ 16 ຕຸລາ 2022)

ສີຈິ້ນຜິງ

ບັນດາສະຫາຍ:

ນະໂອກາດນີ້, ຂ້າພະເຈົ້າຂໍຕາງໜ້າຄະນະກຳມະການສູນກາງພັກສະໄໝທີ XIX ຜ່ານບົດລາຍງານການເມືອງຕໍ່ກອງປະຊຸມ.

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XX ຂອງພັກກອມມູນິດຈີນ ແມ່ນກອງປະຊຸມຄັ້ງໜຶ່ງສຸດທີ່ມີຄວາມໝາຍສຳຄັນໃນໂອກາດທົ່ວພັກ ແລະປະຊາຊົນບັນດາເຜົ່າທົ່ວປະເທດຈີນກ້າວເຂົ້າສູ່ຂະບວນການໃໝ່ແຫ່ງການສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານ ແລະກ້າວໄປສູ່ເປົ້າໝາຍສູ້ຊົນ 100 ປີປະການທີ 2.

ຫົວຂໍ້ຫຼັກຂອງກອງປະຊຸມແມ່ນ: **ຊູຄັນທຸງອັນຍິ່ງໃຫຍ່ແຫ່ງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ, ຜັນຂະຫຍາຍແນວຄິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່ຢ່າງຮອບດ້ານ, ເສີມຂະຫຍາຍນ້ຳໃຈສ້າງຕັ້ງພັກອັນຍິ່ງໃຫຍ່, ໝັ້ນໃຈຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຮັກສາທາດແທ້ ແລະປະດິດສ້າງ, ບຸກໜ້າບືນຕົວ, ກ້າວໄປຂ້າງໜ້າດ້ວຍຄວາມກ້າຫານແລະທໍລະຫົດອົດທົນ, ສາມັກຄີກັນບາກບັ່ນສູ້ຊົນ ເພື່ອສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານ ແລະຊຸກຍູ້ການຟື້ນຟູ**

**ຄວາມຈະເລີນຮຸ່ງເຮືອງທີ່ຍິ່ງໃຫຍ່ຂອງປະຊາຊາດຈີນຢ່າງຮອບດ້ານ.**

ພັກກອມມູນິດຈີນໄດ້ເດີນຜ່ານຂະບວນວິວັດບາກບັ່ນສູ້ຊົນມາເປັນເວລາ 100 ປີແລ້ວ. ເຊິ່ງພັກເຮົາໄດ້ສຸມໃສ່ພາລະກິດອັນຍິ່ງໃຫຍ່ຂອງປະຊາຊາດຈີນ, ສຸມໃສ່ພາລະກິດອັນສູງສົ່ງແຫ່ງສັນຕິພາບ ແລະການພັດທະນາຂອງມວນມະນຸດ, ມີໜ້າທີ່ຮັບຜິດຊອບອັນໜັກໜ່ວງ ແຕ່ກໍເປັນພາລະກຳທີ່ມີກຽດສະຫງ່າ. ບັນດາສະຫາຍໃນທົ່ວພັກຈຳເປັນຕ້ອງບໍ່ລືມອຸດົມການແຕ່ຫົວທີ, ຈົດຈຳພາລະກຳໃຫ້ໜັກແໜ້ນ, ຈຳເປັນຕ້ອງມີຄວາມຖະໜອມຖ່ອມຕົວ ແລະສຸຂຸມຮອບຄອບ, ບາກບັ່ນສູ້ຊົນຢ່າງທໍລະຫົດອົດທົນ, ຈຳເປັນຕ້ອງກ້າຕໍ່ສູ້, ຮູ້ວິທີຕໍ່ສູ້ ແລະມີຄວາມໝັ້ນໃຈຕໍ່ປະຫວັດສາດຂອງຕົນເອງຢ່າງໜັກແໜ້ນ, ເພີ່ມທະວີຄວາມເປັນເຈົ້າການທາງປະຫວັດສາດ, ຂຽນປະຫວັດສາດໜ້າໃໝ່ທີ່ສະຫງ່າງາມກວ່າເກົ່າແຫ່ງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່.

**ໜຶ່ງ: ວຽກງານໃນໄລຍະ 5 ປີຜ່ານມາ ແລະການປ່ຽນແປງອັນຍິ່ງໃຫຍ່ໃນ 10 ປີຂອງຍຸກໃໝ່**

ຕະຫຼອດໄລຍະ 5 ປີ ນັບແຕ່ໄຂກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ XIX ຂອງພັກເປັນຕົ້ນມາ ຖືເປັນ 5 ປີທີ່ບໍ່ທຳມະດາທີ່ສຸດ. ສູນກາງພັກໄດ້ປະສານສົມທົບພາກສ່ວນລວມແຫ່ງຍຸດທະສາດຟື້ນຟູຄວາມຈະເລີນຮຸ່ງເຮືອງທີ່ຍິ່ງໃຫຍ່ຂອງປະຊາຊາດຈີນ ກັບສະພາບການຂອງໂລກທີ່ເກີດມີການປ່ຽນແປງຢ່າງໃຫຍ່ຫຼວງແບບບໍ່ເຄີຍມີມາກ່ອນໃນຮອບຮ້ອຍປີຜ່ານມານີ້, ໄດ້ຈັດກອງປະຊຸມຄົບຄະນະຂຶ້ນ 7 ຄັ້ງ, ໂດຍໄດ້ມີຂໍ້ຕົກລົງ ແລະມະຕິກ່ຽວກັບບັນຫາສຳຄັນຕ່າງໆເຊັ່ນ: ດັດແກ້ລັດຖະທຳມະນູນ, ລົງເລິກການປະຕິຮູບອົງການຈັດຕັ້ງຕ່າງໆຂອງພັກ ແລະຂອງລັດຖະບານ, ຍຶດໝັ້ນ ແລະປັບປຸງລະບອບສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃຫ້ສົມບູນຂຶ້ນ, ຊຸກຍູ້ການຫັນເປັນທັນສະໄໝດ້ານລະບົບ ແລະຄວາມສາມາດການປົກຄອງບໍລິຫານປະເທດ, ວາງແຜນການພັດທະນາ 5 ປີຄັ້ງທີ

14 ແລະ ເປົ້າໝາຍວິໄສທັດຮອດປີ 2035, ສະຫຼຸບຜົນສຳເລັດອັນໃຫຍ່ຫຼວງ ແລະບົດຮຽນປະຫວັດສາດຈາກການບາກບັ່ນສູ້ຊົນຂອງພັກເປັນເວລາ 100 ປີຜ່ານມາຢ່າງຮອບດ້ານ, ໄດ້ວາງແຜນຍຸດທະສາດສຳຄັນກ່ຽວກັບການພັດທະນາພາລະກິດຂອງພັກ ແລະປະເທດຊາດ, ສາມັກຄີ ແລະນຳພາທົ່ວພັກ ທົ່ວກອງທັບ ແລະປະຊາຊົນບັນດາເຜົ່າໃນທົ່ວປະເທດ ຮັບມືກັບສະພາບການສາກົນທີ່ສັບສົນ ແລະຊັ່ງວຊາດ ກໍຄືຄວາມສ່ຽງ ແລະສິ່ງທ້າທາຍອັນໃຫຍ່ຫຼວງທີ່ເກີດຂຶ້ນຕາມມາ, ໄດ້ຊຸກຍູ້ພາລະກິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່ໃຫ້ຂະຫຍາຍຕົວກ້າວໄປຂ້າງໜ້າຢ່າງບໍ່ຢຸດຢັ້ງ ດ້ວຍນ້ຳໃຈບຸກບືນສູ້ຊົນແບບມີຜົນງານພົ້ນເດັ່ນ.

ຕະຫຼອດໄລຍະ 5 ປີຜ່ານມານີ້, ພວກເຮົາໄດ້ຍຶດໝັ້ນເພີ່ມທະວີການນຳພາຮອບດ້ານຂອງພັກ ແລະການນຳພາລວມສູນເປັນເອກະພາບຂອງສູນກາງພັກ, ໄດ້ອອກແຮງຊຸກຍູ້ຂະບວນວິວັດແຫ່ງການສ້າງສັງຄົມທີ່ອີ່ມໜຳສຳລານໃຫ້ສຳເລັດຢ່າງຮອບດ້ານ, ຜັນຂະຫຍາຍແນວຄວາມຄິດການພັດທະນາແບບໃໝ່ຢ່າງຄົບຖ້ວນ, ຖືກຕ້ອງ ແລະຮອບດ້ານ, ອອກແຮງຊຸກຍູ້ການພັດທະນາດ້ວຍຄຸນນະພາບສູງ, ເປັນເຈົ້າການໃນການສ້າງສະພາບການພັດທະນາແບບໃໝ່, ເລັ່ງຊຸກຍູ້ການປະຕິຮູບຢ່າງໝັ້ນທ່ຽງ, ສົ່ງເສີມປະຊາທິປະໄຕປະຊາຊົນໃນທົ່ວຂັ້ນຕອນຢ່າງໜັກແໜ້ນ, ຊຸກຍູ້ການປົກຄອງປະເທດຕາມກົດໝາຍຢ່າງຮອບດ້ານ, ຕັ້ງໜ້າພັດທະນາວັດທະນະທຳສັງຄົມນິຍົມທີ່ກ້າວໜ້າ, ເນັ້ນໜັກການຄ້ຳປະກັນ ແລະປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ສຸມໃສ່ບັ້ນລຶບລ້າງຄວາມທຸກຍາກ, ອອກແຮງຊຸກຍູ້ການສ້າງສາຄວາມສີວິໄລດ້ານນິເວດ, ເດັດດ່ຽວປົກປັກຮັກສາຄວາມໝັ້ນຄົງແຫ່ງຊາດ, ປ້ອງກັນ ແລະແກ້ໄຂຄວາມສ່ຽງສຳຄັນ, ຮັກສາໃຫ້ພາກສ່ວນໃຫຍ່ທາງສັງຄົມມີສະຖຽນລະພາບ, ອອກແຮງຊຸກຍູ້ການສ້າງສາທັນເປັນທັນສະໄໝດ້ານການປ້ອງກັນປະເທດ ແລະກອງທັບ, ດຳເນີນວຽກງານການຕ່າງປະເທດໃນຖານະປະເທດໃຫຍ່ທີ່ມີສີສັນພິເສດຂອງຈີນຢ່າງຮອບດ້ານ, ຊຸກຍູ້ການສ້າງໂຄງການທີ່ຍິ່ງໃຫຍ່ອັນໃໝ່ໃນການກໍ່ສ້າງພັກຢ່າງຮອບດ້ານ. ພວກເຮົາໄດ້ສະເຫຼີມສະ

ຫຼອງການສ້າງຕັ້ງພັກກອມມູນິດຈີນຄົບຮອບ 100 ປີ, ການສະຖາປະນາສາທາລະນະລັດປະຊາຊົນຈີນຄົບຮອບ 70 ປີຢ່າງຍິ່ງໃຫຍ່, ໄດ້ວາງມະຕິປະຫວັດສາດສະບັບທີ 3, ໄດ້ດຳເນີນການສຶກສາອົບຮົມກ່ຽວກັບປະຫວັດສາດພັກພາຍໃນທົ່ວພັກ, ໄດ້ສຳເລັດການສ້າງຫໍວາງສະແດງປະຫວັດສາດພັກກອມມູນິດຈີນ, ຮຽກຮ້ອງໃຫ້ທົ່ວພັກຕ້ອງຮ່ຳຮຽນ ແລະຈັດຕັ້ງປະຕິບັດນ້ຳໃຈສ້າງຕັ້ງພັກອັນຍິ່ງໃຫຍ່ ເພື່ອໃຫ້ມີຄວາມເດັດດ່ຽວ ແລະມີສະຕິຕື່ນຕົວຫຼາຍກວ່າເກົ່າໃນການຈົດຈຳອຸດົມການແຕ່ຫົວທີ ແລະພາລະກຳໃຫ້ໜັກແໜ້ນ, ສ້າງອະນາຄົດທີ່ດີງາມກວ່າເກົ່າບົນຂະບວນການອັນໃໝ່. ໂດຍສະເພາະແມ່ນຕໍ່ໜ້າສະພາບພະຍາດໂຄວິດ-19 ທີ່ເກີດຂຶ້ນຢ່າງກະທັນຫັນ, ພວກເຮົາໄດ້ຍຶດໝັ້ນຖືປະຊາຊົນສຳຄັນກວ່າໝູ່, ຖືຊີວິດສຳຄັນກວ່າໝູ່, ຍຶດໝັ້ນໃນການປ້ອງກັນການແຜ່ເຊື້ອຈາກພາຍນອກ, ປ້ອງກັນບໍ່ໃຫ້ພະຍາດລະບາດຄືນອີກຮອບໃໝ່ຢູ່ພາຍໃນປະເທດ, ຍຶດໝັ້ນການຈຳກັດໂຄວິດ-19 ໃຫ້ເປັນສູນຢູ່ທຸກເວລາ, ໄດ້ດຳເນີນບັ້ນປະຊາຊົນ, ບັ້ນກວມລວມ ແລະບັ້ນສະກັດກັ້ນໃນການຕ້ານກັບພະຍາດ, ອັນໄດ້ປົກປ້ອງຄວາມປອດໄພດ້ານຊີວິດ ແລະສຸຂະພາບທາງດ້ານຮ່າງກາຍຂອງປະຊາຊົນໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້, ເຮັດໃຫ້ການປ້ອງກັນ ແລະຄວບຄຸມພະຍາດໄປຄຽງຄູ່ກັບການພັດທະນາເສດຖະກິດສັງຄົມໄດ້ຮັບໝາກຜົນອັນຕັ້ງໜ້າທີ່ສຳຄັນ. ຕໍ່ໜ້າການຜັນແປຂອງສະພາບການປັ່ນປ່ວນຢູ່ຮົງກົງ, ພວກເຮົາໄດ້ອີງຕາມລັດຖະທຳມະນູນ ແລະກົດໝາຍພື້ນຖານປະຕິບັດສິດຄຸ້ມຄອງບໍລິຫານຮອບດ້ານຕໍ່ເຂດບໍລິຫານພິເສດຮົງກົງຢ່າງມີປະສິດທິຜົນ, ໄດ້ສ້າງ ແລະປະຕິບັດກົດໝາຍວ່າດ້ວຍການປົກປັກຮັກສາຄວາມໝັ້ນຄົງແຫ່ງຊາດຂອງເຂດບໍລິຫານພິເສດຮົງກົງ, ຈັດຕັ້ງປະຕິບັດຫຼັກການ "ຜູ້ຮັກຊາດປົກຄອງຮົງກົງ", ເຮັດໃຫ້ສະຖານະການຢູ່ຮົງກົງບັນລຸການຫັນປ່ຽນຢ່າງໃຫຍ່ຄືຈາກຄວາມ ວຸ້ນວາຍໄປສູ່ການບໍລິຫານໃຫ້ມີສະຖຽນລະພາບ, ພວກເຮົາໄດ້ລົງເລິກຊຸກຍູ້ການສ້າງເຂດອ່າວໃຫຍ່ ກວາງຕຸ້ງ-ຮົງກົງ-ມາກາວ, ສະໜັບສະໜູນຮົງກົງ ແລະມາກາວໃນດ້ານການພັດທະນາເສດຖະກິດ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ແລະຮັກສາສະຖຽນລະພາບ. ໂດຍຢືນຢູ່ຕໍ່ໜ້າການເຄື່ອນໄຫວຂອງອິດທິ

ກຳລັງແບ່ງແຍກໄຕ້ຫວັນເປັນເອກະລາດ ແລະການທ້າທາຍຢ່າງຮຸນແຮງຂອງອິດທິກຳລັງພາຍນອກໃນການແຊກແຊງວຽກງານໄຕ້ຫວັນ, ພວກເຮົາໄດ້ດຳເນີນການຕໍ່ສູ້ຕ້ານການແບ່ງແຍກ ແລະຕ້ານການແຊກແຊງຢ່າງເດັດດ່ຽວ, ອັນໄດ້ສະແດງໃຫ້ເຫັນເຖິງຄວາມຕັດສິນໃຈທີ່ເຂັ້ມແຂງ ແລະຄວາມສາມາດອັນແຂງແຮງຂອງພວກເຮົາໃນການປົກປັກຮັກສາອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງຊາດ ແລະຄັດຄ້ານໄຕ້ຫວັນເປັນເອກະລາດ, ກຳໄດ້ຄວາມເປັນເຈົ້າການດ້ານຍຸດທະສາດໃນການບັນລຸການທ້ອນໂຮມປະເທດຊາດເປັນເອກະພາບກັນຢ່າງສົມບູນຕື່ມອີກ, ໄດ້ປັບປຸງ ສະພາບການທີ່ປະຊາຄົມໂລກຍຶດໝັ້ນຫຼັກການຈີນດຽວຕື່ມອີກ. ໂດຍຢືນຢູ່ຕໍ່ໜ້າສະຖານະການສາກົນທີ່ເກີດມີການປ່ຽນແປງຢ່າງໄວວາ, ໂດຍສະເພາະແມ່ນຢືນຢູ່ຕໍ່ໜ້າການນາບຂູ່, ສະກັດກັ້ນ, ປິດລ້ອມ ແລະກົດດັນສຸດຂີດຈາກພາຍນອກ, ພວກເຮົາໄດ້ຍຶດໝັ້ນຖືຜົນປະໂຫຍດແຫ່ງຊາດເປັນສຳຄັນ, ຖືການເມືອງພາຍໃນປະເທດມາກ່ອນ, ຍຶດໝັ້ນຄວາມໜັກແໜ້ນດ້ານຍຸດທະສາດ, ເສີມຂະຫຍາຍນ້ຳໃຈຕໍ່ສູ້, ໄດ້ສະແດງໃຫ້ເຫັນຄວາມໜັກແໜ້ນທີ່ບໍ່ຢ້ານກົວຕໍ່ມະຫາອຳນາດ, ປົກປັກຮັກສາກຽດສັກສີ ແລະຜົນປະໂຫຍດແກນກາງຂອງຊາດໃນທ່າມກາງການຕໍ່ສູ້, ສາມາດກຳແໜ້ນສິດເປັນເຈົ້າການໃນການພັດທະນາ ແລະຮັກສາຄວາມໝັ້ນຄົງຂອງຊາດ. ຕະຫຼອດໄລຍະ 5 ປີຜ່ານມານີ້, ພັກພວກເຮົາໄດ້ສາມັກຄີ ແລະນຳພາປະຊາຊົນແກ້ໄຂບັນຫາຂໍ້ຫຍຸ້ງຍາກຫຼາຍໆບັນຫາທີ່ຊໍາເຮື້ອເປັນເວລາຍາວນານມານີ້, ໄດ້ເຮັດສຳເລັດວຽກງານສຳຄັນຫຼາຍວຽກທີ່ກ່ຽວພັນກັບອະນາຄົດ, ອັນໄດ້ຊຸກຍູ້ພາລະກິດຂອງພັກ ແລະປະເທດຊາດໄດ້ຮັບຜົນສຳເລັດອັນໃຫຍ່ຫຼວງທີ່ປະຈັກຕາຊາວໂລກ.

ບັນດາສະຫາຍ! ນັບແຕ່ການໄຂກອງປະຊຸມໃຫຍ່ຄັ້ງທີ XVIII ເປັນຕົ້ນມາ ໄດ້ຜ່ານເວລາ 10 ປີມາແລ້ວ. ຕະຫຼອດໄລຍະເວລາ 10 ປີຜ່ານມານີ້, ພວກເຮົາໄດ້ຜ່ານຜ່າເຫດການເດັ່ນ 3 ເຫດການທີ່ມີຄວາມໝາຍຕົວຈິງທີ່ສຳຄັນ ແລະມີຄວາມໝາຍປະຫວັດສາດທີ່ເລິກເຊິ່ງຍາວໄກຕໍ່ພາລະກິດຂອງພັກ ແລະຂອງປະຊາຊົນ ຄື: ໜຶ່ງແມ່ນໄດ້ຕ້ອນຮັບການຄົບຮອບ 100 ປີແຫ່ງການສ້າງຕັ້ງພັກກອມມູ

ນິດຈີນ, ສອງແມ່ນສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໄດ້ເຂົ້າສູ່ຍຸກໃໝ່, ສາມແມ່ນສຳເລັດໜ້າທີ່ປະຫວັດສາດແຫ່ງການລຶບລ້າງຄວາມທຸກຍາກ ແລະການສ້າງສັງຄົມທີ່ອິ່ມໜຳສຳລານໃຫ້ສຳເລັດຢ່າງຮອບດ້ານ, ບັນລຸເປົ້າໝາຍສູ້ຊົນ 100 ປີ ປະການທີ 1 ເຊິ່ງທັງໝົດນີ້ຖືເປັນໄຊຊະນະຄັ້ງປະຫວັດການຂອງພັກກອມມູນິດຈີນ ແລະປະຊາຊົນຈີນໃນການສາມັກຄີບາກບັ່ນສູ້ຊົນ, ແມ່ນໄຊຊະນະຄັ້ງປະຫວັດການອັນໂດດເດັ່ນໃນປະຫວັດສາດແຫ່ງການພັດທະນາປະຊາຊາດຈີນ ແລະກໍແມ່ນໄຊຊະນະຄັ້ງປະຫວັດການທີ່ມີຜົນສະທ້ອນເລິກເຊິ່ງຍາວໄກຕໍ່ໂລກອີກດ້ວຍ.

ເມື່ອ 10 ປີກ່ອນ, ສະຖານະການທີ່ພວກເຮົາປະເຊີນນັ້ນມີຄືດັ່ງນີ້: ການປະຕິຮູບ ເປີດປະຕູສູ່ພາຍນອກ ແລະການສ້າງສາສັງຄົມນິຍົມທັນສະໄໝໄດ້ຮັບໝາກຜົນຢ່າງໃຫຍ່ຫຼວງ, ໂຄງການທີ່ຍິ່ງໃຫຍ່ອັນໃໝ່ແຫ່ງການກໍ່ສ້າງພັກໄດ້ຮັບປະສິດທິຜົນຢ່າງໂດດເດັ່ນ, ອັນໄດ້ສ້າງພື້ນຖານທີ່ໜັກແໜ້ນ, ສ້າງເງື່ອນໄຂທີ່ດີ ແລະໃຫ້ການຄໍ້າປະກັນທີ່ສຳຄັນແກ່ພວກເຮົາໃນການສືບຕໍ່ກ້າວເດີນໄປຂ້າງໜ້າ, ແຕ່ພ້ອມກັນນັ້ນກໍມີຂໍ້ຂັດແຍ້ງ ແລະບັນຫາພົ້ນເດັ່ນຕ່າງໆ ທີ່ຕົກຄ້າງມາແຕ່ດົນນານ ຫຼືເກີດຂຶ້ນໃໝ່ຕ້ອງໄດ້ຮັບການແກ້ໄຂ. ພາຍໃນພັກຍັງມີບັນຫາທີ່ຮັບຮູ້ຢ່າງຄຸມເຄືອ ແລະຂາດປະສິດທິຜົນໃນການປະຕິບັດການຍຶດໝັ້ນການນຳພາຂອງພັກ. ມີບັນຫາບໍ່ໜ້ອຍທີ່ເຮັດໃຫ້ບົດບາດການນຳພາຂອງພັກຫຼຸດຜ່ອນລົງ, ອ່ອນແອລົງ ແລະຈາງຫາຍໄປ, ສະມາຊິກພັກ ແລະພະນັກງານການນຳຂອງພັກຈຳນວນໜຶ່ງມີຄວາມຫວັ່ນໄຫວຄອນແຄນໃນດ້ານຄວາມເຊື່ອທາງການເມືອງ, ບາງທ້ອງຖິ່ນ ແລະພາກສ່ວນຍັງເກີດບັນຫາລັດທິຮູບການ, ລັດທິອາຍາສິດ, ລັດທິສະເຫວີຍສຸກ ແລະແບບແຜນຟູມເຟືອຍຂຶ້ນຢູ່ບໍ່ເຊົາ, ຍັງມີແນວຄິດອະພິສິດ ແລະປາກົດການອະພິສິດເກີດຂຶ້ນອ່າວໜັກໜ່ວງ, ບັນຫາສໍ້ລາດບັງຫຼວງຈຳນວນໜຶ່ງເກີດຂຶ້ນເຮັດໃຫ້ຄົນຕື່ນຕົກໃຈ; ຄວາມຂັດແຍ້ງດ້ານໂຄງປະກອບ ແລະດ້ານລະບຽບການຂອງເສດຖະກິດຍັງພົ້ນເດັ່ນຫຼາຍ, ການພັດທະນາບໍ່ດຸນດ່ຽງ, ບໍ່ກົມກຽວກັນ ແລະບໍ່ຍືນຍົງ, ຮູບແບບການພັດທະນາແບບດັ້ງເດີມຍາກທີ່ຈະສືບຕໍ່ໄປໄດ້, ບັນຫາດ້ານໂຄງປະກອບ ແລະດ້ານກົນໄກໃນລະດັບ

ເລີກເຊື່ອຈຳນວນໜຶ່ງ ແລະອຸປະສັກສິ່ງກີດຂວາງຈາກກຸ່ມຜົນປະໂຫຍດນັບມື້ນັບພົ້ນເດັ່ນຂຶ້ນ, ຄົນຈຳນວນໜຶ່ງມີຄວາມໝັ້ນໃຈບໍ່ພຽງພໍຕໍ່ລະບອບການເມືອງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ,ບັນຫາບໍ່ປະຕິບັດງານຕາມກົດໝາຍ ແລະປະຕິບັດກົດໝາຍບໍ່ເຂັ້ມງວດນັ້ນຍັງມີຢູ່ຢ່າງໜັກໜ່ວງ; ລັດທິບູຊາເງິນ, ລັດທິສະເຫວີຍສຸກ, ລັດທິເອກະຊົນ, ລັດທິສູນຍະພາບປະຫວັດສາດ ແລະກະແສແນວຄິດທີ່ຜິດພາດອື່ນໆໄດ້ເກີດຂຶ້ນເປັນບາງຄັ້ງຄາວ, ທາງສຽງທາງອິນເຕີເນັດມີຄວາມສັບສົນ,ອັນໄດ້ສົ່ງຜົນກະທົບຢ່າງໜັກໜ່ວງຕໍ່ແນວຄິດຂອງຄົນທັງຫຼາຍ ແລະສະພາບແວດລ້ອມທາງສຽງສັງຄົມ; ໃນດ້ານການຄ້ຳປະກັນຊີວິດການເປັນຢູ່ຂອງປະຊາຊົນ ຍັງມີຂອດອ່ອນແອບໍ່ໜ້ອຍ; ຄວາມກົດດັນດ້ານຊັບພະຍາກອນເພີ່ມຂຶ້ນ, ບັນຫາສິ່ງແວດລ້ອມເປັນພິດ ແລະບັນຫາອື່ນໆພົ້ນເດັ່ນຂຶ້ນ; ລະບຽບການຮັກສາຄວາມໝັ້ນຄົງແຫ່ງຊາດ ຍັງບໍ່ທັນຄົບຖ້ວນສົມບູນ, ຄວາມສາມາດໃນການຮັບມືກັບຄວາມສ່ຽງສຳຄັນຕ່າງໆຍັງບໍ່ທັນເຂັ້ມແຂງ, ການສ້າງສາຄວາມທັນສະໄໝດ້ານການປ້ອງກັນປະເທດ ແລະກອງທັບຍັງມີຈຸດອ່ອນຫຼາຍຢ່າງ; ລະບຽບການ ແລະກົນໄກການຈັດຕັ້ງປະຕິບັດແນວທາງ "ປະເທດດຽວ ສອງລະບອບ" ຂອງຮົງກົງ ແລະມາກາວຍັງບໍ່ທັນສົມບູນເທື່ອ, ຄວາມໝັ້ນຄົງແຫ່ງຊາດຍັງປະສົບກັບສິ່ງທ້າທາຍທີ່ຊ້ຽວຊາດຕ່າງໆນາໆ ແລະບັນຫາອື່ນໆ. ເວລານັ້ນ, ມີຄົນຈຳນວນບໍ່ໜ້ອຍພາຍໃນພັກ ແລະໃນສັງຄົມເປັນຫ່ວງນຳອະນາຄົດຂອງພັກ ແລະປະເທດຊາດ. ໂດຍຢືນຢູ່ຕໍ່ໜ້າຂໍ້ຂັດແຍ້ງ ແລະບັນຫາພົ້ນເດັ່ນທີ່ກະທົບເຖິງການກຳອຳນາດເປັນເວລາຍາວນານຂອງພັກ, ຄວາມໝັ້ນຄົງຖາວອນຂອງປະເທດຊາດ ແລະ ຄວາມສະຫງົບສຸກສຳລານຂອງປະຊາຊົນ, ສູນກາງພັກໄດ້ວິເຄາະສະພາບການ, ມີການຕົກລົງຢ່າງເດັດຂາດ, ບຸກບືນກ້າວໄປຂ້າງໜ້າ, ບຸກບືນແກ້ໄຂຂໍ້ຫຍຸ້ງຍາກຕ່າງໆ, ສາມັກຄີ ແລະນຳພາທົ່ວພັກ, ທົ່ວກອງທັບ ແລະປະຊາຊົນບັນດາເຜົ່າທົ່ວປະເທດ ກໍ້າແຂນເສື້ອຂຶ້ນເຮັດວຽກຢ່າງຫ້າວຫັນ, ແຂ່ງກັບຟ້າຝົນລົມແດງກ້າວເດີນໄປສູ່ຂ້າງໜ້າ, ໄດ້ດຳເນີນການຕໍ່ສູ້ອັນຍິ່ງໃຫຍ່ຢ່າງຫຼວງຫຼາຍ ທີ່ມີຈຸດພິເສດທາງປະຫວັດສາດອັນໃໝ່ ໂດຍບໍ່ລັ່ງເລໃຈ.

ຕະຫຼອດໄລຍະ 10 ປີຜ່ານມານີ້, ພວກເຮົາໄດ້ຍຶດໝັ້ນລັດທິມາກ-ເລນິນ, ແນວຄິດເໝົາເຈີຕຸ໋ງ, ທິດສະດີເຕິ້ງສຽວຜິງ, ແນວຄິດສຳຄັນ “ 3 ຕົວແທນ”, ທັດສະນະພັດທະນາຕາມຫຼັກວິທະຍາສາດ ແລະໄດ້ຜັນຂະຫຍາຍແນວຄິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່ຢ່າງຮອບດ້ານ, ຈັດຕັ້ງປະຕິບັດແນວທາງພື້ນຖານ ແລະທິດທາງຍຸດທະສາດພື້ນຖານຂອງພັກຢ່າງຮອບດ້ານ, ໃຊ້ມາດຕະການທີ່ມີລັກສະນະຍຸດທະສາດຕ່າງໆ, ຊຸກຍູ້ພຶດຕິກຳຕົວຈິງທີ່ມີລັກສະນະການປ່ຽນແປງໃໝ່ຕ່າງໆ, ໄດ້ບັນລຸຄວາມຄືບໜ້າທີ່ມີລັກສະນະບຸກທະລຸຕ່າງໆ ແລະໄດ້ຮັບໝາກຜົນທີ່ມີລັກສະນະເປັນຂີດໝາຍຕ່າງໆ, ອັນໄດ້ຜ່ານຜ່າສິ່ງທ້າທາຍ ແລະການທົດສອບຈາກຄວາມສ່ຽງຕ່າງໆໃນດ້ານການເມືອງ, ເສດຖະກິດ, ຮູບຖານຈິດສຳນຶກ, ໄລກທຳມະຊາດ ແລະອື່ນໆ, ເຮັດໃຫ້ພາລະກິດຂອງພັກ ແລະປະເທດຊາດໄດ້ຮັບຜົນສຳເລັດຄັ້ງປະຫວັດສາດ, ເກີດມີການປ່ຽນແປງຄັ້ງປະຫວັດສາດແລະໄດ້ຊຸກຍູ້ໃຫ້ປະເທດພວກເຮົາກ້າວເດີນຂຶ້ນສູ່ຂະບວນການໃໝ່ແຫ່ງການສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານ.

—— ພວກເຮົາໄດ້ປະດິດສ້າງແນວຄິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່, ໄດ້ກຳນົດຢ່າງຈະແຈ້ງກ່ຽວກັບທິດທາງຍຸດທະສາດພື້ນຖານແຫ່ງການຍຶດໝັ້ນ ແລະພັດທະນາສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ, ໄດ້ສະເໜີທັດສະນະໃໝ່, ແນວຄິດໃໝ່ ແລະຍຸດທະສາດໃໝ່ຕ່າງໆກ່ຽວກັບການປົກຄອງບໍລິຫານປະເທດ,ເຮັດໃຫ້ລັດທິມາກບັນລຸການກ້າວກະໂດດຄັ້ງໃໝ່ໃນການຫັນເປັນແບບຈີນ ແລະໄປພ້ອມກັບຍຸກສະໄໝ, ໄດ້ຍຶດໝັ້ນນຳໃຊ້ທິດສະດີທີ່ປະດິດສ້າງໃໝ່ດັ່ງກ່າວນີ້ ມາຝຶກຝົນຫຼໍ່ຫຼອມແນວຄິດ, ຊີ້ນຳພຶດຕິກຳ ແລະຊຸກຍູ້ວຽກງານ, ອັນເປັນຫຼັກການພື້ນຖານໃຫ້ແກ່ການພັດທະນາພາລະກິດຂອງພັກ ແລະປະເທດຊາດໃນຍຸກໃໝ່.

—— ພວກເຮົາເພີ່ມທະວີການນຳພາຂອງພັກຢ່າງຮອບດ້ານ, ກຳນົດຢ່າງຈະແຈ້ງວ່າ, ເອກະລັກພິເສດທີ່ເປັນທາດແທ້ທີ່ສຸດຂອງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ ຄື ການນຳພາຂອງພັກກອມມູນິດ

ຈີນ, ທ່າແຮງໃຫຍ່ທີ່ສຸດຂອງລະບອບສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ ຄື ການນຳພາຂອງພັກກອມມູນິດຈີນ, ພັກກອມມູນິຈີນແມ່ນກຳລັງນຳພາການເມືອງສູງທີ່ສຸດ, ການທີ່ຍຶດໝັ້ນການນຳພາ ລວມສູນເປັນເອກະພາບຂອງສູນກາງພັກ ແມ່ນຫຼັກການການເມືອງສູງທີ່ສຸດ, ບູລະນະລະບົບລະບຽບການນຳພາຂອງພັກໃຫ້ຄົບຖ້ວນສົມບູນຢ່າງເປັນລະບົບ, ທົ່ວພັກເພີ່ມທະວີ “4 ສະຕິ”, ມີສະຕິຕື່ນຕົວໃນການຮັກສາຄວາມເປັນເອກະພາບກັນໃນລະດັບສູງກັບສູນກາງພັກໃນດ້ານແນວຄິດ, ດ້ານການເມືອງ ແລະດ້ານການເຄື່ອນໄຫວ, ຍົກສູງຄວາມສາມາດວິເຄາະໄຈ້ແຍກດ້ານການເມືອງ, ຄວາມສາມາດເຊື່ອມຊຶມດ້ານການເມືອງ ແລະຄວາມສາມາດປະຕິບັດດ້ານການເມືອງໃຫ້ສູງຂຶ້ນ, ຮັບປະກັນຄວາມສັກສິດ ແລະການນຳພາລວມສູນເປັນເອກກະພາບຂອງສູນກາງພັກ, ຮັບປະກັນໃຫ້ພັກໄດ້ເສີມຂະຫຍາຍບົດບາດແກນກາງການນຳພາໃນດ້ານການກຳແໜ້ນພາກສ່ວນລວມ ແລະປະສານງານກັບບັນດາຝ່າຍ, ພັກການເມືອງລັດທິມາກ ທີ່ມີສະມາຊິກພັກຫຼາຍກວ່າ 96.000.000 ຄົນຂອງພວກເຮົາມີຄວາມສາມັກຄີເປັນເອກະພາບກັນຫຼາຍຍິ່ງຂຶ້ນ.

—— ພວກເຮົາໄດ້ວາງແຜນຍຸດທະສາດຕາມຫຼັກວິທະຍາສາດຢ່າງຮອບດ້ານ ກ່ຽວກັບການພັດທະນາພາລະກິດຂອງພັກ ແລະປະເທດຊາດໃນຍຸກໃໝ່, ໄດ້ສະເໜີໃຫ້ບັນລຸຄວາມໃຝ່ຝັນຂອງຈີນ ແຫ່ງການຟື້ນຟູຄວາມຈະເລີນຮຸ່ງເຮືອງທີ່ຍິ່ງໃຫຍ່ຂອງປະຊາຊາດຈີນ, ຊຸກຍູ້ການຟື້ນຟູຄວາມຈະເລີນຮຸ່ງເຮືອງທີ່ຍິ່ງໃຫຍ່ຂອງປະຊາຊາດຈີນດ້ວຍຄວາມທັນສະໄໝແບບຈີນ, ໄດ້ວາງແຜນປະສານສົມທົບເປັນເອກະພາບກັນລະຫວ່າງການຕໍ່ສູ້ອັນຍິ່ງໃຫຍ່, ໂຄງການອັນຍິ່ງໃຫຍ່, ພາລະກິດອັນຍິ່ງໃຫຍ່ ແລະຄວາມໃຝ່ຝັນອັນຍິ່ງໃຫຍ່, ກຳນົດຢ່າງຈະແຈ້ງກ່ຽວກັບແຜນຍຸດທະສາດລວມ “ການພັດທະນາພາລະກິດ 5 ດ້ານຢ່າງເປັນເອກະພາບກັນ” ແລະແຜນຍຸດທະສາດ “4 ຮອບດ້ານ”, ໄດ້ກຳນົດຫຼັກການພື້ນຖານລວມແຫ່ງການເຮັດວຽກແບບສະແຫວງຫາການພັດທະນາຢ່າງໝັກແໜ້ນ, ປະສານສົມທົບການພັດທະນາກັບຄວາມໝັ້ນຄົງ ແລະກຳນົດຢ່າງຈະແຈ້ງວ່າ ຂໍ້ຂັດແຍ້ງຕົ້ນຕໍໃນສັງຄົມຂອງປະເທດ

ພວກເຮົາ ແມ່ນຂໍ້ຂັດແຍ້ງລະຫວ່າງຄວາມຕ້ອງການຂອງປະຊາຊົນທີ່ມີຕໍ່ຊີວິດການເປັນຢູ່ທີ່ດີງາມກວ່າເກົ່າທີ່ນັບມື້ນັບເພີ່ມຂຶ້ນກັບການພັດທະນາທີ່ບໍ່ດຸນດ່ຽງ ແລະບໍ່ເຕັມສ່ວນ. ໄດ້ຊຸກຍູ້ວຽກງານທຸກດ້ານ ໂດຍປິ່ນອ້ອມຂໍ້ຂັດແຍ້ງຕົ້ນຕໍຂອງສັງຄົມທີ່ກ່າວມານັ້ນ, ເສີມຂະຫຍາຍຮູບແບບອະລິຍະທຳມວນມະນຸດໃຫ້ມີຄວາມອຸດົມສົມບູນຂຶ້ນ ແລະໄດ້ຮັບການພັດທະນາໄປເລື້ອຍໆ.

—— ໂດຍຜ່ານຈາກການບາກບັ່ນສູ້ຊົນຢ່າງຕໍ່ເນື່ອງ, ພວກເຮົາໄດ້ບັນລຸຄວາມໃຝ່ຝັນຂອງປະຊາຊາດຈີນທີ່ສືບທອດມາເປັນເວລາພັນປີ ນັ້ນກໍຄື: ສ້າງສັງຄົມທີ່ອິ່ມໜຳສຳລານໃຫ້ສຳເລັດ, ເຮັດໃຫ້ການພັດທະນາປະເທດພວກເຮົາຢືນຢູ່ຈຸດເລີ່ມຕົ້ນໃໝ່ທີ່ສູງກວ່າເກົ່າໃນທາງປະຫວັດສາດ. ພວກເຮົາໄດ້ຍຶດໝັ້ນການລຶບລ້າງຄວາມທຸກຍາກຢ່າງຖືກເປົ້າໝາຍ, ສູ້ຊົນດ້ວຍກຳລັງທີ່ເຂັ້ມແຂງເກັ່ງກ້າທັງໝົດ, ໄດ້ເອົາຊະນະໃນບັ້ນລຶບລ້າງຄວາມທຸກຍາກທີ່ມີຂະໜາດໃຫຍ່ທີ່ສຸດໃນປະຫວັດສາດຂອງມວນມະນຸດ, ເຮັດໃຫ້ເມືອງທຸກຍາກ 832 ເມືອງໃນທົ່ວປະເທດໄດ້ຫຼຸດພົ້ນອອກຈາກຄວາມທຸກຍາກທັງໝົດ, ປະຊາຊົນຜູ້ທຸກຍາກໃນຊົນນະບົດຈຳນວນເກືອບ 100.000.000 ຄົນໄດ້ຫຼຸດພົ້ນອອກຈາກຄວາມທຸກຍາກ, ປະຊາຊົນຜູ້ທຸກຍາກຫຼາຍກວ່າ 9.600.000 ຄົນໄດ້ບັນລຸການຍົກຍ້າຍໄປອາໄສຢູ່ເຂດທີ່ເໝາະສົມກັບການພັດທະນາ, ເຊິ່ງສາມາດແກ້ໄຂບັນຫາຄວາມທຸກຍາກເດັດຖານຄັ້ງປະຫວັດສາດ, ໄດ້ເປັນການປະກອບສ່ວນອັນສຳຄັນເຂົ້າໃນວຽກງານຫຼຸດຜ່ອນຄວາມທຸກຍາກຂອງທົ່ວໂລກ.

—— ພວກເຮົາໄດ້ສະເໜີ ແລະຈັດຕັ້ງປະຕິບັດຕາມແນວຄວາມຄິດການພັດທະນາແບບໃໝ່, ອອກແຮງຊຸກຍູ້ການພັດທະນາດ້ວຍຄຸນນະພາບສູງ, ຊຸກຍູ້ການສ້າງສະພາບການພັດທະນາແບບໃໝ່, ດຳເນີນການປະຕິຮູບໂຄງປະກອບດ້ານການສະໜອງ, ວາງຍຸດທະສາດສຳຄັນຕ່າງໆສຳລັບເຂດແຄວ້ນທີ່ຕ່າງກັນທີ່ມີຄວາມໝາຍສຳຄັນຕໍ່ພາກສ່ວນລວມ, ເຮັດໃຫ້ເສດຖະກິດຂອງປະເທດພວກເຮົາບັນລຸການກ້າວກະໂດດຂັ້ນຄັ້ງປະຫວັດສາດ ຄື: ລວມຍອດຜະລິດຕະພັນພາຍໃນຫຼື GDP ໄດ້ເພີ່ມຈາກ 54.000 ຕື້ຢວນຂຶ້ນເປັນ 114.000 ຕື້ຢວນ, ເຮັດໃຫ້ຍອດປະລິມານເສດຖະກິດຈີນກວມເສດຖະ

ກິດໂລກບັນລຸ 18,5%, ເພີ່ມຂຶ້ນ 7,2%, ເປັນອັນດັບສອງຂອງໂລກ; ລວມຍອດຜະລິດຕະພັນພາຍໃນສະເລ່ຍຕໍ່ຫົວຄົນໄດ້ເພີ່ມຈາກ 39.800 ຢວນ ຂຶ້ນເປັນ 81.000 ຢວນ. ຍອດປະລິມານການຜະລິດເຂົ້າປະເພດຕ່າງໆເປັນອັນດັບໜຶ່ງຂອງໂລກ, ຄວາມໝັ້ນຄົງດ້ານສະບຽງອາຫານ ແລະດ້ານພະລັງງານຂອງປະຊາຊົນຈຳນວນ 1,4 ຕື້ກວ່າຄົນໄດ້ຮັບການຮັບປະກັນຢ່າງມີປະສິດທິຜົນ. ອັດຕາການຫັນເປັນຕົວເມືອງໄດ້ຍົກສູງຂຶ້ນ 11,6%, ບັນລຸເຖິງ 64,7%. ຂະໜາດຂອງອຸດສາຫະກຳການຜະລິດ ແລະຄັງສຳຮອງເງິນຕາຕ່າງປະເທດເປັນອັນດັບໜຶ່ງຂອງໂລກ. ໄດ້ສ້າງເປັນຕາໜ່າງທາງລົດໄຟຄວາມໄວສູງ ແລະຕາໜ່າງທາງດ່ວນທີ່ມີຂະໜາດໃຫຍ່ທີ່ສຸດຢູ່ໃນໂລກ, ການກໍ່ສ້າງພື້ນຖານໂຄງລ່າງຕ່າງໆເຊັ່ນ: ສະໜາມບິນ, ທ່າກຳປັ່ນ, ຊົນລະປະທານ, ພະລັງງານ, ຂໍ້ມູນຂ່າວສານ ແລະດ້ານອື່ນໆໄດ້ຮັບຜົນງານທີ່ສຳຄັນ. ພວກເຮົາຍັງໄດ້ເລັ່ງຊຸກຍູ້ການເພິ່ງຕົນເອງ ແລະສ້າງຄວາມເຂັ້ມແຂງດ້ວຍຕົນເອງໃນດ້ານວິທະຍາສາດເຕັກນິກ, ຄ່າໃຊ້ຈ່າຍໃນດ້ານການຄົ້ນຄວ້າພັດທະນາວິທະຍາສາດເຕັກນິກຂອງທົ່ວສັງຄົມໄດ້ເພີ່ມຈາກ 1.000 ຕື້ຢວນ ຂຶ້ນເປັນ 2.800 ຕື້ຢວນ, ເປັນອັນດັບສອງຂອງໂລກ, ຍອດຈຳນວນນັກຄົ້ນຄວ້າພັດທະນາເປັນອັນດັບໜຶ່ງຂອງໂລກ. ໃນດ້ານການຄົ້ນຄວ້າພື້ນຖານ ແລະການປະດິດສ້າງໃໝ່ ແມ່ນໄດ້ຮັບການເພີ່ມທະວີຂຶ້ນຢ່າງບໍ່ຢຸດຢັ້ງ, ການຄົ້ນຄວ້າເຕັກນິກແກນກາງທີ່ສຳຄັນຈຳນວນໜຶ່ງ ໄດ້ຮັບການບຸກທະລຸ, ອຸດສາຫະກຳຈະເລີນໃໝ່ທີ່ມີລັກສະນະຍຸດທະສາດໄດ້ມີການເຕີບໃຫຍ່ຂະຫຍາຍຕົວຂຶ້ນ, ໂຄງການການບິນອະວະກາດບັນທຸກຄົນ, ໂຄງການສຳຫຼວດດວງຈັນ ແລະດາວອັງຄານ, ໂຄງການສຳຫຼວດທະເລເລິກ ແລະດິນເລິກ, ໂຄງການຊຸບເປີຄອມພິວເຕີ, ໂຄງການດາວທຽມນຳທາງ, ໂຄງການເຕັກໂນໂລຊີຂໍ້ມູນຂ່າວສານດ້ວຍ "ກວນຕົມ", ເຕັກນິກໄຟຟ້ານິວເຄລຍ, ເຕັກນິກພະລັງງານໃໝ່, ການຜະລິດເຮືອບິນຂະໜາດໃຫຍ່, ຢາຊີວະພາບ ແລະດ້ານອື່ນໆ ໄດ້ຮັບໝາກຜົນສຳຄັນ, ເຮັດໃຫ້ປະເທດພວກເຮົາກ້າວເຂົ້າສູ່ຖັນແຖວປະເທດແຫ່ງການປະດິດສ້າງ.

—— ພວກເຮົາໄດ້ລົງເລິກດຳເນີນການປະຕິຮູບຢ່າງຮອບດ້ານດ້ວຍຄວາມກ້າຫານດ້ານການເມືອງອັນໃຫຍ່ຫຼວງ, ເປີດບັ້ນບຸກທະລຸຂອດຍາກໃນການດຳເນີນການປະຕິຮູບ, ເພີ່ມທະວີການອອກແບບຈາກຂັ້ນເທິງສູງສຸດດ້ານການປະຕິຮູບ, ມີຄວາມອາດຫານໃນການລົງເລິກເຖິງບັນຫາຍາກ, ກ້າແກ້ໄຂຂອດຍາກ, ກ້າເຮັດໃນສິ່ງທີ່ມີຄວາມສ່ຽງຕ່າງໆ, ກ້າປະເຊີນໜ້າກັບຂໍ້ຂັດແຍ້ງໃໝ່ ແລະສິ່ງທ້າທາຍໃໝ່, ທັບມ້າງການຜູກມັດຈາກແນວຄິດເກົ່າ, ບຸກທະລຸອຸປະສັກກີດຂວາງຈາກກຸ່ມຜົນປະໂຫຍດ, ເດັດດ່ຽວລຶບລ້າງຂໍ້ບົກຜ່ອງຂອງໂຄງປະກອບ ແລະກົນໄກຕ່າງໆ, ເຮັດໃຫ້ຂອບລະບຽບການຂອງທຸກຂົງເຂດໄດ້ຮັບການສ້າງຕັ້ງຂຶ້ນໂດຍພື້ນຖານ,ຫຼາຍຂົງເຂດໄດ້ບັນລຸການປະຕິຮູບຄັ້ງປະຫວັດສາດ, ໄດ້ຮັບການປັບປຸງຄືນໃໝ່ຢ່າງເປັນລະບົບ ແລະສ້າງຄືນໃໝ່ໂດຍລວມ, ການປະຕິຮູບອົງການຈັດຕັ້ງຂອງພັກ ແລະລັດຖະບານຮອບໃໝ່ໄດ້ສຳເລັດຢ່າງຮອບດ້ານ, ເຮັດໃຫ້ລະບອບສັງຄົມນິຍົມທີ່ມີສີສັນພິເສດຂອງຈີນມີຄວາມສົມບູນກວ່າເກົ່າ ແລະໝັ້ນຄົງກວ່າເກົ່າ, ລະບົບ ແລະຄວາມສາມາດການປົກຄອງບໍລິຫານປະເທດມີຄວາມທັນສະໄໝສູງຂຶ້ນຢ່າງເດັ່ນຊັດ.

—— ພວກເຮົາໄດ້ປະຕິບັດຍຸດທະສາດເປີດປະຕູສູ່ພາຍນອກທີ່ຍິ່ງຕັ້ງໜ້າ ແລະເປັນເຈົ້າການກວ່າເກົ່າ, ໄດ້ສ້າງເຄືອຂ່າຍເຂດການຄ້າເສລີມາດຕະຖານສູງທີ່ຫັນໜ້າໄປສູ່ທົ່ວໂລກ, ເລັ່ງຊຸກຍູ້ການສ້າງເຂດທົດລອງການຄ້າເສລີ ແລະທ່າກຳປັ່ນການຄ້າເສລີໄຫຼ່ຳ ແລະການຮ່ວມກັນສ້າງ "ໜຶ່ງແລວໜຶ່ງເສັ້ນທາງ" ໄດ້ກາຍເປັນຜະລິດຕະພັນສາທາລະນະສາກົນ ແລະເວທີການຮ່ວມມືສາກົນທີ່ໄດ້ຮັບຄວາມນິຍົມຊົມຊອບເປັນຢ່າງສູງ. ປະເທດພວກເຮົາໄດ້ກາຍເປັນຄູ່ການຄ້າທີ່ສຳຄັນຂອງ 140 ກວ່າປະເທດ ແລະເຂດແຄວ້ນ, ຍອດມູນຄ່າການຄ້າສິນຄ້າເປັນອັນດັບໜຶ່ງຂອງໂລກ, ການດຶງດູດທຶນຕ່າງປະເທດ ແລະການລົງທຶນຕໍ່ຕ່າງປະເທດຢູ່ໃນອັນດັບແຖວໜ້າຂອງໂລກ, ຈຶ່ງໄດ້ປະກອບເປັນສະພາບການເປີດປະຕູສູ່ພາຍນອກ ທີ່ມີຂອບເຂດກວ້າງຂວາງກວ່າເກົ່າ, ມີຂົງເຂດຫຼາຍກວ່າເກົ່າ ແລະມີລະດັບເລິກເຊິ່ງກວ່າເກົ່າ.

—— ພວກເຮົາໄດ້ຍຶດໝັ້ນເດີນຕາມເສັ້ນທາງພັດທະນາການເມືອງຕາມທິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ, ພັດທະນາປະຊາທິປະໄຕປະຊາຊົນໃນທົ່ວຂັ້ນຕອນຢ່າງຮອບດ້ານ, ຊຸກຍູ້ການເມືອງປະຊາທິປະໄຕສັງຄົມນິຍົມທັນເປັນລະບຽບການ, ເປັນລະບຽບແບບແຜນ ແລະເປັນຂັ້ນຕອນຢ່າງຮອບດ້ານ, ດຳເນີນວຽກງານປະຊາທິປະໄຕແບບເປີກສາຫາລືຂອງສັງຄົມນິຍົມຢ່າງກວ້າງຂວາງ, ປະຊາຊົນເປັນເຈົ້າຂອງປະເທດຊາດມີຄວາມໜັກແໜ້ນກວ່າເກົ່າ, ປະຊາທິປະໄຕຂັ້ນຮາກຖານມີພະລັງຊີວິດຊີວາເພີ່ມຂຶ້ນ, ແນວໂຮມເອກະພາບຮັກຊາດໄດ້ຮັບການປັບປຸງ ແລະເສີມຂະຫຍາຍ, ຄວາມສາມັກຄີ ແລະຄວາມກ້າວໜ້າຂອງຊາດປາກົດມີໂສມໜ້າໃໝ່, ທິດທາງພື້ນຖານຂອງວຽກງານສາສະໜາຂອງພັກໄດ້ຮັບການຜັນຂະຫຍາຍຢ່າງຮອບດ້ານ, ສິດທິມະນຸດໄດ້ມີການຮັບປະກັນໃຫ້ດີກວ່າເກົ່າ. ການສ້າງສາປະເທດສັງຄົມນິຍົມທີ່ປົກຄອງຕາມກົດໝາຍໄດ້ຮັບການຊຸກຍູ້ລົງສູ່ລວງເລິກ, ສະພາບການລວມທີ່ປົກຄອງປະເທດຕາມກົດໝາຍຢ່າງຮອບດ້ານ ໄດ້ເປັນຮູບເປັນຮ່າງຂຶ້ນໂດຍພື້ນຖານ, ການສ້າງສາລະບົບການປົກຄອງປະເທດຕາມກົດໝາຍຂອງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໄດ້ເລັ່ງໄວຂຶ້ນ, ການປະຕິຮູບດ້ານໂຄງປະກອບຕຸລາການກໍໄດ້ຮັບຄວາມຄືບໜ້າທີ່ສຳຄັນ, ຄວາມຍຸຕິທຳ ແລະຄວາມເປັນທຳໃນສັງຄົມໄດ້ມີການຮັບປະກັນຢ່າງໜັກແໜ້ນກວ່າເກົ່າ, ການສ້າງສາປະເທດຈີນທີ່ປົກຄອງຕາມກົດໝາຍໄດ້ເປີດສະພາບການໃໝ່.

—— ພວກເຮົາໄດ້ກຳນົດ ແລະຍຶດໝັ້ນລະບອບຮາກຖານທີ່ຖືລັດທິມາກໄວ້ຢູ່ໃນຖານະຊີ້ນຳໃນຂົງເຂດຮູບຖານຈິດສຳນຶກ, ເຮັດໃຫ້ທິດສະດີທີ່ປະດິດສ້າງຂອງພັກໃນຍຸກໃໝ່ໄດ້ເຂົ້າເຖິງຈິດໃຈຂອງປະຊາຊົນ, ຄ່ານິຍົມແກນກາງສັງຄົມນິຍົມໄດ້ເຜີຍແຜ່ອອກຢ່າງກວ້າງຂວາງ, ວັດທະນະທຳດັ້ງເດີມທີ່ດີເດັ່ນຂອງຈີນ ກໍໄດ້ຮັບການຫັນປ່ຽນແບບປະດິດສ້າງ ແລະໄດ້ຮັບການເສີມສ້າງດ້ວຍນະວະຕະກຳໃໝ່, ວຽກງານດ້ານວັດທະນະທຳຂອງພວກເຮົານັບມື້ນັບຈະເລີນຂຶ້ນ, ສະພາບແວດລ້ອມທາງອິນເຕີເນັດກໍດີຂຶ້ນຢ່າງຕໍ່ເນື່ອງ, ສະພາບການໃນຂົງເຂດຮູບຖານຈິດສຳນຶກໄດ້ເກີດມີການປ່ຽນແປງຈາກ

ດ້ານພາກສ່ວນລວມແລະດ້ານກິກຣາກ. ພວກເຮົາໄດ້ສະເຫຼີມສະຫຼອງການສ້າງຕັ້ງກອງທັບປົດປ່ອຍປະຊາຊົນຈີນຄົບຮອບ 90 ປີ, ການດຳເນີນການປະຕິຮູບ ແລະເປີດປະຕູສູ່ພາຍນອກຄົບຮອບ 40 ປີຢ່າງຍິ່ງໃຫຍ່, ໄດ້ຈັດພິທີຢ່າງຍິ່ງໃຫຍ່ເພື່ອລະນຶກສົງຄາມປະຊາຊົນຈີນຕໍ່ຕ້ານການຮຸກຮານຂອງຍີ່ປຸ່ນກໍຄືສົງຄາມຕໍ່ຕ້ານຟາຊິດໂລກ ໄດ້ຮັບໄຊຊະນະຄົບຮອບ 70 ປີ, ກອງທະຫານອາສາສະໝັກປະຊາຊົນຈີນອອກນອກປະເທດສູ້ຮົບເພື່ອຊ່ວຍເຫຼືອ ສປປ ເກົາຫຼີຕໍ່ຕ້ານອາເມຣິກາຄົບຮອບ 70 ປີ, ພວກເຮົາໄດ້ເປັນເຈົ້າພາບຈັດງານມະຫະກຳກິລາໂອລິມປິກລະດູໜາວປັກກິ່ງ ແລະງານມະຫະກຳກິລາໂອລິມປິກຄົນພິການລະດູໜາວປັກກິ່ງຢ່າງສຳເລັດຜົນ, ຄົນຮຸ່ນໜຸ່ມມີຄວາມຫ້າວຫັນຍິ່ງຂຶ້ນ, ທົ່ວພັກແລະປະຊາຊົນບັນດາເຜົ່າໃນທົ່ວປະເທດມີຄວາມໝັ້ນໃຈຕໍ່ວັດທະນະທຳຂອງຕົນເອງເພີ່ມຂຶ້ນຢ່າງເດັ່ນຊັດແລະຍິ່ງມີໂສມໜ້າຈິດໃຈຫ້າວຫັນຂຶ້ນ.

—— ພວກເຮົາລົງເລິກຜັນຂະຫຍາຍແນວຄິດການພັດທະນາທີ່ຖືປະຊາຊົນເປັນໃຈກາງ, ໄດ້ສືບຕໍ່ສຸມໃສ່ແກ້ໄຂບັນຫາທີ່ກ່ຽວພັນເຖິງຊີວິດການເປັນຢູ່ຂອງປະຊາຊົນ ເຊັ່ນ: ເດັກນ້ອຍໄດ້ຮັບການລ້ຽງດູເບິ່ງແຍງ,ນັກຮຽນນັກສຶກສາໄດ້ຮັບການສຶກສາ, ຜູ້ອອກແຮງງານມີລາຍຮັບເທົ່າທີ່ຄວນ, ຜູ້ເຈັບເປັນໄດ້ຮັບການປິ່ນປົວ, ຜູ້ເຖົ້າແກ່ຊະລາໄດ້ຮັບການລ້ຽງດູ, ຜູ້ທີ່ຢາກໄດ້ບ່ອນເພິ່ງພາອາໄສມີເຮືອນຢູ່, ກຸ່ມຄົນດ້ອຍໂອກາດໄດ້ຮັບການຊ່ວຍເຫຼືອ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນຢ່າງຮອບດ້ານ. ເຊິ່ງອາຍຸຍືນສະເລ່ຍໃສ່ຫົວຄົນຕາມທີ່ຄາດຄະເນໄດ້ເພີ່ມຂຶ້ນຮອດ 78,2 ປີ. ລາຍໄດ້ທີ່ສາມາດຈັບຈ່າຍໄດ້ສະເລ່ຍໃສ່ຫົວຄົນເພີ່ມຈາກ 16.500 ຢວນຂຶ້ນເປັນ 35.100 ຢວນ. ຈຳນວນຄົນທີ່ມີວຽກເຮັດງານທຳທີ່ເພີ່ມໃໝ່ໃນຕົວເມືອງແມ່ນບັນລຸຫຼາຍກວ່າ 13 ລ້ານຄົນຕໍ່ປີ. ໄດ້ສ້າງສຳເລັດລະບົບການສຶກສາ, ລະບົບປະກັນສັງຄົມ, ລະບົບສາທາລະນະສຸກທີ່ມີຂະໜາດໃຫຍ່ທີ່ສຸດຢູ່ໃນໂລກ, ລະດັບການເຂົ້າເຖິງການສຶກສາຂອງປະຊາຊົນໄດ້ບັນລຸການກ້າວກະໂດດຄັ້ງປະຫວັດສາດ, ການປະກັນໄພບຳນານຂັ້ນພື້ນຖານໄດ້ປົກຄຸມເຖິງ 1,04 ຕື້ຄົນ, ອັດຕາເຂົ້າຮ່ວມການປະກັນສຸຂະພາບ

ຂັ້ນພື້ນຖານຢູ່ໃນລະດັບ 95%. ພວກເຮົາໄດ້ປັບປຸງນະໂຍບາຍກ່ຽວກັບການເກີດລູກຢ່າງ ເໝາະສົມ. ດັດສ້າງເຮືອນຢູ່ເຂດຊຸມຊົນແອອັດທີ່ບໍ່ໄດ້ມາດຕະຖານຈຳນວນ 42 ລ້ານກວ່າຊຸດ, ດັດສ້າງເຮືອນຢູ່ທີ່ບໍ່ແໜ້ນໜາໃນຊົນນະບົດໃຫ້ 24 ລ້ານກວ່າຄອບຄົວ, ເຮັດໃຫ້ເງື່ອນໄຂທີ່ຢູ່ອາໄສຂອງປະຊາຊົນໃນຕົວເມືອງ ແລະຊົນນະບົດໄດ້ຮັບການປັບປຸງດີຂຶ້ນຢ່າງເດັ່ນຊັດ. ຈຳນວນຜູ້ໃຊ້ອິນເຕີເນັດບັນລຸ 1,03 ຕື້ຄົນ. ເຮັດໃຫ້ປະຊາຊົນມີຄວາມຮູ້ສຶກວ່າ ໄດ້ຮັບຜົນປະໂຫຍດ, ມີຄວາມສຸກ ແລະມີ ຄວາມປອດໄພເພີ່ມຂຶ້ນຫຼາຍກວ່າເກົ່າ, ມີການຮັບປະກັນກວ່າເກົ່າ ແລະຍືນຍົງກວ່າເກົ່າ, ວຽກງານ ການສ້າງຄວາມຮັ່ງມີຮ່ວມກັນໄດ້ຮັບປະສິດທິຜົນອັນໃໝ່.

—— ພວກເຮົາໄດ້ຍຶດໝັ້ນແນວຄວາມຄິດ "ພູຂຽວນ້ຳໃສກໍແມ່ນພູເງິນພູຄຳ", ຍຶດໝັ້ນໃນການອະນຸລັກພູຜາແມ່ນ້ຳ, ປ່າໄມ້, ໜອງບຶງ, ທົ່ງນາ, ທົ່ງຫຍ້າ ແລະທະເລຊາຍໃຫ້ເປັນອັນໜຶ່ງອັນດຽວກັນ ແລະຄຸ້ມຄອງຢ່າງເປັນລະບົບ, ເພີ່ມທະວີການປົກປັກຮັກສາສິ່ງແວດລ້ອມນິເວດຢ່າງຮອບດ້ານ ຕາມທົ່ວຂອບເຂດ ແລະທົ່ວຂັ້ນຕອນ, ສ້າງລະບົບລະບຽບການຄວາມສີວິໄລດ້ານນິເວດໃຫ້ຄົບຖ້ວນສົມບູນກວ່າເກົ່າ, ການແກ້ໄຂຂອດຍາກໃນການປ້ອງກັນ ແລະປົວແປງມົນລະພິດໄດ້ຮັບການຊຸກຍູ້ລົງສູ່ລວງເລິກ, ການພັດທະນາແບບສີຂຽວ, ແບບໝູນວຽນ ແລະແບບກາກບອນຕ່ຳໄດ້ກ້າວໄປຂ້າງໜ້າຢ່າງໜັກແໜ້ນ, ເຮັດໃຫ້ການອະນຸລັກສິ່ງແວດລ້ອມນິເວດໄດ້ເກີດມີການປ່ຽນແປງທີ່ມີລັກສະນະປະຫວັດສາດ, ລັກສະນະບາດລ້ຽວ ແລະລັກສະນະພາກສ່ວນລວມ, ທ້ອງຟ້າຂອງປະເທດຊາດພວກເຮົາຍິ່ງປອດໂປ່ງກວ່າເກົ່າ, ພູຜາຍິ່ງຂຽວງາມກວ່າເກົ່າ ແລະແມ່ນ້ຳຍິ່ງເສາະໃສກວ່າເກົ່າ.

—— ພວກເຮົາໄດ້ຈັດຕັ້ງປະຕິບັດຕາມທັດສະນະຄວາມໝັ້ນຄົງແຫ່ງຊາດໂດຍລວມ, ເຮັດໃຫ້ລະບຽບການນຳພາ ແລະລະບົບການປົກຄອງຕາມກົດໝາຍ, ລະບົບຍຸດທະສາດ ແລະລະບົບນະໂຍບາຍໃນດ້ານຄວາມໝັ້ນຄົງແຫ່ງຊາດໄດ້ຮັບການປັບປຸງສົມບູນຂຶ້ນຢ່າງບໍ່ຢຸດຢັ້ງ, ໃນບັນຫາດ້ານຫຼັກການແມ່ນບໍ່ໃຫ້ຜ່ອນຜັນແມ່ນແຕ່ໜ້ອຍດຽວ, ໄດ້ປົກປັກຮັກສາອະທິປະໄຕ, ຄວາມໝັ້ນຄົງ ແລະຜົນ

ປະໂຫຍດດ້ານການພັດທະນາແຫ່ງຊາດດ້ວຍມານະຈິດອັນເດັດດ່ຽວໜຽວແໜ້ນ, ເຮັດໃຫ້ຄວາມໝັ້ນຄົງແຫ່ງຊາດໄດ້ຮັບການເພີ່ມທະວີຂຶ້ນຢ່າງຮອບດ້ານ. ລະບຽບການຄຸ້ມຄອງສັງຄົມທີ່ສ້າງສາຮ່ວມກັນ, ຄຸ້ມຄອງຮ່ວມກັນ ແລະຊົມໃຊ້ຮ່ວມກັນນັ້ນໄດ້ປັບປຸງໃຫ້ສົມບູນຂຶ້ນຕື່ມ, ອິດທິກຳລັງແບ່ງແຍກຊາດ, ອິດທິກຳລັງຫົວຮຸນແຮງດ້ານສາສະໜາ ແລະອິດທິກຳລັງກໍ່ການຮ້າຍດ້ວຍຄວາມຮຸນແຮງໄດ້ຖືກສະກັດກັ້ນຢ່າງບັງເກີດຜົນ, ການປະຕິບັດການປາບປາມກຸ່ມແກ້ງອາຊະຍາກຳສະເພາະກິດໄດ້ຮັບໝາກຜົນເປັນໄລຍະ ແລະໄດ້ຮັບມືຢ່າງແຂງແຮງຕໍ່ໄພທຳມະຊາດຮ້າຍແຮງຕ່າງໆ, ການສ້າງສາປະເທດຈີນທີ່ສະຫງົບປອດໄພໄດ້ພັດທະນາຂຶ້ນສູ່ລະດັບສູງກວ່າເກົ່າ.

—— ພວກເຮົາໄດ້ຕັ້ງເປົ້າໝາຍສ້າງກອງທັບໃຫ້ເຂັ້ມແຂງໃນຍຸກໃໝ່ຂອງພັກ, ໄດ້ຜັນຂະຫຍາຍແນວຄິດສ້າງກອງທັບໃຫ້ເຂັ້ມແຂງຂອງພັກໃນຍຸກໃໝ່, ຜັນຂະຫຍາຍທິດທາງຍຸດທະສາດການທະຫານໃນຍຸກໃໝ່, ຍຶດໝັ້ນການນຳພາເດັດຖານຂອງພັກທີ່ມີຕໍ່ກອງທັບປະຊາຊົນ, ພວກເຮົາໄດ້ຈັດກອງປະຊຸມວຽກງານການເມືອງຂອງທົ່ວພັກຢູ່ເມືອງກູຖຽນ, ຊຸກຍູ້ການປັບປຸງຝຶກອົບຮົມດ້ານການເມືອງດ້ວຍນ້ຳໃຈປັບປຸງແບບແຜນໃນສະໄໝປະຕິວັດທີ່ເມືອງຢຽນອານ, ຖືກຳລັງສູ້ຮົບເປັນມາດຕະຖານພື້ນຖານພຽງໜຶ່ງດຽວຢ່າງໜັກແໜ້ນ, ເດັດດ່ຽວຫັນຈຸດສຸມວຽກງານຂອງທົ່ວກອງທັບໄປສູ່ການກຽມພ້ອມສູ້ຮົບ, ປະສານສົມທົບກັນເພີ່ມທະວີການຕໍ່ສູ້ທາງການທະຫານໃນທຸກທິດທາງ ແລະທຸກຂົງເຂດ, ດຳເນີນການຝຶກຊ້ອມທາງການທະຫານແບບສູ້ຮົບຕົວຈິງ, ດຳເນີນການປະຕິຮູບດ້ານການປ້ອງກັນປະເທດ ແລະກອງທັບຢ່າງກວ້າງຂວາງ ແລະເລິກເຊິ່ງ, ໄດ້ສ້າງລະບົບນຳພາ ແລະບັນຊາກອງທັບປະຊາຊົນ, ລະບົບກຳລັງການທະຫານທັນສະໄໝ, ລະບຽບການກ່ຽວກັບນະໂຍບາຍການທະຫານຄືນໃໝ່, ເລັ່ງການສ້າງສາຄວາມທັນສະໄໝຂອງການປ້ອງກັນປະເທດ ແລະກອງທັບ, ໄດ້ສຳເລັດການຫຼຸດກຳລັງຮົບໃນຈຳນວນ 300.000 ຄົນ, ເຮັດໃຫ້ກອງທັບປະຊາຊົນມີລະບົບໃໝ່, ອົງປະກອບໃໝ່, ສະພາບການໃໝ່ ແລະໂສມໜ້າໃໝ່, ຄວາມທັນສະໄໝ ແລະຄວາມສາມາດສູ້ຮົບຕົວຈິງໄດ້ຍົກສູງຂຶ້ນ

ຢ່າງເດັ່ນຊັດ, ເສັ້ນທາງສ້າງກອງທັບໃຫ້ເຂັ້ມແຂງທີ່ມີສີສັນພິເສດຂອງຈີນນັບມື້ນັບກວ້າງຂວາງກວ່າເກົ່າ.

—— ພວກເຮົາໄດ້ຊຸກຍູ້ພຶດຕິກຳຕົວຈິງຕາມທິດທາງ "ປະເທດດຽວ ສອງລະບອບ" ຢ່າງຮອບດ້ານແລະຖືກຕ້ອງ, ຍຶດໝັ້ນທິດທາງ"ປະເທດດຽວ ສອງລະບອບ" "ຊາວຮົງກົງປົກຄອງຮົງກົງ" "ຊາວມາກາວປົກຄອງມາກາວ" ແລະປົກຄອງຕົນເອງໃນລະດັບສູງ, ຊຸກຍູ້ໃຫ້ຮົງກົງເຂົ້າສູ່ໄລຍະໃໝ່ແຫ່ງການຫັນຈາກຄວາມວຸ້ນວາຍ ໄປສູ່ການບໍລິຫານໃຫ້ມີສະຖຽນລະພາບ ແລະຈາກການບໍລິຫານໃຫ້ມີສະຖຽນລະພາບ ຫັນໄປສູ່ຄວາມຈະເລີນຮຸ່ງເຮືອງ, ເຮັດໃຫ້ຮົງກົງ ແລະມາກາວໄດ້ຮັກສາທ່ວງທ່າທີ່ດີແຫ່ງການພັດທະນາຢ່າງຍາວນານແລະໝັ້ນທ່ຽງ. ພວກເຮົາໄດ້ສະເໜີທິດທາງຍຸດທະສາດລວມກ່ຽວກັບການແກ້ໄຂບັນຫາໄຕ້ຫວັນໃນຍຸກໃໝ່ ໂດຍສົ່ງເສີມການແລກປ່ຽນ ແລະຮ່ວມມືກັນລະຫວ່າງສອງຝັ່ງຊ່ອງແຄບໄຕ້ຫວັນ, ເດັດດ່ຽວຄັດຄ້ານການກະທຳແບ່ງແຍກຊາດຂອງອິດທິກຳລັງ "ໄຕ້ຫວັນເປັນເອກະລາດ", ເດັດດ່ຽວຄັດຄ້ານການແຊກແຊງຂອງອິດທິກຳລັງພາຍນອກ, ກຳແໜ້ນສິດນຳພາ ແລະສິດເປັນເຈົ້າການໃນດ້ານການພົວພັນລະຫວ່າງສອງຝັ່ງຊ່ອງແຄບໄຕ້ຫວັນ.

—— ພວກເຮົາໄດ້ຊຸກຍູ້ວຽກງານການຕ່າງປະເທດໃນຖານະປະເທດໃຫຍ່ທີ່ມີສີສັນພິເສດຂອງຈີນຢ່າງຮອບດ້ານ, ຊຸກຍູ້ການສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ, ຍຶດໝັ້ນປົກປັກຮັກສາຄວາມຍຸຕິທຳ ແລະຄວາມເປັນທຳໃນສາກົນ, ສົ່ງເສີມແລະປະຕິບັດຕາມລັດທິຫຼາຍຝ່າຍທີ່ແທ້ຈິງ, ຊູຄັນທຸງຢ່າງຊັດເຈນໃນການຄັດຄ້ານລັດທິເຈົ້າອຳນາດ ແລະການເມືອງມະຫາອຳນາດທຸກຢ່າງ, ຄັດຄ້ານລັດທິຝ່າຍດຽວ, ລັດທິປົກປ້ອງ ແລະການກະທຳຂົ່ມເຫັງແບບເຈົ້າອຳນາດທຸກຮູບແບບຢ່າງບໍ່ຫວັ່ນໄຫວຄອນແຄນ. ພວກເຮົາໄດ້ປັບປຸງແຜນຍຸດທະສາດການຕ່າງປະເທດໃຫ້ຄົບຖ້ວນສົມບູນ, ຕັ້ງໜ້າສ້າງເຄືອຂ່າຍການພົວພັນຄູ່ຮ່ວມໃນທົ່ວໂລກ, ຊຸກຍູ້ການສ້າງການພົວພັນສາກົນແບບໃໝ່. ພວກເຮົາໄດ້ສະແດງໃຫ້ເຫັນຄວາມຮັບຜິດຊອບຂອງປະເທດໃຫຍ່, ໄດ້ຕັ້ງໜ້າເຂົ້າຮ່ວມການປະຕິຮູບ ແລະ

ສ້າງສາລະບົບການບໍລິຫານໂລກ. ດຳເນີນການຮ່ວມມືກັບສາກົນໃນການຕ້ານພະຍາດໂຄວິດ-19 ຢ່າງຮອບດ້ານ ເຊິ່ງໄດ້ຮັບຄວາມຍ້ອງຍໍຊົມເຊີຍຢ່າງກວ້າງຂວາງຈາກປະຊາຄົມໂລກ, ເຮັດໃຫ້ຈີນມີບົດບາດອິດທິພົນ, ແຮງຈູງໃຈ ແລະຄວາມສ້າງສັນໃນສາກົນສູງຂຶ້ນຢ່າງເດັ່ນຊັດ.

—— ພວກເຮົາໄດ້ລົງເລິກຊຸກຍູ້ການຄຸ້ມຄອງພັກຢ່າງເຂັ້ມງວດຮອບດ້ານ, ຍຶດໝັ້ນອັນທີ່ເອີ້ນວ່າ “ຢາກຕີເຫຼັກໃຫ້ໄດ້ ຕົນເອງຕ້ອງເຂັ້ມແຂງມາກ່ອນ”, ໂດຍເລີ່ມຈາກການສ້າງແລະຈັດຕັ້ງປະຕິບັດ “ກົດເຫຼັກ 8 ຂໍ້” ຂອງສູນກາງພັກ, ພວກເຮົາໄດ້ສະເໜີ ແລະປະຕິບັດຕາມຄວາມຮຽກຮ້ອງລວມໃນການກໍ່ສ້າງພັກໃນຍຸກໃໝ່, ນຳພາວຽກງານທຸກດ້ານໃນການກໍ່ສ້າງພັກດ້ວຍການກໍ່ສ້າງພັກດ້ານການເມືອງ, ຍຶດໝັ້ນໃຫ້ການກໍ່ສ້າງພັກດ້ານແນວຄິດກັບການຄຸ້ມຄອງພັກດ້ວຍລະບຽບການໄປພ້ອມກັນ, ສ້າງຄວາມເຂັ້ມງວດແກ່ຊີວິດການເມືອງພາຍໃນພັກ, ດຳເນີນການສຶກສາອົບຮົມລວມສູນພາຍໃນພັກຢ່າງຕໍ່ເນື່ອງ, ກຳນົດແລະຍຶດໝັ້ນແນວທາງການຈັດຕັ້ງຂອງພັກໃນຍຸກໃໝ່, ເນັ້ນໃສ່ມາດຕະຖານທາງການເມືອງໃນການເລືອກເຟັ້ນພະນັກງານຜູ້ທີ່ມີຄວາມຮູ້ຄວາມສາມາດ, ເພີ່ມທະວີການລາດຕະເວນກວດກາທາງການເມືອງ ເພື່ອສ້າງເປັນລະບົບກົດຂໍ້ກຳນົດພາຍໃນພັກທີ່ຄົບຖ້ວນສົມບູນ, ຊຸກຍູ້ໃຫ້ທົ່ວພັກຕ້ອງມີອຸດົມການ ແລະຄວາມເຊື່ອໝັ້ນທີ່ເດັດດ່ຽວໜຽວແໜ້ນ,ມີລະບົບການຈັດຕັ້ງທີ່ຖີ່ຖ້ວນ ແລະມີລະບຽບວິໄນຢ່າງເຂັ້ມງວດ. ພວກເຮົາໄດ້ຍຶດໝັ້ນປັບປຸງແບບແຜນ ແລະເຂັ້ມງວດໃນການປະຕິບັດລະບຽບວິໄນຢ່າງຕໍ່ເນື່ອງ, ດັດແກ້ບັນຫາ “4 ແບບແຜນ” ດ້ວຍຈິດໃຈແບບຕອກຕະປູ, ຄັດຄ້ານແນວຄິດອະພິສິດ ແລະປາກົດການອະພິສິດ, ເດັດດ່ຽວກຳຈັດແບບແຜນທີ່ບໍ່ດີ ແລະບັນຫາສໍ້ລາດບັງຫຼວງທີ່ເກີດຂຶ້ນຢູ່ອ້ອມຂ້າງປະຊາຊົນ, ໄດ້ສະກັດກັ້ນປາກົດການຫຍໍ້ທໍ້ຈຳນວນໜຶ່ງທີ່ຕົກຄ້າງມາແຕ່ດົນນານ, ແກ້ໄຂບັນຫາຊໍາເຮື້ອຈຳນວນໜຶ່ງທີ່ບໍ່ໄດ້ຮັບການແກ້ໄຂມາເປັນເວລາຫຼາຍປີ. ພວກເຮົາໄດ້ດຳເນີນການຕໍ່ສູ້ຕ້ານການສໍ້ລາດບັງຫຼວງທີ່ບໍ່ເຄີຍມີມາກ່ອນ, ກຳຈັດປັດເປົ່າປາກົດການຫຍໍ້ທໍ້ຕ່າງໆດ້ວຍຄວາມຮັບຜິດຊອບສູງທີ່ບໍ່ເຮັດໃຫ້ປະຊາຊົນຈຳນວນ 1,4 ຕື້ຄົນຜິດຫວັງໂດຍບໍ່ລັ່ງເລໃນການລົງ

ໂທດພວກສໍ້ລາດບັງຫຼວງເປັນຮ້ອຍເປັນພັນຄົນ. ຊຸກຍູ້ວຽກງານຕາມທິດ "ບໍ່ກ້າສໍ້ລາດບັງຫຼວງ, ບໍ່ສາມາດສໍ້ລາດບັງຫຼວງ ແລະບໍ່ຢາກສໍ້ລາດບັງຫຼວງ" ໄປພ້ອມກັນ, ໃຊ້ຫຼາຍມາດຕະການປາບປາມປຽບເໝືອນການ "ຕີເສືອ" "ຕົບແມງວັນ" ແລະ "ໄລ່ລ່າໝາຈອກ" ໄປພ້ອມກັນ, ເຮັດໃຫ້ການຕໍ່ສູ້ຕ້ານການສໍ້ລາດບັງຫຼວງ ໄດ້ຮັບໄຊຊະນະຢ່າງໃຫຍ່ຫຼວງ ແລະໄດ້ຮັບການປັບປຸງຢ່າງຮອບດ້ານ, ອັນໄດ້ກຳຈັດຄວາມສ່ຽງຮ້າຍແຮງທີ່ແຝງຊ້ອນຢູ່ພາຍໃນພັກ, ລັດ ແລະກອງທັບ, ຮັບປະກັນໃຫ້ສິດອຳນາດທີ່ມອບໝາຍໂດຍພັກ ແລະປະຊາຊົນໄດ້ຮັບການນຳໃຊ້ໃນການສະແຫວງຫາຄວາມສຸກໃຫ້ແກ່ປະຊາຊົນຢ່າງສະເໝີຕົ້ນສະເໝີປາຍ. ໂດຍຜ່ານຈາກຄວາມພະຍາຍາມຢ່າງບໍ່ລົດລະ, ພັກໄດ້ຊອກເຫັນຄຳຕອບທີ່ຕ່າງກັບກົດເກນປະຫວັດສາດແຫ່ງການຈາກຄວາມຈະເລີນໄປສູ່ຄວາມຊຸດໂຊມ, ນັ້ນກໍຄື: ການປະຕິວັດໂດຍຕົນເອງ, ເຮັດໃຫ້ຄວາມສາມາດຂອງພັກໃນການສະສາງລ້າງສວ່າຍຕົນເອງ, ປັບປຸງຕົນເອງ,ປະຕິຮູບຕົນເອງ ແລະຍົກລະດັບຕົນເອງໄດ້ເພີ່ມຂຶ້ນຢ່າງເດັ່ນຊັດ, ສະພາບການທີ່ຄຸ້ມຄອງບໍລິຫານພັກແບບໂຍະຍານແລະອ່ອນແອຖືກປ່ຽນແປງຈາກດ້ານກົກຮາກ, ສະພາບແວດລ້ອມທາງການເມືອງພາຍໃນພັກທີ່ປອດໃສໄດ້ຈໍ່ຕົວຂຶ້ນ ແລະໄດ້ຮັບການພັດທະນາເລື້ອຍໆ, ໄດ້ຮັບປະກັນໃຫ້ພັກບໍ່ປ່ຽນທາດແທ້, ບໍ່ປ່ຽນສີ ແລະບໍ່ປ່ຽນກິ່ນ.

ໃນຂະນະທີ່ຢືນຢັນຜົນສຳເລັດທີ່ເຫັນໄດ້ຢ່າງປະຈັກຕາຕໍ່ຊາວໂລກຂອງພາລະກິດພັກ ແລະປະເທດຊາດຢ່າງເຕັມສ່ວນນັ້ນ, ພວກເຮົາຍັງຕ້ອງຮັບຮູ້ຢ່າງຈະແຈ້ງວ່າ, ວຽກງານພວກເຮົາຍັງມີຂໍ້ຂາດຕົກບົກຜ່ອງຈຳນວນໜຶ່ງ, ຍັງປະເຊີນໜ້າກັບຄວາມຫຍຸ້ງຍາກແລະບັນຫາຕ່າງໆ ເຊິ່ງຕົ້ນຕໍມີຄື: ບັນຫາການພັດທະນາທີ່ບໍ່ດຸນດ່ຽງແລະບໍ່ເຕັມສ່ວນຍັງພົ້ນເດັ່ນ, ໃນການຊຸກຍູ້ການພັດທະນາດ້ວຍຄຸນນະພາບສູງຍັງປະສົບກັບຂໍ້ຫຍຸ້ງຍາກຕ່າງໆ, ຄວາມສາມາດໃນການປະດິດສ້າງດ້ານວິທະຍາສາດເຕັກນິກຍັງບໍ່ທັນເຂັ້ມແຂງ; ໃນດ້ານການຮັບປະກັນຄວາມໜ້າເຊື່ອຖື ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ, ພະລັງງານ, ຕ່ອງໂສ້ອຸດສາຫະກຳ ແລະ ຕ່ອງໂສ້ການສະໜອງ ກໍຄືການປ້ອງກັນຄວາມສ່ຽງ

ດ້ານການເງິນຍັງຕ້ອງໄດ້ແກ້ໄຂບັນຫາສຳຄັນຫຼາຍຢ່າງ; ການປະຕິຮູບຂົງເຂດຈຸດສຸມຕ່າງໆຍັງມີຂໍ້ຫຍຸ້ງຍາກບໍ່ໜ້ອຍທີ່ຕ້ອງໄດ້ຮັບການແກ້ໄຂ; ໃນຂົງເຂດຮູບຖານຈິດສຳນຶກຍັງປະສົບກັບສິ່ງທ້າທາຍຈຳນວນບໍ່ໜ້ອຍ; ການພັດທະນາແລະການແບ່ງປັນລາຍໄດ້ລະຫວ່າງຕົວເມືອງກັບຊົນນະບົດຍັງມີຄວາມແຕກໂຕນກັນຫຼາຍ; ປະຊາຊົນຍັງປະເຊີນກັບບັນຫາບໍ່ໜ້ອຍໃນດ້ານການປະກອບອາຊີບ, ການໄດ້ຮັບການສຶກສາ, ການປິ່ນປົວພະຍາດ, ການລ້ຽງດູເດັກນ້ອຍແລະຜູ້ເຖົ້າ, ເຮືອນຢູ່ ແລະດ້ານອື່ນໆ; ດ້ານການປົກປັກຮັກສາສິ່ງແວດລ້ອມນິເວດຍັງມີໜ້າທີ່ຢ່າງໃຫຍ່ຫຼວງ ແລະໜັກໜ່ວງ; ສະມາຊິກພັກແລະພະນັກງານການນຳຈຳນວນໜຶ່ງຍັງຂາດນ້ຳໃຈຮັບຜິດຊອບ, ຄວາມສາມາດຕໍ່ສູ້ບໍ່ເຂັ້ມແຂງ, ສະຕິເຮັດແທ້ທຳຈິງຍັງບໍ່ທັນສູງເທົ່າທີ່ຄວນ, ປາກົດການລັດທິຮູບການ ແລະລັດທິອາຍາສິດຍັງພົ້ນເດັ່ນຫຼາຍສົມຄວນ; ການກຳຈັດເງື່ອນໄຂທີ່ພາໃຫ້ເກີດການສໍ້ລາດບັງຫຼວງນັ້ນຍັງເປັນໜ້າທີ່ອັນໜັກໜ່ວງຢູ່ ເຊິ່ງຕໍ່ກັບບັນຫາເຫຼົ່ານີ້, ພວກເຮົາໄດ້ໃຊ້ມາດຕະການແກ້ໄຂຢ່າງເປັນລະບົບແລ້ວ ແລະຕໍ່ໄປຍັງຈະເພີ່ມທະວີໃນການເຮັດວຽກງານເຫຼົ່ານີ້ຕື່ມອີກ.

ບັນດາສະຫາຍ! ຜົນສຳເລັດອັນຍິ່ງໃຫຍ່ໃນຍຸກໃໝ່ແມ່ນໄດ້ມາຈາກຄວາມບາກບັ່ນສູ້ຊົນຮ່ວມກັນຂອງພັກແລະປະຊາຊົນ. ນະໂອກາດນີ້, ຂ້າພະເຈົ້າຂໍຕາງໜ້າສູນກາງພັກກອມມູນິດຈີນສະແດງຄວາມຂອບອົກຂອບໃຈຢ່າງຈິງໃຈມາຍັງສະມາຊິກພັກກອມມູນິດຈີນທຸກຖ້ວນໜ້າ, ປະຊາຊົນບັນດາເຜົ່າທົ່ວປະເທດ, ບັນດາພັກຝ່າຍປະຊາທິປະໄຕ, ບັນດາອົງການຈັດຕັ້ງປະຊາຊົນແລະບຸກຄົນຜູ້ຮັກຊາດໃນວົງການຕ່າງໆ, ພ້ອມດ້ວຍພີ່ນ້ອງຮ່ວມຊາດຂອງເຂດບໍລິຫານພິເສດຮົງກົງ ມາກາວແລະພີ່ນ້ອງຮ່ວມຊາດໄຕ້ຫວັນ ກໍຄືຊາວຈີນຕ່າງດ້າວຈຳນວນມະຫາສານ ແລະເພື່ອນມິດບັນດາປະເທດທີ່ເອົາໃຈໃສ່ ແລະສະໜັບສະໜູນການສ້າງສາຄວາມທັນສະໄໝຂອງຈີນ.

ການປ່ຽນແປງອັນຍິ່ງໃຫຍ່ໃນ 10 ປີຂອງຍຸກໃໝ່ ແມ່ນນິມິດໝາຍໃນປະຫວັດສາດພັກ, ປະຫວັດສາດປະເທດຈີນໃໝ່, ປະຫວັດສາດການປະຕິຮູບ ແລະເປີດປະຕູສູ່ພາຍນອກ, ປະຫວັດສາດການພັດ

ທະນາສັງຄົມນິຍົມ ແລະປະຫວັດສາດການພັດທະນາຂອງປະຊາຊາດຈີນ. ພັກກອມມູນິດຈີນ ທີ່ໄດ້ເດີນຜ່ານຂະບວນການສູ້ຊົນມາເປັນເວລາ 100 ປີໄດ້ມີຄວາມເຂັ້ມແຂງຂຶ້ນຕື່ມໃນທ່າມກາງພຶດຕິກຳປະຕິວັດຕ່າງໆ, ຄວາມສາມາດນຳພາດ້ານການເມືອງ, ຄວາມສາມາດນຳພາດ້ານແນວຄິດ, ຄວາມສາມາດດ້ານການຈັດຕັ້ງປະຊາຊົນ ແລະຄວາມສາມາດຈູງໃຈທາງສັງຄົມຂອງພັກກໍເພີ່ມທະວີຂຶ້ນຢ່າງເດັ່ນຊັດ, ພັກແລະປະຊາຊົນໄດ້ຮັກສາການພົວພັນແບບກາຍອິນຊີຢ່າງສະເໝີຕົ້ນສະເໝີປາຍ, ພັກກອມມູນິດຈີນໄດ້ກ້າວເດີນຢູ່ແຖວໜ້າແຫ່ງຍຸກສະໄໝຢ່າງສະເໝີຕົ້ນສະເໝີປາຍໃນຂະບວນວິວັດປະຫວັດສາດທີ່ສະພາບການຂອງໂລກເກີດມີການປ່ຽນແປງຢ່າງເລິກເຊິ່ງ, ກາຍເປັນຫຼັກແຫຼ່ງຂອງປະຊາຊົນທົ່ວປະເທດຢ່າງສະເໝີຕົ້ນສະເໝີປາຍໃນຂະບວນວິວັດປະຫວັດສາດແຫ່ງການຮັບມືກັບຄວາມສ່ຽງ ແລະການທົດສອບທັງພາຍໃນ ແລະຕ່າງປະເທດ, ກາຍເປັນແກນນຳທີ່ເຂັ້ມແຂງຢ່າງສະເໝີຕົ້ນສະເໝີປາຍໃນຂະບວນວິວັດປະຫວັດສາດແຫ່ງການຍຶດໝັ້ນແລະພັດທະນາສັງຄົມນິຍົມ ທີ່ມີສີສັນພິເສດຂອງຈີນ. ປະຊາຊົນຈີນມີພະລັງກ້າວເດີນໄປຂ້າງໜ້າທີ່ແຂງແຮງກວ່າເກົ່າ, ມີຈິດໃຈສູ້ຊົນທີ່ຫ້າວຫັນກວ່າເກົ່າ ແລະມີຄວາມໝັ້ນໃຈຕ້ອງເອົາຊະນະໃຫ້ໄດ້ທີ່ໜັກແໜ້ນກວ່າເກົ່າ, ທັງໄດ້ເກີດມີຄວາມຕື່ນຕົວທາງປະຫວັດສາດ ແລະຈິດໃຈເປັນເຈົ້າການທີ່ເຂັ້ມແຂງກວ່າເກົ່າ ເຊິ່ງພັກກອມມູນິດຈີນ ແລະປະຊາຊົນຈີນກຳລັງຊຸກຍູ້ປະຊາຊາດຈີນບັນລຸການກ້າວກະໂດດຄັ້ງຍິ່ງໃຫຍ່ທີ່ຈາກການລຸກຢືນຂຶ້ນ ຮັ່ງມີຂຶ້ນ ແລະກ້າວໄປສູ່ຄວາມເຂັ້ມແຂງຂຶ້ນດ້ວຍຄວາມໝັ້ນໃຈອັນເຕັມປ່ຽມ. ການປະຕິຮູບເປີດປະຕູສູ່ພາຍນອກ ແລະ ການສ້າງສາສັງຄົມນິຍົມທັນສະໄໝໄດ້ຮັບການຊຸກຍູ້ລົງສູ່ລວງເລິກ, ອັນໄດ້ຊຽນປະຫວັດສາດໜ້າໃໝ່ແຫ່ງສອງສິ່ງມະຫັດສະຈັນ ຄື ບັນລຸໃຫ້ເສດຖະກິດພັດທະນາຢ່າງວ່ອງໄວ ແລະສັງຄົມມີສະຖຽນລະພາບຢ່າງຍາວນານ, ເຮັດໃຫ້ການພັດທະນາຂອງປະເທດພວກເຮົາ ມີພື້ນຖານວັດຖຸທີ່ໜັກແໜ້ນກວ່າເກົ່າ ແລະມີການຮັບປະກັນດ້ານລະບຽບການທີ່ສົມບູນກວ່າເກົ່າ, ເຮັດໃຫ້ການຟື້ນຟູຄວາມຈະເລີນຮຸ່ງເຮືອງທີ່ຍິ່ງໃຫຍ່ຂອງປະຊາຊາດຈີນເຂົ້າສູ່ຂະບວນວິວັດປະຫວັດສາດ ທີ່ກ້າວໄປ

ຂ້າງໜ້າໂດຍບໍ່ມີວັນຕ່າວປີ້ນຄືນ. ສັງຄົມນິຍົມວິທະຍາສາດໄດ້ເກີດມີພະລັງຊີວິດຊີວາອັນຮຸ່ງເຮືອງຄັ້ງໃໝ່ຢູ່ຈີນໃນສະຕະວັດທີ 21, ຄວາມທັນສະໄໝແບບຈີນໄດ້ອຳນວຍການເລືອກເຟັ້ນອັນໃໝ່ໃຫ້ແກ່ມວນມະນຸດໃນການບັນລຸຄວາມທັນສະໄໝ, ພັກກອມມູນິດຈີນ ແລະປະຊາຊົນຈີນໄດ້ອຳນວຍສະຕິປັນຍາຂອງຈີນ, ແຜນການຂອງຈີນ ແລະກຳລັງແຮງຂອງຈີນທີ່ຫຼາຍກວ່າເກົ່າ ແລະດີກວ່າເກົ່າໃຫ້ແກ່ການແກ້ໄຂບັນຫາທີ່ມວນມະນຸດພວມປະເຊີນໜ້າຮ່ວມກັນ, ໄດ້ເປັນການປະກອບສ່ວນອັນໃໝ່ໃຫຍ່ຫຼວງກວ່າເກົ່າໃຫ້ແກ່ພາລະກິດອັນສູງສົ່ງແຫ່ງສັນຕິພາບແລະການພັດທະນາຂອງມວນມະນຸດ.

## ສອງ: ເປີດສະພາບໃໝ່ແຫ່ງລັດທິມາກທີ່ຫັນເປັນແບບຈີນແລະໄປພ້ອມກັບຍຸກສະໄໝ

ລັດທິມາກແມ່ນແນວຄິດພື້ນຖານທີ່ຊີ້ນຳພວກເຮົາໃນການສ້າງຕັ້ງພັກ, ສ້າງຕັ້ງປະເທດ ແລະສ້າງພັກສ້າງປະເທດໃຫ້ຈະເລີນ. ພຶດຕິກຳໄດ້ບົ່ງບອກໃຫ້ພວກເຮົາຮູ້ວ່າ, ພັກກອມມູນິດຈີນເປັນຫຍັງຈຶ່ງມີຄວາມສາມາດ, ສັງຄົມນິຍົມທີ່ມີສີສັນພິເສດຂອງຈີນເປັນຫຍັງຈຶ່ງດີ, ເວົ້າລວມແລ້ວແມ່ນຍ້ອນມີລັດທິມາກທີ່ຫັນເປັນແບບຈີນແລະໄປພ້ອມກັບຍຸກສະໄໝ. ການທີ່ມີການຊີ້ນຳໂດຍທິດສະດີວິທະຍາສາດຂອງລັດທິມາກແມ່ນພື້ນຖານຂອງພັກພວກເຮົາໃນການຍຶດໝັ້ນອຸດົມການອັນໜັກແໜ້ນ ແລະກຳແໜ້ນຄວາມເປັນເຈົ້າການທາງປະຫວັດສາດ.

ການຊຸກຍູ້ລັດທິມາກຫັນເປັນແບບຈີນແລະໄປພ້ອມກັບຍຸກສະໄໝ ແມ່ນຂະບວນວິວັດແຫ່ງການສະແຫວງຫາສັດຈະທຳ, ເປີດເຜີຍສັດຈະທຳ ແລະຈັດຕັ້ງປະຕິບັດຕາມສັດຈະທຳ. ນັບແຕ່ກອງປະຊຸມໃຫຍ່ຄັ້ງທີ XVIII ຂອງພັກເປັນຕົ້ນມາ, ການປ່ຽນແປງໃໝ່ຂອງສະພາບການທັງພາຍໃນ ແລະຕ່າງປະເທດ ແລະ ຄວາມຮຽກຮ້ອງໃໝ່ດ້ານພຶດຕິກຳຕົວຈິງ ມີຄວາມຕ້ອງການຢ່າງຮີບດ່ວນໃຫ້ພວກເຮົາຕ້ອງລົງເລິກແກ້ໄຂບັນຫາຍຸກສະໄໝທີ່ສຳຄັນຕ່າງໆ ທີ່ພົວພັນເຖິງການພັດທະນາພາລະກິດຂອງ

ພັກ ແລະປະເທດຊາດ, ພົວພັນເຖິງການປົກຄອງບໍລິຫານປະເທດຂອງພັກຈາກການສົມທົບທິດສະດີ ແລະພຶດຕິກຳ. ພັກພວກເຮົາມີຄວາມອາດຫານໃນການດຳເນີນການຄົ້ນຄວ້າ ແລະປະດິດສ້າງດ້ານທິດສະດີ, ໄດ້ລົງເລິກຮັບຮູ້ກ່ຽວກັບກົດເກນການກຳອຳນາດຂອງພັກກອມມູນິດ, ກົດເກນການສ້າງສາສັງຄົມນິຍົມ ແລະກົດເກນການພັດທະນາຂອງສັງຄົມມະນຸດດ້ວຍສາຍຕາທີ່ໃໝ່ອ່ຽມ ແລະໄດ້ຮັບໝາກຜົນສຳຄັນໃນດ້ານການປະດິດສ້າງທິດສະດີ ເຊິ່ງໄດ້ໂຮມສູນສະແດງໃຫ້ເຫັນຢູ່ໃນແນວຄິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່. ສ່ວນ “10 ກຳນົດຢ່າງຈະແຈ້ງ” “14 ຍຶດໝັ້ນ” “ຜົນສຳເລັດໃນ 13 ດ້ານ” ທີ່ສະເໜີອອກມາໃນກອງປະຊຸມໃຫຍ່ຄັ້ງທີ XIX ແລະກອງປະຊຸມຄົບຄະນະຄັ້ງທີ 6 ສະໄໝທີ XIX ໄດ້ສັງເຂບເນື້ອໃນຕົ້ນຕໍຂອງແນວຄິດດັ່ງກ່າວທີ່ຕ້ອງຍຶດໝັ້ນປະຕິບັດເປັນເວລາຍາວນານ ແລະຕ້ອງພັດທະນາໃຫ້ມີຄວາມອຸດົມສົມບູນຂຶ້ນຕື່ມ.

ຊາວກອມມູນິດຈີນໄດ້ຮັບຮູ້ຢ່າງເລິກເຊິ່ງວ່າ: ມີແຕ່ເອົາຫຼັກມູນພື້ນຖານຂອງລັດທິມາກສົມທົບກັບສະພາບຕົວຈິງຂອງຈີນ ແລະສົມທົບກັບມູນເຊື້ອວັດທະນະທຳອັນດີງາມຂອງຈີນ, ຍຶດໝັ້ນໝູນໃຊ້ລັດທິວັດຖຸນິຍົມສັດຈະວິພາກ ແລະລັດທິວັດຖຸນິຍົມປະຫວັດສາດ, ຈິ່ງສາມາດໃຫ້ຄຳຕອບທີ່ຖືກຕ້ອງແກ່ບັນຫາສຳຄັນຕ່າງໆທີ່ເກີດຂຶ້ນຈາກພຶດຕິກຳ ແລະຍຸກສະໄໝ, ຈິ່ງສາມາດຮັກສາພະລັງຊີວິດຊີວາອັນຮຸ່ງເຮືອງຂອງລັດທິມາກຕະຫຼອດໄປ.

ການທີ່ຍຶດໝັ້ນແລະພັດທະນາລັດທິມາກ, ຕ້ອງສົມທົບກັບສະພາບຕົວຈິງຂອງຈີນ. ພວກເຮົາຍຶດໝັ້ນຖືລັດທິມາກເປັນທິດຊີ້ນຳ, ແມ່ນຕ້ອງແກ້ໄຂບັນຫາຂອງຈີນດ້ວຍໂລກະທັດ ແລະວິທີວິທະຍາສາດຂອງລັດທິມາກ, ແຕ່ບໍ່ແມ່ນທ່ອງຈຳເອົາ ຫຼືຊ້ຳເກົ່າແຕ່ຂໍ້ສະຫຼຸບ ແລະຄຳສັບສຳນວນຕ່າງໆຂອງລັດທິມາກ, ຍິ່ງບໍ່ຄວນຖືລັດທິມາກເປັນຄຳພີຕາຍຕົວທີ່ບໍ່ປ່ຽນແປງຈັກເທື່ອ. ພວກເຮົາຕ້ອງຍຶດໝັ້ນໃນການປົດປ່ອຍແນວຄິດ, ສະແຫວງຫາສັດຈະທຳຈາກຄວາມເປັນຈິງ, ກ້າວໄປພ້ອມກັບຍຸກສະໄໝ ແລະສະແຫວງຫາຄວາມເປັນຈິງແລະຕິດແທດຕົວຈິງ, ເຮັດທຸກສິ່ງຢ່າງເລີ່ມຈາກສະພາບຕົວຈິງ, ສຸມໃສ່ແກ້ໄຂ

ບັນຫາຕົວຈິງທີ່ປະສົບພົບພໍ້ໃນການດຳເນີນການປະຕິຮູບເປີດປະຕູສູ່ພາຍນອກ ແລະການສ້າງສາສັງຄົມນິຍົມທັນສະໄໝໃນຍຸກໃໝ່, ເພື່ອຕອບຄຳຖາມຂອງຈີນ, ຄຳຖາມຂອງໂລກ, ຄຳຖາມຂອງປະຊາຊົນ ກໍຄືຄຳຖາມຂອງຍຸກສະໄໝເລື້ອຍໆໄປ, ໃຫ້ຄຳຕອບທີ່ຖືກຕ້ອງແລະແທດເໝາະກັບສະພາບຕົວຈິງຂອງຈີນ ແລະຄວາມຮຽກຮ້ອງຂອງຍຸກສະໄໝ, ແລ້ວສະຫຼຸບເປັນຄວາມຮັບຮູ້ວິທະຍາສາດທີ່ສອດຄ່ອງກັບກົດເກນພາວະວິໄສ ແລະສ້າງໃຫ້ເປັນໝາກຜົນດ້ານທິດສະດີທີ່ກ້າວໄປຂ້າງໜ້າພ້ອມກັບຍຸກສະໄໝ ເພື່ອຊີ້ນຳພຶດຕິກຳຂອງຈີນໃຫ້ດີກວ່າເກົ່າ.

ການທີ່ຍຶດໝັ້ນແລະພັດທະນາລັດທິມາກ, ຕ້ອງສົມທົບກັບມູນເຊື້ອວັດທະນະທຳອັນດີງາມຂອງຈີນ. ມີແຕ່ຝັງຮາກຢູ່ນຳປະຫວັດສາດ ແລະ ວັດທະນະທຳແຫ່ງຊາດຈີນ, ລັດທິມາກຢູ່ຈີນຈິ່ງສາມາດຈະເລີນງອກງາມແລະແຕກດອກອອກຜົນໄດ້. ວັດທະນະທຳຈີນທີ່ມີມູນເຊື້ອອັນດີງາມມີປະຫວັດສາດຍາວນານ, ມີຄວາມອຸດົມສົມບູນແລະເລິກເຊິ່ງ, ແມ່ນຜົນງານຍອດຍິ່ງດ້ານສະຕິປັນຍາແຫ່ງຄວາມສີວິໄລຂອງປະຊາຊາດຈີນ, ໃນນັ້ນໄດ້ກວມເຖິງແນວຄິດຕ່າງໆ ເຊັ່ນ: ໂລກແມ່ນຂອງປະຊາຊົນ, ປະຊາຊົນເປັນພື້ນຖານຂອງປະເທດຊາດ, ປົກຄອງປະເທດດ້ວຍຄຸນສົມບັດ, ການປະຕິຮູບ ແລະປ່ຽນແປງໃໝ່, ເລືອກໃຊ້ຄົນທີ່ມີຄວາມຮູ້ຄວາມສາມາດແລະມີຄຸນສົມບັດ, ຄົນກັບທຳມະຊາດເຊື່ອມໂຍງເຂົ້າເປັນອັນໜຶ່ງອັນດຽວກັນ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງຢ່າງບໍ່ລົດລະ, ຜູ້ມີຄຸນສົມບັດສາມາດແບກຫາບໜ້າທີ່ສຳຄັນ, ມີຄວາມຊື່ສັດຈິງໃຈສ້າງຄວາມປອງດອງກັນ, ມີຄວາມເມດຕາ, ເປັນມິດກັບເພື່ອນບ້ານແລະອື່ນໆ, ລ້ວນແຕ່ເປັນສິ່ງສຳຄັນທີ່ສະແດງໃຫ້ເຫັນເຖິງທັດສະນະຂອງປະຊາຊົນຈີນກ່ຽວກັບຈັກກະວານ, ໂລກ, ສັງຄົມ ແລະຄຸນສົມບັດທີ່ມີເຄົ້າກຳເນີດມາຈາກການຜະລິດ ແລະການດຳລົງຊີວິດມາເປັນເວລາດົນນານ ເຊິ່ງມີລັກສະນະເປັນເອກະພາບກັນໃນລະດັບສູງກັບທັດສະນະຂອງຄ່ານິຍົມລັດທິສັງຄົມນິຍົມວິທະຍາສາດ. ສະນັ້ນ, ພວກເຮົາຕ້ອງເດັດດ່ຽວຍຶດໝັ້ນຄວາມໝັ້ນໃຈຕໍ່ປະຫວັດສາດຂອງຕົນເອງ, ຍຶດໝັ້ນຄວາມໝັ້ນໃຈຕໍ່ວັດທະນະທຳຂອງຕົນເອງ, ຍຶດໝັ້ນຖອດຖອນບົດຮຽນ

ຈາກປະຫວັດສາດ, ປະດິດສ້າງສິ່ງໃໝ່ຂຶ້ນ, ເຮັດໃຫ້ສິ່ງຍອດຍິ່ງຂອງແນວຄິດລັດທິມາກປະສານສົມທົບກັບສິ່ງຍອດຍິ່ງຂອງວັດທະນະທຳທີ່ມີມູນເຊື້ອອັນດີງາມຂອງຈີນ ແລະປະສານສົມທົບກັບຄ່ານິຍົມຮ່ວມກັນທີ່ເຊື່ອມສານເຂົ້າໃນຊີວິດປະຈຳວັນຂອງປະຊາຊົນຈີນ, ແລ້ວເພີ່ມສີສັນພິເສດຂອງຈີນທີ່ໂດດເດັ່ນເຂົ້າໃນທິດສະດີວິທະຍາສາດ, ໃຫ້ລັດທິມາກແບບຈີນທີ່ໄປພ້ອມກັບຍຸກສະໄໝນັ້ນ ມີພື້ນຖານປະຫວັດສາດ ແລະພື້ນຖານປະຊາຊົນນັບມື້ໜັກແໜ້ນຂຶ້ນ, ໃຫ້ລັດທິມາກຝັງຮາກເລິກຢູ່ຈີນຢ່າງໜັກແໜ້ນກວ່າເກົ່າ.

ພຶດຕິກຳແມ່ນບໍ່ມີວັນສິ້ນສຸດ, ການປະດິດສ້າງດ້ານທິດສະດີກໍບໍ່ມີວັນສິ້ນສຸດເຊັ່ນດຽວກັນ. ການຂຽນປະຫວັດສາດໜ້າໃໝ່ຢ່າງບໍ່ຢຸດຢັ້ງກ່ຽວກັບລັດທິມາກແບບຈີນທີ່ໄປພ້ອມກັບຍຸກສະໄໝນັ້ນ ແມ່ນໜ້າທີ່ຮັບຜິດຊອບທາງປະຫວັດສາດທີ່ເຄັ່ງຂຶມຂອງຊາວກອມມູນິດຈີນໃນຍຸກປັດຈຸບັນ. ການທີ່ສືບຕໍ່ຊຸກຍູ້ການປະດິດສ້າງດ້ານທິດສະດີບົນພື້ນຖານພຶດຕິກຳຕົວຈິງນັ້ນ ກ່ອນອື່ນ ຕ້ອງກຳກັບໂລກະທັດ ແລະວິທີກຳຂອງແນວຄິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່ໃຫ້ດີ, ຍຶດໝັ້ນ ແລະໝູນໃຊ້ຫຼັກໝັ້ນ, ທັດສະນະ ແລະວິທີກຳຢູ່ໃນແນວຄິດດັ່ງກ່າວນັ້ນໃຫ້ດີ.

—— ຕ້ອງຍຶດໝັ້ນຖືປະຊາຊົນສຳຄັນກວ່າໝູ່. ລັກສະນະປະຊາຊົນ ແມ່ນລັກສະນະທາດແທ້ຂອງລັດທິມາກ, ທິດສະດີຂອງພັກແມ່ນທິດສະດີທີ່ມາຈາກປະຊາຊົນ, ເພື່ອປະຊາຊົນ ແລະສ້າງຄວາມຜາສຸກໃຫ້ແກ່ປະຊາຊົນ, ພຶດຕິກຳຕົວຈິງແບບປະດິດສ້າງຂອງປະຊາຊົນ ເປັນແຫຼ່ງທີ່ມາທີ່ບໍ່ ເຫືອດແຫ້ງຂອງການປະດິດສ້າງດ້ານທິດສະດີ. ທິດສະດີທຸກຢ່າງທີ່ຫ່າງເຫີນຈາກປະຊາຊົນນັ້ນ ລ້ວນ ແຕ່ບໍ່ມີບົດບາດຫຍັງ, ທິດສະດີທຸກຢ່າງທີ່ບໍ່ສ້າງຄວາມຜາສຸກໃຫ້ແກ່ປະຊາຊົນນັ້ນ ລ້ວນແຕ່ບໍ່ມີພະລັງຊີວິດຊີວາ. ສະນັ້ນ ພວກເຮົາຕ້ອງຍຶດໝັ້ນໃນຫຼັກໝັ້ນປະຊາຊົນ, ຊອກຮູ້ຄວາມປາຖະໜາຂອງປະຊາຊົນ, ເຄົາລົບການປະດິດສ້າງຂອງປະຊາຊົນ ແລະເຕົ້າໂຮມສະຕິປັນຍາຂອງປະຊາຊົນ ເພື່ອສະຫຼຸບເປັນທິດສະດີທີ່ປະຊາຊົນນິຍົມຊົມຊອບ, ຮັບຮອງແລະຄອບຄອງໄວ້, ແລ້ວໃຫ້ກາຍເປັນອາວຸດດ້ານແນວຄິດທີ່ເຂັ້ມ

ແຂງໃນການຊີ້ນຳປະຊາຊົນຮັບຮູ້ໂລກ ແລະ ດັດສ້າງໂລກ.

—— ຕ້ອງຍຶດໝັ້ນໃນການໝັ້ນໃຈຕົນເອງ ແລະເພິ່ງຕົນເອງ. ປະຊາຊົນຈີນ ແລະປະຊາຊາດຈີນໄດ້ເລີ່ມຈາກຄວາມທຸກທໍລະມານທີ່ໂສກເສົ້າ ຫຼັງຈາກປະຫວັດສາດສະໄໝໃໝ່ (ປີ 1840-1949) ກ້າວໄປສູ່ອະນາຄົດອັນສົດໃສແຫ່ງການຟື້ນຟູຄວາມຈະເລີນຮຸ່ງເຮືອງທີ່ຍິ່ງໃຫຍ່ຂອງຊາດ ເຊິ່ງເວລາໃດກໍບໍ່ມີແບບຮຽນ, ຍິ່ງບໍ່ມີຄຳຕອບທີ່ໃຊ້ໄດ້ໂດຍກົງ. ເສັ້ນທາງສຳເລັດຜົນທີ່ພັກບາກບັ່ນສູ້ຊົນມາເປັນເວລາ 100 ປີແມ່ນພັກນຳພາປະຊາຊົນບຸກເບີກສ້າງຂຶ້ນຢ່າງເປັນເອກະລາດແລະເປັນເຈົ້າຕົນເອງ, ລັດທິມາກແບບຈີນແມ່ນກຳເນີດມາຈາກພຶດຕິກຳຕົວຈິງຂອງຊາວກອມມູນິດຈີນໂດຍອາໄສກຳລັງແຮງຕົນເອງ ເຊິ່ງໃນນັ້ນ ຈຸດພື້ນຖານອັນໜຶ່ງກໍຄື ບັນຫາຂອງຈີນຕ້ອງໃຫ້ຄົນຈີນເປັນຜູ້ແກ້ໄຂເອງໂດຍເລີ່ມຈາກສະພາບພື້ນຖານແຫ່ງຊາດຂອງຈີນ. ສະນັ້ນ, ພວກເຮົາຕ້ອງຍຶດໝັ້ນການເຊື່ອໝັ້ນຢ່າງເດັດດ່ຽວຕໍ່ລັດທິມາກ, ຍຶດໝັ້ນອຸດົມການສັງຄົມນິຍົມທີ່ມີສີສັນພິເສດຂອງຈີນຢ່າງເດັດດ່ຽວ, ຍຶດໝັ້ນຄວາມໝັ້ນໃຈຕົນເອງດ້ານເສັ້ນທາງ, ຄວາມໝັ້ນໃຈຕົນເອງດ້ານທິດສະດີ, ຄວາມໝັ້ນໃຈຕົນເອງດ້ານລະບອບ ແລະຄວາມໝັ້ນໃຈຕົນເອງດ້ານວັດທະນະທຳ, ປະກອບສ່ວນອັນໃໝ່ເຂົ້າໃນການພັດທະນາລັດທິມາກດ້ວຍຄວາມຮັບຜິດຊອບທາງປະຫວັດສາດ ແລະນ້ຳໃຈປະດິດສ້າງທີ່ຕັ້ງໜ້າກວ່າເກົ່າ, ບໍ່ຄວນມີແນວຄິດກົບຈັກຕາຍຕົວ, ຮັກສາຄອງເດີມ ແລະປິດປະຕູໄວ້ບໍ່ຮັບຮູ້ໂລກພາຍນອກ ແລະກໍບໍ່ຄວນກ່າຍເອົາແບບຂອງຄົນອື່ນໂດຍບໍ່ພິຈາລະນາ ແລະບໍ່ມີການວິເຄາະ.

—— ຕ້ອງຍຶດໝັ້ນການຮັກສາທາດແທ້ ແລະປະດິດສ້າງ. ພາລະກິດທີ່ພວກເຮົາເຮັດນັ້ນ ແມ່ນພາລະກິດອັນຍິ່ງໃຫຍ່ທີ່ບໍ່ເຄີຍມີມາກ່ອນໃນປະຫວັດສາດ, ມີແຕ່ຮັກສາທາດແທ້ຈິ່ງຈະບໍ່ຫຼົງທິດ, ບໍ່ກະທຳຜິດຢ່າງໃຫຍ່, ມີແຕ່ປະດິດສ້າງ ຈິ່ງຈະສາມາດກຳແໜ້ນກະແສຂອງຍຸກສະໄໝ ແລະນຳພາຍຸກສະໄໝ.ສະນັ້ນ, ພວກເຮົາຕ້ອງປະຕິບັດຕໍ່ວິທະຍາສາດດ້ວຍທັດສະນະທ່າທີວິທະຍາສາດ, ສະແຫວງຫາສັດຈະທຳດ້ວຍນ້ຳໃຈສັດຈະ, ຍຶດໝັ້ນຫຼັກມູນພື້ນຖານຂອງລັດທິມາກບໍ່ຫວັ່ນໄຫວຄອນແຄນ, ຍຶດໝັ້ນ

ການນຳພາຮອບດ້ານຂອງພັກບໍ່ຫວັ່ນໄຫວຄອນແຄນ, ຍຶດໝັ້ນສັງຄົມນິຍົມທີ່ມີສີສັນພິເສດຂອງຈີນບໍ່ຫວັ່ນໄຫວຄອນແຄນ, ຕິດຕາມກະແສຍຸກສະໄໝຢ່າງໃກ້ຊິດ, ໄປຕາມການພັດທະນາຂອງພຶດຕິກຳ,ປະຕິບັດຕໍ່ສິ່ງເກີດໃໝ່ທຸກຢ່າງດ້ວຍຄວາມຫ້າວຫັນຢ່າງເຕັມປ່ຽມ, ບຸກເບີກລວງກວ້າງ ແລະລວງເລິກຂອງຄວາມຮັບຮູ້ຢ່າງບໍ່ຢຸດຢັ້ງ, ກ້າເວົ້າສິ່ງທີ່ຄົນຮຸ່ນກ່ອນບໍ່ເຄີຍເວົ້າ, ກ້າກະທຳສິ່ງທີ່ຄົນຮຸ່ນກ່ອນບໍ່ເຄີຍກະທຳ, ຊີ້ນຳພຶດຕິກຳໃໝ່ດ້ວຍທິດສະດີໃໝ່.

—— ຕ້ອງຍຶດໝັ້ນຖືການແກ້ໄຂບັນຫາເປັນທິດຊີ້ນຳ. ບັນຫາຄືສຽງແຫ່ງຍຸກສະໄໝ, ການໃຫ້ຄຳຕອບ ແລະຊີ້ນຳການແກ້ໄຂບັນຫາແມ່ນໜ້າທີ່ກົກຮາກຂອງທິດສະດີ. ບັນຫາທີ່ພວກເຮົາປະເຊີນໃນທຸກມື້ນີ້ມີຄວາມສະຫຼັບຊັບຊ້ອນຫຼາຍຂຶ້ນ ແລະການແກ້ໄຂບັນຫາກໍປະສົບກັບຄວາມຫຍຸ້ງຍາກຫຼາຍຂຶ້ນຢ່າງເດັ່ນຊັດ, ເຊິ່ງໄດ້ວາງຄວາມຮຽກຮ້ອງອັນໃໝ່ໃຫ້ແກ່ການປະດິດສ້າງທິດສະດີ. ສະນັ້ນ ພວກເຮົາຕ້ອງເພີ່ມສະຕິຕໍ່ການແກ້ໄຂບັນຫາ, ສຸມໃສ່ບັນຫາໃໝ່ທີ່ປະສົບພົບພໍ້ໃນພຶດຕິກຳຕົວຈິງ, ບັນຫາດ້ານເລິກທີ່ມີຢູ່ໃນການດຳເນີນການປະຕິຮູບ ການພັດທະນາ ແລະການຮັກສາຄວາມສະຫງົບ, ບັນຫາທີ່ປະຊາຊົນມີຄວາມເດືອດຮ້ອນ, ຫຍຸ້ງຍາກ ແລະມີຄວາມກັງວົນໃຈ, ບັນຫາສຳຄັນຕ່າງໆໃນສະພາບການສາກົນທີ່ມີການຜັນແປ ແລະບັນຫາພົ້ນເດັ່ນທີ່ເກີດຂຶ້ນໃນການກໍ່ສ້າງພັກ, ແລ້ວສະເໜີທັດສະນະໃໝ່, ແນວຄວາມຄິດໃໝ່ ແລະວິທີການໃໝ່ຢ່າງບໍ່ຢຸດຢັ້ງ ເພື່ອແກ້ໄຂບັນຫາຢ່າງແທ້ຈິງ.

—— ຕ້ອງຍຶດໝັ້ນທັດສະນະຄວາມເປັນລະບົບ. ສິ່ງວັດຖຸ ແລະປາກົດການທຸກຢ່າງຢູ່ໃນໂລກແມ່ນມີການພົວພັນເຊິ່ງກັນແລະກັນ ແລະອີງອາໄສເຊິ່ງກັນແລະກັນ. ມີແຕ່ສັງເກດສິ່ງວັດຖຸ ແລະປາກົດການດ້ວຍທັດສະນະທີ່ພົວພັນໂດຍທົ່ວໄປ, ເປັນລະບົບຮອບດ້ານ ແລະມີການຂະຫຍາຍຕົວປ່ຽນແປງຢູ່ເລື້ອຍໆ, ຈຶ່ງສາມາດກຳໄດ້ກົດເກນການພັດທະນາຂອງສິ່ງວັດຖຸ ແລະປາກົດການຕ່າງໆ. ປະເທດພວກເຮົາແມ່ນປະເທດໃຫຍ່ທີ່ພວມພັດທະນາ, ຍັງຢູ່ໃນໄລຍະຕົ້ນຂອງສັງຄົມນິຍົມ, ກຳລັງປະສົບກັບການປ່ຽນແປງທາງສັງຄົມຢ່າງກວ້າງຂວາງ ແລະເລິກເຊິ່ງ, ການທີ່ຊຸກຍູ້ການປະຕິຮູບແລະ

ການພັດທະນາ, ປັບປຸງການພົວພັນດ້ານຜົນປະໂຫຍດມັກຈະສົ່ງຜົນສະທ້ອນຢ່າງໃຫຍ່ຫຼວງໄປສູ່ພາກສ່ວນລວມ. ສະນັ້ນ, ພວກເຮົາຕ້ອງຮູ້ເບິ່ງສະພາບຕົວຈິງໂດຍຜ່ານເຫດການປະຫວັດສາດ, ເບິ່ງເຫັນທາດແທ້ໂດຍຜ່ານປາກົດການ, ກຳກັບການພົວພັນລະຫວ່າງສະພາບລວມກັບພາກສ່ວນ, ລະຫວ່າງສະເພາະໜ້າກັບໄລຍະຍາວໄກ, ລະຫວ່າງມະຫາພາກກັບຈຸລະພາກ, ລະຫວ່າງຂໍ້ຂັດແຍ້ງຕົ້ນຕໍກັບຂໍ້ຂັດແຍ້ງສຳຮອງ, ລະຫວ່າງກໍລະນີພິເສດກັບກໍລະນີທົ່ວໄປ, ຍົກລະດັບຄວາມສາມາດໃນດ້ານແນວຄິດຍຸດທະສາດ, ແນວຄິດປະຫວັດສາດ, ແນວຄິດສັດຈະວິພາກ, ແນວຄິດຄວາມເປັນລະບົບ, ແນວຄິດປະດິດສ້າງ, ແນວຄິດປົກຄອງຕາມກົດໝາຍ, ແນວຄິດກ່ຽວກັບເສັ້ນຕ້ອງຫ້າມໃຫ້ສູງຂຶ້ນ, ເພື່ອສະໜອງວິທີ ແລະແນວຄິດວິທະຍາສາດໃນການພິຈາລະນາແບບລ້ຳໜ້າ, ວາງແຜນໂດຍ ລວມ ເພື່ອຊຸກຍູ້ວຽກງານທຸກດ້ານຂອງພັກ ແລະປະເທດຊາດຢ່າງເປັນເອກະພາບກັນ.

—— ຕ້ອງຍຶດໝັ້ນໃນການຫ່ວງໃຍຊາຕາກຳຂອງໂລກ. ພັກກອມມູນິດຈີນແມ່ນພັກທີ່ສະແຫວງຫາຄວາມຜາສຸກໃຫ້ປະຊາຊົນ ແລະສະແຫວງຫາການຟື້ນຟູຄວາມຈະເລີນຮຸ່ງເຮືອງຂອງປະຊາຊາດຈີນ, ແລະກໍແມ່ນພັກທີ່ສະແຫວງຫາຄວາມກ້າວໜ້າຂອງມວນມະນຸດ ແລະສະແຫວງຫາຄວາມຖືກຕ້ອງປອງດອງກັນຂອງໂລກ. ສະນັ້ນ, ພວກເຮົາຕ້ອງເປີດກວ້າງສາຍຕາສູ່ໂລກ, ຮັບຮູ້ເຖິງກະແສການພັດທະນາ ແລະຄວາມກ້າວໜ້າຂອງມວນມະນຸດຢ່າງເລິກເຊິ່ງ, ຕັ້ງໜ້າຕອບສະໜອງຄວາມສົນໃຈທົ່ວໄປຂອງປະຊາຊົນປະເທດຕ່າງໆ, ປະກອບສ່ວນເຂົ້າໃນການແກ້ໄຂບັນຫາທີ່ມວນມະນຸດປະເຊີນໜ້າຮ່ວມກັນ, ຖອດຖອນແລະຮັບເອົາໝາກຜົນແຫ່ງຄວາມສີວິໄລທີ່ດີເດັ່ນທຸກຢ່າງຂອງມວນມະນຸດດ້ວຍຄວາມໂອບເອື້ອອາລີ ແລະຊຸກຍູ້ການສ້າງໂລກທີ່ດີງາມກວ່າເກົ່າ.

## ສາມ: ພາລະໜ້າທີ່ຂອງພັກກອມມູນິດຈີນບົນຂະບວນການໃໝ່ໃນຍຸກໃໝ່

ເລີ່ມແຕ່ດຽວນີ້ເປັນຕົ້ນໄປ, ໜ້າທີ່ໃຈກາງຂອງພັກກອມມູນິດຈີນແມ່ນສາມັກຄີ ແລະນຳພາປະຊາຊົນບັນດາເຜົ່າທົ່ວປະເທດສ້າງສາປະເທດສັງຄົມນິຍົມທັນສະໄໝທີ່ເຂັ້ມແຂງໃຫ້ສຳເລັດຢ່າງຮອບດ້ານ, ບັນລຸເປົ້າໝາຍສູ້ຊົນ 100 ປີປະການທີ 2, ຊຸກຍູ້ການຟື້ນຟູຄວາມຈະເລີນຮຸ່ງເຮືອງທີ່ຍິ່ງໃຫຍ່ຂອງປະຊາຊາດຈີນດ້ວຍຄວາມທັນສະໄໝແບບຈີນຢ່າງຮອບດ້ານ.

ບົນພື້ນຖານການຄົ້ນຄວ້າ ແລະຜ່ານພຶດຕິກຳຕົວຈິງມາເປັນເວລາດົນນານນັບແຕ່ສ້າງຕັ້ງປະເທດຈີນໃໝ່ ໂດຍສະເພາະນັບແຕ່ດຳເນີນການປະຕິຮູບ ແລະເປີດປະຕູສູ່ພາຍນອກເປັນຕົ້ນມາ, ໂດຍຜ່ານຈາກການປະດິດສ້າງແລະບຸກທະລຸທາງດ້ານທິດສະດີ ແລະພຶດຕິກຳ ນັບແຕ່ໄຂກອງປະຊຸມໃຫຍ່ຄັ້ງທີ XVIII ເປັນຕົ້ນມາ, ພັກພວກເຮົາໄດ້ຊຸກຍູ້ ແລະເປີດກວ້າງຄວາມທັນສະໄໝແບບຈີນຢ່າງສຳເລັດຜົນ.

ຄວາມທັນສະໄໝແບບຈີນ ແມ່ນຄວາມທັນສະໄໝສັງຄົມນິຍົມທີ່ນຳພາໂດຍພັກກອມມູນິດຈີນ ເຊິ່ງມີທັງຈຸດພິເສດຮ່ວມຂອງຄວາມທັນສະໄໝຂອງປະເທດຕ່າງໆ, ຍິ່ງມີເອກະລັກພິເສດຂອງຈີນທີ່ຢູ່ບົນພື້ນຖານສະພາບຕົວຈິງຂອງປະເທດພວກເຮົາ.

—— ຄວາມທັນສະໄໝແບບຈີນ ແມ່ນຄວາມທັນສະໄໝທີ່ມີຈຳນວນປະຊາກອນອັນມະຫາສານ. ການທີ່ເຮັດໃຫ້ປະຊາກອນຈຳນວນ 1,4 ຕື້ກວ່າຄົນຂອງປະເທດພວກເຮົາກ້າວເຂົ້າສູ່ສັງຄົມທັນສະໄໝໂດຍລວມ ເຊິ່ງມີຂະໜາດໃຫຍ່ກວ່າລວມຍອດປະຊາກອນຂອງປະເທດທີ່ພັດທະນາແລ້ວຢູ່ໃນປັດຈຸບັນ, ແມ່ນມີຄວາມຫຍຸ້ງຍາກ ແລະສະຫຼັບສັບຊ້ອນທີ່ບໍ່ເຄີຍມີມາກ່ອນ, ຊ່ອງທາງຂະຫຍາຍຕົວ ແລະວິທີການຊຸກຍູ້ວຽກງານດັ່ງກ່າວກໍຕ້ອງມີຈຸດພິເສດຂອງຕົນເອງ. ສະນັ້ນ, ພວກເຮົາຕ້ອງພິຈາລະນາບັນຫາ, ທຳການຕັດສິນ, ເຮັດວຽກໂດຍເລີ່ມຈາກສະພາບແຫ່ງຊາດ, ບໍ່ວາງເປົ້າໝາຍສູງເກີນໄປ, ແລະກໍບໍ່ຮັກສາເດີມໂດຍບໍ່ກ້າວໜ້າ, ແຕ່ແມ່ນຮັກສາຄວາມອົດທົນທາງປະຫວັດສາດ ເພື່ອສະແຫວງຫາການພັດທະນາກ້າວໄປຂ້າງໜ້າຢ່າງໝັ້ນທ່ຽງ, ຄ່ອຍເປັນຄ່ອຍໄປ ແລະຊຸກຍູ້ໄປຢ່າງຕໍ່ເນື່ອງ.

—— ຄວາມທັນສະໄໝແບບຈີນ ແມ່ນຄວາມທັນສະໄໝທີ່ໃຫ້ປະຊາຊົນທຸກຖ້ວນໜ້າບັນລຸຄວາມຮັ່ງມີຮ່ວມກັນ. ຄວາມຮັ່ງມີຮ່ວມກັນແມ່ນຄວາມຮຽກຮ້ອງໃນດ້ານທາດແທ້ຂອງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ ແລະກໍແມ່ນຂະບວນການປະຫວັດສາດທີ່ມີມາເປັນເວລາຍາວນານ. ສະນັ້ນ, ພວກເຮົາຕ້ອງຍຶດໝັ້ນຖືການບັນລຸຄວາມປາຖະໜາຂອງປະຊາຊົນທີ່ມີຕໍ່ຊີວິດການເປັນຢູ່ອັນດີງາມເປັນຈຸດເລີ່ມຕົ້ນ ແລະເປົ້າໝາຍຂອງການສ້າງສາຄວາມທັນສະໄໝ, ອອກແຮງປົກປັກຮັກສາ ແລະສົ່ງເສີມຄວາມຍຸຕິທຳ ແລະຄວາມເປັນທຳຂອງສັງຄົມ, ອອກແຮງຊຸກຍູ້ໃຫ້ປະຊາຊົນທຸກຖ້ວນໜ້າບັນລຸຄວາມຮັ່ງມີຮ່ວມກັນ, ເດັດດ່ຽວປ້ອງກັນບໍ່ໃຫ້ເກີດການຜັນແຍກເປັນສອງຂົ້ວ ຄື: ຮັ່ງມີແລະທຸກຍາກ.

—— ຄວາມທັນສະໄໝແບບຈີນແມ່ນຄວາມທັນສະໄໝທີ່ໃຫ້ຄວາມສີວິໄລດ້ານວັດຖຸ ແລະ ຄວາມສີວິໄລດ້ານຈິດໃຈພັດທະນາໄປຢ່າງກົມກຽວກັນ. ການທີ່ມີວັດຖຸທີ່ອຸດົມຮັ່ງມີ ແລະມີຈິດໃຈທີ່ອຸດົມສົມບູນແມ່ນຄວາມຮຽກຮ້ອງພື້ນຖານຂອງສັງຄົມນິຍົມທັນສະໄໝ. ການຂາດເຂີນດ້ານວັດຖຸບໍ່ແມ່ນສັງຄົມນິຍົມ, ແຕ່ການຂາດເຂີນດ້ານຈິດໃຈກໍບໍ່ແມ່ນສັງຄົມນິຍົມເຊັ່ນດຽວກັນ. ສະນັ້ນ, ພວກເຮົາຕ້ອງສ້າງພື້ນຖານວັດຖຸອັນແໜ້ນໜາໃຫ້ແກ່ຄວາມທັນສະໄໝຢ່າງບໍ່ຢຸດຢັ້ງ, ສ້າງເງື່ອນໄຂດ້ານວັດຖຸໃຫ້ແກ່ຊີວິດອັນຜາສຸກຂອງປະຊາຊົນຢ່າງບໍ່ຢຸດຢັ້ງ, ພ້ອມກັນນັ້ນ, ພວກເຮົາຍັງຕ້ອງອອກແຮງພັດທະນາວັດທະນະທຳກ້າວໜ້າຂອງສັງຄົມນິຍົມ, ເພີ່ມທະວີການສຶກສາອົບຮົມດ້ານອຸດົມການ, ສືບທອດອະລິຍະທຳຈີນ, ຊຸກຍູ້ຄວາມອຸດົມສົມບູນຢ່າງຮອບດ້ານຂອງວັດຖຸ ແລະການພັດທະນາຢ່າງຮອບດ້ານຂອງຄົນ.

—— ຄວາມທັນສະໄໝແບບຈີນແມ່ນຄວາມທັນສະໄໝທີ່ບັນລຸໃຫ້ຄົນກັບທຳມະຊາດຢູ່ຮ່ວມກັນຢ່າງກົມກຽວ. ຄົນກັບທຳມະຊາດເປັນປະຊາຄົມຮ່ວມຊີວິດ, ການທີ່ຂຸດຄົ້ນທຳມະຊາດຢ່າງບໍ່ມີຂີດຈຳກັດ ຫຼືເຖິງຂັ້ນທຳລາຍທຳມະຊາດ ຍ່ອມຈະຖືກທຳມະຊາດລົງໂທດຄືນ. ສະນັ້ນ, ພວກເຮົາຕ້ອງຍຶດໝັ້ນການພັດທະນາແບບຍືນຍົງ, ຍຶດໝັ້ນໃນທິດທາງທີ່ໃຫ້ການປະຢັດມັດທະຍັດມາກ່ອນ, ໃຫ້ການ

ປົກປ້ອງມາກ່ອນ ແລະຖືການຟື້ນຟູຕາມທຳມະຊາດເປັນຫຼັກ, ຕ້ອງປົກປັກຮັກສາທຳມະຊາດ ແລະສິ່ງແວດລ້ອມນິເວດປານຮັກສາດວງຕາຂອງຕົນເອງ, ເດັດດ່ຽວເດີນຕາມເສັ້ນທາງພັດທະນາສີວິໄລທີ່ການຜະລິດມີການພັດທະນາ, ຊີວິດຮັ່ງມີ ແລະເປັນມິດກັບທຳມະຊາດ ເພື່ອໃຫ້ປະຊາຊາດຈີນບັນລຸການພັດທະນາແບບຍືນຍົງຖາວອນ.

—— ຄວາມທັນສະໄໝແບບຈີນແມ່ນຄວາມທັນສະໄໝທີ່ເດີນຕາມເສັ້ນທາງພັດທະນາໂດຍສັນຕິ. ປະເທດພວກເຮົາຈະບໍ່ຊ້ຳເສັ້ນທາງເກົ່າຂອງບາງປະເທດທີ່ບັນລຸຄວາມທັນສະໄໝດ້ວຍການກໍ່ສົງຄາມ, ລ່າເມືອງຂຶ້ນແລະປຸ້ນສະດົມ ເຊິ່ງເສັ້ນທາງເກົ່າທີ່ສ້າງຜົນປະໂຫຍດແກ່ຕົນເອງໂດຍຜ່ານການທຳຮ້າຍຄົນອື່ນ ແລະເຕັມໄປດ້ວຍໂທດກຳແບບເປື້ອນເລືອດນັ້ນໄດ້ນຳເອົາຄວາມທຸກທໍລະມານມາໃຫ້ແກ່ປະຊາຊົນບັນດາປະເທດທີ່ພວມພັດທະນາທັງຫຼາຍ. ສະນັ້ນ, ພວກເຮົາຕ້ອງຍຶດໝັ້ນຢືນຢູ່ຝ່າຍທີ່ຖືກຕ້ອງຂອງປະຫວັດສາດ, ຢືນຢູ່ຝ່າຍຂອງຄວາມກ້າວໜ້າສີວິໄລຂອງມວນມະນຸດ, ຊູຄັນທຸງແຫ່ງສັນຕິພາບ, ການພັດທະນາ, ການຮ່ວມມື ແລະຕ່າງຝ່າຍຕ່າງມີຜົນປະໂຫຍດ, ສະແຫວງຫາການພັດທະນາຂອງຕົນເອງໃນທ່າມກາງຍຶດໝັ້ນປົກປັກຮັກສາສັນຕິພາບ ແລະການພັດທະນາຂອງໂລກຢ່າງເດັດດ່ຽວ, ແລ້ວປົກປັກຮັກສາສັນຕິພາບ ແລະການພັດທະນາຂອງໂລກດ້ວຍການພັດທະນາຂອງຕົນເອງໃຫ້ດີກວ່າເກົ່າ.

ຄວາມຮຽກຮ້ອງດ້ານທາດແທ້ຂອງຄວາມທັນສະໄໝແບບຈີນຄື: ຍຶດໝັ້ນການນຳພາຂອງພັກກອມມູນິດຈີນ, ຍຶດໝັ້ນສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ, ບັນລຸການພັດທະນາດ້ວຍຄຸນນະພາບສູງ, ເສີມຂະຫຍາຍປະຊາທິປະໄຕປະຊາຊົນໃນທົ່ວຂັ້ນຕອນ, ເສີມສ້າງໂລກທາງຈິດໃຈຂອງປະຊາຊົນໃຫ້ມີຄວາມອຸດົມສົມບູນຂຶ້ນ, ບັນລຸໃຫ້ປະຊາຊົນທຸກຖ້ວນໜ້າຮັ່ງມີຮ່ວມກັນ, ຊຸກຍູ້ໃຫ້ຄົນກັບທຳມະຊາດຢູ່ຮ່ວມກັນຢ່າງກົມກຽວກັນ, ຊຸກຍູ້ການສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ, ສ້າງຮູບແບບໃໝ່ແຫ່ງຄວາມສີວິໄລຂອງມວນມະນຸດ.

ການສ້າງສາປະເທດສັງຄົມນິຍົມທັນສະໄໝທີ່ເຂັ້ມແຂງໃຫ້ສຳເລັດຢ່າງຮອບດ້ານ ມີການວາງແຜນຍຸດທະສາດລວມ ໂດຍແບ່ງເປັນສອງບາດກ້າວຄື: ຈາກປີ 2020-2035 ໃຫ້ບັນລຸສັງຄົມນິຍົມທັນສະໄໝໂດຍພື້ນຖານ; ຈາກປີ 2035 ຮອດກາງສະຕະວັດທີ 21 ນີ້ ຕ້ອງສ້າງສາປະເທດເຮົາໃຫ້ເປັນປະເທດສັງຄົມນິຍົມທັນສະໄໝທີ່ມັ່ງຄັ່ງເຂັ້ມແຂງ, ປະຊາທິປະໄຕ, ສີວິໄລ, ກົມກຽວ ແລະສວຍງາມ.

ເມື່ອຮອດປີ 2035, ເປົ້າໝາຍລວມແຫ່ງການພັດທະນາຂອງປະເທດພວກເຮົາແມ່ນ: ກຳລັງເສດຖະກິດ, ກຳລັງວິທະຍາສາດເຕັກນິກ ແລະກຳລັງສັງລວມແຫ່ງຊາດຍົກສູງຂຶ້ນຢ່າງຫຼວງຫຼາຍ, ລວມຍອດຜະລິດຕະພັນພາຍໃນສະເລ່ຍໃສ່ຫົວຄົນເພີ່ມຂຶ້ນສູ່ລະດັບໃໝ່ ໂດຍບັນລຸລະດັບຂອງປະເທດທີ່ພັດທະນາແລ້ວໃນລະດັບປານກາງ; ບັນລຸການເພິ່ງຕົນເອງ ແລະສ້າງຄວາມເຂັ້ມແຂງດ້ວຍຕົນເອງໃນດ້ານວິທະຍາສາດເຕັກນິກໃນລະດັບສູງ, ກ້າວເຂົ້າສູ່ແຖວໜ້າຂອງປະເທດແບບປະດິດສ້າງ; ສ້າງລະບົບເສດຖະກິດທັນສະໄໝໃຫ້ສຳເລັດ, ຈໍ່ຕົວເປັນສະພາບການພັດທະນາອັນໃໝ່, ບັນລຸການຫັນເປັນອຸດສາຫະກຳແບບໃໝ່, ຫັນເປັນເຕັກໂນໂລຢີຂໍ້ມູນຂ່າວສານ, ຫັນເປັນຕົວເມືອງ ແລະຫັນເປັນທັນສະໄໝ ດ້ານກະສິກຳໂດຍພື້ນຖານ; ບັນລຸຄວາມທັນສະໄໝດ້ານລະບົບການຄຸ້ມຄອງປະເທດ ແລະຄວາມສາມາດການຄຸ້ມຄອງປະເທດໂດຍພື້ນຖານ, ລະບຽບການປະຊາທິປະໄຕປະຊາຊົນໃນທົ່ວຂັ້ນຕອນມີຄວາມສົມບູນຂຶ້ນຕື່ມ, ສ້າງປະເທດທີ່ປົກຄອງຕາມກົດໝາຍ, ລັດຖະບານທີ່ບໍລິຫານຕາມກົດໝາຍ ແລະ ສັງຄົມທີ່ຄຸ້ມຄອງຕາມກົດໝາຍໃຫ້ສຳເລັດໂດຍພື້ນຖານ; ສ້າງປະເທດເຂັ້ມແຂງດ້ານການສຶກສາ, ປະເທດເຂັ້ມແຂງດ້ານວິທະຍາສາດເຕັກນິກ, ປະເທດເຂັ້ມແຂງດ້ານຜູ້ມີຄວາມຮູ້ຄວາມສາມາດ, ປະເທດເຂັ້ມແຂງດ້ານວັດທະນະທຳ, ປະເທດເຂັ້ມແຂງດ້ານກິລາ ແລະປະເທດຈີນທີ່ມີສຸຂະພາບໃຫ້ສຳເລັດ, ກຳລັງໄມ້ອ່ອນດ້ານວັດທະນະທຳຂອງປະເທດເພີ່ມຂຶ້ນຢ່າງເດັ່ນຊັດ; ຊີວິດການເປັນຢູ່ຂອງປະຊາຊົນມີຄວາມສົມບູນພູນສຸກກວ່າເກົ່າ, ລາຍໄດ້ທີ່ສາມາດຈັບຈ່າຍໄດ້ຂອງປະຊາຊົນສະເລ່ຍໃສ່ຫົວຄົນເພີ່ມສູງຂຶ້ນເຖິງລະດັບໃໝ່, ອັດຕາສ່ວນຂອງກຸ່ມຄົນທີ່ມີລາຍໄດ້ປານກາງໄດ້ຍົກສູງ

ຂຶ້ນຢ່າງເດັ່ນຊັດ, ການບໍລິການສາທາລະນະຂັ້ນພື້ນຖານໄດ້ຈັດວາງຢ່າງສະໝ່ຳສະເໝີ, ຢູ່ຊົນນະບົດມີເງື່ອນໄຂການດຳລົງຊີວິດແບບທັນສະໄໝໂດຍພື້ນຖານ, ສັງຄົມມີສະຖຽນລະພາບເປັນໄລຍະຍາວນານ, ການພັດທະນາຢ່າງຮອບດ້ານຂອງຄົນ ແລະການສ້າງຄວາມຮັ່ງມີຮ່ວມກັນຂອງປະຊາຊົນທຸກຖ້ວນໜ້າໄດ້ຮັບຄວາມຄືບໜ້າທີ່ມີລັກສະນະທາດແທ້ຢ່າງພົ້ນເດັ່ນກວ່າເກົ່າ; ໄດ້ເຜີຍແຜ່ຮູບແບບການຜະລິດແລະການດຳລົງຊີວິດແບບສີຂຽວຢ່າງກວ້າງຂວາງ, ການລະບາຍກາກບອນຫຼຸດລົງຢ່າງໝັ້ນທ່ຽງພາຍຫຼັງບັນລຸການລະບາຍເຖິງຈຸດສູງສຸດ, ສິ່ງແວດລ້ອມນິເວດດີຂຶ້ນໃນຂັ້ນຮາກຖານ ແລະບັນລຸເປົ້າໝາຍການສ້າງສາປະເທດຈີນທີ່ສວຍງາມໂດຍພື້ນຖານ; ລະບົບ ແລະຄວາມສາມາດດ້ານຄວາມໝັ້ນຄົງແຫ່ງຊາດໄດ້ຮັບການເພີ່ມທະວີຢ່າງຮອບດ້ານ, ບັນລຸຄວາມທັນສະໄໝທາງດ້ານການປ້ອງກັນປະເທດ ແລະກອງທັບໂດຍພື້ນຖານ.

ບົນພື້ນຖານຂອງການບັນລຸຄວາມທັນສະໄໝໂດຍພື້ນຖານຕ້ອງສືບຕໍ່ບຸກບືນສູ້ຊົນ ເພື່ອສ້າງສາປະເທດພວກເຮົາໃຫ້ເປັນປະເທດສັງຄົມນິຍົມທັນສະໄໝທີ່ເຂັ້ມແຂງທີ່ມີກຳລັງແຮງສັງລວມແຫ່ງຊາດ ແລະບົດບາດສາກົນທີ່ຢູ່ອັນດັບນຳໜ້າໃນໂລກໃຫ້ສຳເລັດເມື່ອຮອດກາງສະຕະວັດນີ້.

ໄລຍະ 5 ປີໃນຕໍ່ໜ້ານີ້ ເປັນໄລຍະສຳຄັນຂອງການເລີ່ມປະຕິບັດການສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານ ເຊິ່ງມີໜ້າທີ່ເປົ້າໝາຍຕົ້ນຕໍຄື: ຕ້ອງໃຫ້ການພັດທະນາເສດຖະກິດດ້ວຍຄຸນນະພາບສູງໄດ້ຮັບການບຸກທະລຸອັນໃໝ່, ໃຫ້ຄວາມສາມາດໃນການເພິ່ງຕົນເອງ ແລະສ້າງຄວາມເຂັ້ມແຂງດ້ວຍຕົນເອງໃນດ້ານວິທະຍາສາດເຕັກນິກໄດ້ຮັບການຍົກສູງຂຶ້ນຢ່າງເດັ່ນຊັດ, ການສ້າງສະພາບການພັດທະນາອັນໃໝ່ ແລະການສ້າງລະບົບເສດຖະກິດທັນສະໄໝໄດ້ຮັບຄວາມຄືບໜ້າອັນສຳຄັນ; ການປະຕິຮູບ ແລະເປີດປະຕູສູ່ພາຍນອກຍ່າງບາດກ້າວໃໝ່, ຊຸກຍູ້ການຫັນເປັນທັນສະໄໝຂອງລະບົບການຄຸ້ມຄອງປະເທດ ແລະຄວາມສາມາດການຄຸ້ມຄອງປະເທດພັດທະນາເຂົ້າສູ່ລວງເລິກ, ໂຄງປະກອບເສດຖະກິດຕະຫຼາດສັງຄົມນິຍົມມີຄວາມສົມບູນຂຶ້ນ, ໂຄງປະກອບເສດຖະກິດໃໝ່ແບບ

ເປີດປະຕູສູ່ພາຍນອກທີ່ມີລະດັບສູງກວ່າເກົ່າຈໍ່ຕົວຂຶ້ນໂດຍພື້ນຖານ; ປະຊາທິປະໄຕປະຊາຊົນທົ່ວຂັ້ນຕອນມີລະດັບການຫັນເປັນລະບຽບການ, ຫັນເປັນລະບຽບແບບແຜນ ແລະຫັນເປັນຂັ້ນຕອນສູງຂຶ້ນຕື່ມອີກ, ລະບົບຄຸ້ມຄອງຕາມກົດໝາຍຂອງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນມີຄວາມສົມບູນດີຂຶ້ນ; ຊີວິດດ້ານຈິດໃຈ ແລະວັດທະນະທຳຂອງປະຊາຊົນມີຄວາມອຸດົມສົມບູນຫຼາຍຂຶ້ນ, ກຳລັງເຕົ້າໂຮມຄວາມສາມັກຄີຂອງປະຊາຊາດຈີນ ແລະບົດບາດອິດທິພົນຂອງວັດທະນະທຳຈີນເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ; ໃຫ້ລາຍໄດ້ຂອງປະຊາຊົນກັບການເຕີບໂຕທາງດ້ານເສດຖະກິດເພີ່ມຂຶ້ນໄປພ້ອມກັນໂດຍພື້ນຖານ, ໃຫ້ລາຍໄດ້ແຮງງານກັບສະມັດຕະພາບການຜະລິດ ແລະອອກແຮງງານຍົກສູງຂຶ້ນໄປພ້ອມກັນໂດຍພື້ນຖານ, ການຈັດວາງການບໍລິການສາທາລະນະພື້ນຖານຢ່າງສະໝໍ່າສະເໝີມີລະດັບສູງຂຶ້ນຢ່າງເດັ່ນຊັດ, ເຮັດໃຫ້ລະບົບປະກັນສັງຄົມໃນຫຼາຍລະດັບມີຄວາມສົມບູນຂຶ້ນຕື່ມ; ໃຫ້ສະພາບແວດລ້ອມການດຳລົງຊີວິດຂອງປະຊາຊົນຢູ່ຕົວເມືອງ ແລະຊົນນະບົດໄດ້ຮັບການປັບປຸງດີຂຶ້ນຢ່າງຫຼວງຫຼາຍ, ການສ້າງສາປະເທດຈີນທີ່ສວຍງາມໄດ້ຮັບປະສິດທິຜົນຢ່າງເດັ່ນຊັດ; ໃຫ້ຄວາມໝັ້ນຄົງແຫ່ງຊາດໄດ້ຮັບການປັບປຸງຂຶ້ນກວ່າເກົ່າ, ບັນລຸເປົ້າໝາຍສູ້ຊົນໃນການສ້າງຕັ້ງກອງທັບຄົບຮອບ 100 ປີຕາມເວລາກຳນົດ, ຊຸກຍູ້ການສ້າງສາປະເທດຈີນທີ່ສະຫງົບຢ່າງໜັກແໜ້ນ; ຖານະ ແລະບົດບາດອິດທິພົນໃນສາກົນຂອງຈີນໄດ້ຮັບການຍົກສູງຂຶ້ນຕື່ມອີກ ເພື່ອເສີມຂະຫຍາຍບົດບາດຫຼາຍກວ່າເກົ່າເຂົ້າໃນການບໍລິຫານໂລກ.

ການສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານ ເປັນພາລະກິດອັນຍິ່ງໃຫຍ່ ແລະລຳບາກ, ມີອະນາຄົດອັນສະຫວ່າງສະໄຫວ, ແຕ່ກໍຕ້ອງເດີນຕາມເສັ້ນທາງອັນຍາວໄກ. ປັດຈຸບັນ, ການປ່ຽນແປງຢ່າງໃຫຍ່ຫຼວງຂອງໂລກທີ່ບໍ່ເຄີຍມີມາກ່ອນໃນຮອບຮ້ອຍປີກຳລັງເກີດມີການຜັນແປຢ່າງໄວວາ, ການປະຕິວັດດ້ານວິທະຍາສາດເຕັກນິກ ແລະການປະຕິຮູບດ້ານອຸດສາຫະກຳຮອບໃໝ່ພວມຂະຫຍາຍຕົວລົງສູ່ລວງເລິກ, ການແຂ່ງຂັນລະຫວ່າງກຳລັງສາກົນໄດ້ມີການປ່ຽນແປງຢ່າງເລິກເຊິ່ງ, ເຮັດ

ໃຫ້ການພັດທະນາຂອງປະເທດພວກເຮົາປະເຊີນກັບໂອກາດຍຸດທະສາດອັນໃໝ່. ພ້ອມກັນນັ້ນ, ການແຜ່ລະບາດຂອງພະຍາດໂຄວິດ-19 ໄດ້ສົ່ງຜົນກະທົບຢ່າງເລິກເຊິ່ງ, ກະແສແນວຄິດຕ້ານໂລກາພິວັດເພີ່ມຂຶ້ນ, ລັດທິຝ່າຍດຽວແລະລັດທິປົກປ້ອງໄດ້ເພີ່ມຂຶ້ນຢ່າງເດັ່ນຊັດ, ການຟື້ນຕົວຄືນຂອງເສດຖະກິດໂລກຂາດພະລັງແຮງ, ການປະທະກັນ ແລະຄວາມປັ່ນປ່ວນຢູ່ບາງເຂດແຄວ້ນເກີດຂຶ້ນເລື້ອຍໆ, ບັນຫາທີ່ມີລັກສະນະທົ່ວໂລກຮຸນແຮງຂຶ້ນ, ໂລກໄດ້ເຂົ້າສູ່ໄລຍະປ່ຽນແປງທີ່ມີຄວາມປັ່ນປ່ວນຄັ້ງໃໝ່. ການປະຕິຮູບ, ການພັດທະນາ ແລະສະຖຽນລະພາບຂອງປະເທດພວກເຮົາ ກຳລັງປະເຊີນກັບຄວາມຂັດແຍ້ງອັນເລິກເຊິ່ງຈຳນວນບໍ່ໜ້ອຍທີ່ຫຼີກລ່ຽງບໍ່ໄດ້, ການກໍ່ສ້າງພັກ ໂດຍສະເພາະແມ່ນການກໍ່ສ້າງແບບແຜນຂອງພັກ, ການປົກຄອງແບບປອດໃສຂາວສະອາດຂອງພັກ ແລະການຕ້ານການສໍ້ລາດບັງຫຼວງ ກໍປະເຊີນກັບບັນຫາຈຳນວນບໍ່ໜ້ອຍທີ່ຊໍ້າເຮື້ອ ແລະເກີດຂຶ້ນເລື້ອຍໆ, ການບີບບັງຄັບ ແລະສະກັດກັ້ນຈາກພາຍນອກອາດຈະຍົກລະດັບຂຶ້ນໃນທຸກເວລາ. ການພັດທະນາຂອງປະເທດພວກເຮົາໄດ້ເຂົ້າສູ່ໄລຍະທີ່ໂອກາດຍຸດທະສາດກັບຄວາມສ່ຽງແລະສິ່ງທ້າທາຍຄົງຕົວຢູ່ຮ່ວມກັນ, ພ້ອມທັງມີເຫດການທີ່ບໍ່ແນ່ນອນ, ມີຄວາມສ່ຽງອັນຕະລາຍທີ່ຄາດຄິດບໍ່ເຖິງ ແລະມີຜົນກະທົບຢ່າງໃຫຍ່ຫຼວງທີ່ອາດຈະເກີດຂຶ້ນໃນທຸກເວລາ. ສະນັ້ນ, ພວກເຮົາຕ້ອງເພີ່ມສະຕິລະວັງຕົວຂຶ້ນ, ຍຶດໝັ້ນແນວຄິດເສັ້ນຕ້ອງຫ້າມ, ຕ້ອງຄຳນຶງເຖິງຄວາມອັນຕະລາຍໃນຍາມສະໜຸກ, ມີການກຽມພ້ອມຢູ່ທຸກເວລາ, ເພື່ອກຽມຜ່ານຜ່າການທົດສອບທີ່ໜັກໜ່ວງທີ່ສຸດ. ຢູ່ບົນເສັ້ນທາງກ້າວໄປຂ້າງໜ້າ, ພວກເຮົາຕ້ອງຍຶດໝັ້ນຫຼັກການສຳຄັນຕ່າງໆ ຄືດັ່ງນີ້:

—— ຍຶດໝັ້ນແລະເພີ່ມທະວີການນຳພາຂອງພັກຢ່າງຮອບດ້ານ. ພວກເຮົາຕ້ອງເດັດດ່ຽວປົກປ້ອງຄວາມສັກສິດ ແລະການນຳພາລວມສູນເປັນເອກະພາບຂອງສູນກາງພັກ, ຈັດຕັ້ງປະຕິບັດການນຳພາຂອງພັກໃຫ້ເຂົ້າເຖິງທຸກຂົງເຂດ, ທຸກດ້ານ ແລະທຸກຂັ້ນຕອນຂອງພາລະກິດຂອງພັກ ກໍຄືຂອງປະເທດຊາດ, ເຮັດໃຫ້ພັກກາຍເປັນແກນນຳທີ່ໄວ້ໃຈໄດ້ທີ່ສຸດຂອງປະຊາຊົນທຸກຖ້ວນໜ້າໃນເວລາປະ

ເຊີນກັບຟ້າຝົນລົມແດງ, ຮັບປະກັນໃຫ້ການສ້າງສາສັງຄົມນິຍົມທັນສະໄໝຂອງປະເທດພວກເຮົາເດີນຕາມທິດທາງທີ່ຖືກຕ້ອງ, ຮັບປະກັນໃຫ້ມີກຳລັງເຕົ້າໂຮມດ້ານການເມືອງ ແລະຄວາມໝັ້ນໃຈຕົນເອງຕໍ່ການພັດທະນາທີ່ເຂັ້ມແຂງ, ສາມັກຄີແລະບຸກບືນສູ້ຊົນ, ເຕົ້າໂຮມກຳລັງແຮງສັງລວມທີ່ເຂັ້ມແຂງຍິ່ງໃຫຍ່ຂອງປະຊາຊົນ ເພື່ອຜ່ານຜ່າຄວາມຫຍຸ້ງຍາກຮ່ວມກັນ.

—— ຍຶດໝັ້ນເສັ້ນທາງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ. ພວກເຮົາຕ້ອງຍຶດໝັ້ນໃນການຖືການສ້າງສາເສດຖະກິດເປັນໃຈກາງ, ຍຶດໝັ້ນ 4 ຫຼັກການພື້ນຖານ, ຍຶດໝັ້ນການປະຕິຮູບ ແລະເປີດປະຕູສູ່ພາຍນອກ, ຍຶດໝັ້ນຄວາມເປັນເອກະລາດ, ເປັນເຈົ້າຕົນເອງ ແລະເພິ່ງຕົນເອງ, ຍຶດໝັ້ນເສັ້ນທາງແລະອຸດົມການບໍ່ໃຫ້ມີການປ່ຽນແປງ, ພວກເຮົາຈະບໍ່ຊ້ຳເສັ້ນທາງເກົ່າທີ່ປິດປະຕູ ແລະ ຈະບໍ່ເດີນຕາມເສັ້ນທາງເຂວທີ່ປ່ຽນຄັນທຸງ, ຕ້ອງຍຶດໝັ້ນໃນການພັດທະນາປະເທດຊາດ ແລະປະຊາຊາດໂດຍອີງໃສ່ກຳລັງແຮງຂອງຕົນເປັນພື້ນຖານ, ຍຶດໝັ້ນໃນການກຳແໜ້ນຊາຕາກຳແຫ່ງການພັດທະນາ ແລະຄວາມກ້າວໜ້າຂອງປະເທດຈີນໄວ້ໃນກຳມືຂອງຕົນ.

—— ຍຶດໝັ້ນແນວຄິດການພັດທະນາທີ່ຖືປະຊາຊົນເປັນໃຈກາງ. ພວກເຮົາຕ້ອງປົກປັກຮັກສາຜົນປະໂຫຍດກົກຮາກຂອງປະຊາຊົນ, ເພີ່ມຄວາມສົມບູນພູນສຸກໃຫ້ກັບປະຊາຊົນ, ໃຫ້ບັນລຸການພັດທະນາເພື່ອປະຊາຊົນ, ພັດທະນາໂດຍອາໄສປະຊາຊົນ ແລະໃຫ້ປະຊາຊົນຮ່ວມກັນຊົມໃຊ້ໝາກຜົນຂອງການພັດທະນາ ເພື່ອເຮັດໃຫ້ໝາກຜົນຂອງການສ້າງສາຄວາມທັນສະໄໝສາມາດເຂົ້າເຖິງປະຊາຊົນທຸກຖ້ວນໜ້າໃຫ້ຫຼາຍກວ່າເກົ່າ ແລະຍຸຕິທຳກວ່າເກົ່າ.

—— ຍຶດໝັ້ນໃນການລົງເລິກການປະຕິຮູບ ແລະເປີດປະຕູສູ່ພາຍນອກ. ພວກເຮົາຕ້ອງລົງເລິກຊຸກຍູ້ການປະຕິຮູບ ແລະ ການປະດິດສ້າງ, ເປີດກວ້າງການເປີດປະຕູສູ່ພາຍນອກຢ່າງເດັດດ່ຽວໝຽວແໜ້ນ, ສຸມໃສ່ແກ້ໄຂອຸປະສັກດ້ານເລິກຂອງໂຄງປະກອບ ແລະກົນໄກຕ່າງໆ ເພື່ອສະແດງໃຫ້ເຫັນທ່າແຮງຂອງລະບອບສັງຄົມນິຍົມທີ່ມີສີສັນພິເສດຂອງຈີນຢ່າງບໍ່ຢຸດຢັ້ງ, ຕ້ອງເພີ່ມທະວີພະລັງແຮງ ແລະ

ຄວາມມີຊີວິດຊີວາຂອງການສ້າງສັງຄົມນິຍົມທີ່ທັນສະໄໝຢ່າງບໍ່ຢຸດຢັ້ງ ເພື່ອຫັນປ່ຽນທ່າແຮງດ້ານລະບອບຂອງປະເທດພວກເຮົາໃຫ້ມີປະສິດທິຜົນໃນການປົກຄອງບໍລິຫານປະເທດໃຫ້ດີກວ່າເກົ່າ.

—— ຍຶດໝັ້ນໃນການເສີມຂະຫຍາຍນ້ຳໃຈຕໍ່ສູ້. ພວກເຮົາຕ້ອງເພີ່ມທະວີຄວາມເດັດດ່ຽວໝຽວແໜ້ນ, ຄວາມອາດຫານກ້າແກ່ນ ແລະຄວາມໝັ້ນໃຈຂອງທົ່ວພັກ ແລະປະຊາຊົນບັນດາເຜົ່າທົ່ວປະເທດ, ບໍ່ເຊື່ອໃນສິ່ງທີ່ຜິດພາດ, ບໍ່ຢ້ານກົວຕໍ່ສິ່ງທີ່ໂຫດຮ້າຍ ແລະບໍ່ອ່ອນແອຕໍ່ແຮງກົດດັນ, ກ້າແຂ່ງກັບຄວາມຫຍຸ້ງຍາກ, ບຸກບືນກ້າວໄປຂ້າງໜ້າ, ປະສົມປະສານການພັດທະນາກັບຄວາມໝັ້ນຄົງໃຫ້ເປັນເອກະພາບກັນ, ອອກແຮງເອົາຊະນະຄວາມຫຍຸ້ງຍາກ ແລະສິ່ງທ້າທາຍຕ່າງໆນາໆຢູ່ບົນເສັ້ນທາງກ້າວໄປຂ້າງໜ້າ, ສ້າງສະພາບໃໝ່ແຫ່ງການພັດທະນາພາລະກິດດ້ວຍຈິດໃຈຕໍ່ສູ້ຢ່າງເດັດດ່ຽວໝຽວແໜ້ນ.

ບັນດາສະຫາຍ! ທຸກມື້ນີ້, ພວກເຮົາແມ່ນໄດ້ຫຍັບມໍ່ເຂົ້າໃກ້ ທັງມີຄວາມໝັ້ນໃຈ ແລະຄວາມສາມາດຫຼາຍກວ່າເວລາໃດໝົດໃນປະຫວັດສາດທີ່ຜ່ານມາໃນການບັນລຸເປົ້າໝາຍຟື້ນຟູຄວາມຈະເລີນຮຸ່ງເຮືອງທີ່ຍິ່ງໃຫຍ່ຂອງປະຊາຊາຊາດຈີນ, ແຕ່ພ້ອມກັນນັ້ນ, ພວກເຮົາກໍຕ້ອງກຽມພ້ອມໃນການທຳຄວາມພະຍາຍາມທີ່ຫຍຸ້ງຍາກລຳບາກກວ່າເກົ່າ. ທົ່ວພັກຕ້ອງມີຄວາມໝັ້ນໃຈຢ່າງເດັດດ່ຽວ, ບຸກບືນໄປໜ້າ, ເປັນເຈົ້າການໃນການຮັບຮູ້ສະພາບການປ່ຽນແປງ, ຮັບມືກັບການປ່ຽນແປງ ແລະສະແຫວງຫາການປ່ຽນແປງ, ເປັນເຈົ້າການໃນການປ້ອງກັນ ແລະແກ້ໄຂຄວາມສ່ຽງ ເພື່ອຍາດເອົາໄຊຊະນະອັນໃໝ່ໃນການສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານຢ່າງບໍ່ຢຸດຢັ້ງ!

## ສີ່: ເລັ່ງສ້າງສະພາບການພັດທະນາແບບໃໝ່ ອອກແຮງຊຸກຍູ້ການພັດທະນາດ້ວຍຄຸນນະພາບສູງ

ການພັດທະນາດ້ວຍຄຸນນະພາບສູງເປັນໜ້າທີ່ສຳຄັນອັນດັບໜຶ່ງ ຂອງການສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານ. ການພັດທະນາເປັນວຽກງານສຳຄັນທີ່ຕ້ອງມາກ່ອນຂອງພັກໃນການກຳອຳນາດ ແລະສ້າງສາປະເທດໃຫ້ຈະເລີນຮຸ່ງເຮືອງ. ຖ້າບໍ່ມີພື້ນຖານອັນໜັກແໜ້ນດ້ານວັດຖຸເຕັກນິກ, ພວກເຮົາກໍບໍ່ສາມາດສ້າງປະເທດສັງຄົມນິຍົມທັນສະໄໝທີ່ເຂັ້ມແຂງໃຫ້ສຳເລັດໄດ້. ພວກເຮົາຕ້ອງຈັດຕັ້ງປະຕິບັດແນວຄວາມຄິດການພັດທະນາແບບໃໝ່ຢ່າງຄົບຖ້ວນ, ຖືກຕ້ອງ ແລະຮອບດ້ານ, ຍຶດໝັ້ນທິດທາງການປະຕິຮູບເສດຖະກິດຕະຫຼາດສັງຄົມນິຍົມ, ຍຶດໝັ້ນການເປີດປະຕູສູ່ພາຍນອກໃນລະດັບສູງ, ເລັ່ງລັດສ້າງສະພາບການພັດທະນາອັນໃໝ່ທີ່ຖືເອົາການເຄື່ອນໄຫວທາງເສດຖະກິດຢູ່ພາຍໃນປະເທດເປັນຫຼັກ ທັງເຮັດໃຫ້ການເຄື່ອນໄຫວທາງເສດຖະກິດຢູ່ພາຍໃນປະເທດ ແລະສາກົນຊ່ວຍຊູຍູ້ໜູນກັນ.

ພວກເຮົາຕ້ອງຖືເອົາການຊຸກຍູ້ການພັດທະນາດ້ວຍຄຸນນະພາບສູງເປັນຫົວຂໍ້ຫຼັກ, ປະສານສົມທົບການຈັດຕັ້ງປະຕິບັດຍຸດທະສາດການເປີດກວ້າງຄວາມຕ້ອງການພາຍໃນ ກັບການລົງເລິກການປະຕິຮູບໂຄງປະກອບດ້ານການສະໜອງໃຫ້ເປັນເອກະພາບກັນແບບກາຍອິນຊີ, ເພີ່ມທະວີພະລັງຂັບເຄື່ອນພາຍໃນ ແລະຄວາມໄວ້ໃຈໄດ້ຂອງການເຄື່ອນໄຫວທາງເສດຖະກິດຢູ່ພາຍໃນປະເທດ, ຍົກສູງຄຸນນະພາບ ແລະລະດັບຂອງການເຄື່ອນໄຫວທາງເສດຖະກິດຢູ່ສາກົນ, ເລັ່ງລັດສ້າງລະບົບເສດຖະກິດທັນສະໄໝ, ສຸມກຳລັງເຂົ້າໃນການຍົກສູງປະສິດທິພາບການຜະລິດທຸກປັດໄຈທີ່ສຳຄັນ, ສຸມກຳລັງເຂົ້າໃນການຍົກສູງລະດັບຄວາມເຂັ້ມແຂງ ແລະລະດັບຄວາມປອດໄພຂອງຕ່ອງໂສ້ອຸດສາຫະກຳ-ຕ່ອງໂສ້ການສະໜອງ, ສຸມກຳລັງເຂົ້າໃນການຊຸກຍູ້ການເຊື່ອມໂຍງເຂົ້າກັນລະຫວ່າງຕົວເມືອງກັບຊົນນະບົດ ກໍຄືການພັດທະນາຢ່າງກົມກຽວກັນລະຫວ່າງເຂດແຄວ້ນຕ່າງໆ, ຊຸກຍູ້ເສດຖະກິດໃຫ້ມີຄຸນນະພາບດີຂຶ້ນຢ່າງມີປະສິດທິຜົນ ແລະມີການເຕີບໂຕຢ່າງສົມເຫດສົມຜົນ.

**(ໜຶ່ງ) ສ້າງໂຄງປະກອບເສດຖະກິດຕະຫຼາດສັງຄົມນິຍົມທີ່ມີລະດັບສູງ.** ພວກເຮົາຕ້ອງຍຶດໝັ້ນ

ແລະປັບປຸງລະບອບເສດຖະກິດພື້ນຖານສັງຄົມນິຍົມໃຫ້ສົມບູນ, ປັບປຸງແລະພັດທະນາເສດຖະກິດກຳມະສິດສ່ວນລວມຢ່າງບໍ່ຫວັ່ນໄຫວຄອນແຄນ, ສົ່ງເສີມ, ສະໜັບສະໜູນ ແລະນຳພາການພັດທະນາເສດຖະກິດທີ່ບໍ່ແມ່ນລະບອບກຳມະສິດສ່ວນລວມຢ່າງບໍ່ຫວັ່ນໄຫວຄອນແຄນ, ເສີມຂະຫຍາຍບົດບາດຕັດສິນຊີ້ຂາດຂອງຕະຫຼາດໃນການຈັດສັນຊັບພະຍາກອນຢ່າງເຕັມສ່ວນ, ເສີມຂະຫຍາຍບົດບາດຂອງລັດຖະບານໃຫ້ດີກວ່າເກົ່າ. ພວກເຮົາຕ້ອງລົງເລິກການປະຕິຮູບທຶນຂອງລັດ ແລະລັດວິສາຫະກິດ, ເລັ່ງລັດປັບປຸງການຈັດວາງ ແລະສັບຊ້ອນອົງປະກອບເສດຖະກິດແຫ່ງລັດ, ຊຸກຍູ້ການພັດທະນາທຶນຂອງລັດ ແລະລັດວິສາຫະກິດໃຫ້ເຂັ້ມແຂງຂຶ້ນ, ດີຂຶ້ນ ແລະມີຂະໜາດໃຫຍ່ຂຶ້ນ, ຍົກສູງກຳລັງແຂ່ງຂັນຕົ້ນຕໍຂອງວິສາຫະກິດ. ພວກເຮົາຕ້ອງປັບປຸງສະພາບແວດລ້ອມການພັດທະນາຂອງວິສາຫະກິດເອກະຊົນໃຫ້ດີຂຶ້ນ, ປົກປ້ອງສິດຊັບສິນຂອງວິສາຫະກິດເອກະຊົນ ກໍຄືສິດຜົນປະໂຫຍດຂອງນັກວິສາຫະກິດເອກະຊົນຕາມກົດໝາຍ, ຊຸກຍູ້ໃຫ້ເສດຖະກິດເອກະຊົນມີການພັດທະນາແລະເຂັ້ມແຂງຂຶ້ນ. ພວກເຮົາຕ້ອງບູລະນະລະບຽບການວິສາຫະກິດຍຸກປັດຈຸບັນທີ່ມີສີສັນພິເສດຂອງຈີນໃຫ້ສົມບູນ, ເສີມຂະຫຍາຍຈິດໃຈຂອງນັກວິສາຫະກິດ, ເລັ່ງລັດສ້າງວິສາຫະກິດລະດັບແຖວໜ້າຂອງໂລກ. ພວກເຮົາຕ້ອງສະໜັບສະໜູນການພັດທະນາຂອງວິສາຫະກິດຂະໜາດກາງ-ວິສາຫະກິດຂະໜາດນ້ອຍ-ຈຸລະວິສາຫະກິດ. ພວກເຮົາຕ້ອງລົງເລິກການປະຕິຮູບໃຫ້ການບໍລິຫານກະທັດຮັດ, ການກະຈາຍສິດອຳນາດໃຫ້ຂັ້ນລຸ່ມ, ເອົາການກະຈາຍສິດອຳນາດໃຫ້ຂັ້ນລຸ່ມກັບການຄຸ້ມຄອງບໍລິຫານປະສົມປະສານກັນ ແລະປັບປຸງການບໍລິການໃຫ້ດີຂຶ້ນ. ພວກເຮົາຕ້ອງສ້າງຕະຫຼາດໃຫຍ່ທີ່ເປັນເອກະພາບກັນໃນທົ່ວປະເທດ, ລົງເລິກການປະຕິຮູບປັດໄຈການຜະລິດຕາມຫຼັກການຕະຫຼາດ, ສ້າງລະບົບຕະຫຼາດທີ່ມີມາດຕະຖານສູງ. ຕ້ອງບູລະນະລະບອບເສດຖະກິດຕະຫຼາດພື້ນຖານໃນດ້ານຕ່າງໆ ເຊັ່ນ: ການປົກປ້ອງສິດຊັບສິນ, ການອະນຸຍາດເຂົ້າຕະຫຼາດ, ການແຂ່ງຂັນຢ່າງຍຸຕິທຳ, ຄວາມໜ້າເຊື່ອຖືໃນສັງຄົມ ແລະອື່ນໆໃຫ້ຄົບຖ້ວນສົມບູນ, ປັບປຸງສະພາບແວດລ້ອມການດຳເນີນທຸລະກິດໃຫ້ດີຂຶ້ນ. ພວກເຮົາຕ້ອງປັບ

ປຸງລະບົບຄຸ້ມຄອງເສດຖະກິດມະຫາພາກໃຫ້ສົມບູນຂຶ້ນ, ເສີມຂະຫຍາຍບົດບາດຂອງແຜນການພັດທະນາແຫ່ງຊາດໃນການເປັນທິດຊີ້ນຳທາງຍຸດທະສາດ, ເພີ່ມທະວີການປະສານສົມທົບຢ່າງກົມກຽວກັນລະຫວ່າງນະໂຍບາຍການເງິນ ແລະນະໂຍບາຍເງິນຕາ, ສຸມໃສ່ການເປີດ ກວ້າງຄວາມຕ້ອງການພາຍໃນ, ເພີ່ມທະວີບົດບາດພື້ນຖານຂອງການບໍລິໂພກທີ່ມີຕໍ່ການພັດທະນາຂອງເສດຖະກິດ ແລະເພີ່ມທະວີບົດບາດຂໍກຸນແຈຂອງການລົງທຶນທີ່ມີຕໍ່ການປັບປຸງອົງປະກອບຂອງ ການສະໜອງ. ຕ້ອງປັບປຸງລະບຽບການງົບປະມານຍຸກປັດຈຸບັນໃຫ້ສົມບູນຂຶ້ນ, ປັບປຸງອົງປະກອບລະບຽບການສ່ວຍສາອາກອນໃຫ້ດີຂຶ້ນ, ບູລະນະລະບຽບການປ່ຽນໂອນການຈ່າຍດ້ານການເງິນໃຫ້ດີຂຶ້ນ. ລົງເລິກການປະຕິຮູບໂຄງປະກອບດ້ານການເງິນ, ສ້າງລະບຽບການທະນາຄານກາງຍຸກປັດຈຸບັນ, ເພີ່ມທະວີ ແລະປັບປຸງການຕິດຕາມຄຸ້ມຄອງການທະນາຄານຍຸກປັດຈຸບັນ, ເພີ່ມທະວີລະບົບຄ້ຳປະກັນຄວາມໝັ້ນຄົງດ້ານການທະນາຄານ, ຈັດການເຄື່ອນໄຫວດ້ານການທະນາຄານທຸກປະເພດເຂົ້າໃນການຕິດຕາມຄຸ້ມຄອງຕາມກົດໝາຍ, ຮັກສາເສັ້ນແດງທີ່ບໍ່ໃຫ້ເກີດຄວາມສ່ຽງຢ່າງເປັນລະບົບ. ຕ້ອງບູລະນະບົດບາດຂອງຕະຫຼາດທຶນໃຫ້ສົມບູນຂຶ້ນ, ຍົກອັດຕາສ່ວນແຫ່ງການລະດົມທຶນໂດຍກົງໃຫ້ສູງຂຶ້ນ. ຕ້ອງເພີ່ມທະວີການຕ້ານການຜູກຂາດ ແລະການຕ້ານການແຂ່ງຂັນທີ່ບໍ່ຍຸຕິທຳ, ແກ້ໄຂບັນຫາການປົກປ້ອງທ້ອງຖິ່ນ ແລະການຜູກຂາດດ້ານການບໍລິຫານ, ປັບປຸງ ແລະນຳພາການພັດທະນາຂອງທຶນຮອນມີຄວາມເປັນລະບຽບແບບແຜນ ແລະປອດໃສຕາມກົດໝາຍ.

**(ສອງ) ສ້າງລະບົບອຸດສາຫະກຳທັນສະໄໝ.** ພວກເຮົາຕ້ອງຍຶດໝັ້ນຖືການອອກແຮງຊຸກຍູ້ເສດຖະກິດຮູບປະທຳໄວ້ຢູ່ໃນຖານະສຳຄັນແຫ່ງການພັດທະນາເສດຖະກິດ, ຊຸກຍູ້ການຫັນເປັນອຸດສາຫະກຳແບບໃໝ່, ເລັ່ງລັດສ້າງສາປະເທດເຂັ້ມແຂງດ້ານການຜະລິດ, ປະເທດເຂັ້ມແຂງດ້ານຄຸນນະພາບ, ປະເທດເຂັ້ມແຂງດ້ານການບິນອະວະກາດ, ປະເທດເຂັ້ມແຂງດ້ານຄົມມະນາຄົມ, ປະເທດເຂັ້ມແຂງດ້ານເຄືອຂ່າຍອິນເຕີເນັດ ແລະ ປະເທດຈີນດີຈິຕອນ. ຕ້ອງປະຕິບັດໂຄງການສ້າງພື້ນຖານອຸດສາຫະ

ກຳຄືນໃໝ່ ແລະໂຄງການແກ້ໄຂຂອດຫຍຸ້ງຍາກກ່ຽວກັບເຕັກນິກ ແລະອຸປະກອນທີ່ສຳຄັນ, ສະໜັບສະໜູນການພັດທະນາຂອງວິສາຫະກິດໃນຂົງເຂດວິຊາສະເພາະ, ຂົງເຂດເຕັກນິກຍອດຢ້ຽມ, ຂົງເຂດພິເສດ ແລະຂົງເຂດໃໝ່, ຊຸກຍູ້ການພັດທະນາອຸດສາຫະກຳການຜະລິດໃຫ້ມີລະດັບສູງ, ທັນເປັນອັດສະລິຍະ ແລະເປັນແບບສີຂຽວ. ພວກເຮົາຕ້ອງປັບປຸງຖານະນຳໜ້າຂອງອຸດສາຫະກຳທີ່ມີທ່າແຮງ, ເລັ່ງດັດແກ້ຈຸດອ່ອນຂອງຂົງເຂດທີ່ກ່ຽວພັນກັບການພັດທະນາດ້ານຄວາມໝັ້ນຄົງ, ຍົກສູງຄວາມສາມາດໃນການສະໜອງ ແລະຮັບປະກັນຊັບພະຍາກອນທີ່ມີລັກສະນະຍຸດທະສາດ. ຕ້ອງຊຸກຍູ້ການພັດທະນາເປັນກຸ່ມແບບເຊື່ອມໂຍງຂອງອຸດສາຫະກຳທີ່ຈະເລີນໃໝ່ທີ່ມີລັກສະນະຍຸດທະສາດ, ສ້າງກຳລັງຂັບເຄື່ອນການເຕີບໂຕອັນໃໝ່ໃນຂົງເຂດຕ່າງໆ ເຊັ່ນ: ເຕັກໂນໂລຊີຂໍ້ມູນຂ່າວສານລຸ້ນໃໝ່, ປັນຍາປະດິດ, ເຕັກໂນໂລຊີຊີວະພາບ, ພະລັງງານໃໝ່, ວັດຖຸໃໝ່, ອຸປະກອນລະດັບສູງ, ການປົກປັກຮັກສາສິ່ງແວດລ້ອມແບບສີຂຽວ ແລະອື່ນໆ. ຕ້ອງສ້າງລະບົບໃໝ່ຂອງຂະແໜງການບໍລິການທີ່ມີຄຸນນະພາບ ແລະມີປະສິດທິພາບສູງ, ຊຸກຍູ້ໃຫ້ຂະແໜງການບໍລິການຍຸກປັດຈຸບັນ ເຊື່ອມໂຍງເຂົ້າກັບອຸດສາຫະກຳການຜະລິດທີ່ກ້າວໜ້າແລະກະສິກຳຍຸກປັດຈຸບັນຢ່າງເລິກເຊິ່ງ. ຕ້ອງເລັ່ງລັດພັດທະນາອິນເຕີເນັດທີ່ເຊື່ອມຕໍ່ວັດຖຸສິ່ງຂອງຕ່າງໆ, ສ້າງລະບົບຈໍລະຈອນທີ່ມີປະສິດທິພາບສູງ ແລະສະດວກ, ຫຼຸດຕົ້ນທຶນຂອງການຈໍລະຈອນສິນຄ້າໃຫ້ຕໍ່າລົງ. ຕ້ອງເລັ່ງພັດທະນາເສດຖະກິດດີຈີຕອນ, ຊຸກຍູ້ໃຫ້ເສດຖະກິດດີຈີຕອນ ແລະເສດຖະກິດຮູບປະທຳເຊື່ອມໂຍງເຂົ້າກັນຢ່າງເລິກເຊິ່ງ, ສ້າງເປັນກຸ່ມອຸດສາຫະກຳດີຈີຕອນທີ່ມີຄວາມສາມາດແຂ່ງຂັນໃນສາກົນ. ຕ້ອງປັບປຸງການຈັດວາງ, ອົງປະກອບ, ບົດບາດ ແລະລະບົບຂອງພື້ນຖານໂຄງລ່າງໃຫ້ດີຂຶ້ນ, ສ້າງລະບົບພື້ນຖານໂຄງລ່າງທີ່ທັນສະໄໝ.

**(ສາມ) ຊຸກຍູ້ການພັດທະນາຊົນນະບົດໃຫ້ຈະເລີນຢ່າງຮອບດ້ານ.** ການສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານ, ໜ້າທີ່ລຳບາກທີ່ສຸດ ແລະໜັກໜ່ວງທີ່ສຸດຍັງແມ່ນຢູ່ໃນຊົນນະບົດ. ພວກເຮົາຕ້ອງຍຶດໝັ້ນໃຫ້ບຸລິມະສິດໃນການພັດທະນາກະສິກຳແລະຊົນນະບົດ, ຍຶດໝັ້ນໃຫ້ຕົວເມືອງ

ແລະຊົນນະບົດພັດທະນາແບບເຊື່ອມໂຍງກັນ, ເຮັດໃຫ້ປັດໄຈຕົວເມືອງ ແລະຊົນນະບົດສາມາດເຄື່ອນໄຫວຢ່າງສະດວກ. ຕ້ອງເລັ່ງສ້າງສາປະເທດເຂັ້ມແຂງດ້ານກະສິກຳ, ຕັ້ງໜ້າຊຸກຍູ້ການພັດທະນາຊົນນະບົດໃຫ້ຈະເລີນຈາກດ້ານອຸດສາຫະກຳ, ຜູ້ມີຄວາມຮູ້ຄວາມສາມາດ, ວັດທະນະທຳ, ສິ່ງແວດລ້ອມນິເວດ ແລະການຈັດຕັ້ງ. ຕ້ອງຮັດແໜ້ນພື້ນຖານຄວາມໝັ້ນຄົງດ້ານສະບຽງອາຫານຢ່າງຮອບດ້ານ, ຈັດຕັ້ງປະຕິບັດນະໂຍບາຍທີ່ໃຫ້ອົງການພັກ ແລະລັດມີຄວາມຮັບຜິດຊອບຮ່ວມກັນໃນດ້ານການຮັກສາຄວາມໝັ້ນຄົງທາງສະບຽງອາຫານຢ່າງຮອບດ້ານ, ຍຶດໝັ້ນເສັ້ນແດງຂອງດິນປູກຝັງທີ່ມີເນື້ອທີ່ 120.000.000 ເຮັກຕາ, ສ້າງດິນປູກຝັງພື້ນຖານຖາວອນໃຫ້ກາຍເປັນດິນປູກຝັງທີ່ມີມາດຕະຖານສູງເທື່ອລະກ້າວ, ລົງເລິກປະຕິບັດໂຄງການສ້າງອຸດສາຫະກຳແນວພັນໃຫ້ຈະເລີນ, ເພີ່ມທະວີການຄ້ຳປະກັນວິທະຍາສາດເຕັກນິກ ແລະອຸປະກອນດ້ານກະສິກຳ, ປັບປຸງກົນໄກຮັບປະກັນລາຍໄດ້ຂອງຊາວກະສິກອນທີ່ປູກພືດສະບຽງອາຫານ ແລະກົນໄກຊົດເຊີຍຜົນປະໂຫຍດຢູ່ເຂດຜະລິດສະບຽງອາຫານຕົ້ນຕໍ, ຕ້ອງຮັບປະກັນໃຫ້ຄົນຈີນຈັບຖ້ວຍເຂົ້າໄວ້ໃນມືຂອງຕົນໃຫ້ແໜ້ນ. ຕ້ອງສ້າງທັດສະນະກ່ຽວກັບຊັບພະຍາກອນອາຫານແບບກວມລວມ, ພັດທະນາກະສິກຳທີ່ໃຊ້ເຕັກນິກຄວບຄຸມສະພາບແວດລ້ອມ, ສ້າງລະບົບສະໜອງອາຫານດ້ວຍຫຼາກຫຼາຍຊ່ອງທາງ. ຕ້ອງພັດທະນາອຸດສາຫະກຳທີ່ມີເອກະລັກພິເສດຢູ່ຊົນນະບົດ, ເປີດກວ້າງຊ່ອງທາງເພີ່ມລາຍໄດ້ ແລະສ້າງຄວາມຮັ່ງມີໃຫ້ກັບຊາວກະສິກອນ. ຕ້ອງປັບປຸງ ແລະເສີມຂະຫຍາຍໝາກຜົນທີ່ໄດ້ຮັບໃນການລຶບລ້າງຄວາມທຸກຍາກ, ເພີ່ມທະວີພະລັງແຮງຈາກພາຍໃນຂອງເຂດແຄວ້ນ ແລະປະຊາຊົນ ທີ່ຫຼຸດພົ້ນອອກຈາກຄວາມທຸກຍາກແລ້ວ. ຕ້ອງປະສົມປະສານການຈັດຕັ້ງພື້ນຖານໂຄງລ່າງ ແລະການບໍລິການສາທາລະນະຢູ່ຊົນນະບົດເປັນເອກະພາບກັນ, ສ້າງຊົນນະບົດກົມກຽວປອງດອງແລະສວຍງາມທີ່ໜ້າຢູ່ແລະໜ້າທຳມາຫາກິນ. ຕ້ອງປັບປຸງ ແລະບູລະນະລະບຽບການດຳເນີນທຸລະກິດຢູ່ຊົນນະບົດຂັ້ນພື້ນຖານ, ພັດທະນາເສດຖະກິດລວມໝູ່ແບບໃໝ່ຢູ່ຊົນນະບົດ, ພັດທະນາອົງກອນທຸລະກິດກະສິກຳແບບໃໝ່ ແລະການບໍລິການແບບມີສ່ວນຮ່ວມ

ຂອງສັງຄົມ, ພັດທະນາທຸລະກິດດ້ານກະສິກຳທີ່ມີຂະໜາດເໝາະສົມ. ຕ້ອງລົງເລິກການປະຕິຮູບລະບອບທີ່ດິນຢູ່ຊົນນະບົດ, ມອບສິດ ແລະຜົນປະໂຫຍດດ້ານຊັບສິນໃຫ້ກັບຊາວກະສິກອນໃຫ້ຫຼາຍ ກວ່າເກົ່າ. ພວກເຮົາຕ້ອງຮັບປະກັນສິດ ແລະຜົນປະໂຫຍດດ້ານທີ່ດິນທີ່ຖືກຕ້ອງຕາມກົດໝາຍຂອງຊາວກະສິກອນຜູ້ທີ່ຕັ້ງພູມລຳເນົາຢູ່ໃນຕົວເມືອງ, ສົ່ງເສີມການໂອນທີ່ດິນແບບສະໝັກໃຈ ແລະມີຄ່າທົດແທນຕາມກົດໝາຍ. ປັບປຸງລະບຽບການສະໜັບສະໜູນ ແລະປົກປັກຮັກສາກະສິກຳ, ປັບປຸງລະບົບການບໍລິການດ້ານການເງິນຢູ່ຊົນນະບົດໃຫ້ສົມບູນຂຶ້ນ.

**(ສີ່) ຊຸກຍູ້ການພັດທະນາເຂດແຄວ້ນຕ່າງໆຢ່າງກົມກຽວກັນ.** ພວກເຮົາຕ້ອງລົງເລິກປະຕິບັດຍຸດທະສາດພັດທະນາເຂດແຄວ້ນຕ່າງໆຢ່າງກົມກຽວກັນ, ຍຸດທະສາດທີ່ສຳຄັນຂອງເຂດແຄວ້ນ, ຍຸດທະສາດກ່ຽວກັບເຂດປົດບາດຕົ້ນຕໍ ແລະຍຸດທະສາດການຫັນເປັນຕົວເມືອງແບບໃໝ່, ປັບປຸງແຜນຈັດວາງກຳລັງການຜະລິດທີ່ສຳຄັນໃຫ້ດີຂຶ້ນ, ວາງແຜນຈັດວາງເສດຖະກິດເຂດແຄວ້ນ ແລະລະບົບພື້ນທີ່ດິນແດນແຫ່ງຊາດ ທີ່ມີທ່າແຮງຊ່ວຍຊູຍູ້ໜູນກັນ ແລະພັດທະນາດ້ວຍຄຸນນະພາບສູງ. ຊຸກຍູ້ໃຫ້ການພັດທະນາພາກຕາເວັນຕົກຢ່າງຂະໜາດໃຫຍ່ເກີດມີສະພາບການໃໝ່, ຊຸກຍູ້ການຟື້ນຟູຄວາມຈະເລີນຂອງພາກຕາເວັນອອກສຽງເໜືອໃຫ້ໄດ້ຮັບການບຸກທະລຸໃໝ່, ຊຸກຍູ້ການພັດທະນາຂອງເຂດພາກກາງເລັ່ງຄວາມໄວຂຶ້ນ, ສົ່ງເສີມໃຫ້ເຂດພາກຕາເວັນອອກເລັ່ງການຫັນເປັນທັນສະໄໝໃຫ້ໄວຂຶ້ນ. ສະໜັບສະໜູນເຂດປະຕິວັດເກົ່າ ແລະເຂດຊົນເຜົ່າສ່ວນໜ້ອຍໃນການເລັ່ງພັດທະນາ, ເພີ່ມທະວີການສ້າງສາເຂດຊາຍແດນ, ຊຸກຍູ້ການສ້າງສາເຂດຊາຍແດນໃຫ້ມີຄວາມຈະເລີນ, ສະຖຽນລະພາບ ແລະຄວາມເຂັ້ມແຂງ ແລະໃຫ້ປະຊາຊົນຢູ່ເຂດຊາຍແດນມີຊີວິດຮັ່ງມີຂຶ້ນ. ຕ້ອງຊຸກຍູ້ການພັດທະນາຢ່າງກົມກຽວກັນຂອງເຂດປັກກິ່ງ-ທຽນສິນ-ເຮີເປີຍ, ການພັດທະນາຂອງແລວເສດຖະກິດແມ່ນ້ຳຢາງຊີກຽງ ແລະການພັດທະນາເປັນອັນໜຶ່ງອັນດຽວກັນຂອງເຂດສາມຫຼ່ຽມປາກແມ່ນ້ຳຢາງຊີກຽງ, ຊຸກຍູ້ການອະນຸລັກສິ່ງແວດລ້ອມນິເວດ ແລະການພັດທະນາດ້ວຍຄຸນນະພາບສູງຢູ່ລຽບຕາມເຂດລ້ອງແມ່

ນ້ຳເຫຼືອງ. ສ້າງເຂດໃໝ່ຊຽງອ່ານດ້ວຍມາດຕະຖານສູງ ແລະຄຸນນະພາບສູງ, ຊຸກຍູ້ການສ້າງວົງເສດຖະກິດສອງຕົວເມືອງຢູ່ເຂດເສີງຕູ່-ຈຸ່ງກິ່ງ. ຕ້ອງປັບປຸງລະບຽບການເຂດບົດບາດຕົ້ນຕໍໃຫ້ສົມບູນ, ປັບປຸງສະພາບການພັດທະນາຂອງພື້ນທີ່ດິນແດນແຫ່ງຊາດໃຫ້ດີຂຶ້ນ. ຕ້ອງຊຸກຍູ້ການຫັນເປັນຕົວເມືອງແບບໃໝ່ທີ່ຖືຄົນເປັນແກນກາງ,ເລັ່ງຂະບວນການຫັນຊາວກະສິກອນຍົກຍ້າຍໃຫ້ເປັນຊາວເມືອງໂດຍໄວ. ສ້າງສະພາບການພັດທະນາຢ່າງກົມກຽວກັນລະຫວ່າງຕົວເມືອງຂະໜາດໃຫຍ່, ຂະໜາດ ກາງ ແລະນ້ອຍທີ່ຖືການສ້າງເປັນກຸ່ມຕົວເມືອງ ແລະວົງຕົວເມືອງເປັນບ່ອນອີງ, ຊຸກຍູ້ການຫັນເປັນຕົວເມືອງທີ່ຖືເມືອງເປັນພາກສ່ວນທີ່ສຳຄັນ. ຕ້ອງຍຶດໝັ້ນອັນທີ່ເອີ້ນວ່າ ສ້າງຕົວເມືອງຂອງປະຊາຊົນໂດຍປະຊາຊົນ ແລະເພື່ອປະຊາຊົນ, ຍົກສູງລະດັບໃນການການວາງຜັງເມືອງ, ກໍ່ສ້າງ ແລະຄຸ້ມຄອງຕົວເມືອງ, ເລັ່ງຫັນປ່ຽນຮູບການພັດທະນາຂອງຕົວເມືອງທີ່ມີຂະໜາດໃຫຍ່ທີ່ສຸດ ແລະໃຫຍ່ພິເສດ, ຈັດຕັ້ງປະຕິບັດການເຄື່ອນໄຫວປັບປຸງຕົວເມືອງໃໝ່, ເພີ່ມທະວີການສ້າງພື້ນຖານໂຄງລ່າງຢູ່ໃນຕົວເມືອງ, ສ້າງຕົວເມືອງອັດສະລິຍະທີ່ມີຄວາມເຂັ້ມແຂງແລະໜ້າຢູ່. ພັດທະນາເສດຖະກິດທາງທະເລ, ອະນຸລັກສິ່ງແວດລ້ອມນິເວດທາງທະເລ ແລະເລັ່ງລັດສ້າງສາປະເທດເຂັ້ມແຂງທາງທະເລ.

**(ຫ້າ) ຊຸກຍູ້ການເປີດປະຕູສູ່ພາຍນອກໃນລະດັບສູງ.** ໂດຍອີງອາໄສທ່າແຮງທີ່ເປັນຕະຫຼາດຂະໜາດໃຫຍ່ພິເສດຂອງປະເທດພວກເຮົາ, ພວກເຮົາຕ້ອງດຶງດູດປັດໄຈຊັບພະຍາກອນທົ່ວໂລກດ້ວຍການເຄື່ອນໄຫວທາງເສດຖະກິດຢູ່ພາຍໃນປະເທດ, ເພີ່ມທະວີປະສິດທິຜົນປະສົມຂອງຕະຫຼາດທັງພາຍໃນແລະສາກົນ ກໍຄືຂອງຊັບພະຍາກອນທັງພາຍໃນແລະສາກົນ, ຍົກສູງຄຸນນະພາບ ແລະລະດັບການຮ່ວມມືດ້ານການຄ້າ ແລະການລົງທຶນ. ພວກເຮົາຕ້ອງເປີດກວ້າງການປະຕິຮູບລະບຽບການຕ່າງໆໃນດ້ານຂໍ້ກຳນົດ, ການວາງຂໍ້ກຳນົດ, ການຄຸ້ມຄອງບໍລິຫານ, ມາດຕະຖານ ແລະອື່ນໆ. ຊຸກຍູ້ການປັບປຸງ ແລະຍົກລະດັບຂອງການຄ້າສິນຄ້າ, ປະດິດສ້າງກົນໄກພັດທະນາການຄ້າການບໍລິການ, ພັດທະນາການຄ້າດິຈິຕອນ, ເລັ່ງລັດສ້າງສາປະເທດເຂັ້ມແຂງດ້ານການຄ້າ. ພວກເຮົາຕ້ອງຫຼຸດບັນຊີ

ດ້ານລົບໃນການອະນຸມັດທຶນຕ່າງປະເທດເຂົ້າເຖິງຕະຫຼາດຢ່າງສົມເຫດສົມຜົນ, ປົກປ້ອງສິດ ແລະຜົນປະໂຫຍດດ້ານການລົງທຶນຂອງນັກທຸລະກິດຕ່າງປະເທດຕາມກົດໝາຍ, ສ້າງສະພາບແວດລ້ອມດຳເນີນທຸລະກິດລະດັບແຖວໜ້າຕາມຫຼັກການຕະຫຼາດ, ຄຸ້ມຄອງຕາມກົດໝາຍ ແລະເປັນແບບສາກົນ. ຕ້ອງຊຸກຍູ້ການຮ່ວມກັນສ້າງ “ໜຶ່ງແລວໜຶ່ງເສັ້ນທາງ” ໃຫ້ພັດທະນາດ້ວຍຄຸນນະພາບສູງ. ປັບປຸງແຜນຈັດວາງການເປີດປະຕູສູ່ພາຍນອກຕາມເຂດແຄວ້ນໃຫ້ດີຂຶ້ນ, ປັບປຸງຖານະນຳໜ້າການເປີດປະຕູສູ່ພາຍນອກຂອງເຂດແຄມທະເລຢູ່ພາກຕາເວັນອອກໃຫ້ໜັກແໜ້ນ, ຍົກສູງລະດັບການເປີດປະຕູສູ່ພາຍນອກຂອງເຂດພາກກາງ ແລະພາກຕາເວັນຕົກ ກໍຄືເຂດພາກຕາເວັນອອກສຽງເໜືອ. ຕ້ອງເລັ່ງສ້າງແລວທາງໃໝ່ທາງບົກແລະທາງທະເລຢູ່ເຂດພາກຕາເວັນຕົກ. ເລັ່ງສ້າງທ່າກຳປັ່ນການຄ້າເສລີໄຫຼ່ໜຳ, ປະຕິບັດຍຸດທະສາດຍົກລະດັບເຂດທົດລອງການຄ້າເສລີ, ເປີດກວ້າງເຄືອຂ່າຍເຂດການຄ້າເສລີທີ່ມີມາດຕະຖານສູງທີ່ຫັນໜ້າສູ່ໂລກ. ຕ້ອງຊຸກຍູ້ການຫັນເປັນສາກົນຂອງເງິນຢວນຈີນຢ່າງເປັນລະບຽບ. ພວກເຮົາຕ້ອງລົງເລິກເຂົ້າຮ່ວມການແບ່ງງານ ແລະຮ່ວມມືດ້ານອຸດສາຫະກຳໃນທົ່ວໂລກ, ປົກປັກຮັກສາສະພາບເສດຖະກິດສາກົນ ແລະການພົວພັນເສດຖະກິດການຄ້າ ທີ່ມີຄວາມຫຼາກຫຼາຍ ແລະມີຄວາມໝັ້ນທ່ຽງ.

**ຫ້າ: ປະຕິບັດຍຸດທະສາດສ້າງຊາດໃຫ້ຈະເລີນດ້ວຍວິທະຍາສາດ-ການສຶກສາ ເພີ່ມທະວີບົດບາດເສົາຄ້ຳຂອງຊັບພະຍາກອນມະນຸດໃນການສ້າງສາຄວາມທັນສະໄໝ**

ການສຶກສາ, ວິທະຍາສາດເຕັກນິກ ແລະຊັບພະຍາກອນມະນຸດເປັນເສົາຄ້ຳທີ່ມີລັກສະນະພື້ນຖານແລະລັກສະນະຍຸດທະສາດໃນການສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານ. ພວກເຮົາຕ້ອງຍຶດໝັ້ນຫຼັກການທີ່ວິທະຍາສາດເຕັກນິກເປັນກຳລັງການຜະລິດອັນດັບໜຶ່ງ, ຜູ້ມີຄວາມຮູ້

ຄວາມສາມາດເປັນຊັບພະຍາກອນອັນດັບໜຶ່ງ, ການປະດິດສ້າງເປັນກຳລັງຂັບເຄື່ອນອັນດັບໜຶ່ງ, ຕ້ອງລົງເລິກຈັດຕັ້ງປະຕິບັດຍຸດທະສາດສ້າງຊາດໃຫ້ຈະເລີນດ້ວຍວິທະຍາສາດ-ການສຶກສາ, ຍຸດທະສາດສ້າງສາປະເທດໃຫ້ເຂັ້ມແຂງດ້ວຍຜູ້ມີຄວາມຮູ້ຄວາມສາມາດ ແລະຍຸດທະສາດການພັດທະນາທີ່ຂັບເຄື່ອນດ້ວຍການປະດິດສ້າງ, ເພື່ອສ້າງຂົງເຂດໃໝ່ ແລະຊ່ອງທາງການແຂ່ງຂັນໃໝ່ໃນດ້ານການພັດທະນາ, ສ້າງກຳລັງຂັບເຄື່ອນໃໝ່ ແລະທ່າແຮງໃໝ່ໃນດ້ານການພັດທະນາຢ່າງບໍ່ຢຸດຢັ້ງ.

ພວກເຮົາຕ້ອງຍຶດໝັ້ນໃນການໃຫ້ບຸລິມະສິດແກ່ການພັດທະນາການສຶກສາ, ການເພິ່ງຕົນເອງ ແລະສ້າງຄວາມເຂັ້ມແຂງດ້ວຍຕົນເອງໃນດ້ານວິທະຍາສາດເຕັກນິກ, ການນຳພາການພັດທະນາດ້ວຍຜູ້ມີຄວາມຮູ້ຄວາມສາມາດ, ເລັ່ງສ້າງສາປະເທດເຂັ້ມແຂງດ້ານການສຶກສາ, ປະເທດເຂັ້ມແຂງດ້ານວິທະຍາສາດເຕັກນິກ ແລະປະເທດເຂັ້ມແຂງດ້ານຊັບພະຍາກອນມະນຸດ, ຍຶດໝັ້ນການບຳລຸງສ້າງຄົນເພື່ອພັກ ແລະສຶກສາອົບຮົບຜູ້ມີຄວາມຮູ້ຄວາມສາມາດເພື່ອປະເທດຊາດ, ຍົກສູງຄຸນນະພາບຂອງການອົບຮົມສ້າງຜູ້ມີຄວາມຮູ້ຄວາມສາມາດດ້ວຍຕົນເອງຢ່າງຮອບດ້ານ, ສຸມໃສ່ການສ້າງຜູ້ມີຄວາມຮູ້ຄວາມສາມາດທີ່ຍອດຢ້ຽມໃນດ້ານການປະດິດສ້າງ, ເຕົ້າໂຮມ ແລະນຳໃຊ້ຜູ້ມີຄວາມຮູ້ຄວາມສາມາດຢູ່ໃນໂລກ.

**(ໜຶ່ງ) ພັດທະນາການສຶກສາທີ່ປະຊາຊົນເພິ່ງພໍໃຈ.** ການສຶກສາເປັນພາລະກິດສຳຄັນຂອງປະເທດຊາດ ກໍຄືຂອງພັກ. ການບຳລຸງສ້າງຄົນແບບໃດ, ບຳລຸງສ້າງແນວໃດ ແລະບຳລຸງສ້າງຄົນເພື່ອໃຜແມ່ນບັນຫາພື້ນຖານຂອງການສຶກສາ. ການບຳລຸງສ້າງຄົນສຳຄັນທີ່ສຸດ ແມ່ນຕ້ອງບຳລຸງສ້າງຜູ້ມີຄຸນສົມບັດທີ່ດີ. ພວກເຮົາຕ້ອງຜັນຂະຫຍາຍທິດທາງການສຶກສາຂອງພັກຢ່າງຮອບດ້ານ, ຈັດຕັ້ງປະຕິບັດໜ້າທີ່ກົກຮາກ ກ່ຽວກັບການບຳລຸງສ້າງຄົນໃຫ້ມີຄຸນສົມບັດທີ່ດີ, ບຳລຸງສ້າງຜູ້ກໍ່ສ້າງ ແລະ ຜູ້ສືບທອດພາລະກິດສັງຄົມນິຍົມທີ່ພັດທະນາຮອບດ້ານທັງຄຸນສົມບັດ, ສະຕິປັນຍາ, ພະລະ, ສິລະປະ ແລະການອອກແຮງງານ. ຕ້ອງຍຶດໝັ້ນພັດທະນາການສຶກສາໂດຍຖືປະຊາຊົນເປັນໃຈກາງ, ເລັ່ງສ້າງລະບົບ

ການສຶກສາທີ່ມີຄຸນນະພາບສູງ, ເຜີຍແຜ່ການສຶກສາຄຸນນະພາບ, ຊຸກຍູ້ຄວາມຍຸຕິທຳດ້ານການສຶກສາ. ຕ້ອງເລັ່ງຊຸກຍູ້ການສຶກສາພາກບັງຄັບໃຫ້ມີການພັດທະນາດ້ວຍຄຸນນະພາບສູງຢ່າງດຸນດ່ຽງກັນທັງເປັນອັນໜຶ່ງອັນດຽວກັນຢູ່ໃນຕົວເມືອງ ແລະຊົນນະບົດ, ປັບປຸງການຈັດສັນຊັບພະຍາກອນ ການສຶກສາຢູ່ເຂດແຄວ້ນໃຫ້ດີຂຶ້ນ, ເພີ່ມທະວີການເຜີຍແຜ່ການສຶກສາກ່ອນໄວຮຽນ ແລະການສຶກສາພິເສດທີ່ໃຫ້ຜົນປະໂຫຍດທົ່ວເຖິງ, ຍຶດໝັ້ນການພັດທະນາຂອງໂຮງຮຽນຊັ້ນມັດທະຍົມຕອນປາຍດ້ວຍຫຼາຍຮູບແບບ, ປັບປຸງລະບົບອຸດໜູນນັກຮຽນນັກສຶກສາທີ່ປົກຄຸມທຸກຂັ້ນຕອນການຮຽນໃຫ້ສົມບູນຂຶ້ນ. ປະສົມປະສານອາຊີວະສຶກສາ, ການສຶກສາຊັ້ນສູງ ແລະການຮຽນເພີ່ມໃຫ້ມີການປະດິດສ້າງຮ່ວມກັນ, ຊຸກຍູ້ການເຊື່ອມໂຍງເຂົ້າກັນລະຫວ່າງອາຊີວະສຶກສາກັບສາມັນສຶກສາ, ການເຊື່ອມໂຍງກັນລະຫວ່າງການຜະລິດກັບການສຶກສາ ແລະການເຊື່ອມໂຍງກັນລະຫວ່າງການຄົ້ນຄວ້າວິທະຍາສາດກັບການສຶກສາ, ປັບປຸງຮູບແບບຂອງອາຊີວະສຶກສາໃຫ້ດີຂຶ້ນ. ຕ້ອງເພີ່ມທະວີການສ້າງສາຂະແໜງວິຊາພື້ນຖານ, ຂະແໜງວິຊາໃໝ່ ແລະຂະແໜງວິຊາປະສົມ, ເລັ່ງສ້າງມະຫາວິທະຍາໄລແລະຂະແໜງວິຊາທີ່ມີທ່າແຮງ ທີ່ມີສີສັນພິເສດຂອງຈີນ ແລະ ມີລະດັບແຖວໜ້າຢູ່ໃນໂລກ. ຕ້ອງນຳພາການພັດທະນາຂອງການສຶກສາເອກະຊົນໃຫ້ເປັນລະບຽບແບບແຜນ. ຕ້ອງເພີ່ມທະວີການເຜີຍແຜ່ພາສາກາງ ແລະຕົວໜັງສືທີ່ນຳໃຊ້ໂດຍທົ່ວໄປຂອງຊາດ. ລົງເລິກການປະຕິຮູບໂດຍລວມໃນຂົງເຂດການສຶກສາ, ເພີ່ມທະວີການສ້າງ ແລະການຄຸ້ມຄອງປຶ້ມແບບຮຽນ, ປັບປຸງລະບົບການຄຸ້ມຄອງບໍລິຫານໂຮງຮຽນ ແລະການປະເມີນລະດັບການສຶກສາໃຫ້ຄົບຖ້ວນສົມບູນຂຶ້ນ, ບູລະນະກົນໄກບຳລຸງສ້າງຄົນຂອງໂຮງຮຽນ ຄອບຄົວ ແລະສັງຄົມໃຫ້ສົມບູນ. ພວກເຮົາຕ້ອງເພີ່ມທະວີການສ້າງຈັນຍາບັນຄູ ແລະແບບແຜນຂອງຄູອາຈານ, ສ້າງຖັນແຖວຄູອາຈານທີ່ມີຄຸນທາດສູງ, ສົ່ງເສີມໃຫ້ທົ່ວສັງຄົມເຄົາລົບຄູອາຈານ ແລະໃຫ້ຄວາມສຳຄັນຕໍ່ການສຶກສາ. ຕ້ອງຊຸກຍູ້ການສຶກສາໃຫ້ຫັນເປັນດີຈິຕອນ, ສ້າງສັງຄົມແຫ່ງການຮຽນຮູ້ ແລະປະເທດໃຫຍ່ແຫ່ງການຮຽນຮູ້ ທີ່ທົ່ວປວງຊົນຮ່ຳຮຽນຕະຫຼອດຊີວິດ.

**(ສອງ) ປັບປຸງລະບົບການປະດິດສ້າງດ້ານວິທະຍາສາດເຕັກນິກ.** ພວກເຮົາຕ້ອງຍຶດໝັ້ນຖານະແກນກາງຂອງການປະດິດສ້າງໃນພາກສ່ວນລວມຂອງການສ້າງສາຄວາມທັນສະໄໝ ຂອງປະເທດພວກເຮົາ. ປັບປຸງໂຄງປະກອບການນຳພາຢ່າງເປັນເອກະພາບຂອງສູນກາງພັກທີ່ມີຕໍ່ວຽກງານວິທະຍາສາດເຕັກນິກ, ປັບປຸງໂຄງປະກອບໂຮມສູນກຳລັງທົ່ວປະເທດແບບໃໝ່ໃຫ້ສົມບູນຂຶ້ນ, ເສີມສ້າງກຳລັງວິທະຍາສາດເຕັກນິກດ້ານຍຸດທະສາດຂອງຊາດ, ປັບປຸງການຈັດສັນຊັບພະຍາກອນດ້ານການປະດິດສ້າງ, ປັບປຸງບົດບາດ ແລະການຈັດວາງສະຖາບັນຄົ້ນຄວ້າວິທະຍາສາດລະດັບຊາດ, ມະຫາວິທະຍາໄລແບບຄົ້ນຄວ້າທີ່ມີລະດັບສູງ ແລະວິສາຫະກິດນຳໜ້າດ້ານເຕັກນິກວິທະຍາສາດ, ສ້າງລະບົບຫ້ອງທົດລອງແຫ່ງຊາດໃຫ້ສຳເລັດ, ຊຸກຍູ້ການສ້າງສູນປະດິດສ້າງວິທະຍາສາດເຕັກນິກສາກົນ ແລະສູນປະດິດສ້າງວິທະຍາສາດເຕັກນິກພາກພື້ນຢ່າງເປັນເອກະພາບກັນ, ເພີ່ມທະວີການສ້າງຄວາມສາມາດພື້ນຖານໃນດ້ານເຕັກນິກວິທະຍາສາດ, ເພີ່ມການໃຫ້ຄຳເປີກສາດ້ານຍຸດທະສາດວິທະຍາສາດເຕັກນິກ, ຍົກສູງປະສິດທິພາບ ແລະຄວາມສາມາດລວມຂອງລະບົບການປະດິດສ້າງແຫ່ງຊາດ. ຕ້ອງລົງເລິກການປະຕິຮູບໂຄງປະກອບດ້ານວິທະຍາສາດເຕັກນິກ, ລົງເລິກການປະຕິຮູບການປະເມີນດ້ານວິທະຍາສາດເຕັກນິກ, ເພີ່ມການລົງທຶນຫຼາຍຮູບແບບເຂົ້າໃນດ້ານວິທະຍາສາດເຕັກນິກ, ເພີ່ມທະວີການປົກປ້ອງຊັບສິນທາງປັນຍາຕາມກົດໝາຍ, ສ້າງລະບຽບການພື້ນຖານທີ່ສະໜັບສະໜູນການປະດິດສ້າງຢ່າງຮອບດ້ານໃຫ້ສຳເລັດ. ບົ່ມເພາະວັດທະນະທຳໃນດ້ານການປະດິດສ້າງ, ເສີມຂະຫຍາຍຈິດໃຈຂອງນັກວິທະຍາສາດ, ບົ່ມເພາະແບບແຜນຮ່ຳຮຽນທີ່ດີ ແລະສ້າງບັນຍາກາດການປະດິດສ້າງ. ເປີດກວ້າງການແລກປ່ຽນ ແລະການຮ່ວມມືສາກົນໃນດ້ານວິທະຍາສາດເຕັກນິກ, ເພີ່ມທະວີການສ້າງສະພາບແວດລ້ອມການຄົ້ນຄວ້າວິທະຍາສາດທີ່ເປັນແບບສາກົນ, ສ້າງສະພາບການໃໝ່ທີ່ເປີດປະຕູ ແລະປະດິດສ້າງ ທີ່ມີຄວາມສາມາດດ້ານການແຂ່ງຂັນໃນທົ່ວໂລກ.

**(ສາມ) ເລັ່ງລັດປະຕິບັດຍຸດທະສາດການພັດທະນາທີ່ຂັບເຄື່ອນໂດຍການປະດິດສ້າງ.** ພວກ

ເຮົາຕ້ອງຍຶດໝັ້ນໃນການການຫັນໜ້າໄປສູ່ແຖວໜ້າດ້ານວິທະຍາສາດເຕັກນິກຂອງໂລກ, ຫັນໜ້າໄປສູ່ສະໜາມຮົບຕົ້ນຕໍດ້ານເສດຖະກິດ, ຫັນໜ້າໄປສູ່ຄວາມຕ້ອງການທີ່ສຳຄັນຂອງປະເທດຊາດ, ຫັນໜ້າໄປສູ່ຊີວິດແລະສຸຂະພາບຂອງປະຊາຊົນ, ເລັ່ງບັນລຸການເພິ່ງຕົນເອງ ແລະສ້າງຄວາມເຂັ້ມແຂງດ້ວຍຕົນເອງໃນດ້ານວິທະຍາສາດເຕັກນິກທີ່ມີລະດັບສູງ. ຕ້ອງຖືຄວາມຕ້ອງການທາງຍຸດທະສາດແຫ່ງຊາດເປັນທິດຊີ້ນຳ, ສຸມກຳລັງເຂົ້າໃນການແກ້ໄຂຂອດຫຍຸ້ງຍາກໃນດ້ານເຕັກນິກວິທະຍາສາດທີ່ມີຫົວຄິດປະດິດສ້າງໂດຍຕົນເອງ ແລະມີລັກສະນະນຳພາ, ເດັດດ່ຽວເອົາຊະນະໃນບັ້ນແກ້ໄຂຂອດຫຍຸ້ງຍາກດ້ານເຕັກນິກທີ່ເປັນຂໍກຸນແຈ ແລະໃຈກາງ. ພວກເຮົາຕ້ອງເລັ່ງປະຕິບັດໂຄງການວິທະຍາສາດສຳຄັນລະດັບຊາດຕ່າງໆທີ່ມີລັກສະນະຍຸດທະສາດ, ລັກສະນະກວມລວມ ແລະລັກສະນະລ້ຳໜ້າ, ເພີ່ມທະວີຄວາມສາມາດໃນການປະດິດສ້າງໂດຍຕົນເອງ. ພວກເຮົາຕ້ອງເພີ່ມທະວີການຄົ້ນຄວ້າວິທະຍາສາດພື້ນຖານ, ໃຫ້ຄວາມສຳຄັນແກ່ຫົວຄິດປະດິດສ້າງໂດຍຕົນເອງ ແລະສົ່ງເສີມການຄົ້ນຄວ້າແບບບໍ່ມີຂີດຈຳກັດ. ພວກເຮົາຕ້ອງຍົກສູງປະສິດທິພາບໃນການໃຊ້ງົບປະມານດ້ານວິທະຍາສາດເຕັກນິກ, ລົງເລິກການປະຕິຮູບກົນໄກຈັດສັນ ແລະນຳໃຊ້ງົບປະມານດ້ານວິທະຍາສາດເຕັກນິກໃນລະບົບການເງິນ, ກະຕຸກຊຸກຍູ້ພະລັງຊີວິດຊີວາຂອງການປະດິດສ້າງ. ຕ້ອງເພີ່ມທະວີການເຊື່ອມໂຍງເຂົ້າກັນຢ່າງເລິກເຊິ່ງລະຫວ່າງການຜະລິດ, ການຮ່ຳຮຽນ ແລະການຄົ້ນຄວ້າ ທີ່ນຳພາໂດຍວິສາຫະກິດ, ເພີ່ມທະວີບົດບາດທີ່ເປັນທິດຊີ້ນຳຂອງເປົ້າໝາຍ, ຍົກສູງລະດັບການຫັນການຄົ້ນຄວ້າວິທະຍາສາດເຕັກນິກໃຫ້ເປັນໝາກຜົນຕົວຈິງ ແລະຫັນເປັນອຸດສາຫະກຳ. ຕ້ອງເພີ່ມຖານະຂອງວິສາຫະກິດທີ່ເປັນຫຼັກແຫຼ່ງໃນການດຳເນີນການປະດິດສ້າງວິທະຍາສາດເຕັກນິກ, ເສີມຂະຫຍາຍບົດບາດນຳພາ ແລະຄ້ຳປະກັນຂອງວິສາຫະກິດຫຼັກແຫຼ່ງໃນດ້ານເຕັກນິກວິທະຍາສາດ, ສ້າງສະພາບແວດລ້ອມທີ່ມີຜົນດີຕໍ່ການເຕີບໂຕຂອງວິສາຫະກິດວິທະຍາສາດເຕັກນິກຂະໜາດກາງ-ຂະໜາດນ້ອຍ-ຈຸນລະວິສາຫະກິດ ,ຊຸກຍູ້ການເຊື່ອມໂຍງກັນຢ່າງເລິກເຊິ່ງລະຫວ່າງຕ່ອງໂສ້ການປະດິດສ້າງ, ຕ່ອງໂສ້ອຸດສາຫະກຳ,

ຕ່ອງໂສ້ທຶນຮອນ ແລະຕ່ອງໂສ້ບຸກຄະລາກອນ.

**(ສີ່) ລົງເລິກປະຕິບັດຍຸດທະສາດການສ້າງສາປະເທດເຂັ້ມແຂງດ້ານຜູ້ມີຄວາມຮູ້ຄວາມສາມາດ.**

ການບຳລຸງສ້າງຄົນທີ່ມີຄຸນສົມບັດດີ ແລະມີຄວາມຮູ້ຄວາມສາມາດສູງເປັນຈຳນວນຫຼວງຫຼາຍເປັນພາລະກິດສຳຄັນຂອງປະເທດຊາດ ແລະປະຊາຊາດໃນການພັດທະນາເປັນເວລາຍາວໄກ. ວຽກງານສາມາດປະສົບຜົນສຳເລັດໄດ້ແມ່ນຍ້ອນມີຜູ້ມີຄວາມຮູ້ຄວາມສາມາດ, ວຽກງານສາມາດຂະຫຍາຍຕົວຢ່າງກວ້າງຂວາງໄດ້ແມ່ນຍ້ອນມີຜູ້ມີຄວາມຮູ້ຄວາມສາມາດ. ຕ້ອງຍຶດໝັ້ນຫຼັກການທີ່ໃຫ້ພັກຄຸ້ມຄອງຜູ້ມີຄວາມຮູ້ຄວາມສາມາດ, ຍຶດໝັ້ນໃນການເຄົາລົບການອອກແຮງງານ, ເຄົາລົບຄວາມຮູ້, ເຄົາລົບຜູ້ມີຄວາມຮູ້ຄວາມສາມາດ, ເຄົາລົບການປະດິດສ້າງ, ປະຕິບັດນະໂຍບາຍກ່ຽວກັບຜູ້ມີຄວາມຮູ້ຄວາມສາມາດທີ່ຕັ້ງໜ້າກວ່າເກົ່າ, ເປີດກວ້າງກວ່າເກົ່າ ແລະມີປະສິດທິຜົນຫຼາຍກວ່າເກົ່າ, ຕ້ອງນຳພາໃຫ້ຜູ້ມີຄວາມຮູ້ຄວາມສາມາດອັນມະຫາສານຮັກພັກ, ຕອບບຸນແທນຄຸນປະເທດຊາດ, ມີຄວາມຮັບຜິດຊອບຕໍ່ວຽກງານ, ຍອມອຸທິດຕົນ ແລະຮັບໃຊ້ປະຊາຊົນ. ຕ້ອງປັບປຸງແຜນຍຸດທະສາດກ່ຽວກັບຜູ້ມີຄວາມຮູ້ຄວາມສາມາດໃຫ້ສົມບູນ, ຍຶດໝັ້ນໃນການເຮັດວຽກບຳລຸງສ້າງຜູ້ມີຄວາມຮູ້ຄວາມສາມາດທຸກດ້ານໄປພ້ອມກັນ, ສ້າງຖັນແຖວຜູ້ມີຄວາມຮູ້ຄວາມສາມາດທີ່ມີຂະໜາດໃຫຍ່, ມີອົງປະກອບສົມເຫດສົມຜົນ ແລະມີຄຸນນະພາບດີ. ຕ້ອງເລັ່ງສ້າງສູນຜູ້ມີຄວາມຮູ້ຄວາມສາມາດ ແລະສູນປະດິດສ້າງທີ່ສຳຄັນຢູ່ໃນໂລກ, ສົ່ງເສີມການຈັດວາງຜູ້ມີຄວາມຮູ້ຄວາມສາມາດຢູ່ຕາມເຂດແຄວ້ນຕ່າງໆຢ່າງສົມເຫດສົມຜົນ ແລະສົ່ງເສີມການພັດທະນາຜູ້ມີຄວາມຮູ້ຄວາມສາມາດຢູ່ເຂດແຄວ້ນຕ່າງໆຢ່າງກົມກຽວກັນ, ສຸມໃສ່ການສ້າງທ່າແຮງໃນການແຂ່ງຂັນລະດັບສາກົນດ້ານຜູ້ມີຄວາມຮູ້ຄວາມສາມາດ. ຕ້ອງເລັ່ງສ້າງກຳລັງຜູ້ມີຄວາມຮູ້ຄວາມສາມາດດ້ານຍຸດທະສາດແຫ່ງຊາດ, ພະຍາຍາມບຳລຸງສ້າງຊ່ຽວຊານຜູ້ດີເດັ່ນ, ນັກວິທະຍາສາດທາງຍຸດທະສາດ, ຜູ້ນຳໜ້າ ແລະໜ່ວຍງານປະດິດສ້າງລະດັບແຖວໜ້າໃນດ້ານວິທະຍາສາດເຕັກນິກ, ຊາວໜຸ່ມທີ່ມີຄວາມຮູ້ຄວາມສາມາດດ້ານວິທະຍາສາດເຕັກນິກ, ນັກວິສາວະກອນຜູ້ດີ

ເດັ່ນ, ນາຍຊ່າງລະດັບຊາດ ແລະຜູ້ທີ່ມີສີມືເຕັກນິກລະດັບສູງໃຫ້ຫຼາຍຂຶ້ນກວ່າເກົ່າ. ຕ້ອງເພີ່ມທະວີການແລກປ່ຽນດ້ານຜູ້ມີຄວາມຮູ້ຄວາມສາມາດກັບສາກົນ, ນຳໃຊ້ຜູ້ມີຄວາມຮູ້ຄວາມສາມາດປະເພດຕ່າງໆເປັນຢ່າງດີ ແລະໃຫ້ເສີມຂະຫຍາຍບົດບາດ. ຕ້ອງລົງເລິກການປະຕິຮູບໂຄງປະກອບກົນໄກພັດທະນາຜູ້ມີຄວາມຮູ້ຄວາມສາມາດ, ຮັກແພງຜູ້ມີຄວາມຮູ້ຄວາມສາມາດຢ່າງຈິງໃຈ, ເອົາໃຈໃສ່ການບຳລຸງສ້າງຜູ້ມີຄວາມຮູ້ຄວາມສາມາດ, ນຳເຂົ້າຜູ້ມີຄວາມຮູ້ຄວາມສາມາດດ້ວຍຄວາມຈິງໃຈ, ນຳໃຊ້ຜູ້ມີຄວາມຮູ້ຄວາມສາມາດຢ່າງຕັ້ງໃຈ, ສະແຫວງຫາຜູ້ມີຄວາມຮູ້ຄວາມສາມາດຢ່າງຈູບຈ້າວຫ້າວຫັນ, ບໍ່ຈຳກັດຢ່າງຕາຍຕົວໃນການນຳໃຊ້ຜູ້ມີຄວາມຮູ້ຄວາມສາມາດ ເພື່ອເຕົ້າໂຮມຜູ້ມີຄວາມຮູ້ຄວາມສາມາດທີ່ດີເດັ່ນໃນດ້ານຕ່າງໆເຂົ້າໃນພາລະກິດຂອງພັກ ແລະປະຊາຊົນ.

**ຫົກ: ພັດທະນາປະຊາທິປະໄຕປະຊາຊົນໃນທົ່ວຂັ້ນຕອນ ຮັບປະກັນສິດເປັນເຈົ້າປະເທດຊາດຂອງປະຊາຊົນ**

ປະເທດພວກເຮົາແມ່ນປະເທດສັງຄົມນິຍົມຜະເດັດການປະຊາທິປະໄຕປະຊາຊົນ ທີ່ນຳພາໂດຍຊົນຊັ້ນກຳມະກອນ ແລະຖືພັນທະພາບຂອງຊົນຊັ້ນກຳມະກອນ-ກະສິກອນເປັນພື້ນຖານ, ສິດອຳນາດທຸກຢ່າງຂອງປະເທດແມ່ນເປັນຂອງປະຊາຊົນ. ປະຊາທິປະໄຕປະຊາຊົນເປັນຊີວິດຂອງສັງຄົມນິຍົມ ແລະເປັນເນື້ອໃນທີ່ຕ້ອງມີຢູ່ໃນການສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານ. ປະຊາທິປະໄຕປະຊາຊົນໃນທົ່ວຂັ້ນຕອນແມ່ນລັກສະນະທາດແທ້ຂອງການເມືອງປະຊາທິປະໄຕສັງຄົມນິຍົມ, ແມ່ນປະຊາທິປະໄຕທີ່ກວ້າງຂວາງທີ່ສຸດ, ແທ້ຈິງທີ່ສຸດ ແລະມີປະສິດທິຜົນທີ່ສຸດ. ພວກເຮົາຕ້ອງຍຶດໝັ້ນເດີນຕາມເສັ້ນທາງພັດທະນາການເມືອງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນຢ່າງເດັດດ່ຽວໜຽວແໜ້ນ, ຍຶດໝັ້ນໃນຄວາມເປັນເອກະພາບກັນແບບກາຍອິນຊີລະຫວ່າງການນຳພາຂອງພັກ, ປະຊາຊົນ

ເປັນເຈົ້າຂອງປະເທດຊາດ ແລະການປົກຄອງປະເທດຕາມກົດໝາຍ, ຍຶດໝັ້ນຖານະຂອງປະຊາຊົນທີ່ເປັນຫຼັກແຫຼ່ງ, ສ່ອງແສງໃຫ້ເຫັນເຖິງຄວາມມຸ່ງມາດປາຖະໜາຂອງປະຊາຊົນ, ຮັບປະກັນສິດທິຜົນປະໂຫຍດຂອງປະຊາຊົນ ແລະກະຕຸ້ນພະລັງຊີວິດດ້ານການປະດິດສ້າງຂອງປະຊາຊົນຢ່າງເຕັມທີ່.

ພວກເຮົາຕ້ອງປັບປຸງລະບົບລະບອບກ່ຽວກັບປະຊາຊົນເປັນເຈົ້າຂອງປະເທດຊາດໃຫ້ສົມບູນຂຶ້ນ, ເປີດກວ້າງການມີສ່ວນຮ່ວມໃນດ້ານການເມືອງຢ່າງເປັນລະບຽບຂອງປະຊາຊົນ, ຮັບປະກັນໃຫ້ປະຊາຊົນດຳເນີນການເລືອກຕັ້ງ, ເປີກສາຫາລື, ທຳການຕັດສິນ, ຄຸ້ມຄອງບໍລິຫານ ແລະຕິດຕາມກວດກາຢ່າງມີປະຊາທິປະໄຕຕາມກົດໝາຍ, ເສີມຂະຫຍາຍຄວາມຫ້າວຫັນ, ຄວາມເປັນເຈົ້າການ ແລະຫົວຄິດປະດິດສ້າງຂອງປະຊາຊົນ, ປັບປຸງ ແລະພັດທະນາສະພາບການເມືອງທີ່ມີຊີວິດຊີວາ, ສະຫງົບໝັ້ນຄົງ ແລະມີຄວາມສາມັກຄີ.

**(ໜຶ່ງ) ເພີ່ມທະວີການຮັບປະກັນດ້ານລະບອບໃນການໃຫ້ປະຊາຊົນເປັນເຈົ້າຂອງປະເທດຊາດ.** ພວກເຮົາຕ້ອງຍຶດໝັ້ນ ແລະປັບປຸງລະບອບການເມືອງຮາກຖານ, ລະບອບການເມືອງພື້ນຖານ ແລະລະບອບການເມືອງທີ່ສຳຄັນຂອງປະເທດພວກເຮົາໃຫ້ສົມບູນ, ເປີດກວ້າງຊ່ອງທາງປະຊາທິປະໄຕ, ຂະຫຍາຍຮູບແບບປະຊາທິປະໄຕໃຫ້ມີຄວາມຫຼາກຫຼາຍ, ຮັບປະກັນໃຫ້ປະຊາຊົນໄດ້ເຂົ້າຮ່ວມການບໍລິຫານວຽກງານຂອງປະເທດ, ຄຸ້ມຄອງວຽກງານເສດຖະກິດວັດທະນະທຳ ແລະຄຸ້ມຄອງວຽກງານສັງຄົມຕາມກົດໝາຍດ້ວຍຫຼາຍຊ່ອງທາງແລະຫຼາຍຮູບແບບ. ສະໜັບສະໜູນ ແລະຮັບປະກັນໃຫ້ປະຊາຊົນນຳໃຊ້ສິດອຳນາດຂອງຊາດໂດຍຜ່ານສະພາປະຊາຊົນ, ຮັບປະກັນໃຫ້ສະພາປະຊາຊົນທຸກຂັ້ນຕ້ອງກຳເນີດຈາກການເລືອກຕັ້ງຢ່າງມີປະຊາທິປະໄຕ, ຮັບຜິດຊອບຕໍ່ປະຊາຊົນແລະຮັບການຕິດຕາມກວດກາຈາກປະຊາຊົນ. ຕ້ອງສະໜັບສະໜູນ ແລະຮັບປະກັນໃຫ້ສະພາປະຊາຊົນ ແລະຄະນະປະຈຳສະພາປະຊາຊົນທຸກຂັ້ນນຳໃຊ້ສິດນິຕິບັນຍັດ, ສິດຕິດຕາມກວດກາ, ສິດຕັດສິນ, ສິດແຕ່ງຕັ້ງ-ປົດຕຳແໜ່ງຕາມກົດໝາຍ, ບູລະນະລະບຽບການຕິດຕາມກວດກາຂອງສະພາປະຊາຊົນທຸກຂັ້ນທີ່ມີຕໍ່ອົງ

ການບໍລິຫານ, ອົງການກວດກາ, ອົງການພິພາກສາ ແລະອົງການໄອຍະການໃຫ້ສົມບູນຂຶ້ນ, ປົກປັກຮັກສາຄວາມເປັນເອກະພາບ, ກຽດສັກສີ ແລະຄວາມສັກສິດຂອງການປົກຄອງປະເທດຕາມກົດໝາຍ. ຕ້ອງເພີ່ມທະວີການສ້າງສາຄວາມສາມາດໃນການປະຕິບັດງານຂອງຜູ້ແທນປະຊາຊົນ, ຮັດແໜ້ນການພົວພັນລະຫວ່າງຜູ້ແທນປະຊາຊົນກັບປະຊາຊົນ. ຕ້ອງປັບປຸງບູລະນະກົນໄກວຽກງານເກັບກຳ ຄຳເຫັນຂອງປະຊາຊົນ ແລະເຕົ້າໂຮມສະຕິປັນຍາຂອງປະຊາຊົນ, ສ້າງຈຸດພົວພັນກ່ຽວກັບນິຕິບັນຍັດຢູ່ຂັ້ນຮາກຖານໃຫ້ດີ. ຕ້ອງລົງເລິກການປະຕິຮູບ ແລະສ້າງສາອົງການຈັດຕັ້ງມະຫາຊົນ ເຊັ່ນ: ກຳມະບານ, ຄະນະຊາວໜຸ່ມກອມມູນິດ, ສະຫະພັນແມ່ຍິງແລະອື່ນໆ, ເສີມຂະຫຍາຍບົດບາດທີ່ເປັນຂົວຕໍ່ຂອງອົງການເຫຼົ່ານີ້ຢ່າງມີປະສິດທິຜົນ. ພວກເຮົາຕ້ອງຍຶດໝັ້ນເດີນຕາມເສັ້ນທາງພັດທະນາສິດທິມະນຸດຂອງຈີນ, ຕັ້ງໜ້າເຂົ້າຮ່ວມການຄຸ້ມຄອງບໍລິຫານສິດທິມະນຸດໃນທົ່ວໂລກ, ຊຸກຍູ້ໃຫ້ພາລະກິດສິດທິມະນຸດພັດທະນາຢ່າງຮອບດ້ານ.

**(ສອງ) ພັດທະນາການເປີກສາຫາລືແບບປະຊາທິປະໄຕຢ່າງຮອບດ້ານ.** ການເປີກສາຫາລືແບບປະຊາທິປະໄຕເປັນຮູບການທີ່ສຳຄັນໃນການປະຕິບັດປະຊາທິປະໄຕປະຊາຊົນໃນທົ່ວຂັ້ນຕອນ. ຕ້ອງປັບປຸງລະບົບການເປີກສາຫາລືແບບປະຊາທິປະໄຕ, ເປັນເອກະພາບກັນຊຸກຍູ້ການເປີກສາຫາລືກັນລະຫວ່າງພັກການເມືອງ, ການເປີກສາຫາລືໃນສະພາປະຊາຊົນ, ການເປີກສາຫາລືໃນອົງການປົກຄອງ, ການເປີກສາຫາລືໃນສະພາເປີກສາການເມືອງ, ການເປີກສາຫາລືໃນຄະນະຈັດຕັ້ງປະຊາຊົນ, ການເປີກສາຫາລືໃນຂັ້ນຮາກຖານ ແລະການເປີກສາຫາລືໃນອົງການຈັດຕັ້ງສັງຄົມ, ປັບປຸງບູລະນະເວທີເປີກສາຫາລືຕ່າງໆທີ່ເປັນແບບລະບຽບການໃຫ້ສົມບູນຂຶ້ນ, ຊຸກຍູ້ການເປີກສາຫາລືແບບປະຊາທິປະໄຕໃຫ້ພັດທະນາຢ່າງກວ້າງຂວາງ, ມີຫຼາຍລະດັບ ແລະເປັນລະບຽບການ. ຕ້ອງຍຶດໝັ້ນ ແລະບູລະນະລະບອບຫຼາຍພັກຮ່ວມມືກັນ ແລະເປີກສາການເມືອງທີ່ນຳພາໂດຍພັກກອມມູນິດຈີນ, ຍຶດໝັ້ນໃນການປະສານສົມທົບກັນແບບກາຍອິນຊີລະຫວ່າງການນຳພາຂອງພັກ, ແນວໂຮມເອກະພາບ ແລະ

ການເປີກສາຫາລືແບບປະຊາທິປະໄຕ, ຍຶດໝັ້ນໃຫ້ການເຊື່ອມໂຍງເຂົ້າກັນລະຫວ່າງການເສີມຂະຫຍາຍປະຊາທິປະໄຕ ແລະການເພີ່ມທະວີຄວາມສາມັກຄີ, ໃຫ້ການປະກອບຄຳເຫັນໃຫ້ຄຳເປີກສາກ່ຽວກັບວຽກງານຂອງລັດ ແລະການເຕົ້າໂຮມຄວາມຮັບຮູ້ທີ່ເປັນເອກະພາບກັນໄປພ້ອມກັນ, ເສີມຂະຫຍາຍບົດບາດຂອງສະພາເປີກສາການເມືອງປະຊາຊົນທີ່ເປັນອົງການເປີກສາຫາລືສະເພາະ, ເພີ່ມທະວີການສ້າງບົດບາດຂອງສະພາເປີກສາການເມືອງປະຊາຊົນໃຫ້ຫັນເປັນລະບຽບການ, ການຫັນເປັນລະບຽບແບບແຜນ, ການຫັນເປັນຂັ້ນຕອນ ແລະອື່ນໆ, ຍົກສູງລະດັບການເປີກສາຫາລືກັນຢ່າງເລິກເຊິ່ງ, ການສະແດງຄວາມເຫັນຢ່າງເຕັມສ່ວນ ແລະເຕົ້າໂຮມຄວາມຮັບຮູ້ທີ່ເປັນເອກະພາບກັນຢ່າງກວ້າງຂວາງ, ບູລະນະລະບຽບການ ແລະກົນໄກຂອງສະພາເປີກສາການເມືອງໃນດ້ານການຕິດຕາມກວດກາຢ່າງມີປະຊາທິປະໄຕ ແລະສະມາຊິກສະພາເປີກສາການເມືອງຕິດຕໍ່ພົວພັນກັບປະຊາຊົນໃນອົງການຕ່າງໆ.

**(ສາມ) ຕັ້ງໜ້າພັດທະນາປະຊາທິປະໄຕໃນຂັ້ນຮາກຖານ.** ປະຊາທິປະໄຕຂັ້ນຮາກຖານເປັນການສະແດງອອກທີ່ສຳຄັນຂອງປະຊາທິປະໄຕປະຊາຊົນໃນທົ່ວຂັ້ນຕອນ. ຕ້ອງບູລະນະກົນໄກປົກຄອງຕົນເອງດ້ວຍມວນຊົນຂັ້ນຮາກຖານ ທີ່ນຳພາໂດຍອົງການຈັດຕັ້ງຮາກຖານພັກໃຫ້ສົມບູນຂຶ້ນ, ເພີ່ມທະວີການກໍ່ສ້າງອົງການຈັດຕັ້ງຂັ້ນຮາກຖານ, ປັບປຸງລະບົບລະບຽບການ ແລະລະບົບວຽກງານຂອງປະຊາທິປະໄຕໂດຍກົງຢູ່ຂັ້ນຮາກຖານ, ເພີ່ມປະສິດທິຜົນຕົວຈິງຂອງປະຊາຊົນຢູ່ເຂດຊຸມຊົນຕົວເມືອງແລະຊົນນະບົດ ໃນດ້ານການຄຸ້ມຄອງຕົນເອງ, ຮັບໃຊ້ຕົນເອງ, ສຶກສາອົບຮົມຕົນເອງ ແລະຕິດຕາມກວດກາຕົນເອງ. ປັບປຸງລະບຽບການເປີດເຜີຍວຽກງານບໍລິຫານ, ເປີດກວ້າງຊ່ອງທາງທີ່ໃຫ້ກຸ່ມຄົນທຸກປະເພດມີສ່ວນຮ່ວມໃນການຄຸ້ມຄອງຂັ້ນຮາກຖານຢ່າງເປັນລະບຽບ, ຮັບປະກັນໃຫ້ປະຊາຊົນຄຸ້ມຄອງວຽກງານສາທາລະນະ ແລະພາລະກິດສາທາລະນະປະໂຫຍດຂອງຂັ້ນຮາກຖານຕາມກົດໝາຍ. ຕ້ອງອາໄສຊົນຊັ້ນກຳມະກອນຢ່າງສຸດອົກສຸດໃຈ, ປັບປຸງບູລະນະລະບຽບການຄຸ້ມຄອງແບບ

ປະຊາທິປະໄຕຕໍ່ວິສາຫະກິດ ແລະຫົວໜ່ວຍວິຊາການ ທີ່ຖືສະພາຜູ້ແທນພະນັກງານເປັນຮູບການພື້ນຖານ ເພື່ອປົກປ້ອງສິດຜົນປະໂຫຍດທີ່ຖືກຕ້ອງຕາມກົດໝາຍຂອງພະນັກງານກຳມະກອນທັງຫຼາຍ.

**(ສີ່) ປັບປຸງ ແລະພັດທະນາແນວໂຮມເອກະພາບຮັກຊາດທີ່ກວ້າງຂວາງທີ່ສຸດ.** ຄວາມສັດທາຂອງປະຊາຊົນຄືການເມືອງທີ່ໃຫຍ່ທີ່ສຸດ, ສ່ວນແນວໂຮມເອກະພາບເປັນເຄັດລັບທີ່ສຳຄັນໃນການເຕົ້າໂຮມຈິດໃຈ ແລະກຳລັງແຮງຂອງປະຊາຊົນ. ພວກເຮົາຕ້ອງປັບປຸງສະພາບໃຫຍ່ຂອງວຽກງານແນວໂຮມເອກະພາບ, ຍຶດໝັ້ນໃນການມີມະຫາສາມັກຄີ ແລະມະຫາສຳພັນ, ລະດົມຂົນຂວາຍລູກຫຼານປະຊາຊາດຈີນທຸກຖ້ວນໜ້າສົມຮູ້ຄວາມຄິດ ແລະພະຍາຍາມຮ່ວມກັນເພື່ອບັນລຸຄວາມໃຝ່ຝັນຂອງຈີນໃນການຟື້ນຟູຄວາມຈະເລີນຮຸ່ງເຮືອງທີ່ຍິ່ງໃຫຍ່ຂອງປະຊາຊາດຈີນ. ຕ້ອງເສີມຂະຫຍາຍທ່າແຮງຂອງລະບອບພັກການເມືອງສັງຄົມນິຍົມແບບໃໝ່ຂອງປະເທດພວກເຮົາ, ຍຶດໝັ້ນທິດທາງຄົງຕົວຢູ່ຮ່ວມກັນຍາວນານ, ຕິດຕາມກວດກາເຊິ່ງກັນແລະກັນ, ເປີດອົກເປີດໃຈຕໍ່ກັນ, ຮ່ວມກຽດ ແລະຮ່ວມຄວາມອັບປະຍົດນຳກັນ, ເພີ່ມທະວີຄວາມສາມັກຄີ ແລະຮ່ວມມືກັນກັບພັກຝ່າຍປະຊາທິປະໄຕ ແລະບຸກຄົນທີ່ບໍ່ສັງກັດພັກຝ່າຍໃດ, ສະໜັບສະໜູນພັກຝ່າຍປະຊາທິປະໄຕເພີ່ມທະວີການກໍ່ສ້າງຕົນເອງແລະປະຕິບັດພາລະບົດບາດໃຫ້ດີຂຶ້ນ. ຕ້ອງຮັດແໜ້ນສະຕິປະຊາຄົມປະຊາຊາດຈີນເປັນຫຼັກ, ເດີນ ຕາມເສັ້ນທາງທີ່ຖືກຕ້ອງ ໃນການແກ້ໄຂບັນຫາຊົນເຜົ່າທີ່ມີສີສັນພິເສດຂອງຈີນຢ່າງເດັດດ່ຽວໝຽວແໜ້ນ, ຍຶດໝັ້ນ ແລະປັບປຸງລະບອບປົກຄອງຕົນເອງຂອງເຂດຊົນເຜົ່າສ່ວນໜ້ອຍ, ເພີ່ມທະວີ ແລະປັບປຸງວຽກງານຊົນເຜົ່າຂອງພັກ, ຊຸກຍູ້ພາລະກິດສາມັກຄີ ແລະຄວາມກ້າວໜ້າຂອງຊົນເຜົ່າຢ່າງຮອບດ້ານ. ພວກເຮົາຕ້ອງຍຶດໝັ້ນທິດທາງທັນສາສະໜາຂອງປະເທດພວກເຮົາໃຫ້ເປັນແບບຈີນ, ຕັ້ງໜ້າຊຸກຍູ້ໃຫ້ສາສະໜາສອດຄ່ອງກັບສັງຄົມຂອງສັງຄົມນິຍົມ.ຕ້ອງເພີ່ມທະວີວຽກງານດ້ານການເມືອງແນວຄິດຂອງປັນຍາຊົນນອກພັກ, ເຮັດວຽກກ່ຽວກັບຊັ້ນຄົນໃໝ່ໃນສັງຄົມໃຫ້ດີ, ເພີ່ມທະວີການນຳພາທາງການເມືອງໃນການບຸກບືນສູ້ຊົນຮ່ວມກັນ. ຕ້ອງສ້າງການພົວພັນລະຫວ່າງພາກສ່ວນລັດກັບພາກ

ສ່ວນທຸລະກິດ ທີ່ສະໜິດສະໜົມ ແລະປອດໃສຢ່າງຮອບດ້ານ, ຊຸກຍູ້ເສດຖະກິດທີ່ບໍ່ແມ່ນລະບອບກຳມະສິດສ່ວນລວມ ແລະບຸກຄົນໃນເສດຖະກິດທີ່ບໍ່ແມ່ນລະບອບກຳມະສິດສ່ວນລວມໃຫ້ຂະຫຍາຍຕົວຢ່າງປອດໃສ. ຕ້ອງເພີ່ມທະວີ ແລະປັບປຸງວຽກງານຊາວຈີນຕ່າງດ້າວໃຫ້ດີຂຶ້ນ, ເພື່ອປະກອບເປັນກຳລັງທີ່ເຂັ້ມແຂງຮ່ວມກັນສຸມໃສ່ການຟື້ນຟູຄວາມຈະເລີນຮຸ່ງເຮືອງຂອງປະຊາຊາດ.

**ເຈັດ: ຍຶດໝັ້ນປົກຄອງປະເທດຕາມກົດໝາຍຢ່າງຮອບດ້ານ ຊຸກຍູ້ການສ້າງສາປະເທດຈີນທີ່ປົກຄອງຕາມກົດໝາຍ**

ການປົກຄອງປະເທດຕາມກົດໝາຍຢ່າງຮອບດ້ານ ເປັນການປະຕິວັດອັນເລິກເຊິ່ງຄັ້ງໜຶ່ງໃນດ້ານການຄຸ້ມຄອງບໍລິຫານປະເທດ ເຊິ່ງກ່ຽວພັນເຖິງການກຳອຳນາດຂອງພັກໃນການພັດທະນາປະເທດໃຫ້ຈະເລີນຮຸ່ງເຮືອງ, ກ່ຽວພັນເຖິງຄວາມສະຫງົບສຸກສຳລານຂອງປະຊາຊົນ ແລະກ່ຽວພັນເຖິງຄວາມສະຫງົບຖາວອນຂອງພັກ ກໍຄືຂອງປະເທດຊາດ. ພວກເຮົາຕ້ອງເສີມຂະຫຍາຍບົດບາດຂອງການປົກຄອງຕາມກົດໝາຍໃນການຄ້ຳປະກັນໃຫ້ພື້ນຖານມີຄວາມໜັກແໜ້ນ, ເຮັດໃຫ້ການຄາດໝາຍມີຄວາມໝັ້ນທ່ຽງ ແລະສິ່ງຜົນປະໂຫຍດໄປສູ່ດ້ານຍາວນານ, ສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານຕາມເສັ້ນທາງປົກຄອງຕາມກົດໝາຍ.

ພວກເຮົາຕ້ອງຍຶດໝັ້ນເດີນຕາມເສັ້ນທາງປົກຄອງຕາມກົດໝາຍຂອງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ, ສ້າງລະບົບການປົກຄອງຕາມກົດໝາຍຂອງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ, ສ້າງສາປະເທດສັງຄົມນິຍົມທີ່ປົກຄອງຕາມກົດໝາຍ, ໂດຍປົກປ້ອງການຮັບປະກັນ ແລະສົ່ງເສີມຄວາມຍຸຕິທຳ ແລະຄວາມເປັນທຳທາງສັງຄົມ, ຍຶດໝັ້ນການຊຸກຍູ້ການປົກຄອງປະເທດຕາມກົດໝາຍ, ກຳອຳນາດຕາມກົດໝາຍ ແລະບໍລິຫານຕາມກົດໝາຍໄປຄຽງຄູ່ກັນ, ຍຶດໝັ້ນການສ້າງສາປະເທດທີ່ປົກຄອງ

ຕາມກົດໝາຍ, ລັດຖະບານທີ່ບໍລິຫານຕາມກົດໝາຍ ແລະສັງຄົມທີ່ຄຸ້ມຄອງຕາມກົດໝາຍ ໃຫ້ເຊື່ອມໂຍງເຂົ້າເປັນອັນໜຶ່ງອັນດຽວກັນ, ຊຸກຍູ້ການສ້າງກົດໝາຍຕາມຫຼັກວິທະຍາສາດ, ການປະຕິບັດກົດໝາຍຢ່າງເຂັ້ມງວດ, ການດຳເນີນງານຕຸລາການຢ່າງຍຸຕິທຳ ແລະທົ່ວປວງຊົນປະຕິບັດຕາມກົດໝາຍຢ່າງຮອບດ້ານ, ຊຸກຍູ້ໃຫ້ວຽກງານໃນດ້ານຕ່າງໆຂອງປະເທດດຳເນີນໄປຕາມກົດໝາຍຢ່າງຮອບດ້ານ.

**(ໜຶ່ງ) ບູລະນະລະບົບກົດໝາຍສັງຄົມນິຍົມທີ່ມີສີສັນພິເສດຂອງຈີນທີ່ຖືລັດຖະທຳມະນູນເປັນແກນກາງ.** ການຍຶດໝັ້ນການປົກຄອງປະເທດຕາມກົດໝາຍ ກ່ອນອື່ນຕ້ອງຍຶດໝັ້ນການປົກຄອງປະເທດຕາມລັດຖະທຳມະນູນ, ການຍຶດໝັ້ນການກຳອຳນາດຕາມກົດໝາຍ ກ່ອນອື່ນຕ້ອງຍຶດໝັ້ນການກຳອຳນາດຕາມລັດຖະທຳມະນູນ, ຍຶດໝັ້ນຖານະການນຳພາຂອງພັກກອມມູນິດຈີນທີ່ກຳນົດໂດຍລັດຖະທຳມະນູນຢ່າງບໍ່ຫວັ່ນໄຫວຄອນແຄນ, ຍຶດໝັ້ນລະບົບແຫ່ງຊາດທີ່ເປັນຜະເດັດການໂດຍປະຊາທິປະໄຕປະຊາຊົນ ແລະລະບົບການເມືອງທີ່ເປັນລະບອບສະພາປະຊາຊົນທີ່ລະບຸໄວ້ໃນລັດຖະທຳມະນູນຢ່າງບໍ່ຫວັ່ນໄຫວຄອນແຄນ. ພວກເຮົາຕ້ອງເພີ່ມທະວີການປະຕິບັດ ແລະຕິດຕາມກວດກາຕາມລັດຖະທຳມະນູນ, ບູລະນະລະບົບລະບຽບການທີ່ຮັບປະກັນການປະຕິບັດລັດຖະທຳມະນູນຢ່າງຮອບດ້ານ, ເສີມຂະຫຍາຍບົດບາດສຳຄັນຂອງລັດຖະທຳມະນູນໃນການປົກຄອງ ແລະບໍລິຫານປະເທດໃຫ້ດີຂຶ້ນ, ປົກປັກຮັກສາຄວາມສັກສິດຂອງລັດຖະທຳມະນູນ. ພວກເຮົາຕ້ອງເພີ່ມທະວີການສ້າງກົດໝາຍໃນຂົງເຂດຈຸດສຸມ, ຂົງເຂດພັດທະນາໃໝ່ ແລະຂົງເຂດທີ່ກ່ຽວພັນກັບຕ່າງປະເທດ, ຊຸກຍູ້ການປົກຄອງຕາມກົດໝາຍຢູ່ພາຍໃນປະເທດ ແລະການປົກຄອງຕາມກົດໝາຍທີ່ກ່ຽວພັນກັບຕ່າງປະເທດຢ່າງເປັນເອກະພາບກັນ, ຊຸກຍູ້ການພັດທະນາ ແລະຮັບປະກັນການປົກຄອງເປັນຢ່າງດີດ້ວຍກົດໝາຍທີ່ບັງເກີດຜົນ. ຕ້ອງຊຸກຍູ້ການສ້າງກົດໝາຍຕາມຫຼັກວິທະຍາສາດ, ສ້າງກົດໝາຍຢ່າງມີປະຊາທິປະໄຕ ແລະສ້າງກົດໝາຍໂດຍອີງຕາມກົດໝາຍ, ເຮັດວຽກໃນການສ້າງກົດໝາຍ, ດັດແກ້ກົດໝາຍ, ຍົກເລີກກົດ

ໝາຍ, ອະທິບາຍກົດໝາຍ ແລະຮ່າງກົດໝາຍໃຫ້ເປັນເອກະພາບກັນ, ຊຸກຍູ້ການສ້າງກົດໝາຍໃຫ້ເປັນແບບລະບົບ, ແບບລວມ, ແບບສົມທົບກັນແລະທັນການ. ພວກເຮົາຕ້ອງປັບປຸງ ແລະເສີມສ້າງລະບຽບການຈົດທະບຽນ ແລະກວດກາ. ຕ້ອງຍຶດໝັ້ນໃນການກຳນົດນະໂຍບາຍຕາມຫຼັກວິທະຍາສາດ, ການກຳນົດນະໂຍບາຍຢ່າງມີປະຊາທິປະໄຕ ແລະການກຳນົດນະໂຍບາຍຕາມກົດໝາຍ, ຈັດຕັ້ງປະຕິບັດລະບຽບການກ່ຽວກັບການກຳນົດນະໂຍບາຍທີ່ສຳຄັນຕາມຂັ້ນຕອນ ຢ່າງຮອບດ້ານ.

**(ສອງ) ຊຸກຍູ້ການບໍລິຫານຕາມກົດໝາຍຢ່າງໜັກແໜ້ນ.** ການສ້າງລັດຖະບານທີ່ບໍລິຫານຕາມກົດໝາຍ ແມ່ນໜ້າທີ່ຈຸດສຸມ ແລະວຽກງານຕົ້ນຕໍໃນການປົກຄອງປະເທດຕາມກົດໝາຍຢ່າງຮອບດ້ານ. ພວກເຮົາຕ້ອງຫັນປ່ຽນພາລະບົດບາດຂອງລັດຖະບານ, ປັບປຸງລະບົບໜ້າທີ່ຄວາມຮັບຜິດຊອບ ແລະໂຄງປະກອບການຈັດຕັ້ງຂອງລັດຖະບານໃຫ້ດີຂຶ້ນ, ຊຸກຍູ້ໃຫ້ອົງການ, ພາລະບົດບາດ, ຂອບເຂດສິດອຳນາດ, ຂັ້ນຕອນເຮັດວຽກ ແລະໜ້າທີ່ຜິດຊອບໄດ້ຮັບການດຳເນີນງານໄປຕາມກົດໝາຍ, ຍົກສູງປະສິດທິພາບ ແລະຄວາມໜ້າເຊື່ອຖືຂອງການບໍລິຫານ. ຕ້ອງລົງເລິກການປະຕິຮູບຂອງຫົວໜ່ວຍວິຊາການ. ລົງເລິກການປະຕິຮູບໂຄງປະກອບການປະຕິບັດກົດໝາຍທາງບໍລິຫານ, ຊຸກຍູ້ການປະຕິບັດກົດໝາຍຢ່າງເຂັ້ມງວດ, ເປັນລະບຽບແບບແຜນ, ຍຸຕິທຳ ແລະສີວິໄລຢ່າງຮອບດ້ານ, ເພີ່ມທະວີການປະຕິບັດກົດໝາຍໃນຂົງເຂດຈຸດສຸມ ທີ່ຕິດພັນກັບຜົນປະໂຫຍດຕົວຈິງຂອງມວນຊົນ, ປັບປຸງຂັ້ນຕອນການປະຕິບັດກົດໝາຍທາງບໍລິຫານໃຫ້ດີຂຶ້ນ, ບູລະນະຫຼັກພື້ນຖານໃນການທຳການຕັດສິນ ແລະພິຈາລະນາທາງບໍລິຫານ. ພວກເຮົາຕ້ອງເພີ່ມທະວີການສ້າງກົນໄກຕິດຕາມກວດກາ ແລະຄວາມສາມາດໃນການປະຕິບັດກົດໝາຍທາງບໍລິຫານ, ຈັດຕັ້ງປະຕິບັດລະບຽບການຄວາມຮັບຜິດຊອບ ແລະລະບຽບການສືບຫາຄວາມຮັບຜິດຊອບໃນການປະຕິບັດກົດໝາຍທາງບໍລິຫານຢ່າງເຂັ້ມ ງວດ. ບູລະນະໂຄງປະກອບກົນໄກການປະຕິບັດກົດໝາຍສັງລວມຢູ່ຂັ້ນຮາກຖານໃຫ້ຄົບຖ້ວນສົມບູນ.

**(ສາມ) ເຂັ້ມງວດດ້ານຕຸລາການຢ່າງຍຸຕິທຳ.** ຕຸລາການຢ່າງຍຸຕິທຳ ເປັນເສັ້ນປ້ອງກັນສຸດທ້າຍ

ໃນການປົກປ້ອງຄວາມຍຸທິທຳ ແລະຄວາມເປັນທຳທາງສັງຄົມ. ພວກເຮົາຕ້ອງລົງເລິກການປະຕິຮູບຄົບຊຸດກັບໂຄງປະກອບຕຸລາການ, ຈັດຕັ້ງປະຕິບັດລະບຽບການຮັບຜິດຊອບທາງຕຸລາການຢ່າງຮອບດ້ານແລະຖືກຕ້ອງ, ເລັ່ງລັດສ້າງລະບອບຕຸລາການສັງຄົມນິຍົມທີ່ຍຸຕິທຳ, ມີປະສິດທິພາບສູງ ແລະມີຄວາມສັກສິດ, ພະຍາຍາມໃຫ້ປະຊາຊົນສາມາດຮູ້ສຶກໄດ້ເຖິງຄວາມຍຸຕິທຳ ແລະຄວາມເປັນທຳໃນທຸກຄະດີທາງຕຸລາການ. ຕ້ອງສ້າງລະບຽບແບບແຜນໃຫ້ແກ່ການໃຊ້ສິດຕຸລາການ, ບູລະນະໂຄງປະກອບກົນໄກທີ່ໃຫ້ອົງການປ້ອງກັນຄວາມສະຫງົບ, ອົງການໄອຍະການ, ອົງການພິພາກສາ, ອົງການຕຸລາການ-ບໍລິຫານຕ່າງໆປະຕິບັດຕາມໜ້າທີ່ຂອງໃຜຂອງລາວ, ປະສານສົມທົບກັນ ແລະ ຜູກມັດກັນ. ພວກເຮົາຕ້ອງເພີ່ມທະວີການຜູກມັດ ແລະຕິດຕາມກວດກາຕໍ່ການເຄື່ອນໄຫວດ້ານຕຸລາການ ແລະຊຸກຍູ້ຄວາມຍຸຕິທຳດ້ານຕຸລາການ. ຕ້ອງເພີ່ມທະວີວຽກງານຂອງອົງການໄອຍະການໃນການຕິດຕາມກວດກາທາງກົດໝາຍ. ບູລະນະລະບຽບການຮ້ອງຟ້ອງແບບສາທາລະນະປະໂຫຍດ.

**(ສີ່) ເລັ່ງສ້າງສັງຄົມທີ່ຄຸ້ມຄອງຕາມກົດໝາຍ.** ສັງຄົມທີ່ຄຸ້ມຄອງຕາມກົດໝາຍເປັນພື້ນຖານໃນການສ້າງສາປະເທດທີ່ປົກຄອງຕາມກົດໝາຍ. ພວກເຮົາຕ້ອງເສີມຂະຫຍາຍຈິດໃຈກົດໝາຍສັງຄົມນິຍົມ, ສືບທອດວັດທະນະທຳດ້ານກົດໝາຍອັນເປັນມູນເຊື້ອທີ່ດີງາມຂອງຊາດຈີນ, ນຳພາໃຫ້ປະຊາຊົນທຸກຖ້ວນໜ້າກາຍເປັນຜູ້ເຄົາລົບການຄຸ້ມຄອງຕາມກົດໝາຍສັງຄົມນິຍົມຢ່າງຊື່ສັດ, ຜູ້ປະຕິບັດການຄຸ້ມຄອງຕາມກົດໝາຍສັງຄົມນິຍົມຢ່າງຕື່ນຕົວ ແລະຜູ້ປົກປ້ອງການຄຸ້ມຄອງຕາມກົດໝາຍສັງຄົມນິຍົມຢ່າງເດັດດ່ຽວໜຽວແໜ້ນ. ຕ້ອງສ້າງລະບົບບໍລິການທາງກົດໝາຍສາທາລະນະຍຸກປັດຈຸບັນທີ່ປົກຄຸມຕົວເມືອງ ແລະຊົນນະບົດ, ລົງເລິກດຳເນີນການໂຄສະນາສຶກສາອົບຮົມກ່ຽວກັບການຄຸ້ມຄອງຕາມກົດໝາຍ, ເພີ່ມທະວີສະຕິກ່ຽວກັບການຄຸ້ມຄອງຕາມກົດໝາຍຂອງທົ່ວປວງຊົນ. ຕ້ອງຊຸກຍູ້ການຄຸ້ມຄອງຕາມກົດໝາຍທີ່ຢູ່ໃນຫຼາຍລະດັບ ແລະຫຼາຍຂົງເຂດ, ຍົກລະດັບການຄຸ້ມຄອງສັງຄົມຕາມກົດໝາຍໃຫ້ສູງຂຶ້ນ. ຕ້ອງເສີມຂະຫຍາຍບົດບາດທີ່ເປັນແບບຢ່າງນຳໜ້າຂອງພະນັກງານການນຳ, ພະຍາ

ຍາມເຮັດໃຫ້ການເຄົາລົບກົດໝາຍ, ການຮຽນຮູ້ກົດໝາຍ, ການປະຕິບັດຕາມກົດໝາຍ ແລະການນໍາໃຊ້ກົດໝາຍກາຍເປັນກະແສນິຍົມໃນທົ່ວສັງຄົມ.

**ແປດ: ຊຸກຍູ້ຄວາມໝັ້ນໃຈຕົນເອງ ແລະສ້າງຄວາມເຂັ້ມແຂງດ້ວຍຕົນເອງດ້ານວັດທະນະທໍາ ສ້າງຄວາມຈະເລີນຮຸ່ງເຮືອງອັນໃໝ່ຂອງວັດທະນະທໍາສັງຄົມນິຍົມ**

ການສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານ, ຕ້ອງຍຶດໝັ້ນເດີນຕາມເສັ້ນທາງພັດທະນາວັດທະນະທໍາຂອງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ, ເພີ່ມທະວີຄວາມໝັ້ນໃຈຕົນເອງດ້ານວັດທະນະທໍາ, ສ້າງສາປະເທດສັງຄົມນິຍົມທີ່ເຂັ້ມແຂງດ້ານວັດທະນະທໍາ ໂດຍປິ່ນອ້ອມການຊູຄັນທຸງ, ເຕົ້າໂຮມຈິດໃຈ, ສ້າງຄົນໃໝ່, ສ້າງວັດທະນະທໍາໃຫ້ຈະເລີນ ແລະສະແດງພາບພົດຂອງຊາດ, ເພື່ອພັດທະນາວັດທະນະທໍາສັງຄົມນິຍົມຂອງຊາດ, ຂອງປະຊາຊົນຕາມຫຼັກວິທະຍາສາດ ທີ່ຫັນໜ້າໄປສູ່ຄວາມທັນສະໄໝ, ຫັນໜ້າສູ່ໂລກ ແລະຫັນໜ້າສູ່ອະນາຄົດ, ກະຕຸ້ນພະລັງຊີວິດການປະດິດສ້າງດ້ານວັດທະນະທໍາຂອງທົ່ວປະຊາຊາດ, ເພີ່ມທະວີພະລັງແຮງທາງດ້ານຈິດໃຈໃນການບັນລຸການຟື້ນຟູຄວາມຈະເລີນຮຸ່ງເຮືອງທີ່ຍິ່ງໃຫຍ່ຂອງປະຊາຊາດຈີນ.

ພວກເຮົາຕ້ອງຍຶດໝັ້ນລະບອບພື້ນຖານທີ່ຖືລັດທິມາກໄວ້ຢູ່ໃນຖານະຊີ້ນໍາໃນຂົງເຂດຮູບຖານຈິດສໍານຶກ, ຍຶດໝັ້ນຮັບໃຊ້ປະຊາຊົນ ແລະຮັບໃຊ້ສັງຄົມນິຍົມ, ຍຶດໝັ້ນທິດທາງ "ໝູ່ມາລາແຂ່ງຂັນບານ, ໝູ່ນັກປາດແຂ່ງຂັນເວົ້າ", ຍຶດໝັ້ນໃຫ້ມີການຫັນປ່ຽນແບບປະດິດສ້າງ ແລະການພັດທະນາແບບປະດິດສ້າງ, ຖືຄ່ານິຍົມແກນກາງສັງຄົມນິຍົມເປັນທິດນໍາພາ, ພັດທະນາວັດທະນະທໍາສັງຄົມນິຍົມທີ່ກ້າວໜ້າ, ເສີມຂະຫຍາຍວັດທະນະທໍາປະຕິວັດ, ສືບທອດວັດທະນະທໍາອັນເປັນມູນເຊື້ອທີ່ດີງາມຂອງຈີນ, ຕອບສະໜອງຄວາມຮຽກຮ້ອງຕ້ອງການວັດທະນະທໍາດ້ານຈິດໃຈຂອງປະຊາຊົນທີ່ນັບມື້ນັບເພີ່ມຂຶ້ນ,

ປັບປຸງພື້ນຖານແນວຄິດຮ່ວມໃນການສາມັກຄີບາກບັ່ນສູ້ຊົນຂອງທົ່ວພັກ ແລະປະຊາຊົນບັນດາເຜົ່າທົ່ວປະເທດໃຫ້ໝັ້ນຄົງ, ຍົກສູງກຳລັງໄມ້ອ່ອນດ້ານວັດທະນະທຳຂອງປະເທດພວກເຮົາ ແລະບົດບາດອິດທິພົນຂອງວັດທະນະທຳຈີນ.

**(ໜຶ່ງ) ສ້າງຮູບຖານຈິດສຳນຶກສັງຄົມນິຍົມທີ່ມີກຳລັງເຕົ້າໂຮມຄວາມສາມັກຄີ ແລະກຳລັງນຳພາທີ່ເຂັ້ມແຂງ.** ວຽກງານຮູບຖານຈິດສຳນຶກເປັນວຽກງານທີ່ສ້າງຈິດວິນຍານເພື່ອປະເທດຊາດ ແລະປະຊາຊາດ. ພວກເຮົາຕ້ອງໃຫ້ພັກກຳເອົາສິດນຳພາວຽກງານຮູບຖານຈິດສຳນຶກໄວ້ໃຫ້ແໜ້ນ, ຈັດຕັ້ງປະຕິບັດລະບຽບການຄວາມຮັບຜິດຊອບດ້ານວຽກງານຮູບຖານຈິດສຳນຶກຢ່າງຮອບດ້ານ, ປັບປຸງ ແລະເສີມສ້າງແນວຄິດທາງສຽງຫຼັກແຫ່ງການບຸກບືນສູ້ຊົນໃນຍຸກໃໝ່ໃຫ້ເຂັ້ມແຂງຂຶ້ນ. ບູລະນະລະບົບວຽກງານຝຶກຝົນຫຼໍ່ຫຼອມທົ່ວພັກ, ສຶກສາອົບຮົມປະຊາຊົນ ແລະຊີ້ນຳພຶດຕິກຳຕົວຈິງດ້ວຍທິດສະດີທີ່ປະດິດສ້າງຂອງພັກໃຫ້ສົມບູນຂຶ້ນ. ພວກເຮົາຕ້ອງລົງເລິກຈັດຕັ້ງປະຕິບັດໂຄງການຄົ້ນຄວ້າ ແລະສ້າງສາທິດສະດີລັດທິມາກ, ເລັ່ງສ້າງລະບົບຂະແໜງວິຊາ, ລະບົບວິຊາການ ແລະລະບົບການໂຄສະນາກ່ຽວກັບປັດຊະຍາວິທະຍາສາດສັງຄົມທີ່ມີສີສັນພິເສດຂອງຈີນ, ບຳລຸງສ້າງຖັນແຖວຜູ້ມີຄວາມຮູ້ຄວາມສາມາດໃນດ້ານປັດຊະຍາວິທະຍາສາດສັງຄົມ. ຕ້ອງເພີ່ມທະວີການສ້າງລະບົບເຜີຍແຜ່ໂຄສະນາດ້ວຍສື່ມວນຊົນທຸກຮູບແບບ, ສ້າງສະພາບການໃໝ່ໃນດ້ານທາງສຽງຫຼັກ. ຕ້ອງບູລະນະລະບົບຄຸ້ມຄອງບໍລິຫານອິນເຕີເນັດສັງລວມໃຫ້ສົມບູນຂຶ້ນ ແລະຊຸກຍູ້ການສ້າງສະພາບການອິນເຕີເນັດທີ່ດີ.

**(ສອງ) ຈັດຕັ້ງປະຕິບັດຄ່ານິຍົມແກນກາງສັງຄົມນິຍົມຢ່າງກວ້າງຂວາງ.** ຄ່ານິຍົມແກນກາງສັງຄົມນິຍົມເປັນກຳລັງທີ່ເຂັ້ມແຂງໃນການເຕົ້າໂຮມຈິດໃຈ ແລະກຳລັງແຮງຂອງປະຊາຊົນ. ພວກເຮົາຕ້ອງເສີມຂະຫຍາຍລະບົບຈິດໃຈຂອງຊາວກອມມູນິດຈີນທີ່ຖືນ້ຳໃຈສ້າງຕັ້ງພັກອັນຍິ່ງໃຫຍ່ເປັນແຫຼ່ງກຳເນີດ, ນຳໃຊ້ຊັບພະຍາກອນປະຫວັດສາດການປະຕິວັດໃຫ້ດີ, ລົງເລິກດຳເນີນການໂຄສະນາສຶກສາອົບຮົມດ້ານຄ່ານິຍົມແກນກາງສັງຄົມນິຍົມ, ລົງເລິກການສຶກສາອົບຮົມດ້ານລັດທິຮັກຊາດ, ລັດທິ

ລວມໝູ່ ແລະສັງຄົມນິຍົມ, ອອກແຮງບຳລຸງສ້າງຄົນໃໝ່ແຫ່ງຍຸກສະໄໝທີ່ສາມາດແບກຫາບພາລະໜ້າທີ່ຟື້ນຟູຄວາມຈະເລີນຮຸ່ງເຮືອງຂອງປະຊາຊາດ. ຕ້ອງຊຸກຍູ້ການສຶກສາອົບຮົມດ້ານອຸດົມການ ແລະຄວາມເຊື່ອຖືໃຫ້ທັນເປັນປົກກະຕິ ແລະເປັນລະບຽບການ, ສືບຕໍ່ປະຕິບັດການໂຄສະນາອົບຮົມກ່ຽວກັບປະຫວັດສາດຂອງພັກ, ປະຫວັດສາດຂອງປະເທດຈີນໃໝ່, ປະຫວັດສາດຂອງການປະຕິຮູບ ແລະເປີດປະຕູສູ່ພາຍນອກ ແລະປະຫວັດສາດການພັດທະນາສັງຄົມນິຍົມ, ນຳພາໃຫ້ປະຊາຊົນຮັບຮູ້ປະຫວັດສາດ, ຮັກພັກ ແລະຮັກປະເທດຊາດ, ຮັດແໜ້ນອຸດົມການຮ່ວມຂອງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນຢ່າງບໍ່ຢຸດຢັ້ງ. ພວກເຮົາຕ້ອງຝຶກຝົນຫຼໍ່ຫຼອມຈິດວິນຍານ ແລະບຳລຸງສ້າງຄົນດ້ວຍຄ່ານິຍົມແກນກາງສັງຄົມນິຍົມ, ປັບປຸງລະບົບວຽກງານການເມືອງແນວຄິດໃຫ້ດີ, ຊຸກຍູ້ການສ້າງສາໃນດ້ານການສຶກສາອົບຮົມການເມືອງ ແນວຄິດຢູ່ມະຫາວິທະຍາໄລ, ໂຮງຮຽນມັດທະຍົມ ແລະປະຖົມໃຫ້ເປັນອັນໜຶ່ງອັນດຽວກັນ. ຕ້ອງຍຶດໝັ້ນໃນການປະສານສົມທົບກັນລະຫວ່າງການປົກຄອງປະເທດຕາມກົດໝາຍ ແລະການປົກຄອງປະເທດດ້ວຍຄຸນສົມບັດ, ເຮັດໃຫ້ຄ່ານິຍົມແກນກາງສັງຄົມນິຍົມເຊື່ອມໂຍງເຂົ້າໃນການສ້າງການປົກຄອງຕາມກົດໝາຍ, ການພັດທະນາຂອງສັງຄົມ ແລະຊີວິດປະຈຳວັນ.

**(ສາມ) ຍົກສູງລະດັບຄວາມສີວິໄລຂອງທົ່ວສັງຄົມ.** ພວກເຮົາຕ້ອງດຳເນີນໂຄງການເສີມສ້າງຄຸນສົມບັດຂອງພົນລະເມືອງ, ເສີມຂະຫຍາຍຄຸນນະທຳອັນເປັນມູນເຊື້ອທີ່ດີງາມຂອງຈີນ, ເພີ່ມທະວີການສຶກສາໃນຄອບຄົວ ແລະການສ້າງແບບແຜນທີ່ດີໃນຄອບຄົວ, ເພີ່ມທະວີ ແລະປັບປຸງການເສີມສ້າງແນວຄິດ ແລະຄຸນສົມບັດຂອງຄົນທີ່ບໍ່ທັນເຕັມອາຍຸກະສຽນ, ຊຸກຍູ້ໃຫ້ປະຊາຊົນມີສະຕິຄຸນສົມບັດ, ປະຕິບັດຕາມຈະລິຍະທຳສັງຄົມ ແລະມີຄວາມເຂັ້ມງວດດ້ານຄຸນສົມບັດສ່ວນຕົວ, ຍົກສູງລະດັບຄຸນສົມບັດ ແລະຄວາມສີວິໄລຂອງປະຊາຊົນ. ພວກເຮົາຕ້ອງຊຸກຍູ້ການບຳລຸງຄວາມສີວິໄລ, ພຶດຕິກຳທາງຄວາມສີວິໄລ ແລະການສ້າງສາຄວາມສີວິໄລຢ່າງເປັນເອກະພາບກັນ, ຊຸກຍູ້ການສ້າງຄວາມສີວິໄລດ້ານຈິດໃຈຢູ່ຕົວເມືອງ ແລະຊົນນະບົດໃຫ້ພັດທະນາແບບເຊື່ອມໂຍງເຂົ້າກັນ, ເສີມຂະຫຍາຍຈິດ

ໃຈອອກແຮງງານ, ຈິດໃຈສູ້ຊົນ, ຈິດໃຈອຸທິດຕົນ, ຈິດໃຈປະດິດສ້າງ ແລະຈິດໃຈປະຢັດມັດທະຍັດໃນທົ່ວສັງຄົມ, ບຳລຸງສ້າງແບບແຜນໃໝ່ ແລະໂສມໜ້າໃໝ່ແຫ່ງຍຸກສະໄໝ. ຕ້ອງເພີ່ມທະວີການສ້າງສາຄວາມສາມາດເຜີຍແຜ່ຄວາມຮູ້ດ້ານວິທະຍາສາດຂອງປະເທດຊາດ ແລະລົງເລິກດຳເນີນການເຄື່ອນໄຫວການອ່ານໜັງສືໃນທົ່ວປວງຊົນ. ຕ້ອງບູລະນະລະບົບລະບຽບການຂອງວຽກງານການບໍລິການອາສາສະໝັກ. ຕ້ອງເສີມຂະຫຍາຍວັດທະນະທຳດ້ານຄວາມຊື່ສັດ ແລະໜ້າເຊື່ອຖື, ບູລະນະກົນໄກຍາວໄກໃນການກໍ່ສ້າງຄວາມຊື່ສັດ ແລະໜ້າເຊື່ອຖືໃຫ້ສົມບູນຂຶ້ນ. ພວກເຮົາຕ້ອງເສີມຂະຫຍາຍບົດບາດການນຳພາດ້ານຈິດໃຈ ແລະບົດບາດທີ່ເປັນແບບຢ່າງຂອງຜູ້ທີ່ໄດ້ຮັບກຽດຕິຍົດ, ຫຼຽນໄຊ ແລະຄວາມຍ້ອງຍໍລະດັບທົ່ວພັກ ແລະລະດັບຊາດ, ເພື່ອຊຸກຍູ້ໃຫ້ທົ່ວສັງຄົມຮຽນເອົາແບບຢ່າງທີ່ດີ, ເຄົາລົບວິລະຊົນ ແລະ ແຂ່ງຂັນກັນເປັນກອງນຳໜ້າ.

**(ສີ່) ພັດທະນາພາລະກິດວັດທະນະທຳ ແລະອຸດສາຫະກຳວັດທະນະທຳໃຫ້ມີຄວາມຈະເລີນຮຸ່ງເຮືອງ.** ພວກເຮົາຕ້ອງຍຶດໝັ້ນທິດທາງປະດິດຄິດແຕ່ງທີ່ຖືປະຊາຊົນເປັນໃຈກາງ, ປະດິດແຕ່ງຜົນງານດີເດັ່ນທີ່ສາມາດເສີມສ້າງກຳລັງຈິດໃຈຂອງປະຊາຊົນໃຫ້ຫຼາຍກວ່າເກົ່າ, ບຳລຸງສ້າງນັກສິລະປິນວັນນະຄະດີຜູ້ດີເດັ່ນທີ່ມີຄຸນສົມບັດ ແລະຄວາມສາມາດຢ່າງຫຼວງຫຼາຍ ແລະສ້າງຖັນແຖວຜູ້ມີຄວາມຮູ້ຄວາມສາມາດດ້ານວັດທະນະທຳແລະສິລະປະວັນນະຄະດີຂະໜາດໃຫຍ່. ຕ້ອງຍຶດໝັ້ນຖືປະສິດທິຜົນດ້ານສັງຄົມໄວ້ຢູ່ໃນຖານະອັນດັບໜຶ່ງ, ໃຫ້ປະສິດທິຜົນດ້ານສັງຄົມປະສົມປະສານກັບປະສິດທິຜົນດ້ານເສດຖະກິດເປັນເອກະພາບກັນ, ລົງເລິກການປະຕິຮູບໂຄງປະກອບວັດທະນະທຳ ແລະປັບປຸງນະໂຍບາຍເສດຖະກິດວັດທະນະທຳ. ຕ້ອງປະຕິບັດຍຸດທະສາດການຫັນເປັນດີຈີຕອນຂອງວັດທະນະທຳແຫ່ງຊາດ, ບູລະນະລະບົບການບໍລິການສາທາລະນະດ້ານວັດທະນະທຳໃນຍຸກປັດຈຸບັນໃຫ້ສົມບູນຂຶ້ນ, ປະຕິບັດໂຄງການວັດທະນະທຳທີ່ສ້າງຜົນປະໂຫຍດໃຫ້ກັບປະຊາຊົນຢ່າງມີການປະດິດສ້າງ. ຕ້ອງບູລະນະລະບົບອຸດສາຫະກຳ ແລະລະບົບຕະຫຼາດດ້ານວັດທະນະທຳຂອງຍຸກປັດຈຸບັນໃຫ້ສົມບູນຂຶ້ນ,

ປະຕິບັດຍຸດທະສາດຊຸກຍູ້ໂຄງການອຸດສາຫະກຳວັດທະນະທຳທີ່ສຳຄັນ. ຕ້ອງເພີ່ມທະວີການອະນຸລັກວັດຖຸບູຮານ ແລະມໍລະດົກວັດທະນະທຳ, ເພີ່ມທະວີການອະນຸລັກ ແລະສືບທອດວັດທະນະທຳປະຫວັດສາດໃນຂະບວນການກໍ່ສ້າງຕົວເມືອງ ແລະຊົນນະບົດ, ສ້າງ ແລະນຳໃຊ້ສວນວັດທະນະທຳແຫ່ງຊາດໃຫ້ດີ. ຍຶດໝັ້ນພັດທະນະການທ່ອງທ່ຽວດ້ວຍວັດທະນະທຳ ແລະເສີມຂະຫຍາຍວັດທະນະທຳໂດຍຜ່ານການທ່ອງທ່ຽວ, ຊຸກຍູ້ວັດທະນະທຳ ແລະການທ່ອງທ່ຽວໃຫ້ມີການພັດທະນາແບບເຊື່ອມໂຍງເຂົ້າກັນຢ່າງເລິກເຊິ່ງ. ຕ້ອງດຳເນີນການເຄື່ອນໄຫວອອກກຳລັງກາຍທົ່ວປວງຊົນຢ່າງກວ້າງຂວາງ, ເພີ່ມທະວີວຽກງານກິລາຂອງຊາວໜຸ່ມເຍົາວະຊົນ, ສົ່ງເສີມການພັດທະນາກິລາມວນຊົນ ແລະກິລາແຂ່ງຂັນຢ່າງຮອບດ້ານ, ເລັ່ງລັດສ້າງສາປະເທດເຂັ້ມແຂງດ້ານກິລາ.

**(ຫ້າ) ເສີມສ້າງກຳລັງການເຜີຍແຜ່ໂຄສະນາ ແລະ ບົດບາດອິດທິພົນຂອງອະລິຍະທຳຈີນ.** ພວກເຮົາຕ້ອງຍຶດໝັ້ນຫຼັກໝັ້ນຂອງວັດທະນະທຳຈີນ, ສະແດງໃຫ້ເຫັນເຖິງສັນຍາລັກດ້ານຈິດໃຈ ແລະສິ່ງຍອດຍິ່ງດ້ານວັດທະນະທຳຂອງອະລິຍະທຳປະຊາຊາດຈີນ, ເລັ່ງສ້າງລະບົບໂຄສະນາ ແລະລະບົບເລົ່າເລື່ອງຂອງຈີນ, ເພື່ອເລົ່າເລື່ອງລາວຂອງຈີນໃຫ້ດີ, ເຜີຍແຜ່ສຽງຂອງຈີນໃຫ້ດີ ແລະສະແດງໃຫ້ເຫັນເຖິງພາບພົດຂອງຈີນທີ່ໜ້າເຊື່ອຖື, ໜ້າຮັກ ແລະໜ້າເຄົາລົບນັບຖື. ຕ້ອງເສີມສ້າງຄວາມສາມາດການໂຄສະນາເຜີຍແຜ່ໃນສາກົນ, ຍົກສູງປະສິດທິຜົນການໂຄສະນາເຜີຍແຜ່ໃນສາກົນ, ສ້າງບົດບາດໃນການໂຄສະນາທີ່ສົມຄູ່ກັບກຳລັງສັງລວມແຫ່ງຊາດ ແລະຖານະສາກົນຂອງປະເທດພວກເຮົາ. ຕ້ອງລົງເລິກການແລກປ່ຽນ ແລະຖອດຖອນບົດຮຽນເຊິ່ງກັນແລະກັນລະຫວ່າງອະລິຍະທຳຕ່າງໆ, ຊຸກຍູ້ໃຫ້ວັດທະນະທຳຈີນກ້າວເດີນໄປສູ່ໂລກໃຫ້ດີກວ່າເກົ່າ.

## ເກົ້າ: ເພີ່ມຄວາມສົມບູນພູນສຸກຂອງປະຊາຊົນ ຍົກສູງຄຸນນະພາບຊີວິດຂອງປະຊາຊົນ

ປະເທດຊາດກໍແມ່ນປະຊາຊົນ, ປະຊາຊົນກໍແມ່ນປະເທດຊາດ. ພັກກອມມູນິດຈີນນຳພາປະຊາຊົນສ້າງຕັ້ງປະເທດ ແລະຮັກສາປະເທດຊາດ ກໍແມ່ນຮັກສາຄວາມສັດທາຂອງປະຊາຊົນ. ການປົກຄອງປະເທດຕ້ອງປະຕິບັດຕາມກົດເກນທີ່ມີຢູ່ແລ້ວ, ແຕ່ສິ່ງສຳຄັນທີ່ສຸດແມ່ນຕ້ອງຖືການສ້າງຜົນປະໂຫຍດໃຫ້ປະຊາຊົນເປັນກົກ. ການສ້າງຄວາມສົມບູນພູນສຸກໃຫ້ກັບປະຊາຊົນແມ່ນຄວາມຮຽກຮ້ອງຕ້ອງການດ້ານທາດແທ້ໃນການສ້າງພັກເພື່ອສ່ວນລວມ ແລະກຳອຳນາດເພື່ອປະຊາຊົນ. ຕ້ອງຍຶດໝັ້ນຮັບປະກັນ ແລະປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນໃນຂະບວນການພັດທະນາ, ສົ່ງເສີມການສູ້ຊົນຮ່ວມກັນເພື່ອສ້າງຊີວິດອັນດີງາມ ແລະບັນລຸຄວາມມຸ່ງຫວັງຂອງປະຊາຊົນທີ່ມີຕໍ່ຊີວິດອັນດີງາມຢ່າງບໍ່ຢຸດຢັ້ງ.

ພວກເຮົາຕ້ອງບັນລຸ, ປົກປັກຮັກສາ ແລະເສີມຂະຫຍາຍຜົນປະໂຫຍດພື້ນຖານຂອງປະຊາຊົນອັນມະຫາສານທີ່ສຸດໃຫ້ດີ, ສຸມໃສ່ບັນຫາຜົນປະໂຫຍດຕົວຈິງທີ່ສຸດ, ທີ່ກ່ຽວພັນກັບປະຊາຊົນໂດຍກົງທີ່ສຸດ ແລະເປັນທີ່ສົນໃຈທີ່ສຸດຂອງປະຊາຊົນ, ຍຶດໝັ້ນໃນການອອກແຮງສຸດຂີດ ແລະເຮັດຕາມຄວາມສາມາດຂອງຕົນ, ເຂົ້າເຖິງປະຊາຊົນ ແລະເຂົ້າເຖິງຂັ້ນຮາກຖານ, ໃຊ້ມາດຕະການທີ່ສົ່ງຜົນປະໂຫຍດໃຫ້ກັບຊີວິດການເປັນຢູ່ຂອງປະຊາຊົນ ແລະສ້າງຄວາມອົບອຸ່ນໃຫ້ກັບປະຊາຊົນຫຼາຍກວ່າເກົ່າ, ອອກແຮງແກ້ໄຂບັນຫາທີ່ປະຊາຊົນມີຄວາມເດືອດຮ້ອນ, ຫຍຸ້ງຍາກ ແລະມີຄວາມກັງວົນໃຈໃຫ້ດີ, ບູລະນະລະບົບການບໍລິການສາທາລະນະຂັ້ນພື້ນຖານໃຫ້ສົມບູນຂຶ້ນ, ຍົກສູງລະດັບການບໍລິການສາທາລະນະ, ເພີ່ມທະວີຄວາມສະໝໍ່າສະເໝີ ແລະຄວາມສາມາດເຂົ້າເຖິງໄດ້ຂອງການບໍລິການສາທາລະນະ ແລະຊຸກຍູ້ຄວາມຮັ່ງມີຮ່ວມກັນຢ່າງໜັກແໜ້ນ.

**(ໜຶ່ງ) ບູລະນະລະບອບການແບ່ງປັນໃຫ້ສົມບູນ.** ລະບອບການແບ່ງປັນເປັນລະບອບພື້ນຖານໃນການຊຸກຍູ້ຄວາມຮັ່ງມີຮ່ວມກັນ. ພວກເຮົາຕ້ອງຍຶດໝັ້ນໃນການຖືການແບ່ງປັນຕາມແຮງງານເປັນຫຼັກ ທັງມີຮູບການແບ່ງປັນຫຼາຍປະເພດຢູ່ຮ່ວມກັນ, ສ້າງລະບົບລະບຽບການທີ່ມີການແບ່ງປັນຄັ້ງທຳ

ອິດ, ການແບ່ງປັນຄັ້ງທີສອງ ແລະການແບ່ງປັນຄັ້ງທີສາມປະສານສົມທົບກັນ. ພະຍາຍາມເພີ່ມອັດຕາສ່ວນຂອງລາຍໄດ້ປະຊາຊົນໃນການແບ່ງປັນລາຍໄດ້ແຫ່ງຊາດ ແລະເພີ່ມອັດຕາສ່ວນຂອງຄ່າແຮງງານໃນການແບ່ງປັນຄັ້ງທຳອິດ. ຕ້ອງຍຶດໝັ້ນການແບ່ງປັນລາຍໄດ້ຕາມແຮງງານ, ສົ່ງເສີມການສ້າງຄວາມຮັ່ງມີດ້ວຍການອອກແຮງງານຢ່າງດຸໝັ່ນຂະຫຍັນພຽນ, ສົ່ງເສີມຄວາມສະເໝີພາບດ້ານໂອກາດ, ເພີ່ມລາຍໄດ້ຂອງຜູ້ມີລາຍໄດ້ຕ່ຳ, ຂະຫຍາຍກຸ່ມຄົນທີ່ມີລາຍໄດ້ປານກາງ. ຕ້ອງບູລະນະລະບຽບການນະໂຍບາຍກ່ຽວກັບການແບ່ງປັນລາຍໄດ້ຕາມປັດໄຈຕ່າງໆ, ຄົ້ນຄວ້າຫຼາຍຊ່ອງທາງເພື່ອເພີ່ມລາຍໄດ້ດ້ານປັດໄຈຂອງປະຊາຊົນທີ່ມີລາຍໄດ້ປານກາງ ແລະຕ່ຳ ພ້ອມທັງເພີ່ມລາຍໄດ້ແບບຊັບສິນຂອງພົນລະເມືອງໃນຕົວເມືອງ ແລະຊົນນະບົດດ້ວຍຫຼາຍຊ່ອງທາງ. ຕ້ອງເພີ່ມທະວີການປັບການແບ່ງປັນລາຍໄດ້ໂດຍຜ່ານສ່ວຍສາອາກອນ, ການປະກັນສັງຄົມ, ປ່ຽນໂອນການຈ່າຍ ແລະອື່ນໆ. ຕ້ອງປັບປຸງລະບຽບການອາກອນລາຍໄດ້ຂອງສ່ວນບຸກຄົນ, ປັບປຸງລະບຽບການແບ່ງປັນລາຍໄດ້ໃຫ້ເປັນລະບຽບແບບແຜນ, ປັບປຸງກົນໄກສະສົມຊັບສົມບັດໃຫ້ເປັນລະບຽບແບບແຜນ, ປົກປ້ອງລາຍໄດ້ທີ່ຖືກຕ້ອງຕາມກົດໝາຍ, ດັດສົມລາຍໄດ້ທີ່ສູງເກີນໄປ ແລະຮິບເອົາລາຍໄດ້ທີ່ຜິດກົດໝາຍ. ຕ້ອງນຳພາ ແລະສະໜັບສະໜູນວິສາຫະກິດ, ອົງການຈັດຕັ້ງສັງຄົມ ແລະສ່ວນບຸກຄົນທີ່ມີຄວາມສະໝັກໃຈ ແລະມີຄວາມສາມາດເຂົ້າຮ່ວມພາລະກິດການກຸສົນສາທາລະນະປະໂຫຍດຢ່າງຕັ້ງໜ້າ.

**(ສອງ) ຈັດຕັ້ງປະຕິບັດຍຸດທະສາດໃຫ້ບຸລິມະສິດແກ່ການປະກອບອາຊີບ.** ການປະກອບອາຊີບເປັນບັນຫາພື້ນຖານທີ່ສຸດຕໍ່ຊີວິດການເປັນຢູ່ຂອງປະຊາຊົນ. ພວກເຮົາຕ້ອງເສີມຂະຫຍາຍນະໂຍບາຍໃຫ້ບຸລິມະສິດແກ່ການປະກອບອາຊີບ, ບູລະນະກົນໄກສົ່ງເສີມການປະກອບອາຊີບໃຫ້ສົມບູນຂຶ້ນ ແລະສົ່ງເສີມການປະກອບອາຊີບຢ່າງມີຄຸນນະພາບສູງຢ່າງເຕັມສ່ວນ. ຕ້ອງບູລະນະລະບົບການບໍລິການສາທາລະນະດ້ານການປະກອບອາຊີບໃຫ້ສົມບູນຂຶ້ນ, ປັບປຸງລະບົບການສະໜັບສະໜູນການປະກອບອາຊີບຂອງກຸ່ມຄົນຈຸດສຸມ ແລະເພີ່ມທະວີການຊ່ວຍເຫຼືອກຸ່ມຄົນທຸກຍາກໃນດ້ານການປະກອບ

ອາຊີບ. ຕ້ອງເຮັດໃຫ້ນະໂຍບາຍການປະກອບອາຊີບຢູ່ຕົວເມືອງ ແລະຊົນລະບົດເປັນເອກະພາບກັນ, ລຶບລ້າງຂໍ້ບົກຜ່ອງດ້ານໂຄງປະກອບ ແລະນະໂຍບາຍ ທີ່ກີດຂວາງການເຄື່ອນຍ້າຍຂອງແຮງງານ ແລະຜູ້ມີຄວາມຮູ້ຄວາມສາມາດ, ລຶບລ້າງຂໍ້ຈຳກັດທີ່ບໍ່ສົມເຫດສົມຜົນ ແລະການຈຳແນກໃນການປະກອບອາຊີບ ທີ່ກະທົບຕໍ່ຄວາມສະເໝີພາບກັນດ້ານການປະກອບອາຊີບ ເພື່ອໃຫ້ທຸກຄົນມີໂອກາດພັດທະນາຕົນເອງໂດຍຜ່ານການອອກແຮງງານຢ່າງດຸໝັ່ນຂະຫຍັນພຽນ. ຕ້ອງບູລະນະລະບຽບການອົບຮົມວິຊາຊີບຕະຫຼອດຊີວິດໃຫ້ສົມບູນຂຶ້ນ, ຊຸກຍູ້ການແກ້ໄຂຂໍ້ຂັດແຍ້ງດ້ານການປະກອບອາຊີບທີ່ມີລັກສະນະອົງປະກອບ. ຕ້ອງປັບປຸງລະບຽບການຮັບປະກັນການປະກອບອາຊີບໂດຍຜ່ານການສົ່ງເສີມການສ້າງທຸລະກິດ, ສະໜັບສະໜູນ ແລະພັດທະນາຮູບການໃໝ່ຂອງການປະກອບອາຊີບຢ່າງເປັນລະບຽບແບບແຜນ. ບູລະນະກົດໝາຍກົດລະບຽບດ້ານການອອກແຮງງານໃຫ້ສົມບູນຂຶ້ນ, ປັບປຸງກົນໄກເປີກສາຫາລື ແລະປະສານງານກ່ຽວກັບການພົວພັນການອອກແຮງງານ, ປັບປຸງລະບຽບການຮັບປະກັນສິດຜົນປະໂຫຍດຂອງຜູ້ອອກແຮງງານ ແລະເພີ່ມທະວີການຮັບປະກັນສິດຜົນປະໂຫຍດຂອງຜູ້ອອກແຮງງານທີ່ປະກອບອາຊີບແບບຄ່ອງແຄ້ວ ແລະການປະກອບອາຊີບດ້ວຍຮູບການໃໝ່.

**(ສາມ) ບູລະນະລະບົບປະກັນສັງຄົມໃຫ້ສົມບູນ.** ລະບົບປະກັນສັງຄົມເປັນສິ່ງຮັບປະກັນຄວາມປອດໄພດ້ານຊີວິດການເປັນຢູ່ຂອງປະຊາຊົນແລະສິ່ງຮັບປະກັນສະຖຽນລະພາບດ້ານການເຄື່ອນໄຫວຂອງສັງຄົມ. ພວກເຮົາຕ້ອງບູລະນະລະບົບປະກັນສັງຄົມທີ່ມີຫຼາຍລະດັບ, ປົກຄຸມທົ່ວປວງຊົນ, ປະສານສົມທົບລະຫວ່າງຕົວເມືອງ ແລະຊົນນະບົດໃຫ້ເປັນເອກະພາບກັນ, ມີຄວາມຍຸຕິທຳ, ເອກະພາບ, ປອດໄພ, ເປັນລະບຽບແບບແຜນ, ມີຄວາມຍືນຍົງໃຫ້ສົມບູນ. ຕ້ອງປັບປຸງລະບຽບການປະສົມປະສານການປະກັນໄພບຳນານຂັ້ນພື້ນຖານທົ່ວປະເທດໃຫ້ເປັນເອກະພາບກັນ, ພັດທະນາລະບົບປະກັນໄພບຳນານທີ່ມີຫຼາຍລະດັບ ຫຼາຍເສົາຄ້ຳໃຫ້ສົມບູນ. ປະຕິບັດການແກ່ຍາວເກນອາຍຸຮັບບຳນານຕາມກົດໝາຍແບບຄ່ອຍເປັນຄ່ອຍໄປ. ເປີດກວ້າງຂອບເຂດປົກຄຸມຂອງລະບົບປະກັນສັງຄົມ, ບູລະນະກົນໄກ

ການລະດົມທຶນປະກັນໄພບຳນານຂັ້ນພື້ນຖານແລະປະກັນສຸຂະພາບຂັ້ນພື້ນຖານ ກໍຄືການປັບປຸງສະຫວັດດີການໃຫ້ສົມບູນ, ຊຸກຍູ້ການປະສົມປະສານເປັນເອກະພາບກັນຂັ້ນແຂວງທາງດ້ານການປະກັນສຸຂະພາບຂັ້ນພື້ນຖານ, ປະກັນໄພວ່າງງານແລະປະກັນໄພເຈັບເປັນຍ້ອນການເຮັດວຽກ. ຊຸກຍູ້ການປະກັນສຸຂະພາບຫຼາຍລະດັບໃຫ້ເຊື່ອມຕໍ່ກັນຢ່າງເປັນລະບຽບ, ບູລະນະລະບຽບການປະກັນໄພການປິ່ນປົວພະຍາດຮ້າຍແຮງແລະຊ່ວຍເຫຼືອການປິ່ນປົວໃຫ້ສົມບູນ, ຈັດຕັ້ງປະຕິບັດການຊຳລະຄ່າປິ່ນປົວແບບຂ້າມທ້ອງຖິ່ນ, ສ້າງລະບຽບການປະກັນໄພບຳບັດຮັກສາສຸຂະພາບເປັນໄລຍະຍາວ, ຕັ້ງໜ້າພັດທະນາປະກັນໄພສຸຂະພາບທຸລະກິດ. ເລັ່ງປັບປຸງເວທີບໍລິການສາທາລະນະປະກັນສັງຄົມທີ່ເປັນເອກະພາບກັນໃນທົ່ວປະເທດໃຫ້ສົມບູນຂຶ້ນ. ບູລະນະລະບົບຮັກສາມູນຄ່າເດີມແລະມູນຄ່າເພີ່ມຂອງກອງທຶນປະກັນສັງຄົມ ແລະຕິດຕາມຄຸ້ມຄອງຄວາມປອດໄພ. ບູລະນະລະບົບຊ່ວຍເຫຼືອທາງສັງຄົມທີ່ມີການແບ່ງລະດັບແລະແບ່ງປະເພດໃຫ້ສົມບູນ. ຍຶດໝັ້ນໃນນະໂຍບາຍພື້ນຖານແຫ່ງຊາດຍິງຊາຍສະເໝີພາບກັນ, ປົກປ້ອງສິດຜົນປະໂຫຍດທີ່ຊອບດ້ວຍກົດໝາຍຂອງແມ່ຍິງແລະເດັກນ້ອຍ. ບູລະນະລະບຽບການປະກັນສັງຄົມແລະລະບົບບໍລິການຄົນພິການໃຫ້ສົມບູນຂຶ້ນ, ຊຸກຍູ້ວຽກງານຄົນພິການພັດທະນາຢ່າງຮອບດ້ານ. ຍຶດໝັ້ນໃນທິດທາງ "ເອົາເຮືອນເປັນທີ່ຢູ່ອາໃສ, ແຕ່ບໍ່ແມ່ນສິນຄ້າເພື່ອສະແຫວງຫາຜົນກຳໄລ", ເລັ່ງສ້າງລະບຽບການເຮືອນຢູ່ທີ່ມີຜູ້ສະໜອງຫຼາຍຝ່າຍ, ມີການຮັບປະກັນຈາກຫຼາຍຊ່ອງທາງ, ມີການໃຫ້ເຊົ່າແລະການໃຫ້ຊື້ໄປຄຽງຄູ່ກັນ.

**(ສີ່) ຊຸກຍູ້ການສ້າງສາປະເທດຈີນທີ່ມີສຸຂະພາບ.** ປະຊາຊົນມີສຸຂະພາບແຂງແຮງເປັນສັນຍາລັກສຳຄັນທີ່ສະແດງໃຫ້ເຫັນຄວາມຈະເລີນຮຸ່ງເຮືອງຂອງປະຊາຊາດແລະຄວາມມັ່ງຄັ່ງເຂັ້ມແຂງຂອງປະເທດຊາດ. ສະນັ້ນ ຕ້ອງຖືເອົາການປົກປ້ອງສຸຂະພາບຂອງປະຊາຊົນໄວ້ຢູ່ໃນຖານະຍຸດທະສາດທີ່ໃຫ້ບຸລິມະສິດໃນການພັດທະນາ, ປັບປຸງນະໂຍບາຍສົ່ງເສີມສຸຂະພາບຂອງປະຊາຊົນໃຫ້ສົມບູນຂຶ້ນ. ປັບປຸງຍຸດທະສາດການພັດທະນາປະຊາກອນໃຫ້ດີຂຶ້ນ, ສ້າງລະບົບນະໂຍບາຍເພື່ອສະໜັບສະໜູນ

ການເກີດລູກ, ຫຼຸດຕົ້ນທຶນໃນການເກີດລູກ, ລ້ຽງລູກແລະການສຶກສາໃຫ້ຕ່ຳລົງ. ຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດເພື່ອຕັ້ງໜ້າຮັບມືກັບບັນຫາທີ່ມີປະຊາກອນຜູ້ອາຍຸສູງເພີ່ມຂຶ້ນ, ພັດທະນາວຽກງານລ້ຽງດູຜູ້ເຖົ້າ ແລະອຸດສາຫະກຳລ້ຽງດູຜູ້ເຖົ້າ, ປັບປຸງວຽກງານບໍລິການຜູ້ເຖົ້າປ່ຽວພອຍເປັນໜ້າຍໃຫ້ດີ, ຊຸກຍູ້ໃຫ້ບັນລຸເປົ້າໝາຍທີ່ຜູ້ເຖົ້າທຸກຄົນໄດ້ຮັບການບໍລິການລ້ຽງດູຂັ້ນພື້ນຖານ. ລົງເລິກການປະຕິຮູບໂຄງປະກອບດ້ານການຢາ ແລະສາທາລະນະສຸກ, ຊຸກຍູ້ການພັດທະນາແລະການຄຸ້ມຄອງບໍລິຫານຢ່າງກົມກຽວລະຫວ່າງການປະກັນສຸຂະພາບ, ການປິ່ນປົວພະຍາດ ແລະການຢາ. ຊຸກຍູ້ການເສີມຂະຫຍາຍຊັບພະຍາກອນການແພດທີ່ມີຄຸນນະພາບດີ ແລະການຈັດສັນໃນແຕ່ລະເຂດແຄວ້ນໃຫ້ສະໝ່ຳສະເໝີ, ຍຶດໝັ້ນຖືເອົາການປ້ອງກັນເປັນຫຼັກ, ເພີ່ມທະວີການຄຸ້ມຄອງສຸຂະພາບຕໍ່ຜູ້ເປັນພະຍາດຊຳເຮື້ອປະເພດຮ້າຍແຮງ, ຍົກສູງຄວາມສາມາດຂອງຮາກຖານໃນການປ້ອງກັນ, ປິ່ນປົວພະຍາດ ແລະການຄຸ້ມຄອງສຸຂະພາບ. ລົງເລິກການປະຕິຮູບໂຮງໝໍແຫ່ງລັດຕາມທິດສາທາລະນະປະໂຫຍດ, ປັບປຸງການພັດທະນາໂຮງໝໍເອກະຊົນໃຫ້ເປັນລະບຽບແບບແຜນ. ພັດທະນາຖັນແຖວພະນັກງານການແພດໃຫ້ເຕີບໃຫຍ່ຂະຫຍາຍຕົວ, ຖືເອົາວຽກງານຈຸດສຸມໄວ້ຢູ່ຊົນນະບົດແລະເຂດຊຸມຊົນ. ໃຫ້ຄວາມສຳຄັນຕໍ່ສຸຂະພາບຈິດຕະສາດແລະສຸຂະພາບຈິດ. ສົ່ງເສີມການສືບທອດ ແລະການພັດທະນາຢ່າງມີການປະດິດສ້າງຂອງການແພດພື້ນເມືອງຈີນ. ປະດິດສ້າງກົນໄກການປະສານສົມທົບ ແລະການເຊື່ອມໂຍງເຂົ້າກັນລະຫວ່າງການປິ່ນປົວກັບການປ້ອງກັນພະຍາດ, ບູລະນະລະບົບສາທາລະນະສຸກໃຫ້ສົມບູນ, ຍົກສູງຄວາມສາມາດໃນການພົບເຫັນສະພາບການລະບາດຂອງພະຍາດໂດຍໄວ, ເພີ່ມທະວີການສ້າງລະບົບປ້ອງກັນ, ຄວບຄຸມແລະປິ່ນປົວພະຍາດລະບາດຮ້າຍແຮງ ແລະການສ້າງຄວາມສາມາດຮັບມືສຸກເສີນ, ເພື່ອສະກັດກັ້ນການແຜ່ລະບາດຂອງພະຍາດຕິດແປດປະເພດຮ້າຍແຮງຢ່າງມີປະສິດທິຜົນ. ລົງເລິກດຳເນີນຂະບວນການປະເທດຈີນທີ່ມີສຸຂະພາບແຂງແຮງແລະຂະບວນການອະນາໄມຮັກຊາດ, ສົ່ງເສີມວິຖີຊີວິດສຸຂະພາບດີແລະຖືກຕ້ອງຕາມຫຼັກວິທະຍາສາດ.

## ສິບ: ຊຸກຍູ້ການພັດທະນາແບບສີຂຽວ ສົ່ງເສີມໃຫ້ຄົນກັບທຳມະຊາດຢູ່ຮ່ວມກັນຢ່າງກົມກຽວກັນ

ທຳມະຊາດເປັນເງື່ອນໄຂພື້ນຖານແຫ່ງການດຳລົງຄົງຕົວແລະການພັດທະນາຂອງມວນມະນຸດ. ການເຄົາລົບທຳມະຊາດ, ໄປຕາມກົດເກນທຳມະຊາດແລະປົກປັກຮັກສາທຳມະຊາດ ເປັນຄວາມຮຽກຮ້ອງປະຈຳຕົວແຫ່ງການສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານ. ຕ້ອງປູກຈິດສຳນຶກອັນໜັກແໜ້ນແລະປະຕິບັດຕົວຈິງຕາມແນວຄວາມຄິດ "ພູຂຽວນ້ຳໃສກໍແມ່ນພູເງິນພູຄຳ", ວາງແຜນພັດທະນາຈາກລະດັບສູງຕາມທິດ "ຄົນກັບທຳມະຊາດຢູ່ຮ່ວມກັນຢ່າງກົມກຽວກັນ".

ພວກເຮົາຕ້ອງຊຸກຍູ້ການສ້າງສາປະເທດຈີນທີ່ສວຍງາມ, ຍຶດໝັ້ນໃນການອະນຸລັກພູຜາແມ່ນ້ຳ, ປ່າໄມ້, ໜອງບຶງ, ທົ່ງນາ, ທົ່ງຫຍ້າ ແລະ ທະເລຊາຍໃຫ້ເປັນອັນໜຶ່ງອັນດຽວກັນ ແລະຄຸ້ມຄອງຢ່າງເປັນລະບົບ, ປະສົມປະສານການປັບປຸງໂຄງປະກອບດ້ານອຸດສາຫະກຳ, ການປົວແປງມົນລະພິດ, ການອະນຸລັກສິ່ງແວດລ້ອມນິເວດ ແລະການຮັບມືກັບການປ່ຽນແປງຂອງດິນຟ້າອາກາດໃຫ້ເປັນເອກະພາບກັນ, ປະສົມປະສານກັນຊຸກຍູ້ວຽກງານການຫຼຸດການລະບາຍກາກບອນ, ຫຼຸດການລະບາຍມົນລະພິດ, ເປີດກວ້າງພື້ນທີ່ສີຂຽວ ແລະການເຕີບໂຕໄປພ້ອມກັນ, ຊຸກຍູ້ການພັດທະນາແບບຖືສິ່ງແວດລ້ອມນິເວດເປັນບຸລິມະສິດ, ປະຢັດມັດທະຍັດແລະມີປະສິດທິພາບສູງ, ແບບສີຂຽວແລະກາກບອນຕ່ຳ.

**(ໜຶ່ງ) ເລັ່ງຫັນປ່ຽນຮູບການພັດທະນາໄປສູ່ແບບສີຂຽວ.** ການຊຸກຍູ້ການພັດທະນາເສດຖະກິດສັງຄົມແບບສີຂຽວ ແລະກາກບອນຕ່ຳເປັນຂອດສຳຄັນໃນການບັນລຸການພັດທະນາດ້ວຍຄຸນນະພາບສູງ. ສະນັ້ນ ຕ້ອງເລັ່ງຊຸກຍູ້ການປັບປຸງແລະຍົກລະດັບອົງປະກອບອຸດສາຫະກຳ, ອົງປະກອບພະລັງງານ, ອົງປະກອບຄົມມະນາຄົມຂົນສົ່ງແລະອື່ນໆ. ປະຕິບັດຍຸດທະສາດການປະຢັດຢ່າງຮອບດ້ານ, ຊຸກຍູ້ການປະຢັດແລະນຳໃຊ້ຊັບພະຍາກອນປະເພດຕ່າງໆຢ່າງມີປະສິດທິພາບສູງ, ເລັ່ງສ້າງລະບົບນຳໃຊ້

ສິ່ງເສດເຫຼືອແບບໝູນວຽນ. ບູລະນະນະໂຍບາຍການເງິນ-ສ່ວຍສາອາກອນ, ການເງິນ, ການລົງທຶນ, ລາຄາສິນຄ້າແລະລະບົບມາດຕະຖານທີ່ສະໜັບສະໜູນການພັດທະນາແບບສີຂຽວ, ພັດທະນາອຸດສາຫະກຳສີຂຽວແລະກາກບອນຕ່ຳ, ບູລະນະລະບົບຈັດສັນປັດໄຈສະພາບແວດລ້ອມຊັບພະຍາກອນຕາມຫຼັກການຕະຫຼາດໃຫ້ສົມບູນ, ເລັ່ງຄົ້ນຄວ້າພັດທະນາແລະເຜີຍແຜ່ການນຳໃຊ້ເຕັກນິກກ້າວໜ້າທັນສະໄໝໃນດ້ານຫຼຸດການລະບາຍກາກບອນ, ສົ່ງເສີມການບໍລິໂພກແບບສີຂຽວ, ຊຸກຍູ້ການສ້າງໃຫ້ມີຮູບການຜະລິດແລະຮູບການດຳລົງຊີວິດແບບສີຂຽວແລະກາກບອນຕ່ຳ.

**(ສອງ) ລົງເລິກຊຸກຍູ້ການປ້ອງກັນແລະປົວແປງມົນລະພິດຂອງສິ່ງແວດລ້ອມ.** ຕ້ອງຍຶດໝັ້ນໃນການປົວແປງມົນລະພິດຢ່າງຖືກເປົ້າໝາຍ, ຕາມຫຼັກວິທະຍາສາດ ແລະຕາມກົດໝາຍ, ລົງເລິກປະຕິບັດບັ້ນປົກປ້ອງທ້ອງຟ້າສີຄາມ, ນ້ຳໃສ ແລະ ດິນສະອາດຢ່າງຕໍ່ເນື່ອງ. ເພີ່ມທະວີການຄວບຄຸມມົນລະພິດແບບປະສານສົມທົບ, ລຶບລ້າງອາກາດທີ່ເກີດມົນລະພິດຢ່າງໜັກໜ່ວງໂດຍພື້ນຖານ. ປະສານສົມທົບການຄຸ້ມຄອງຊັບພະຍາກອນນ້ຳ, ສິ່ງແວດລ້ອມທາງນ້ຳ, ນິເວດທາງນ້ຳ ໃຫ້ເປັນເອກະພາບກັນ, ຊຸກຍູ້ການປົກປັກຮັກສາແລະຄຸ້ມຄອງສິ່ງແວດລ້ອມນິເວດຂອງແມ່ນ້ຳ, ໜອງບຶງ ແລະອ່າງເກັບນ້ຳທີ່ສຳຄັນ. ກຳຈັດນ້ຳເປິເປື້ອນເນົ່າເໝັນໃນຕົວເມືອງໂດຍພື້ນຖານ. ເພີ່ມທະວີການປ້ອງກັນແລະຄວບຄຸມແຫຼ່ງກຳເນີດມົນລະພິດຕໍ່ດິນ, ດຳເນີນການຄຸ້ມຄອງສິ່ງມົນລະພິດຊະນິດໃໝ່. ຍົກສູງລະດັບກໍ່ສ້າງພື້ນຖານໂຄງລ່າງເພື່ອອະນຸລັກສິ່ງແວດລ້ອມ, ຊຸກຍູ້ການປົວແປງສິ່ງແວດລ້ອມທີ່ຢູ່ອາໄສຂອງຕົວເມືອງແລະຊົນນະບົດ. ຕ້ອງປະຕິບັດລະບຽບການວ່າດ້ວຍການອະນຸມັດລະບາຍມົນລະພິດຢ່າງຮອບດ້ານ, ບູລະນະລະບົບຄຸ້ມຄອງສິ່ງແວດລ້ອມຍຸກປັດຈຸບັນໃຫ້ສົມບູນ. ປ້ອງກັນ ແລະຄວບຄຸມຄວາມສ່ຽງດ້ານສິ່ງແວດລ້ອມຢ່າງຮັດກຸມ. ລົງເລິກຊຸກຍູ້ການປະຕິບັດການຕິດຕາມກວດກາວຽກງານອະນຸລັກສິ່ງແວດລ້ອມນິເວດຂັ້ນສູນກາງ.

**(ສາມ) ຍົກສູງຄວາມຫຼາກຫຼາຍ, ຄວາມໝັ້ນທ່ຽງ ແລະຄວາມຍືນຍົງຂອງລະບົບນິເວດ.** ຕ້ອງຖື

ເອົາເຂດນິເວດແຫ່ງຊາດທີ່ສຳຄັນ, ເສັ້ນແດງອະນຸລັກສິ່ງແວດລ້ອມນິເວດ, ເຂດສະຫງວນທຳມະຊາດ ແລະອື່ນໆເປັນຈຸດສຸມ ເພື່ອເລັ່ງປະຕິບັດໂຄງການສຳຄັນແຫ່ງການປົກປັກຮັກສາແລະຟື້ນຟູລະບົບນິເວດທີ່ສຳຄັນ. ຊຸກຍູ້ການສ້າງລະບົບເຂດສະຫງວນທຳມະຊາດທີ່ຖືສວນສາທາລະນະແຫ່ງຊາດເປັນຫຼັກ. ປະຕິບັດໂຄງການສຳຄັນແຫ່ງການອະນຸລັກຊີວະນາໆພັນ. ດຳເນີນຂະບວນການປູກຕົ້ນໄມ້ໃບຫຍ້າສ້າງພື້ນທີ່ສີຂຽວໃນທົ່ວປະເທດຢ່າງຂະໜາດໃຫຍ່ຕາມຫຼັກວິທະຍາສາດ. ລົງເລິກການປະຕິຮູບລະບຽບການກຳມະສິດປ່າໄມ້ລວມໝູ່. ຊຸກຍູ້ການປະຕິບັດການພັກຟື້ນຂອງທົ່ງຫຍ້າ, ປ່າໄມ້, ແມ່ນ້ຳລຳເຊ, ໜອງບຶງ, ດິນທາມ, ປະຕິບັດມາດຕະການຫ້າມຫາປາເປັນເວລາ10 ປີຕາມແມ່ນ້ຳຢາງຊີກຽງໃຫ້ມີປະສິດທິຜົນທີ່ດີ, ບູລະນະລະບຽບການເຊົາປູກຝັງແລະສັບປ່ຽນປູກຝັງຂອງດິນປູກຝັງໃຫ້ສົມບູນ. ສ້າງກົນໄກບັນລຸມູນຄ່າຜະລິດຕະພັນຊີວະພາບ, ບູລະນະລະບຽບການວ່າດ້ວຍການຊົດເຊີຍເພື່ອອະນຸລັກສິ່ງແວດລ້ອມນິເວດໃຫ້ສົມບູນ. ເພີ່ມທະວີການຄຸ້ມຄອງຄວາມປອດໄພທາງຊີວະພາບ, ປ້ອງກັນ ແລະແກ້ໄຂໄພພິບັດຈາກສັດແລະພືດທີ່ມາຈາກພາຍນອກ.

**(ສີ່) ຕັ້ງໜ້າຊຸກຍູ້ການບັນລຸເປົ້າໝາຍການລະບາຍກາກບອນເຖິງຈຸດສູງສຸດ ແລະ ການປອດການລະບາຍກາກບອນຢ່າງຮອບຄອບແລະໜັກແໜ້ນ.** ການບັນລຸເປົ້າໝາຍການລະບາຍກາກບອນເຖິງຈຸດສູງສຸດ ແລະການປອດການປ່ອຍກາກບອນ ເປັນການປ່ຽນແປງໃນລັກນະສະລະບົບຢ່າງກວ້າງຂວາງ ແລະເລິກເຊິ່ງຂອງເສດຖະກິດສັງຄົມ. ໂດຍອີງໃສ່ທ່າແຮງດ້ານຊັບພະຍາກອນພະລັງງານຂອງປະເທດເຮົາ, ຕ້ອງຍຶດໝັ້ນໃນການສ້າງລະບຽບການອັນໃໝ່ກ່ອນ ແລ້ວຈິ່ງຍົກເລີກລະບຽບການອັນເກົ່າ, ປະຕິບັດການເຄື່ອນໄຫວການລະບາຍກາກບອນເຖິງຈຸດສູງສຸດຢ່າງມີແຜນການແລະແບ່ງເປັນຫຼາຍບາດກ້າວ. ຕ້ອງບູລະນະການດັດສົມຄວບຄຸມຍອດປະລິມານ ແລະລະດັບຄວາມແຮງຂອງການສິ້ນເປືອງພະລັງງານ, ສຸມໃສ່ຄວບຄຸມການບໍລິໂພກພະລັງງານຟໍສຊິລ, ຫັນໄປສູ່ການປະຕິບັດລະບຽບການຄວບຄຸມການລະບາຍກາກບອນທັງໃນດ້ານຍອດປະລິມານ ແລະລະດັບຄວາມແຮງ

ເທື່ອລະກ້າວ. ຊຸກຍູ້ການນຳໃຊ້ພະລັງງານຕາມທິດສະອາດ, ກາກບອນຕ່ຳແລະມີປະສິດທິພາບສູງ, ຊຸກຍູ້ການຫັນມານຳໃຊ້ພະລັງງານທີ່ສະອາດແລະກາກບອນຕ່ຳໃນຂົງເຂດອຸດສາຫະກຳ, ການກໍ່ສ້າງ, ຄົມມະນາຄົມແລະອື່ນໆ. ລົງເລິກຊຸກຍູ້ການປະຕິວັດພະລັງງານ, ເພີ່ມທະວີການນຳໃຊ້ຖ່ານຫີນແບບບໍ່ເປັນພິດຕໍ່ສິ່ງແວດລ້ອມແລະມີປະສິດທິພາບສູງ, ເພີ່ມຄວາມແຮງໃນການສຳຫຼວດພັດທະນາຊັບພະຍາກອນນ້ຳມັນເຊື້ອໄຟ ແລະອາຍແກັສທຳມະຊາດ, ເພີ່ມປະລິມານສະສົມ ແລະການຜະລິດ, ເລັ່ງວາງແຜນ ແລະສ້າງລະບົບພະລັງງານແບບໃໝ່, ປະສານສົມທົບການພັດທະນາໄຟຟ້ານ້ຳຕົກໄປຄຽງຄູ່ກັບການອະນຸລັກສິ່ງແວດລ້ອມນິເວດ, ຕັ້ງໜ້າພັດທະນາພະລັງງານໄຟຟ້ານິວເຄລຍຢ່າງປອດໄພແລະເປັນລະບຽບ, ເພີ່ມທະວີການສ້າງລະບົບການຜະລິດ ການສະໜອງ, ການສະສົມແລະການຈຳໜ່າຍພະລັງງານ, ຮັບປະກັນຄວາມໝັ້ນຄົງດ້ານພະລັງງານ. ບູລະນະລະບຽບການສະຖິຕິ ແລະໄລ່ລຽງການລະບາຍກາກບອນ, ບູລະນະລະບຽບການວ່າດ້ວຍການຊື້ຂາຍສິດລະບາຍກາກບອນໃນຕະຫຼາດໃຫ້ສົມບູນ. ຍົກສູງຄວາມສາມາດເກັບຮັກສາກາກບອນຜ່ານລະບົບນິເວດ. ຕັ້ງໜ້າເຂົ້າຮ່ວມການບໍລິຫານໂລກເພື່ອຮັບມືກັບການປ່ຽນແປງຂອງດິນຟ້າອາກາດ.

**ສິບເອັດ: ຊຸກຍູ້ຄວາມທັນສະໄໝດ້ານລະບົບແລະຄວາມສາມາດຮັກສາຄວາມໝັ້ນຄົງແຫ່ງຊາດ ເດັດດ່ຽວປົກປັກຮັກສາຄວາມໝັ້ນຄົງແຫ່ງຊາດແລະສະຖຽນລະພາບທາງສັງຄົມ**

ຄວາມໝັ້ນຄົງແຫ່ງຊາດເປັນຮາກຖານຂອງການຟື້ນຟູຄວາມຈະເລີນຮຸ່ງເຮືອງຂອງປະຊາຊາດ, ສະຖຽນລະພາບທາງສັງຄົມເປັນເງື່ອນໄຂເບື້ອງຕົ້ນທີ່ໃຫ້ປະເທດຊາດມີຄວາມມັ່ງຄັ່ງເຂັ້ມແຂງ. ຕ້ອງຈັດຕັ້ງປະຕິບັດທັດສະນະຄວາມໝັ້ນຄົງແຫ່ງຊາດໂດຍລວມຢ່າງເດັດດ່ຽວໜຽວແໜ້ນ, ຖືເອົາການປົກປັກຮັກສາຄວາມໝັ້ນຄົງແຫ່ງຊາດເຊື່ອມສານເຂົ້າໃນທົ່ວຂະບວນການແລະວຽກງານທຸກດ້ານຂອງພັກ

ແລະປະເທດຊາດ, ຮັບປະກັນຄວາມໝັ້ນຄົງແຫ່ງຊາດແລະສະຖຽນລະພາບທາງສັງຄົມ.

ພວກເຮົາຕ້ອງຍຶດໝັ້ນຖືເອົາຄວາມປອດໄພຂອງປະຊາຊົນເປັນຈຸດປະສົງ, ຖືຄວາມໝັ້ນຄົງດ້ານການເມືອງເປັນຮາກຖານ, ຖືຄວາມໝັ້ນຄົງດ້ານເສດຖະກິດເປັນພື້ນຖານ, ຖືຄວາມໝັ້ນຄົງດ້ານການທະຫານ, ວິທະຍາສາດເຕັກນິກ, ວັດທະນະທຳແລະສັງຄົມເປັນສິ່ງຄ້ຳປະກັນ, ຖືຄວາມໝັ້ນຄົງສາກົນເປັນບ່ອນອີງ, ປະສົມປະສານໃຫ້ເປັນເອກະພາບກັນລະຫວ່າງຄວາມໝັ້ນຄົງພາຍນອກກັບຄວາມໝັ້ນຄົງພາຍໃນ, ຄວາມໝັ້ນຄົງດ້ານດິນແດນແຫ່ງຊາດກັບຄວາມປອດໄພຂອງປະຊາຊົນ, ຄວາມໝັ້ນຄົງແບບເກົ່າກັບຄວາມໝັ້ນຄົງແບບໃໝ່, ຄວາມໝັ້ນຄົງຂອງຕົນເອງກັບຄວາມໝັ້ນຄົງຮ່ວມກັນ, ປະສົມປະສານການປົກປັກຮັກສາແລະການສ້າງຄວາມໝັ້ນຄົງແຫ່ງຊາດໃຫ້ເປັນເອກະພາບກັນ, ຮັດແໜ້ນພື້ນຖານຂັ້ນຮາກຖານເພື່ອຄວາມໝັ້ນຄົງແຫ່ງຊາດ ແລະສະຖຽນລະພາບທາງສັງຄົມ, ບູລະນະກົນໄກການມີສ່ວນຮ່ວມໃນການບໍລິຫານຄວາມໝັ້ນຄົງຂອງໂລກໃຫ້ສົມບູນ, ສ້າງສາປະເທດຈີນທີ່ສະຫງົບປອດໄພທີ່ມີລະດັບສູງກວ່າເກົ່າ, ສ້າງສະພາບການຄວາມໝັ້ນຄົງແບບໃໝ່ເພື່ອຮັບປະກັນສະພາບການພັດທະນາແບບໃໝ່.

**(ໜຶ່ງ) ບູລະນະລະບົບຄວາມໝັ້ນຄົງແຫ່ງຊາດໃຫ້ສົມບູນ.** ຕ້ອງຍຶດໝັ້ນໃນການນຳພາລວມສູນເປັນເອກະພາບຂອງສູນກາງພັກ ທີ່ມີຕໍ່ວຽກງານຄວາມໝັ້ນຄົງແຫ່ງຊາດ, ບູລະນະໂຄງປະກອບການນຳພາດ້ານຄວາມໝັ້ນຄົງແຫ່ງຊາດ ທີ່ມີປະສິດທິພາບສູງແລະມີຄວາມສັກສິດ. ເສີມສ້າງກົນໄກປະສານງານຄວາມໝັ້ນຄົງແຫ່ງຊາດໃຫ້ເຂັ້ມແຂງ, ບູລະນະລະບົບກົດໝາຍ,ລະບົບຍຸດທະສາດ, ລະບົບນະໂຍບາຍ, ລະບົບຕິດຕາມຄວາມສ່ຽງແລະເຕືອນໄພລ່ວງໜ້າ ແລະລະບົບຄຸ້ມຄອງການຮັບມືສຸກເສີນກ່ຽວກັບຄວາມໝັ້ນຄົງແຫ່ງຊາດ, ບູລະນະລະບົບຮັບປະກັນຄວາມໝັ້ນຄົງໃນຂົງເຂດຈຸດສຸມແລະລະບົບປະສານງານແລະບັນຊາການສະເພາະກິດທີ່ສຳຄັນ, ສ້າງຄວາມເຂັ້ມແຂງໃນການສ້າງລະບົບຮັບປະກັນຄວາມໝັ້ນຄົງດ້ານເສດຖະກິດ, ພື້ນຖານໂຄງລ່າງສຳຄັນ, ການເງິນ, ເຄືອຂ່າຍອິນເຕີ

ເນັດ, ຂໍ້ມູນ, ຊີວະພາບ, ຊັບພະຍາກອນ, ນິວເຄລຍ, ອະວະກາດ, ທະເລ ແລະອື່ນໆ. ບູລະນະກົນໄກຕ້ານການລົງໂທດ, ຕ້ານການແຊກແຊງ, ຕ້ານການຂະຫຍາຍຂອບເຂດອຳນາດສານ. ບູລະນະການຈັດສັນກຳລັງຮັກສາຄວາມໝັ້ນຄົງແຫ່ງຊາດ, ສ້າງລະບົບປ້ອງກັນຄວາມໝັ້ນຄົງແຫ່ງຊາດທີ່ປະສານສົມທົບແບບຄົບວົງຈອນ, ຮອບດ້ານທີ່ມີປະສິດທິພາບສູງ.

**(ສອງ) ເພີ່ມທະວີຄວາມສາມາດຮັກສາຄວາມໝັ້ນຄົງແຫ່ງຊາດ.** ຕ້ອງເດັດດ່ຽວປົກປັກຮັກສາຄວາມໝັ້ນຄົງດ້ານອຳນາດແຫ່ງລັດ, ຄວາມໝັ້ນຄົງດ້ານລະບອບ, ຄວາມໝັ້ນຄົງດ້ານຮູບຖານຈິດສຳນຶກ, ເພີ່ມທະວີການສ້າງຄວາມສາມາດຮັກສາຄວາມໝັ້ນຄົງໃນຂົງເຂດຈຸດສຸມ, ຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ, ຊັບພະຍາກອນພະລັງງານ, ຕ່ອງໂສ້ອຸດສາຫະກຳແລະຕ່ອງໂສ້ການສະໜອງທີ່ສຳຄັນ, ເພີ່ມທະວີການສ້າງຄວາມສາມາດໃນການຮັບປະກັນຄວາມໝັ້ນຄົງຢູ່ຕ່າງປະເທດ, ປົກປັກຮັກສາສິດຜົນປະໂຫຍດອັນຊອບດ້ວຍກົດໝາຍຂອງພົນລະເມືອງ ແລະນິຕິບຸກຄົນຂອງປະເທດພວກເຮົາທີ່ຢູ່ຕ່າງປະເທດ, ປົກປັກຮັກສາສິດຜົນປະໂຫຍດທາງທະເລ, ເດັດດ່ຽວປົກປ້ອງອະທິປະໄຕ, ຄວາມໝັ້ນຄົງ ແລະຜົນປະໂຫຍດດ້ານການພັດທະນາຂອງປະເທດຊາດ. ຍົກສູງຄວາມສາມາດໃນການປ້ອງກັນ ແລະແກ້ໄຂຄວາມສ່ຽງສຳຄັນ, ປ້ອງກັນບໍ່ໃຫ້ເກີດຄວາມສ່ຽງດ້ານຄວາມໝັ້ນຄົງທີ່ເປັນລະບົບຢ່າງຮັດກຸມ, ຕໍ່ຕ້ານການເຄື່ອນໄຫວຂອງອິດທິກຳລັງປໍລະປັກໃນການແຊກຊຶມ, ທຳລາຍ, ໂຄ່ນລົ້ມ ແລະ ແບ່ງແຍກຢ່າງເຂັ້ມງວດ. ເພີ່ມທະວີການສຶກສາອົບຮົມດ້ານຄວາມໝັ້ນຄົງແຫ່ງຊາດຢ່າງຮອບດ້ານ, ຍົກສູງຄວາມສາມາດຂອງພະນັກງານການນຳທຸກຂັ້ນໃນການວາງແຜນເປັນເອກະພາບກັນກ່ຽວກັບການພັດທະນາ ແລະຄວາມໝັ້ນຄົງ, ເພີ່ມທະວີສະຕິ ແລະຍົກລະດັບຄວາມຮູ້ດ້ານຄວາມໝັ້ນຄົງແຫ່ງຊາດຂອງທົ່ວປວງຊົນໃຫ້ສູງຂຶ້ນ, ສ້າງແນວປ້ອງກັນຄວາມໝັ້ນຄົງແຫ່ງຊາດຂອງປະຊາຊົນໃຫ້ໝັ້ນແກ່ນ.

**(ສາມ) ຍົກສູງລະດັບຄຸ້ມຄອງຄວາມໝັ້ນຄົງສາທາລະນະ.** ຕ້ອງຍຶດໝັ້ນຄວາມໝັ້ນຄົງມາກ່ອນ,

ຖືການປ້ອງກັນເປັນຫຼັກ, ສ້າງຂອບກ່ຽວກັບຄວາມໝັ້ນຄົງໂດຍລວມ ແລະຂອບຮັບມືສຸກເສີນໂດຍລວມ, ບູລະນະລະບົບຄວາມໝັ້ນຄົງສາທາລະນະໃຫ້ສົມບູນ, ຊຸກຍູ້ໃຫ້ຮູບແບບຄຸ້ມຄອງຄວາມໝັ້ນຄົງສາທາລະນະ ຫັນໄປສູ່ການປ້ອງກັນກ່ອນເກີດເຫດ. ຊຸກຍູ້ໂຄງການສະເພາະກິດໃນການແກ້ໄຂຄວາມສ່ຽງຂອງການຜະລິດຢ່າງປອດໄພ, ເພີ່ມທະວີການຕິດຕາມແລະຄວບຄຸມດ້ານຄວາມປອດໄພຂອງຂະແໜງການຈຸດສຸມ ແລະຂົງເຂດຈຸດສຸມ. ຍົກສູງຄວາມສາມາດໃນການປ້ອງກັນໄພພິບັດ, ຫຼຸດຜ່ອນໄພພິບັດ ແລະກູ້ໄພ ກໍຄືຄວາມສາມາດແກ້ໄຂ ແລະຄ້ຳປະກັນເຫດການສາທາລະນະສຸກເສີນທີ່ຮ້າຍແຮງ, ເພີ່ມທະວີການສ້າງສາກຳລັງຮັບມືກັບເຫດການສຸກເສີນລະດັບເຂດແຄວ້ນຂອງປະເທດ. ຕ້ອງເພີ່ມທະວີການຕິດຕາມຄຸ້ມຄອງຄວາມປອດໄພທາງອາຫານແລະການຢາ, ບູລະນະລະບົບຕິດຕາມຄຸ້ມຄອງ ເຕືອນໄພແລະປ້ອງກັນຄວາມປອດໄພທາງຊີວະພາບໃຫ້ສົມບູນ. ຕ້ອງເພີ່ມທະວີການປົກປ້ອງຂໍ້ມູນຕ່າງໆຂອງສ່ວນບຸກຄົນ.

**(ສີ່) ບູລະນະລະບົບຄຸ້ມຄອງສັງຄົມໃຫ້ສົມບູນ.** ຕ້ອງບູລະນະລະບຽບການຄຸ້ມຄອງສັງຄົມຕາມຫຼັກການ “ສ້າງສາຮ່ວມກັນ, ຄຸ້ມຄອງຮ່ວມກັນ ແລະຊົມໃຊ້ຮ່ວມກັນ”, ຍົກສູງປະສິດທິພາບແລະປະສິດທິຜົນໃນການຄຸ້ມຄອງສັງຄົມ. ຍຶດໝັ້ນແລະເສີມຂະຫຍາຍ “ບົດຮຽນເຟິງສຽວ” ໃນຍຸກໃໝ່ຢູ່ສັງຄົມຮາກຖານ, ບູລະນະກົນໄກແກ້ໄຂຂໍ້ຂັດແຍ້ງພາຍໃນປະຊາຊົນພາຍໃຕ້ສະພາບການໃໝ່ຢ່າງຖືກຕ້ອງ, ເພີ່ມທະວີແລະປັບປຸງວຽກງານການຮ້ອງທຸກຂອງປະຊາຊົນ, ສ້າງຊ່ອງທາງທີ່ມີຄວາມສະດວກແລະເປັນລະບຽບແບບແຜນໃຫ້ກັບປະຊາຊົນໃນການສະເໜີຄວາມຮຽກຮ້ອງຕ້ອງການ, ການປະສານຜົນປະໂຫຍດ, ການປົກປ້ອງສິດຜົນປະໂຫຍດ, ບູລະນະເວທີຄຸ້ມຄອງຮາກຖານທີ່ມີການຄຸ້ມຄອງແບບຕາໜ່າງທີ່ຮອບດ້ານ, ມີການບໍລິການຢ່າງລະອຽດ ແລະການຄ້ຳປະກັນດ້ວຍເຕັກໂນໂລຊີຂໍ້ມູນຂ່າວສານ, ບູລະນະລະບົບຄຸ້ມຄອງເຂດຊຸມຊົນໃນຕົວເມືອງ ແລະຊົນນະບົດ, ແກ້ໄຂຂໍ້ຂັດແຍ້ງໃຫ້ໄດ້ຢູ່ຂັ້ນຮາກຖານ ແລະແກ້ໄຂໃຫ້ໄດ້ໃນສະພາບການທີ່ຍັງເປັນໜໍ່ແໜງຢ່າງທັນການ. ເລັ່ງຊຸກຍູ້ການຫັນ

ເປັນທັນສະໄໝໃນການຄຸ້ມຄອງສັງຄົມໃນຕົວເມືອງ, ຍົກສູງຄວາມສາມາດການຄຸ້ມຄອງສັງຄົມໃນຕົວເມືອງ. ເພີ່ມທະວີການປ້ອງກັນ ແລະຄວບຄຸມຄວາມສະຫງົບທາງສັງຄົມໂດຍລວມ, ຊຸກຍູ້ການປະຕິບັດວຽກງານປາບປາມກຸ່ມແກ໊ງອາຊະຍາກຳຢ່າງເປັນປົກກະຕິ, ລົງໂທດການກະທຳຜິດກົດໝາຍແລະອາຊະຍາກຳປະເພດຕ່າງໆທີ່ປະຊາຊົນມີທາງສຽງຮຸນແຮງນັ້ນຕາມກົດໝາຍຢ່າງເຂັ້ມງວດ. ພັດທະນາການປ້ອງກັນແລະຄຸ້ມຄອງຮ່ວມກັນດ້ວຍກຳລັງປະຊາຊົນໃຫ້ເຕີບໃຫຍ່ຂະຫຍາຍຕົວ, ສ້າງບັນຍາກາດສັງຄົມທີ່ສົ່ງເສີມຈິດໃຈກ້າເຮັດເພື່ອຄວາມເປັນທຳ, ສ້າງປະຊາຄົມຄຸ້ມຄອງສັງຄົມທີ່ທຸກຄົນມີຄວາມຮັບຜິດຊອບ, ທຸກຄົນປະຕິບັດຕາມຄວາມຮັບຜິດຊອບແລະທຸກຄົນຮ່ວມກັນຊົມໃຊ້.

**ສິບສອງ: ບັນລຸເປົ້າໝາຍສູ້ຊົນໃນການສ້າງຕັ້ງກອງທັບປົດປ່ອຍປະຊາຊົນຈີນຄົບຮອບ 100 ປີ ສ້າງສະພາບໃໝ່ແຫ່ງຄວາມທັນສະໄໝດ້ານການປ້ອງກັນປະເທດ ແລະກອງທັບ**

ການບັນລຸເປົ້າໝາຍສູ້ຊົນໃນໂອກາດກອງທັບປົດປ່ອຍປະຊາຊົນຈີນສ້າງຕັ້ງຂຶ້ນຄົບຮອບ 100 ປີຕາມກຳນົດເວລາ, ເລັ່ງສ້າງກອງທັບປະຊາຊົນໃຫ້ເປັນກອງທັບລະດັບແຖວໜ້າຂອງໂລກເປັນຄວາມຮຽກຮ້ອງຕາມຍຸດທະສາດແຫ່ງການສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານ. ຕ້ອງຈັດຕັ້ງປະຕິບັດແນວຄິດຂອງພັກໃນການສ້າງກອງທັບໃຫ້ເຂັ້ມແຂງໃນຍຸກໃໝ່, ຈັດຕັ້ງປະຕິບັດທິດທາງຍຸດທະສາດການທະຫານໃນຍຸກໃໝ່, ຍຶດໝັ້ນໃນການນຳພາແບບເດັດຖານຂອງພັກທີ່ມີຕໍ່ກອງທັບປະຊາຊົນ, ຍຶດໝັ້ນໃນການສ້າງກອງທັບດ້ວຍການເມືອງ, ສ້າງກອງທັບໃຫ້ເຂັ້ມແຂງດ້ວຍການປະຕິຮູບ, ສ້າງກອງທັບໃຫ້ເຂັ້ມແຂງດ້ວຍວິທະຍາສາດເຕັກນິກ, ສ້າງກອງທັບໃຫ້ເຂັ້ມແຂງດ້ວຍຜູ້ມີຄວາມຮູ້ຄວາມສາມາດ, ຄຸ້ມຄອງກອງທັບຕາມກົດໝາຍ, ຍຶດໝັ້ນໃນຫຼັກການທັງຕໍ່ສູ້, ທັງກຽມພ້ອມສູ້ຮົບ, ທັງກໍ່ສ້າງໄປພ້ອມ, ຍຶດໝັ້ນໃນການພັດທະນາແບບເຊື່ອມໂຍງການຫັນເປັນກົນຈັກ, ຫັນເປັນເຕັກໂນໂລຊີຂໍ້ມູນຂ່າວສານ ແລະຫັນເປັນແບບອັດສະລິຍະ, ເລັ່ງການຫັນເປັນທັນສະໄໝໃນ

ດ້ານທິດສະດີການທະຫານ, ດ້ານຮູບແບບການຈັດຕັ້ງຂອງກອງທັບ, ດ້ານພະນັກງານ-ນັກຮົບ ແລະ ດ້ານອາວຸດຍຸດໂທປະກອນ, ຍົກສູງຄວາມສາມາດທາງຍຸດທະສາດໃນການປົກປ້ອງອະທິປະໄຕ, ຄວາມໝັ້ນຄົງແລະຜົນປະໂຫຍດດ້ານການພັດທະນາຂອງປະເທດຊາດ, ປະຕິບັດພາລະໜ້າທີ່ຂອງກອງທັບປະຊາຊົນໃນຍຸກໃໝ່ຢ່າງມີປະສິດທິຜົນ.

ການເພີ່ມທະວີການກໍ່ສ້າງພັກຂອງກອງທັບປະຊາຊົນຢ່າງຮອບດ້ານ, ຕ້ອງຮັບປະກັນໃຫ້ກອງທັບປະຕິບັດຕາມການບັນຊາການຂອງພັກຕະຫຼອດໄປ. ບູລະນະ ແລະປະຕິບັດຕາມລະບຽບການແລະກົນໄກວ່າດ້ວຍຄວາມຮັບຜິດຊອບໂດຍປະທານຄະນະກຳມະການການທະຫານ. ລົງເລິກການຝຶກຝົນຫຼໍ່ຫຼອມດ້ວຍທິດສະດີປະດິດສ້າງຂອງພັກ, ດຳເນີນຂະບວນການສຶກສາອົບຮົມແລະປະຕິບັດຕົວຈິງໃນຫົວຂໍ້ "ຮຽນຮູ້ແນວຄິດການສ້າງກອງທັບໃຫ້ເຂັ້ມແຂງ, ສ້າງຄຸນງາມຄວາມດີໃນພາລະກິດສ້າງກອງທັບໃຫ້ເຂັ້ມແຂງ". ເພີ່ມທະວີການຮຽນຮູ້ ແລະສຶກສາອົບຮົມປະຫວັດສາດຂອງກອງທັບ, ພັດທະນາວັດທະນະທຳສ້າງກອງທັບເຂັ້ມແຂງໃຫ້ຈະເລີນກ້າວໜ້າ, ເພີ່ມທະວີການບຳລຸງສ້າງຈິດໃຈສູ້ຮົບ. ເສີມສ້າງລະບົບການຈັດຕັ້ງພັກຂອງກອງທັບປະຊາຊົນໃຫ້ເຂັ້ມແຂງ, ຊຸກຍູ້ການປັບປຸງສຶກສາອົບຮົມດ້ານການເມືອງຢ່າງເປັນປົກກະຕິ ແລະເປັນລະບຽບການ, ຍຶດໝັ້ນໃນການປັບປຸງແບບແຜນ, ເຂັ້ມງວດລະບຽບວິໄນແລະຕ້ານການສໍ້ລາດບັງຫຼວງຢ່າງບໍ່ລົດລະ.

ເພີ່ມທະວີການຫັດແອບການທະຫານເພື່ອກຽມພ້ອມສູ້ຮົບຢ່າງຮອບດ້ານ, ຍົກສູງຄວາມສາມາດໃນການຕໍ່ສູ້ເອົາຊະນະຂອງກອງທັບປະຊາຊົນ. ຄົ້ນຄວ້າ ແລະກຳແໜ້ນຈຸດພິເສດແລະກົດເກນຂອງສົງຄາມທີ່ຫັນເປັນເຕັກໂນໂລຊີຂໍ້ມູນຂ່າວສານແລະອັດສະລິຍະ, ປະດິດສ້າງການຊີ້ນຳຍຸດທະສາດການທະຫານ, ພັດທະນາຍຸດທະສາດ ແລະຍຸດທະວິທີສູ້ຮົບຂອງສົງຄາມປະຊາຊົນ. ສ້າງລະບົບກຳລັງເກງຂາມທາງຍຸດທະສາດທີ່ເຂັ້ມແຂງ, ເພີ່ມອັດຕາສ່ວນຂອງກຳລັງສູ້ຮົບໃນຂົງເຂດໃໝ່ ແລະແບບໃໝ່, ເລັ່ງພັດທະນາກຳລັງສູ້ຮົບແບບອັດຕະໂນມັດ ແລະອັດສະລິຍະ, ປະສົມປະສານການກໍ່ສ້າງແລະນຳ

ໃຊ້ລະບົບເຕັກນິກເຄືອຂ່າຍອິນເຕີເນັດແລະຂໍ້ມູນຂ່າວສານໃຫ້ເປັນເອກະພາບກັນ. ປັບປຸງລະບົບບັນຊາການສູ້ຮົບປະສົມໃຫ້ມີລະດັບສູງຂຶ້ນ, ຊຸກຍູ້ການສ້າງລະບົບ ແລະຄວາມສາມາດໃນການສອດແນມເຕືອນໄພລ່ວງໜ້າ, ຮ່ວມສຳພັນໂຈມຕີ, ການຄ້ຳປະກັນທາງສະໜາມຮົບ, ການຮັບປະກັນສັງລວມ. ລົງເລິກຊຸກຍູ້ການຝຶກແອບການທະຫານແບບສູ້ຮົບຈິງ, ລົງເລິກການຫັດແອບແບບປະສົມ, ຫັດແອບແບບຕໍ່ຕ້ານກັນ, ຝຶກແອບການທະຫານດ້ວຍວິທະຍາສາດເຕັກນິກ. ເພີ່ມທະວີການນຳໃຊ້ກຳລັງການທະຫານຢ່າງເປັນປົກກະຕິ ແລະມີຄວາມຫຼາກຫຼາຍ, ເດັດດ່ຽວດຳເນີນການຕໍ່ສູ້ທາງການທະຫານຢ່າງຄ່ອງແຄ້ວ, ສ້າງສະພາບການຄວາມໝັ້ນຄົງ, ສະກັດກັ້ນແລະຄວບຄຸມວິກິດການແລະການປະທະກັນ, ໃຫ້ເອົາຊະນະໃນສົງຄາມພາກພື້ນ.

ຕ້ອງເພີ່ມທະວີການຄຸ້ມຄອງການທະຫານຢ່າງຮອບດ້ານ, ປັບປຸງແລະເສີມຂະຫຍາຍໝາກຜົນແຫ່ງການປະຕິຮູບການປ້ອງກັນປະເທດແລະກອງທັບ, ບູລະນະໂຄງປະກອບກຳລັງການທະຫານໃຫ້ສົມບູນ, ປັບປຸງລະບຽບການນະໂຍບາຍການທະຫານໃຫ້ເປັນລະບົບແລະມີປະສິດທິພາບສູງຂຶ້ນ. ເພີ່ມທະວີການວາງແຜນເປັນເອກະພາບກັນກ່ຽວກັບການສູ້ຮົບ, ການກໍ່ສ້າງແລະການກຽມພ້ອມສູ້ຮົບໃນໜ້າທີ່ສຳຄັນແຫ່ງການກໍ່ສ້າງການປ້ອງກັນປະເທດແລະກອງທັບ, ເລັ່ງສ້າງພະລາທິການໃຫ້ທັນເປັນທັນສະໄໝ, ປະຕິບັດໂຄງການສຳຄັນແຫ່ງວິທະຍາສາດເຕັກນິກ ແລະອາວຸດຍຸດໂທປະກອນປ້ອງກັນປະເທດ, ເລັ່ງໃຫ້ວິທະຍາສາດເຕັກນິກຫັນເປັນກຳລັງສູ້ຮົບ. ລົງເລິກການປະຕິຮູບວິທະຍາຄານຂອງກອງທັບ, ສ້າງຄວາມເຂັ້ມແຂງໃຫ້ກັບລະບົບບຳລຸງສ້າງຜູ້ມີຄວາມຮູ້ຄວາມສາມາດດ້ານການທະຫານແບບໃໝ່, ປະດິດສ້າງການຄຸ້ມຄອງຊັບພະຍາກອນມະນຸດການທະຫານ. ເພີ່ມທະວີການສ້າງກົນໄກແລະວາງແຜນຍຸດທະສາດໃນດ້ານການຄຸ້ມຄອງກອງທັບຕາມກົດໝາຍ, ບູລະນະລະບົບລະບຽບກົດໝາຍການທະຫານທີ່ມີສີສັນພິເສດຂອງຈີນ. ປັບປຸງການຄຸ້ມຄອງຍຸດທະສາດ, ຍົກສູງປະສິດທິພາບການປະຕິບັດງານຂອງລະບົບການທະຫານ ແລະຍົກສູງປະສິດທິຜົນດ້ານການນຳໃຊ້ຊັບ

ພະຍາກອນປ້ອງກັນປະເທດ.

ຕ້ອງປັບປຸງແລະຍົກສູງລະບົບແລະຄວາມສາມາດຍຸດທະສາດແຫ່ງຊາດທີ່ເຊື່ອມໂຍງເຂົ້າເປັນອັນໜຶ່ງອັນດຽວກັນ. ເພີ່ມທະວີການວາງແຜນຍຸດທະສາດເປັນເອກະພາບກັນ, ການເຊື່ອມຕໍ່ນະໂຍບາຍລະບຽບການ, ການຮ່ວມກັນຊົມໃຊ້ປັດໄຈຊັບພະຍາກອນລະຫວ່າງກອງທັບກັບທ້ອງຖິ່ນ. ປັບປຸງລະບົບແລະໂຄງສ້າງອຸດສາຫະກຳວິທະຍາສາດເຕັກນິກປ້ອງກັນປະເທດໃຫ້ດີຂຶ້ນ, ເພີ່ມທະວີການສ້າງຄວາມສາມາດໃນດ້ານອຸດສາຫະກຳວິທະຍາສາດເຕັກນິກປ້ອງກັນປະເທດ. ລົງເລິກການສຶກສາອົບຮົມຄວາມຮູ້ດ້ານການປ້ອງກັນປະເທດໃນທົ່ວປວງຊົນ. ເພີ່ມທະວີການລະດົມຂົນຂວາຍກຳລັງປ້ອງກັນປະເທດແລະການສ້າງກຳລັງໜູນແຫ່ງການປ້ອງກັນປະເທດ, ຊຸກຍູ້ການກໍ່ສ້າງການປ້ອງກັນຊາຍແດນ, ທະເລແລະອາກາດຍຸກປັດຈຸບັນ. ເພີ່ມທະວີການຍ້ອງຍໍດ້ວຍກຽດຕິຍົດ ແລະຮັບປະກັນສິດຜົນປະໂຫຍດຂອງທະຫານ ແລະຄອບຄົວທະຫານ, ເຮັດວຽກງານຮັບປະກັນການບໍລິການນັກຮົບເກົ່າໃຫ້ດີ. ປັບປຸງແລະເສີມຂະຫຍາຍຄວາມສາມັກຄີລະຫວ່າງກອງທັບກັບລັດ ແລະລະຫວ່າງກອງທັບກັບປະຊາຊົນ.

ກອງທັບປະຊາຊົນ ເວລາໃດກໍເປັນກອງທັບວິລະຊົນທີ່ພັກແລະປະຊາຊົນໄວ້ເນື້ອເຊື່ອໃຈໄດ້ຢ່າງເຕັມທີ່, ມີຄວາມໝັ້ນໃຈ ແລະມີຄວາມສາມາດໃນການປົກປ້ອງອະທິປະໄຕ, ຄວາມເປັນເອກະພາບ ແລະຜືນແຜ່ນດິນອັນຄົບຖ້ວນຂອງຊາດ, ມີຄວາມໝັ້ນໃຈ ແລະມີຄວາມສາມາດ ໃນການຄ້ຳຊູດ້ານຍຸດທະສາດໃຫ້ກັບການບັນລຸເປົ້າໝາຍການຟື້ນຟູຄວາມຈະເລີນຮຸ່ງເຮືອງທີ່ຍິ່ງໃຫຍ່ຂອງປະຊາຊາດຈີນ, ມີຄວາມໝັ້ນໃຈ ແລະມີຄວາມສາມາດໃນການປະກອບສ່ວນໃຫຍ່ຫຼວງກວ່າເກົ່າ ເພື່ອສັນຕິພາບແລະການພັດທະນາຂອງໂລກ.

**ສິບສາມ: ຍຶດໝັ້ນແລະບູລະນະທິດທາງ “ປະເທດດຽວ ສອງລະບອບ” ຊຸກຍູ້ຄວາມເປັນເອກະພ**

**ໆບຂອງປະເທດຊາດ**

ທິດທາງ "ປະເທດດຽວ ສອງລະບອບ" ເປັນມາດຕະການປະດິດສ້າງອັນຍິ່ງໃຫຍ່ແຫ່ງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ, ເປັນລະບຽບການທີ່ດີທີ່ສຸດເພື່ອຮັກສາຄວາມຈະເລີນຮຸ່ງເຮືອງ ແລະສະຖຽນລະພາບຍາວນານຂອງຮົງກົງ ແລະມາກາວ ຫຼັງຈາກທີ່ກັບຄືນສູ່ປະເທດຊາດ, ສະນັ້ນ ຕ້ອງຍຶດໝັ້ນຢ່າງຍາວນານ.

ພວກເຮົາຕ້ອງປະຕິບັດທິດທາງ "ປະເທດດຽວສອງລະບອບ", "ຊາວຮົງກົງປົກຄອງຮົງກົງ", "ຊາວມາກາວປົກຄອງມາກາວ", ປົກຄອງຕົນເອງໃນລະດັບສູງຢ່າງຮອບດ້ານ, ຖືກຕ້ອງ ແລະເດັດດ່ຽວໜຽວແໜ້ນ. ຍຶດໝັ້ນໃນການປົກຄອງຮົງກົງ ແລະປົກຄອງມາກາວຕາມກົດໝາຍ, ປົກປັກຮັກສາລະບຽບການຕາມລັດຖະທຳມະນູນຢູ່ເຂດບໍລິຫານພິເສດ ຕາມທີ່ກຳນົດໄວ້ໃນລັດຖະທຳມະນູນ ແລະກົດໝາຍພື້ນຖານ. ຍຶດໝັ້ນ ແລະບູລະນະລະບົບລະບອບຂອງ "ປະເທດດຽວ ສອງລະບອບ", ຈັດຕັ້ງປະຕິບັດສິດຄຸ້ມຄອງບໍລິຫານຮອບດ້ານຂອງສູນກາງ, ຈັດຕັ້ງປະຕິບັດຫຼັກການ "ຜູ້ຮັກຊາດປົກຄອງຮົງກົງ" ແລະ "ຜູ້ຮັກຊາດປົກຄອງມາກາວ", ຈັດຕັ້ງປະຕິບັດລະບຽບການກົດໝາຍ ແລະ ກົນໄກປະຕິບັດກ່ຽວກັບການປົກປັກຮັກສາຄວາມໝັ້ນຄົງແຫ່ງຊາດຢູ່ເຂດບໍລິຫານພິເສດ. ຍຶດໝັ້ນໃນຄວາມເປັນເອກະພາບກັນລະຫວ່າງສິດຄຸ້ມຄອງບໍລິຫານຮອບດ້ານຂອງສູນກາງ ກັບການຮັບປະກັນ ສິດປົກຄອງຕົນເອງໃນລະດັບສູງຂອງເຂດບໍລິຫານພິເສດ, ຍຶດໝັ້ນໃນການນຳພາດ້ານບໍລິຫານ, ສະໜັບສະໜູນຜູ້ວ່າການເຂດບໍລິຫານພິເສດ ແລະອົງການປົກຄອງເຂດບໍລິຫານພິເສດປະຕິບັດໜ້າທີ່ການບໍລິຫານຕາມກົດໝາຍ, ຍົກສູງຄວາມສາມາດຄຸ້ມຄອງແລະລະດັບຄຸ້ມຄອງບໍລິຫານຢ່າງຮອບດ້ານ, ບູລະນະລະບຽບການຕຸລາການ ແລະລະບົບກົດໝາຍຂອງເຂດບໍລິຫານພິເສດໃຫ້ສົມບູນ, ຮັກສາລະບອບທຶນນິຍົມແລະວິຖີຊີວິດຂອງຮົງກົງແລະມາກາວບໍ່ມີການປ່ຽນແປງເປັນເວລາຍາວນານ, ສົ່ງເສີມ

ຄວາມຈະເລີນຮຸ່ງເຮືອງແລະສະຖຽນລະພາບຢ່າງຍາວນານຂອງຮົ່ງກົງ ແລະມາກາວ.

ພວກເຮົາຈະສະໜັບສະໜູນຮົ່ງກົງ, ມາກາວພັດທະນາເສດຖະກິດ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ, ແກ້ໄຂຂໍ້ຂັດແຍ້ງແລະບັນຫາດ້ານເລິກໃນການພັດທະນາເສດຖະກິດສັງຄົມ. ເສີມຂະຫຍາຍທ່າແຮງແລະຈຸດພິເສດຂອງຮົ່ງກົງ, ມາກາວ, ປັບປຸງແລະຍົກສູງຖານະບົດບາດຂອງຮົ່ງກົງແລະມາກາວໃນຂົງເຂດການເງິນສາກົນ, ການຄ້າ, ການຂົນສົ່ງທາງທະເລທາງອາກາດ, ການປະດິດສ້າງດ້ານວິທະຍາສາດເຕັກນິກ, ວັດທະນະທຳການທ່ອງທ່ຽວແລະອື່ນໆ, ລົງເລິກການໄປມາຫາສູ່ກັນແລະການຮ່ວມມືກັນລະຫວ່າງຮົ່ງກົງ, ມາກາວ ກັບບັນດາປະເທດແລະເຂດແຄວ້ນໃຫ້ເປີດກວ້າງກວ່າເກົ່າ ແລະແໜ້ນແຟ້ນກວ່າເກົ່າ. ຊຸກຍູ້ການສ້າງສາເຂດອ່າວໃຫຍ່ກວາງຕຸ້ງ-ຮົ່ງກົງ-ມາກາວ, ສະໜັບສະໜູນຮົ່ງກົງ, ມາກາວໃຫ້ເຊື່ອມໂຍງເຂົ້າໃນພາກສ່ວນໃຫຍ່ແຫ່ງການພັດທະນາຂອງປະເທດຊາດໃຫ້ດີກວ່າເກົ່າ, ເສີມຂະຫຍາຍບົດບາດຂອງຕົນໃຫ້ດີກວ່າເກົ່າ ເພື່ອບັນລຸເປົ້າໝາຍແຫ່ງການຟື້ນຟູຄວາມຈະເລີນຮຸ່ງເຮືອງທີ່ຍິ່ງໃຫຍ່ຂອງປະຊາຊາດຈີນ.

ເສີມສ້າງກຳລັງຮັກຊາດ, ຮັກຮົ່ງກົງ ແລະຮັກມາກາວໃຫ້ເຕີບໃຫຍ່ຂະຫຍາຍຕົວ, ເພີ່ມທະວີນ້ຳໃຈຮັກຊາດຂອງພີ່ນ້ອງຮ່ວມຊາດຮົ່ງກົງ ແລະມາກາວ, ໃຫ້ກາຍເປັນແນວໂຮມເອກະພາບຢູ່ທັງພາຍໃນແລະຕ່າງປະເທດທີ່ສະໜັບສະໜູນທິດທາງ "ປະເທດດຽວ ສອງລະບອບ" ຢ່າງກວ້າງຂວາງກວ່າເກົ່າ. ເດັດດ່ຽວຕໍ່ຕ້ານອິດທິກຳລັງກໍ່ຄວາມວຸ້ນວາຍຢູ່ຮົ່ງກົງແລະມາກາວ, ເດັດດ່ຽວປ້ອງກັນແລະສະກັດກັ້ນບໍ່ໃຫ້ອິດທິກຳລັງພາຍນອກແຊກແຊງເຂົ້າວຽກງານພາຍໃນຂອງຮົ່ງກົງແລະມາກາວ.

ການແກ້ໄຂບັນຫາໄຕ້ຫວັນເພື່ອຄວາມເປັນເອກະພາບຢ່າງສົມບູນຂອງປະເທດຊາດແມ່ນໜ້າທີ່ປະຫວັດສາດອັນເດັດດ່ຽວໜຽວແໜ້ນຂອງພັກ, ແມ່ນຄວາມປາຖະໜາຮ່ວມຂອງລູກຫຼານປະຊາຊາດຈີນທຸກຖ້ວນໜ້າ, ເປັນຄວາມຮຽກຮ້ອງທີ່ຈຳເປັນແຫ່ງການບັນລຸເປົ້າໝາຍການຟື້ນຟູຄວາມຈະເລີນຮຸ່ງເຮືອງທີ່ຍິ່ງໃຫຍ່ຂອງປະຊາຊາດຈີນ. ສະນັ້ນ, ພວກເຮົາຈະຍຶດໝັ້ນໃນທິດທາງຍຸດທະສາດລວມ

ຂອງພັກໃນການແກ້ໄຂບັນຫາໄຕ້ຫວັນໃນຍຸກໃໝ່, ກຳແໜ້ນສິດນຳພາ ແລະສິດເປັນເຈົ້າການໃນດ້ານການພົວພັນລະຫວ່າງສອງຝັ່ງຊ່ອງແຄບໄຕ້ຫວັນ, ຊຸກຍູ້ພາລະກິດອັນຍິ່ງໃຫຍ່ແຫ່ງການທ້ອນໂຮມປະເທດຊາດເປັນເອກະພາບຢ່າງເດັດດ່ຽວໜຽວແໜ້ນ.

ທິດທາງ “ໂຮມເປັນເອກະພາບກັນໂດຍສັນຕິ, ປະເທດດຽວ ສອງລະບອບ” ເປັນວິທີການທີ່ດີທີ່ສຸດໃນການບັນລຸເປົ້າໝາຍທ້ອນໂຮມສອງຝັ່ງຊ່ອງແຄບໄຕ້ຫວັນໃຫ້ເປັນເອກະພາບກັນ, ມີຜົນປະໂຫຍດຫຼາຍທີ່ສຸດຕໍ່ພີ່ນ້ອງຮ່ວມຊາດສອງຝັ່ງຊ່ອງແຄບໄຕ້ຫວັນແລະປະຊາຊາດຈີນ. ພວກເຮົາຍຶດໝັ້ນໃນຫຼັກການປະເທດຈີນດຽວ ແລະ “ຄວາມຮັບຮູ້ທີ່ເປັນເອກະພາບກັນປີ 1992”, ບົນພື້ນຖານດັ່ງກ່າວ, ຈະຊຸກຍູ້ການເປີກສາຫາລືຢ່າງກວ້າງຂວາງ ແລະເລິກເຊິ່ງກັບບຸກຄົນຈາກພັກຝ່າຍຕ່າງໆ, ວົງການຕ່າງໆ ແລະຊັ້ນຄົນຕ່າງໆ ກ່ຽວກັບການພົວພັນສອງຝັ່ງຊ່ອງແຄບໄຕ້ຫວັນ ແລະຄວາມເປັນເອກະພາບຂອງຊາດ, ຮ່ວມກັນຊຸກຍູ້ການພົວພັນສອງຝັ່ງຊ່ອງແຄບໄຕ້ຫວັນຂະຫຍາຍຕົວໂດຍສັນຕິ, ຊຸກຍູ້ຂະບວນການທ້ອນໂຮມປະເທດຊາດເຂົ້າເປັນເອກະພາບກັນໂດຍສັນຕິໃຫ້ມີຄວາມຄືບໜ້າ. ພວກເຮົາຍຶດໝັ້ນໃນການສາມັກຄີກັບພີ່ນ້ອງຮ່ວມຊາດໄຕ້ທັງຫຼາຍ, ເດັດດ່ຽວສະໜັບສະໜູນກຳລັງເອກະພາບຮັກຊາດພາຍໃນເກາະໄຕ້ຫວັນ ເພື່ອຮ່ວມກັນກຳແໜ້ນທ່າອ່ຽງລວມແຫ່ງປະຫວັດສາດ, ຍຶດໝັ້ນໃນສິດຜົນປະໂຫຍດລວມຂອງປະຊາຊາດ, ເດັດດ່ຽວຄັດຄ້ານການແບ່ງແຍກໄຕ້ຫວັນເປັນເອກະລາດ, ສົ່ງເສີມເອກະພາບຂອງຊາດ. ປະເທດຊາດທີ່ຍິ່ງໃຫຍ່ຈະເປັນສິ່ງໜູນຫຼັງອັນເຂັ້ມແຂງຕະຫຼອດການໃຫ້ກັບກຳລັງເອກະພາບຮັກຊາດທັງໝົດ!

ພີ່ນ້ອງຮ່ວມຊາດສອງຝັ່ງຊ່ອງແຄບໄຕ້ຫວັນເປັນອ້າຍເອື້ອຍນ້ອງຮ່ວມອຸທອນແລະເປັນຄອບຄົວດຽວກັນ.ພວກເຮົາເວລາໃດກໍເຄົາລົບ,ຮັກແພງແລະສ້າງຄວາມຜາສຸກໃຫ້ກັບພີ່ນ້ອງຮ່ວມຊາດໄຕ້ຫວັນ, ຈະສືບຕໍ່ສຸມກຳລັງເຂົ້າໃນການສົ່ງເສີມການແລກປ່ຽນ ແລະການຮ່ວມມືດ້ານເສດຖະກິດວັດທະນະທຳລະຫວ່າງສອງຝັ່ງຊ່ອງແຄບໄຕ້ຫວັນ, ລົງເລິກການພັດທະນາແບບເຊື່ອມໂຍງເຂົ້າກັນລະຫວ່າງຂົງ

ເຂດຕ່າງໆຂອງສອງຝັ່ງ, ປັບປຸງແລະບູລະນະລະບຽບການ ແລະນະໂຍບາຍເພື່ອເພີ່ມຄວາມຜາສຸກໃຫ້ກັບພີ່ນ້ອງຮ່ວມຊາດໄຕ້ຫວັນ, ຊຸກຍູ້ສອງຝັ່ງຮ່ວມກັນເສີມຂະຫຍາຍວັດທະນະທຳຈີນ, ສົ່ງເສີມການເຊື່ອມສານຈິດໃຈກັນລະຫວ່າງພີ່ນ້ອງຮ່ວມຊາດສອງຝັ່ງ.

ໄຕ້ຫວັນແມ່ນເປັນໄຕ້ຫວັນຂອງຈີນ. ການແກ້ໄຂບັນຫາໄຕ້ຫວັນແມ່ນເປັນເລື່ອງຂອງຄົນຈີນເອງ, ຕ້ອງໃຫ້ຄົນຈີນເປັນຜູ້ຕັດສິນທັງໝົດ. ພວກເຮົາຍຶດໝັ້ນໃນການບັນລຸຄວາມເປັນເອກະພາບໂດຍສັນຕິດ້ວຍຄວາມຈິງໃຈໃຫຍ່ຫຼວງທີ່ສຸດ ແລະ ຄວາມພະຍາຍາມຫຼາຍທີ່ສຸດ, ແຕ່ກໍເດັດຂາດບໍ່ສັນຍາວ່າ ຈະປະລະການໃຊ້ອາວຸດ ໂດຍສະຫງວນທາງເລືອກແຫ່ງການນຳໃຊ້ມາດຕະການທີ່ຈຳເປັນທຸກຢ່າງ ເຊິ່ງນີ້ແມ່ນແນໃສ່ການແຊກແຊງຈາກອິດທິກຳລັງພາຍນອກ ແລະພວກແບ່ງແຍ່ງໄຕ້ຫວັນໃຫ້ເປັນເອກະລາດສ່ວນໜ້ອຍທີ່ສຸດ ກໍຄືການເຄື່ອນໄຫວແບ່ງແຍກຂອງພວກເຂົາ, ເດັດຂາດຈະບໍ່ແນໃສ່ພີ່ນ້ອງຮ່ວມຊາດໄຕ້ຫວັນອັນມະຫາສານ. ກົງລໍ້ປະຫວັດສາດແຫ່ງການທ້ອນໂຮມປະເທດຊາດເປັນເອກະພາບ ແລະຟື້ນຟູຄວາມຈະເລີນຮຸ່ງເຮືອງຂອງປະຊາຊາດຈະແລ່ນໄປຂ້າງໜ້າຢ່າງບໍ່ຢຸດຢັ້ງ, ເປົ້າໝາຍການທ້ອນໂຮມປະເທດຊາດເປັນເອກະພາບກັນຢ່າງສົມບູນຕ້ອງບັນລຸຜົນເປັນຈິງ ແລະຈະສາມາດບັນລຸຜົນເປັນຈິງໄດ້ຢ່າງແນ່ນອນ!

**ສິບສີ່: ສົ່ງເສີມສັນຕິພາບ ແລະການພັດທະນາຂອງໂລກ ຊຸກຍູ້ການສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ**

ປັດຈຸບັນ ການປ່ຽນແປງຂອງໂລກ, ການປ່ຽນແປງຂອງຍຸກສະໄໝ ແລະການປ່ຽນແປງຂອງປະຫວັດສາດ ພວມເກີດຂຶ້ນດ້ວຍຮູບການທີ່ບໍ່ເຄີຍມີມາກ່ອນ. ດ້ານໜຶ່ງ, ກະແສປະຫວັດສາດແຫ່ງສັນຕິພາບ, ການພັດທະນາ, ການຮ່ວມມືກັນ ແລະການໄດ້ຮັບຜົນປະໂຫຍດຮ່ວມກັນແມ່ນບໍ່ສາມາດຖືກສະ

ກີດກັ້ນໄວ້ໄດ້, ຄວາມມຸ່ງຫວັງຂອງຄົນທັງຫຼາຍ ແລະທ່າອ່ຽງຂະຫຍາຍຕົວຂອງກະແສຍຸກສະໄໝໄດ້ຕັດສິນແລ້ວວ່າ ອະນາຄົດຂອງມວນມະນຸດຍ່ອມຈະມີຄວາມສະຫວ່າງສະໄຫວ. ດ້ານໜຶ່ງອີກ, ການກະທຳມະຫາອຳນາດ, ເປັນເຈົ້າອຳນາດ ເຊັ່ນ: ການຂົ່ມເຫັງຜູ້ອ່ອນແອດ້ວຍຄວາມຮຸນແຮງ, ການຕົວະຕົ້ມດ້ວຍເລ່ລ່ຽມ ແລະປຸ້ນຈີ້ຢ່າງບັງອາດ ແລະເກມຜົນລວມເປັນສູນໄດ້ເກີດມີຜົນຮ້າຍຢ່າງເລິກເຊິ່ງ, ເຮັດໃຫ້ສັນຕິພາບ, ການພັດທະນາ, ຄວາມໝັ້ນຄົງ ແລະການຄຸ້ມຄອງບໍລິຫານຖືກກະທົບຢ່າງໜັກ, ສັງຄົມມະນຸດປະສົບກັບສິ່ງທ້າທາຍທີ່ບໍ່ເຄີຍມີມາກ່ອນ. ໂລກໄດ້ຢືນຢູ່ທາງສີ່ແຍກແຫ່ງປະຫວັດສາດອີກຄັ້ງໜຶ່ງ, ຈະເດີນໄປສູ່ທິດທາງໃດແທ້ ແມ່ນຢູ່ນຳການຕັດສິນ ແລະການເລືອກຂອງປະຊາຊົນປະເທດຕ່າງໆ.

ຈີນໄດ້ຍຶດໝັ້ນໃນຈຸດປະສົງຂອງນະໂຍບາຍການຕ່າງປະເທດທີ່ປົກປັກຮັກສາສັນຕິພາບຂອງໂລກ, ຊຸກຍູ້ການພັດທະນາຮ່ວມກັນຢ່າງສະເໝີຕົ້ນສະເໝີປາຍ, ສຸມໃສ່ການຊຸກຍູ້ການສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ.

ຈີນໄດ້ປະຕິບັດນະໂຍບາຍການຕ່າງປະເທດສັນຕິພາບ, ເອກະລາດ ແລະເປັນເຈົ້າຕົນເອງຢ່າງເດັດດ່ຽວໜຽວແໜ້ນ, ໄດ້ຕົກລົງຫຼັກໝັ້ນ ແລະນະໂຍບາຍຂອງຕົນເອງ ດ້ວຍຄວາມຖືກຄວາມຜິດຂອງເລື່ອງມັນເອງມາໂດຍຕະຫຼອດ, ປົກປັກຮັກສາຫຼັກມາດຖານພື້ນຖານຂອງການພົວພັນລະຫວ່າງຊາດ, ປົກປັກຮັກສາຄວາມຍຸຕິທຳ ແລະຄວາມເປັນທຳຂອງສາກົນ. ຈີນເຄົາລົບອະທິປະໄຕ ແລະຜືນແຜ່ນດິນອັນຄົບຖ້ວນຂອງປະເທດຕ່າງໆ, ຍຶດໝັ້ນໃນບັນຫາທີ່ວ່າ ບໍ່ວ່າຈະແມ່ນປະເທດໃຫຍ່ ຫຼືນ້ອຍ, ເຂັ້ມແຂງຫຼືອ່ອນແອ, ຮັ່ງມີຫຼືທຸກຍາກ ລ້ວນແຕ່ ສະເໝີພາບກັນ, ເຄົາລົບເສັ້ນທາງການພັດທະນາ ແລະລະບອບສັງຄົມທີ່ປະຊາຊົນປະເທດຕ່າງໆເລືອກໂດຍຕົນເອງ, ເດັດດ່ຽວຄັດຄ້ານລັດທິເຈົ້າອຳນາດ ແລະການເມືອງມະຫາອຳນາດໃນທຸກຮູບແບບ, ຄັດຄ້ານແນວຄິດສົງຄາມເຢັນ, ຄັດຄ້ານການແຊກແຊງວຽກງານພາຍໃນຂອງປະເທດອື່ນ, ຄັດຄ້ານການປະຕິບັດຕາມສອງມາດຕະຖານ. ຈີນປະຕິ

ບັດຕາມນະໂຍບາຍປ້ອງກັນປະເທດແບບປ້ອງກັນຕົວ, ເຫັນວ່າ, ການພັດທະນາຂອງຈີນເປັນການເພີ່ມກຳລັງສັນຕິພາບຂອງໂລກ,ບໍ່ວ່າຈີນໄດ້ພັດທະນາໄປເຖິງລະດັບໃດກໍຈະບໍ່ເປັນເຈົ້າອຳນາດ ແລະບໍ່ແຜ່ຂະຫຍາຍອຳນາດຢ່າງເດັດຂາດຕາບເທົ່າໃດໆ.

ຈີນຍຶດໝັ້ນເສີມຂະຫຍາຍມິດຕະພາບແລະການຮ່ວມມືກັບປະເທດຕ່າງໆບົນພື້ນຖານຫຼັກ 5 ປະການຢູ່ຮ່ວມກັນໂດຍສັນຕິ, ຊຸກຍູ້ການສ້າງການພົວພັນລະຫວ່າງຊາດແບບໃໝ່, ລົງເລິກຂະຫຍາຍການພົວພັນຄູ່ຮ່ວມໃນທົ່ວໂລກທີ່ສະເໝີພາບ, ເປີດປະຕູ ແລະຮ່ວມມືກັນ, ສຸມໃສ່ເປີດກວ້າງຈຸດຮ່ວມກັນທາງຜົນປະໂຫຍດກັບປະເທດຕ່າງໆ. ຊຸກຍູ້ໃຫ້ບັນດາປະເທດໃຫຍ່ມີການປະສານງານກັນ ແລະແລກປ່ຽນກັນເປັນຢ່າງດີ, ຊຸກຍູ້ການສ້າງສະພາບການພົວພັນໃນຖານະປະເທດໃຫຍ່ທີ່ຢູ່ຮ່ວມກັນໂດຍສັນຕິ, ມີຄວາມໝັ້ນທ່ຽງໂດຍລວມ ແລະພັດທະນາຢ່າງດຸນດ່ຽງກັນ. ຍຶດໝັ້ນແນວຄິດການຕ່າງປະເທດກັບບັນດາປະເທດອ້ອມຂ້າງທີ່ເປັນເພື່ອນມິດທີ່ມີຄວາມສະໜິດສະໜົມກັນ, ມີຄວາມຈິງໃຈຕໍ່ກັນ, ໃຫ້ຜົນປະໂຫຍດແກ່ກັນ ແລະມີຄວາມໂອບເອື້ອອາລີເຊິ່ງກັນແລະກັນ ແລະທິດທາງການຕ່າງປະເທດກັບບັນດາປະເທດອ້ອມຂ້າງທີ່ເປັນເພື່ອນບ້ານທີ່ດີຕໍ່ກັນ, ເປັນຄູ່ຮ່ວມກັນ. ຍຶດຖືທັດສະນະທີ່ມີຄວາມຈິງໃຈ, ມີຜົນຕົວຈິງ, ເປັນມິດກັນ ແລະເຊື່ອໃຈກັນ, ທັດສະນະກ່ຽວກັບຜົນປະໂຫຍດແລະສິນທຳທີ່ຖືກຕ້ອງ ເພື່ອເພີ່ມທະວີຄວາມສາມັກຄີ ແລະການຮ່ວມມືກັນກັບບັນດາປະເທດທີ່ພວມພັດທະນາ, ປົກປັກຮັກສາຜົນປະໂຫຍດຮ່ວມຂອງບັນດາປະເທດທີ່ພວມພັດທະນາ. ບົນພື້ນຖານເອກະລາດ, ເປັນເຈົ້າຕົນເອງ, ສະເໝີພາບຢ່າງສົມບູນ, ຕ່າງເຄົາລົບເຊິ່ງກັນແລະກັນ, ຕ່າງບໍ່ແຊກແຊງວຽກງານພາຍໃນຂອງກັນ, ພັກກອມມູນິດຈີນຍິນດີເພີ່ມທະວີການແລກປ່ຽນແລະຮ່ວມມືກັບພັກການເມືອງ ແລະອົງການຈັດຕັ້ງການເມືອງຂອງປະເທດຕ່າງໆ, ຕັ້ງໜ້າຊຸກຍູ້ການໄປມາຫາສູ່ກັນກັບຕ່າງປະເທດໃນດ້ານ ສະພາປະຊາຊົນ, ສະພາເປີກສາການເມືອງ, ກອງທັບ, ທ້ອງຖິ່ນ, ຝ່າຍປະຊາຊົນ ແລະດ້ານອື່ນໆ.

ຈີນຍຶດໝັ້ນນະໂຍບາຍພື້ນຖານແຫ່ງຊາດທີ່ເປີດປະຕູສູ່ພາຍນອກ,ເດັດດ່ຽວປະຕິບັດຍຸດທະສາດ

ເປີດປະຕູທີ່ຕ່າງຝ່າຍຕ່າງມີຜົນປະໂຫຍດແລະໄດ້ຮັບຜົນປະໂຫຍດຮ່ວມກັນ, ຈະອຳນວຍໂອກາດໃໝ່ໃຫ້ແກ່ໂລກດ້ວຍການພັດທະນາອັນໃໝ່ຂອງຈີນຢູ່ເລື້ອຍໆ, ຊຸກຍູ້ການສ້າງເສດຖະກິດໂລກແບບເປີດກວ້າງ ເພື່ອສົ່ງຜົນປະໂຫຍດແກ່ປະຊາຊົນປະເທດຕ່າງໆໃຫ້ດີກວ່າເກົ່າ. ຈີນຍຶດໝັ້ນທິດທາງທີ່ຖືກຕ້ອງຂອງເສດຖະກິດໂລກາພິວັດ, ຊຸກຍູ້ການຄ້າແລະການລົງທຶນເປັນແບບເສລີ ແລະມີຄວາມສະດວກຂຶ້ນ, ຊຸກຍູ້ການຮ່ວມມືລະຫວ່າງສອງຝ່າຍ, ລະຫວ່າງພາກພື້ນ ແລະລະຫວ່າງຫຼາຍຝ່າຍ, ຊຸກຍູ້ການປະສານງານດ້ານນະໂຍບາຍເສດຖະກິດມະຫາພາກຂອງສາກົນ, ຮ່ວມກັນສ້າງສະພາບແວດລ້ອມສາກົນທີ່ມີຜົນດີຕໍ່ການພັດທະນາ, ຮ່ວມກັນບົ່ມເພາະສ້າງພະລັງແຮງອັນໃໝ່ໃນການຊຸກຍູ້ການພັດທະນາຂອງທົ່ວໂລກ, ຄັດຄ້ານລັດທິປົກປ້ອງ, ຄັດຄ້ານການຕັ້ງກຳແພງອຸປະສັກ ແລະ ຕັດຂາດສາຍພົວພັນຕ່ອງໂສ້, ຄັດຄ້ານການລົງໂທດແຕ່ຝ່າຍດຽວ ແລະ ການເພີ່ມແຮງກົດດັນສຸດຂີດ. ຈີນຍິນດີເພີ່ມການລົງທຶນດ້ານຊັບພະຍາກອນເຂົ້າໃນການຮ່ວມມືດ້ານການພັດທະນາຂອງໂລກ, ສຸມໃສ່ການຫຼຸດຜ່ອນຄວາມແຕກໂຕນກັນລະຫວ່າງເໜືອໃຕ້, ເດັດດ່ຽວສະໜັບສະໜູນ ແລະຊ່ວຍເຫຼືອບັນດາປະເທດທີ່ພວມພັດທະນາເລັ່ງການພັດທະນາຂອງຕົນ.

ຈີນໄດ້ຕັ້ງໜ້າເຂົ້າຮ່ວມການປະຕິຮູບ ແລະສ້າງສາລະບົບຄຸ້ມຄອງບໍລິຫານທົ່ວໂລກ, ຈັດຕັ້ງປະຕິບັດຕາມທັດສະນະຄຸ້ມຄອງບໍລິຫານທົ່ວໂລກແບບເປີກສາຫາລືຮ່ວມກັນ ສ້າງສາຮ່ວມກັນ ແລະຊົມໃຊ້ຮ່ວມກັນ, ຍຶດໝັ້ນລັດທິຫຼາຍຝ່າຍທີ່ແທ້ຈິງ, ຊຸກຍູ້ສາຍພົວພັນສາກົນຫັນເປັນແບບປະຊາທິປະໄຕ, ຊຸກຍູ້ການຄຸ້ມຄອງບໍລິຫານທົ່ວໂລກພັດທະນາໄປຕາມທິດທີ່ມີຄວາມຍຸຕິທຳ ແລະສົມເຫດສົມຜົນກວ່າເກົ່າ. ຈີນເດັດດ່ຽວປົກປັກຮັກສາລະບົບສາກົນທີ່ມີອົງການສະຫະປະຊາຊາດເປັນແກນກາງ, ລະບຽບສາກົນທີ່ມີກົດໝາຍລະຫວ່າງຊາດເປັນພື້ນຖານ ແລະຫຼັກມາດຖານພື້ນຖານຂອງການພົວພັນລະຫວ່າງຊາດທີ່ຖືກົດບັດແລະຫຼັກການຂອງອົງການສະຫະປະຊາຊາດເປັນພື້ນຖານ, ຄັດຄ້ານລັດທິຝ່າຍດຽວໃນທຸກຮູບແບບ, ຄັດຄ້ານການສ້າງຄ້າຍທີ່ແນໃສ່ປະເທດໃດໜຶ່ງ ແລະກຸ່ມກ້ອນຄັບແຄບທີ່ມີລັກສະນະຈຳ

ແນກ. ຊຸກຍູ້ອົງການການຄ້າໂລກ, ອົງການຮ່ວມມືເສດຖະກິດອາຊີປາຊີຟິກ ແລະກົນໄກຫຼາຍຝ່າຍອື່ນໆເສີມຂະຫຍາຍບົດບາດໃຫ້ດີກວ່າເກົ່າ, ເປີດກວ້າງຜົນສະທ້ອນຂອງກົນໄກຮ່ວມມືຕ່າງໆເຊັ່ນ: ອົງການປະເທດບຣິກສ ແລະອົງການຮ່ວມມືຊຽງໄຮ້ເປັນຕົ້ນ, ເພີ່ມທະວີລັກສະນະຕົວແທນ ແລະ ສິດປະກອບຄຳເຫັນຂອງບັນດາປະເທດທີ່ເປັນຕະຫຼາດຈະເລີນໃໝ່ ແລະບັນດາປະເທດທີ່ພວມພັດທະນາໃນວຽກງານສາກົນ. ຈີນຍຶດໝັ້ນໃນການຕັ້ງໜ້າເຂົ້າຮ່ວມການຈັດວາງກົດລະບຽບກ່ຽວກັບຄວາມໝັ້ນຄົງຂອງໂລກ, ເພີ່ມທະວີການຮ່ວມມືດ້ານຄວາມໝັ້ນຄົງສາກົນ, ຕັ້ງໜ້າເຂົ້າຮ່ວມການເຄື່ອນໄຫວຮັກສາສັນຕິພາບຂອງອົງການສະຫະປະຊາຊາດ, ໄດ້ເສີມຂະຫຍາຍບົດບາດທີ່ມີລັກສະນະສ້າງສັນໃນການປົກປັກຮັກສາສັນຕິພາບຂອງໂລກ ແລະສະຖຽນລະພາບຂອງພາກພື້ນ.

ການສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ ແມ່ນອະນາຄົດຂອງປະຊາຊົນປະເທດຕ່າງໆຢູ່ໃນໂລກ. ຊີວະນາໆພັນເຕີບໃຫຍ່ຮ່ວມກັນແຕ່ບໍ່ກະທົບກັນ, ກົດເກນຄົງຕົວຮ່ວມກັນແຕ່ບໍ່ຂັດແຍ້ງກັນ. ມີແຕ່ໃຫ້ປະເທດຕ່າງໆປະຕິບັດຕາມກົດເກນທົ່ວໄປໃນໂລກນີ້, ຖືກຕ້ອງປອງດອງກັນ, ຮ່ວມໄມ້ຮ່ວມມືໃຫ້ໄດ້ຮັບຜົນປະໂຫຍດນຳກັນ, ຄວາມຈະເລີນຮຸ່ງເຮືອງຈິ່ງສາມາດມີຄວາມຍືນຍົງໄປໄດ້, ຄວາມໝັ້ນຄົງຈິ່ງສາມາດໄດ້ຮັບການຮັບປະກັນໄວ້ໄດ້. ຈີນໄດ້ສະເໜີຂໍ້ລິເລີ່ມກ່ຽວກັບການພັດທະນາຂອງທົ່ວໂລກ ແລະຂໍ້ລິເລີ່ມກ່ຽວກັບຄວາມໝັ້ນຄົງທົ່ວໂລກອອກມາ, ທັງຍິນດີຈັດຕັ້ງປະຕິບັດໂດຍຮ່ວມກັບປະຊາຄົມໂລກ. ຈີນຍຶດໝັ້ນໃຫ້ມີການສົນທະນາ ແລະເປີກສາຫາລືກັນ ເພື່ອຊຸກຍູ້ການສ້າງໂລກທີ່ມີສັນຕິພາບຖາວອນ; ຍຶດໝັ້ນໃນການສ້າງສາຮ່ວມກັນ ແລະຊົມໃຊ້ຮ່ວມກັນ ເພື່ອຊຸກຍູ້ການສ້າງໂລກທີ່ມີຄວາມໝັ້ນຄົງໂດຍທົ່ວໄປ; ຍຶດໝັ້ນໃນການຮ່ວມມືກັນ ແລະໄດ້ຮັບຜົນປະໂຫຍດຮ່ວມກັນ ເພື່ອຊຸກຍູ້ການສ້າງໂລກທີ່ຮ່ວມກັນຈະເລີນຮຸ່ງເຮືອງ; ຍຶດໝັ້ນໃນການແລກປ່ຽນ ແລະຕ່າງຖອດຖອນບົດຮຽນເຊິ່ງກັນແລະກັນ ເພື່ອຊຸກຍູ້ການສ້າງໂລກທີ່ເປີດກວ້າງ ແລະ ກວມລວມ; ຍຶດໝັ້ນໃນການລະບາຍກາກບອນຕໍ່າ ແລະເປັນແບບສີຂຽວ ເພື່ອຊຸກຍູ້ການສ້າງໂລກທີ່ສະອາດ ແລະສວຍງາມ.

ພວກເຮົາຂໍສົ່ງຄຳຮຽກຮ້ອງດ້ວຍຄວາມຈິງໃຈ ມາຍັງປະເທດຕ່າງໆຢູ່ໃນໂລກ ຈົ່ງເສີມຂະຫຍາຍຄ່ານິຍົມຮ່ວມຂອງມວນມະນຸດຄື: ສັນຕິພາບ, ການພັດທະນາ, ຍຸຕິທຳ, ຄວາມເປັນທຳ, ປະຊາທິປະໄຕ ແລະເສລີພາບ ເພື່ອຊຸກຍູ້ໃຫ້ປະຊາຊົນປະເທດຕ່າງໆມີຄວາມເຂົ້າໃຈເຊິ່ງກັນແລະກັນ, ຮັກແພງກັນ, ເຄົາລົບຄວາມຫຼາກຫຼາຍຂອງອະລິຍະທຳໂລກ, ຈົ່ງຜ່ານຜ່າຄວາມຂັດແຍ້ງກັນດ້ານອະລິຍະທຳດ້ວຍການແລກປ່ຽນດ້ານອະລິຍະທຳ, ຈົ່ງຜ່ານຜ່າການປະທະກັນດ້ານອະລິຍະທຳດ້ວຍການຖອດຖອນບົດຮຽນເຊິ່ງກັນແລະກັນດ້ານອະລິຍະທຳ, ຈົ່ງຜ່ານຜ່າການຖືອະລິຍະທຳຕົນເອງຢູ່ເໜືອກວ່າໝູ່ດ້ວຍການໃຫ້ອະລິຍະທຳທີ່ຕ່າງກັນຄົງຕົວຢູ່ຮ່ວມກັນ ເພື່ອຮ່ວມກັນຮັບມືກັບສິ່ງທ້າທາຍຕ່າງໆໃນທົ່ວໂລກ.

ພວກເຮົາກຳລັງຢູ່ໃນຍຸກສະໄໝທີ່ເຕັມໄປດ້ວຍສິ່ງທ້າທາຍ, ແຕ່ກໍແມ່ນຢູ່ໃນຍຸກສະໄໝທີ່ເຕັມໄປດ້ວຍຄວາມຫວັງເຊັ່ນດຽວກັນ. ປະຊາຊົນຈີນຍິນດີຮ່ວມກັບປະຊາຊົນໂລກ ຮ່ວມມືກັນສ້າງອະນາຄົດຂອງມວນມະນຸດທີ່ຍິ່ງດີງາມກວ່າເກົ່າ!

## ສິບຫ້າ: ຄຸ້ມຄອງພັກເຂັ້ມງວດຮອບດ້ານຢ່າງເດັດດ່ຽວໜຽວແໜ້ນ ລົງເລິກຊຸກຍູ້ໂຄງການທີ່ຍິ່ງໃຫຍ່ອັນໃໝ່ແຫ່ງການກໍ່ສ້າງພັກໃນຍຸກໃໝ່

ການສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານ ແລະຊຸກຍູ້ການຟື້ນຟູຄວາມຈະເລີນຮຸ່ງເຮືອງທີ່ຍິ່ງໃຫຍ່ຂອງປະຊາຊາດຈີນຢ່າງຮອບດ້ານສຳຄັນທີ່ສຸດແມ່ນຢູ່ນຳພັກ. ພັກພວກເຮົາແມ່ນພັກກຳອຳນາດລັດທີ່ມາກໃຫຍ່ທີ່ສຸດຢູ່ໃນໂລກ, ຢາກຈະໄດ້ຮັບການອຸ້ມຊູສະໜັບສະໜູນຈາກປະຊາ ຊົນຕະຫຼອດໄປ, ປັບປຸງຖານະກຳອຳນາດເປັນເວລາຍາວນານ, ກໍຕ້ອງຮັກສາສະຕິ ແລະຄວາມເດັດດ່ຽວໜຽວແໜ້ນຢູ່ທຸກເວລາໃນການແກ້ໄຂບັນຫາຫຍຸ້ງຍາກຕ່າງໆທີ່ສະເພາະແຕ່ພັກໃຫຍ່ຈຶ່ງມີ. ຜ່ານຈາກ

ການຄຸ້ມຄອງພັກຢ່າງເຂັ້ມງວດນັບແຕ່ກອງປະຊຸມໃຫຍ່ຄັ້ງທີ XVIII ຂອງພັກເປັນຕົ້ນມາ, ພວກເຮົາໄດ້ແກ້ໄຂບັນຫາພົ້ນເດັ່ນຫຼາຍຢ່າງພາຍໃນພັກ, ແຕ່ການທົດສອບດ້ານການກຳອຳນາດ, ດ້ານ ການປະຕິຮູບເປີດປະຕູສູ່ພາຍນອກ, ດ້ານເສດຖະກິດຕະຫຼາດ ແລະດ້ານສະພາບແວດລ້ອມທາງພາຍນອກທີ່ພັກປະເຊີນນັ້ນ ຈະຄົງຕົວຢູ່ເປັນເວລາດົນນານ, ຄວາມອັນຕະລາຍທີ່ອາດເກີດຂຶ້ນ ຍ້ອນ ຄວາມລະເຫຼີງຕົວ, ຄວາມສາມາດບໍ່ພຽງພໍ, ການຫ່າງເຫີນຈາກປະຊາຊົນ ແລະສະພາບການຫຍໍ້ທໍ້ສໍ້ລາດບັງຫຼວງນັ້ນ ກໍຈະຄົງຕົວຢູ່ເປັນເວລາດົນນານເຊັ່ນດຽວກັນ. ທົ່ວພັກຕ້ອງຈົດຈຳໄວ້ຢ່າງໜັກແໜ້ນວ່າ, ການຄຸ້ມຄອງພັກຢ່າງເຂັ້ມງວດຮອບດ້ານແມ່ນຕ້ອງດຳເນີນຕະຫຼອດໄປ, ການປະຕິວັດໂດຍຕົນເອງຂອງພັກຕ້ອງດຳເນີນຕະຫຼອດໄປ, ເດັດຂາດບໍ່ຄວນລົດລະທໍ້ຖອຍ ແລະປ່ອຍປະລະເລີຍ, ຕ້ອງຊຸກຍູ້ການຄຸ້ມຄອງພັກຢ່າງເຂັ້ມງວດຮອບດ້ານຢ່າງຕໍ່ເນື່ອງ, ລົງເລິກຊຸກຍູ້ໂຄງການຍິ່ງໃຫຍ່ອັນໃໝ່ຂອງການກໍ່ສ້າງພັກໃນຍຸກໃໝ່ ເພື່ອຊີ້ນຳນຳພາການປະຕິວັດສັງຄົມດ້ວຍການປະຕິວັດໂດຍຕົນເອງຂອງພັກ.

ພວກເຮົາຕ້ອງຈັດຕັ້ງປະຕິບັດຄວາມຮຽກຮ້ອງໂດຍລວມຂອງການກໍ່ສ້າງພັກໃນຍຸກໃໝ່,ບູລະນະລະບົບຄຸ້ມຄອງພັກຢ່າງເຂັ້ມງວດຮອບດ້ານໃຫ້ສົມບູນ, ຊຸກຍູ້ການສະສາງລ້າງສວ່າຍຕົນເອງ, ປັບປຸງຕົນເອງ, ປະຕິຮູບຕົນເອງ ແລະຍົກລະດັບຕົນເອງຂອງພັກໃຫ້ສູງຂຶ້ນຢ່າງຮອບດ້ານ, ເຮັດໃຫ້ພັກ ພວກເຮົາຍຶດໝັ້ນອຸດົມການແຕ່ຫົວທີແລະພາລະກຳ, ເປັນແກນນຳທີ່ເຂັ້ມແຂງຂອງພາລະກິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນຢ່າງສະເໝີຕົ້ນສະເໝີປາຍ.

**(ໜຶ່ງ) ຍຶດໝັ້ນ ແລະເພີ່ມທະວີການນຳພາລວມສູນເປັນເອກະພາບຂອງສູນກາງພັກ.** ການນຳພາຂອງພັກແມ່ນຮອບດ້ານ, ເປັນລະບົບ ແລະກວມລວມ, ສະນັ້ນ ຕ້ອງຈັດຕັ້ງປະຕິບັດການນຳພາຂອງພັກຢ່າງຮອບດ້ານ, ເປັນລະບົບ ແລະກວມລວມ. ຕ້ອງບູລະນະລະບົບລະບຽບການນຳພາຂອງພັກທີ່ກຳແໜ້ນສະພາບໂດຍລວມ ແລະປະສານສົມທົບກັບທຸກຝ່າຍ, ປັບປຸງກົນໄກຈັດຕັ້ງປະຕິບັດຂໍ້ຕົກ

ລົງທີ່ສຳຄັນຂອງສູນກາງພັກ, ຮັບປະກັນໃຫ້ທົ່ວພັກຕ້ອງເປັນເອກະພາບກັນໃນລະດັບສູງ ກັບສູນກາງພັກໃນດ້ານຫຼັກໝັ້ນການເມືອງ, ທິດທາງການເມືອງ, ຫຼັກການການເມືອງ ແລະເສັ້ນທາງການເມືອງ, ຮັບປະກັນຄວາມສາມັກຄີ ແລະເປັນເອກະພາບກັນຂອງພັກ. ຕ້ອງບູລະນະອົງການຈັດຕັ້ງທີ່ປະສານງານການເປີກສາຫາລື ແລະທຳການຕັດສິນຂອງສູນກາງພັກ, ເພີ່ມທະວີການນຳພາລວມສູນເອກະພາບຂອງສູນກາງພັກຕໍ່ວຽກງານສຳຄັນຕ່າງໆ. ຕ້ອງເພີ່ມທະວີການກໍ່ສ້າງພັກທາງການເມືອງ, ເຂັ້ມງວດໃນດ້ານວິໄນການເມືອງ ແລະກົດລະບຽບການເມືອງ, ໃຫ້ຄະນະພັກ (ຈຸພັກການນຳ) ທຸກຂັ້ນຕ້ອງປະຕິບັດຕາມໜ້າທີ່ຮັບຜິດຊອບໃນຖານະເປັນຫຼັກແຫຼ່ງ, ຍົກຄວາມສາມາດວິເຄາະໄຈ້ແຍກທາງການເມືອງ, ຄວາມສາມາດເຊື່ອມຊຶມທາງການເມືອງ, ຄວາມສາມາດປະຕິບັດທາງການເມືອງຂອງອົງການຈັດຕັ້ງພັກ ແລະພະນັກງານສະມາຊິກພັກທຸກຂັ້ນໃຫ້ສູງຂຶ້ນ. ຕ້ອງຍຶດໝັ້ນໃນການກຳອຳນາດຕາມຫຼັກວິທະຍາສາດ, ກຳອຳນາດຢ່າງມີປະຊາທິປະໄຕ, ກຳອຳນາດຕາມກົດໝາຍ, ຜັນຂະຫຍາຍລະບອບລວມສູນປະຊາທິປະໄຕ, ປະດິດສ້າງ ແລະດັດແກ້ຮູບການການນຳພາ, ຍົກສູງຄວາມສາມາດຂອງພັກໃນດ້ານການກຳກັບທິດທາງ, ວາງແຜນພາກສ່ວນລວມ, ກຳນົດນະໂຍບາຍ ແລະຊຸກຍູ້ການປະຕິຮູບ ເພື່ອປຸກລະດົມຄວາມຫ້າວຫັນຂອງທຸກຝ່າຍຂຶ້ນ. ຕ້ອງເພີ່ມທະວີລັກສະນະການເມືອງ, ລັກສະນະຍຸກສະໄໝ, ລັກສະນະຫຼັກການ ແລະລັກສະນະຕໍ່ສູ້ຂອງຊີວິດການເມືອງພາຍໃນພັກ, ຕ້ອງນຳໃຊ້ອາວຸດແຫ່ງການຕຳນິກັນ ແລະຕຳນິຕົນເອງໃຫ້ດີ, ສືບຕໍ່ປັບປຸງສະພາບການເມືອງພາຍໃນພັກໃຫ້ມີຄວາມປອດໃສຂາວສະອາດ.

**(ສອງ) ຍຶດໝັ້ນທ້ອນໂຮມແນວຄິດ ແລະສ້າງຈິດວິນຍານດ້ວຍແນວຄິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່.** ການຝຶກຝົນຫຼໍ່ຫຼອມທົ່ວພັກດ້ວຍທິດສະດີປະດິດສ້າງຂອງພັກ ແມ່ນໜ້າທີ່ກົກຮາກຂອງການກໍ່ສ້າງພັກດ້ານແນວຄິດ. ຕ້ອງເພີ່ມທະວີການກໍ່ສ້າງພັກດ້ານແນວຄິດຢ່າງຮອບດ້ານ, ຍຶດໝັ້ນສ້າງຄວາມເປັນເອກະພາບກັນດ້ານແນວຄິດ, ດ້ານຈິດໃຈ ແລະດ້ານການເຄື່ອນໄຫວ ດ້ວຍ

ແນວຄິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່, ຈັດຕັ້ງປະຕິບັດແຜນການສຶກສາອົບຮົມກ່ຽວກັບທິດສະດີປະດິດສ້າງຂອງພັກ ເພື່ອສ້າງສາພັກການເມືອງແຫ່ງການຮຽນຮູ້ລັດທິມາກ. ຕ້ອງເພີ່ມທະວີການສຶກສາດ້ານອຸດົມຄະຕິ, ໃຫ້ສະມາຊິກພັກທຸກຖ້ວນໜ້າຕ້ອງຈົດຈຳໄວ້ຈຸດປະສົງ ຂອງພັກ, ຕ້ອງແກ້ໄຂບັນຫາ ກ່ຽວກັບໂລກະທັດ, ຊີວະທັດ ແລະຄ່ານິຍົມທີ່ເປັນບັນຫາລວມໃຫ້ດີ, ມີສະຕິຕື່ນຕົວໃນການກາຍເປັນຜູ້ເຊື່ອຖືທີ່ໜັກແໜ້ນ ແລະຜູ້ຈັດຕັ້ງປະຕິບັດທີ່ຊື່ສັດຕາມອຸດົມການອັນສູງສົ່ງຂອງກອມມູນິດແລະອຸດົມການຮ່ວມຂອງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ. ຕ້ອງຍຶດໝັ້ນໃຫ້ການຮຽນ, ການນຶກຄິດ ແລະການນຳໃຊ້ປະສົມປະສານກັນ, ໃຫ້ຄວາມຮັບຮູ້, ຄວາມເຊື່ອຖື ແລະການປະພຶດເປັນເອກະພາບກັນ, ຫັນແນວຄິດສັງຄົມນິຍົມທີ່ມີສີສັນພິເສດຂອງຈີນໃນຍຸກໃໝ່ໃຫ້ເປັນ ກຳລັງທີ່ເຂັ້ມແຂງໃນການຍຶດໝັ້ນອຸດົມການ, ຝຶກຝົນຫຼໍ່ຫຼອມສະຕິພັກ, ຊີ້ນຳພຶດຕິກຳ ແລະຊຸກຍູ້ວຽກງານຕ່າງໆກ້າວໄປຂ້າງໜ້າ. ຕ້ອງຍຶດໝັ້ນໃຫ້ການຫຼໍ່ຫຼອມແນວຄິດດ້ວຍທິດສະດີ ປະສານສົມທົບກັບການຮຽນ ແລະການສຶກສາອົບຮົມກ່ຽວກັບປະຫວັດສາດຂອງພັກທີ່ດຳເນີນເປັນປົກກະຕິ ແລະເປັນເວລາຍາວນານ ເພື່ອນຳພາບັນດາສະມາຊິກພັກ ແລະພະນັກງານການນຳເພີ່ມທະວີຄວາມເຂົ້າໃຈຕໍ່ເຫດຜົນໂດຍຜ່ານການຮຽນປະຫວັດສາດ, ເພີ່ມທະວີຄວາມໝັ້ນໃຈໂດຍຜ່ານການຮຽນປະຫວັດສາດ, ເສີມສ້າງຄຸນສົມບັດໂດຍຜ່ານການຮຽນປະຫວັດສາດ ແລະເພີ່ມທະວີຄວາມສາມາດປະຕິບັດຕົວຈິງໂດຍຜ່ານການຮຽນປະຫວັດສາດ, ສືບທອດມູນເຊື້ອປະຕິວັດ. ຕ້ອງລົງເລິກດຳເນີນການສຶກສາອົບຮົມທີ່ມີຫົວຂໍ້ສະເພາະຢູ່ໃນທົ່ວພັກໂດຍເນັ້ນໃສ່ພະນັກງານການນຳຂັ້ນເມືອງຂຶ້ນໄປເປັນຈຸດສຸມ.

**(ສາມ) ບູລະນະລະບົບລະບຽບການປະຕິວັດໂດຍຕົນເອງຂອງພັກ.** ຕ້ອງຍຶດໝັ້ນການຄຸ້ມຄອງພັກດ້ວຍລະບຽບການ, ຄຸ້ມຄອງພັກຕາມກົດຂໍ້ກຳນົດ, ຖືກົດລະບຽບພັກເປັນຫຼັກ, ຖືລະບອບລວມສູນປະຊາທິປະໄຕເປັນແກນກາງ, ບູລະນະລະບົບລະບຽບການແລະກົດຂໍ້ກຳນົດພາຍໃນພັກໃຫ້ຄົບຖ້ວນສົມບູນ, ເພີ່ມທະວີຄວາມສັກສິດ ແລະການປະຕິດບັດຕາມກົດຂໍ້ກຳນົດພາຍໃນພັກ, ໃຫ້ຈົ່ງຕົວເປັນກົນ

ໄກທີ່ຍຶດໝັ້ນສັດຈະທຳ, ແກ້ໄຂຄວາມຜິດ, ປາກົດເຫັນບັນຫາ ແລະດັດແກ້ຂໍ້ຜິດພ້ຽນ. ບູລະນະລະບົບຕິດຕາມກວດກາທີ່ມີການນຳພາເປັນເອກະພາບກັນຂອງພັກ, ມີການປົກຫຸ້ມຢ່າງຮອບດ້ານ, ມີຄວາມສັກສິດ ແລະປະສິດທິພາບສູງ, ສ້າງກົນໄກຕິດຕາມກວດກາ ແລະຈຳກັດການໃຊ້ສິດອຳນາດໃຫ້ສົມບູນ, ຖືການຕິດຕາມກວດກາພາຍໃນພັກເປັນຕົ້ນຕໍ, ຊຸກຍູ້ໃຫ້ການຕິດຕາມກວດກາປະເພດຕ່າງໆປະສານສົມທົບກັນ, ໃຫ້ການນຳໃຊ້ສິດອຳນາດຢູ່ພາຍໃຕ້ຄວາມໂປ່ງໃສ. ຊຸກຍູ້ໃຫ້ການຕິດຕາມກວດກາທາງການເມືອງເປັນຮູບປະທຳ, ຖືກເປົ້າໝາຍ ແລະເປັນປົກກະຕິ, ເພີ່ມທະວີປະສິດທິຜົນການຕິດຕາມກວດກາຕໍ່ການນຳສູງສຸດ ແລະຄະນະນຳ. ເສີມຂະຫຍາຍບົດບາດສຳຄັນຂອງການ ລາດຕະເວນກວດກາທາງການເມືອງ, ເພີ່ມທະວີການປັບແກ້ບັນຫາທີ່ຖືກຊີ້ອອກມາ ແລະການໝູນໃຊ້ໝາກຜົນທີ່ໄດ້ຮັບໃນການລາດຕະເວນກວດກາ. ຕ້ອງຈັດຕັ້ງປະຕິບັດຕາມໜ້າທີ່ຮັບຜິດຊອບທາງການເມືອງໃນການຄຸ້ມຄອງພັກຢ່າງເຂັ້ມງວດຮອບດ້ານ, ແລະນຳໃຊ້ການສືບຫາຄວາມຮັບຜິດຊອບເປັນຢ່າງດີ.

**(ສີ່) ສ້າງຖັນແຖວພະນັກງານທີ່ມີຄຸນນະພາບສູງທີ່ສາມາດແບກຫາບໜ້າທີ່ສຳຄັນໃນການຟື້ນຟູຄວາມຈະເລີນຮຸ່ງເຮືອງຂອງຊາດ.** ການສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານ, ຕ້ອງມີຖັນແຖວພະນັກງານທີ່ມີຄວາມເຂັ້ມແຂງທາງການເມືອງ, ສອດຄ່ອງກັບຄວາມຮຽກຮ້ອງຕ້ອງການຂອງຍຸກໃໝ່ ແລະມີຄວາມສາມາດໃນການນຳພາການສ້າງສາຄວາມທັນສະໄໝ. ຕ້ອງຍຶດໝັ້ນຫຼັກການທີ່ພັກຄຸ້ມຄອງພະນັກງານ, ຍຶດໝັ້ນຄັດເລືອກຄົນທີ່ມີທັງຄຸນສົມບັດ ແລະມີຄວາມຮູ້ຄວາມສາມາດ, ແຕ່ຄຸນສົມບັດຕ້ອງມາກ່ອນ, ຕ້ອງຄັດເລືອກຄົນຈາກແຫ່ງຕ່າງໆຂໍແຕ່ເປັນຄົນທີ່ມີຄຸນສົມບັດ ແລະມີຄວາມສາມາດ, ຕ້ອງຈັດຕັ້ງປະຕິບັດຕາມມາດຕະຖານຄັດເລືອກພະນັກງານຜູ້ດີເດັ່ນໃນຍຸກໃໝ່ໄປຕາມຕົວຈິງ. ຕັ້ງທິດຊີ້ນຳທີ່ຖືກຕ້ອງໃນການຄັດເລືອກ ແລະນຳໃຊ້ຄົນ ເພື່ອຄັດເລືອກພະນັກງານວິຊາການທີ່ມີຄຸນນະພາບສູງທີ່ເປັນຄົນຈົງຮັກພັກດີ, ປອດໃສຂາວສະອາດແລະມີຄວາມຮັບຜິດຊອບ, ປະກອບຄະນະນຳທຸກຂັ້ນດ້ວຍບຸກຄົນທີ່ດີເດັ່ນ ແລະເຂັ້ມແຂງ. ຕ້ອງຍຶດໝັ້ນຖືມາດຕະຖານການ

ເມືອງໄວ້ຢູ່ໃນຖານະສຳຄັນອັນດັບໜຶ່ງ, ຕ້ອງລົງເລິກເຮັດວຽກສຳຫຼວດກວດກາພະນັກງານໃນດ້ານຄຸນທາດການເມືອງຢ່າງແທ້ຈິງ, ເນັ້ນການກວດກາດ້ານການເມືອງ ແລະດ້ານປອດໃສຂາວສະອາດ. ຕ້ອງເພີ່ມທະວີການຝຶກຝົນພະນັກງານໃນດ້ານພຶດຕິກຳຕົວຈິງ ແລະດ້ານວິຊາການ, ເນັ້ນການຝຶກຝົນຫຼໍ່ຫຼອມພະນັກງານໂດຍຜ່ານຈາກການຕໍ່ສູ້ທີ່ສຳຄັນ, ໃຫ້ພະນັກງານມີຄວາມສາມາດເພີ່ມຂຶ້ນໃນດ້ານການຊຸກຍູ້ການພັດທະນາດ້ວຍຄຸນນະພາບສູງ, ຮັບໃຊ້ປະຊາຊົນ, ປ້ອງກັນແລະແກ້ໄຂຄວາມສ່ຽງ. ໃຫ້ພະນັກງານເພີ່ມທະວີຈິດໃຈຕໍ່ສູ້ແລະຄວາມສາມາດຕໍ່ສູ້, ສຸມໃສ່ການເພີ່ມຄວາມສາມາດໃນການປ້ອງກັນຄວາມສ່ຽງ, ຮັບມືກັບສິ່ງທ້າທາຍ ແລະທົນຕໍ່ແຮງກົດດັນ, ສາມາດນຳໜ້າແບກຫາບໜ້າທີ່ຮັບຜິດຊອບແລະສ້າງຜົນງານທີ່ດີ ເພື່ອກາຍເປັນພະນັກງານທີ່ສາມາດສະແດງໃຫ້ເຫັນຄວາມຮັບຜິດຊອບໃນຍາມທຳມະດາ, ນຳໜ້າຢືນອອກມາໄດ້ໃນຈຸດເວລາອັນສຳຄັນ ແລະກ້າຕໍ່ສູ້ໂດຍບໍ່ຄິດຄ່າຕອບແທນໃນກໍລະນີອັນຕະລາຍ. ຕ້ອງບູລະນະລະບົບກວດສອບ ແລະຕີລາຄາພະນັກງານການນຳໃຫ້ຄົບຖ້ວນສົມບູນ, ໃຫ້ພະນັກງານສ້າງ ແລະປະຕິບັດຕາມທັດສະນະທີ່ຖືກຕ້ອງຕໍ່ກັບຜົນງານບໍລິຫານ, ຊຸກຍູ້ໃຫ້ພະນັກງານຂຶ້ນແລະລົງຕຳແໜ່ງໄດ້, ທັງເຂົ້າແລະອອກຕຳແໜ່ງໄດ້ເຊັ່ນດຽວກັນ, ເພື່ອຈໍ່ຕົວເປັນສະພາບການທີ່ດີງາມໃຫ້ຜູ້ມີຄວາມສາມາດຂຶ້ນຕຳແໜ່ງ, ຜູ້ດີເດັ່ນໄດ້ຮັບການຍ້ອງຍໍ, ສ່ວນຜູ້ທີ່ບໍ່ມີຄວາມສາມາດກໍລົງມາ, ຜູ້ທີ່ເຮັດບໍ່ດີກໍຖືກໄລ່ອອກ. ຕ້ອງວາງແຜນຮັບປະກັນໃຫ້ມີຜູ້ສືບທອດປ່ຽນແທນທີ່ເປັນພາລະກິດສຳຄັນທີ່ສຸດ, ສ້າງກົນໄກວຽກງານເປັນປົກກະຕິໃນດ້ານການອົບຮົມ ແລະຄັດເລືອກພະນັກງານທີ່ໜຸ່ມແໜ້ນແລະດີເດັ່ນ, ຖືການໄປຝຶກຝົນຫຼໍ່ຫຼອມແລະເຕີບໃຫຍ່ຢູ່ຮາກຖານ ແລະເຂດທຸກຍາກລຳບາກເປັນຊ່ອງທາງສຳຄັນໃນການອົບຮົມພະນັກງານໜຸ່ມ. ໃຫ້ຄວາມສຳຄັນຕໍ່ວຽກງານອົບຮົມ ແລະຄັດເລືອກພະນັກງານເພດຍິງ, ເສີມຂະຫຍາຍບົດບາດສຳຄັນຂອງພະນັກງານເພດຍິງ. ໃຫ້ຄວາມສຳຄັນຕໍ່ການອົບຮົມ ແລະນຳໃຊ້ພະນັກງານຊົນເຜົ່າສ່ວນໜ້ອຍໃຫ້ດີ, ເຮັດວຽກກ່ຽວກັບພະນັກງານທີ່ບໍ່ແມ່ນສະມາຊິກພັກກອມມູນິດຈີນໃຫ້ດີ. ເຮັດວຽກກ່ຽວກັບພະນັກງານທີ່ບຳນານ

ໃຫ້ດີ. ເພີ່ມທະວີ ແລະປັບປຸງວຽກງານຂອງລັດຖະກອນ, ຈັດສັນຕຳແໜ່ງງານຂອງອົງການຈັດຕັ້ງຕ່າງໆໃຫ້ດີ. ຕ້ອງຍຶດໝັ້ນປະສົມປະສານວຽກງານການຄຸ້ມຄອງຢ່າງເຂັ້ມງວດ ແລະການຮັກແພງພະນັກງານ, ເພີ່ມທະວີການຄຸ້ມຄອງບໍລິຫານຢ່າງຮອບດ້ານ ແລະຕິດຕາມກວດກາຢ່າງເປັນປະຈຳຕໍ່ພະນັກງານ, ຈັດຕັ້ງປະຕິບັດຕາມ “3 ຈຳແນກ”, ສົ່ງເສີມໃຫ້ພະນັກງານກ້າຮັບຜິດຊອບ ແລະຕັ້ງໜ້າເຮັດວຽກໃຫ້ເກີດຜົນ. ຕ້ອງເອົາໃຈໃສ່ໃຫ້ຄວາມຮັກແພງກັບພະນັກງານຂັ້ນຮາກຖານ ໂດຍສະເພາະແມ່ນພະນັກງານຢູ່ເຂດທີ່ທຸກຍາກທຸລະກັນດານ.

**(ຫ້າ) ເພີ່ມທະວີບົດບາດການເມືອງແລະບົດບາດການຈັດຕັ້ງຂອງອົງການຈັດຕັ້ງພັກ.** ລະບົບການຈັດຕັ້ງທີ່ແໜ້ນໜາ ແມ່ນທ່າແຮງຂອງພັກ ແລະແຫຼ່ງກຳລັງຂອງພັກ. ອົງການຈັດຕັ້ງພັກທຸກຂັ້ນຕ້ອງປະຕິບັດຕາມພັນທະໜ້າທີ່ທຸກດ້ານ ທີ່ມອບໝາຍໂດຍກົດລະບຽບຂອງພັກ, ຕ້ອງຜັນຂະຫຍາຍ ແລະຈັດຕັ້ງປະຕິບັດທິດທາງນະໂຍບາຍຂອງພັກ ແລະຂໍ້ຕົກລົງຂອງພັກໃຫ້ດີ, ຕ້ອງຈັດຕັ້ງ ແລະສາມັກຄີປະຊາຊົນອັນມະຫາສານໃນທຸກຂົງເຂດໃຫ້ດີ. ຕ້ອງຍຶດໝັ້ນທິດທາງພົ້ນເດັ່ນທີ່ກຳກັບຮາກຖານໃຫ້ດີ, ສ້າງບ້ານຊົນນະບົດໃຫ້ຈະເລີນດ້ວຍການກຳແໜ້ນວຽກງານກໍ່ສ້າງພັກໃຫ້ດີ, ເພີ່ມທະວີວຽກງານການກໍ່ສ້າງພັກເຂດຊຸມຊົນໃນຕົວເມືອງ, ຊຸກຍູ້ໃຫ້ການກໍ່ສ້າງພັກນຳພາການຄຸ້ມຄອງບໍລິຫານຂັ້ນຮາກຖານ, ປັບປຸງການຈັດຕັ້ງຮາກຖານພັກທີ່ອ່ອນແອ ແລະແຕກແຍກຢ່າງຕໍ່ເນື່ອງ, ສ້າງການຈັດຕັ້ງຮາກຖານພັກໃຫ້ເປັນປ້ອມໝັ້ນສູ້ຮົບທີ່ເຂັ້ມແຂງທີ່ສາມາດບັນລຸການນຳພາຂອງພັກ ຢ່າງບັງເກີດຜົນ. ຍົກສູງຄຸນນະພາບການກໍ່ສ້າງພັກໃນອົງການຈັດຕັ້ງຕ່າງໆຢ່າງຮອບດ້ານ, ຊຸກຍູ້ວຽກງານກໍ່ສ້າງພັກໃນໜ່ວຍງານວິຊາການໃຫ້ກ້າວໄປຂ້າງໜ້າ. ຊຸກຍູ້ໃຫ້ລັດວິສາຫະກິດ ແລະວິສາຫະກິດການເງິນຕ່າງໆເພີ່ມທະວີການນຳພາຂອງພັກໃນການບູລະນະການຄຸ້ມຄອງບໍລິຫານ, ເພີ່ມທະວີວຽກງານກໍ່ສ້າງພັກໃນບັນດາວິສາຫະກິດລະບອບກຳມະສິດປະສົມ ແລະວິສາຫະກິດທີ່ບໍ່ແມ່ນລະບອບກຳມະສິດສ່ວນລວມ, ປັບປຸງລະບຽບການຄຸ້ມຄອງວຽກງານກໍ່ສ້າງພັກຂອງສະພາຂະແໜງການ, ສະມາຄົມ ແລະສະ

ພາການຄ້າໃຫ້ເປັນລະບຽບແບບແຜນ. ເພີ່ມທະວີການກໍ່ສ້າງພັກຂອງອົງການຈັດຕັ້ງເສດຖະກິດໃໝ່, ອົງການຈັດຕັ້ງສັງຄົມໃໝ່ ແລະກຸ່ມຄົນທີ່ປະກອບອາຊີບໃໝ່. ໃຫ້ຄວາມສຳຄັນໃນການຂະຫຍາຍສະມາຊິກພັກຢູ່ໃນກຸ່ມໄວໜຸ່ມ, ກຳມະກອນ, ຊາວກະສິກອນ ແລະປັນຍາຊົນ, ເພີ່ມທະວີ ແລະປັບປຸງການສຶກສາ ແລະຄຸ້ມຄອງສະມາຊິກພັກໂດຍສະເພາະແມ່ນສະມາຊິກພັກທີ່ເລື່ອນລອຍເລື້ອຍໆ. ຜັນຂະຫຍາຍລະບອບປະຊາທິປະໄຕພາຍໃນພັກ, ຮັບປະກັນສິດຂອງສະມາຊິກພັກ, ປຸກລະດົມຂົນຂວາຍໃຫ້ສະມາຊິກພັກເສີມຂະຫຍາຍບົດບາດເປັນແບບຢ່າງນຳໜ້າ. ຕ້ອງປະຕິບັດວິໄນຕໍ່ສະມາຊິກພັກທີ່ບໍ່ໄດ້ມາດຖານຢ່າງເຂັ້ມງວດແລະເໝາະສົມ ເພື່ອຮັບປະກັນລັກສະນະກ້າວໜ້າ ແລະຄວາມບໍລິສຸດຂອງຖັນແຖວສະມາຊິກພັກ.

**(ຫົກ) ຍຶດໝັ້ນເພີ່ມທະວີການປັບປຸງແບບແຜນແລະເຂັ້ມງວດວິໄນຢ່າງເຄັ່ງຄັດ.** ບັນຫາກ່ຽວກັບແບບແຜນຂອງພັກພົວພັນເຖິງຄວາມເປັນຕາຍຂອງພັກກຳອຳນາດ. ຕ້ອງເສີມຂະຫຍາຍມູນເຊື້ອອັນມີກຽດ ແລະແບບແຜນອັນດີງາມຂອງພັກ, ຊຸກຍູ້ສະມາຊິກພັກພະນັກງານ ໂດຍສະເພາະແມ່ນພະນັກງານການນຳຕ້ອງນຳໜ້າລົງເລິກດຳເນີນການສຳຫຼວດຄົ້ນຄວ້າ, ເຮັດແທ້ທຳຈິງ, ວາງມາດຕະການຕົວຈິງ, ສ້າງຜົນງານຕົວຈິງ. ຈັດຕັ້ງປະຕິບັດເນື້ອໃນຈິດໃຈຂອງ “ກົດເຫຼັກ 8 ຂໍ້” ຂອງສູນກາງຢ່າງຕໍ່ເນື່ອງ, ກຳກັບພະນັກງານການນຳທີ່ເປັນສ່ວນໜ້ອຍທີ່ສຳຄັນ, ໃຫ້ຂັ້ນເທິງເປັນແບບຢ່າງແກ່ຂັ້ນລຸ່ມ, ສືບຕໍ່ລົງເລິກປັບແກ້ “4 ແບບແຜນ”, ເຊິ່ງສຸມໃສ່ປັບແກ້ລັດທິຮູບການ ແລະລັດທິອາຍາສິດ, ເດັດດ່ຽວທັບມ້າງແນວຄິດອະພິສິດ ແລະການກະທຳອະພິສິດ. ຕ້ອງກຳແໜ້ນຈຸດພິເສດຂອງການກໍ່ສ້າງແບບແຜນຕາມແຕ່ລະທ້ອງຖິ່ນ, ແຕ່ລະຂະແໜງການ ແລະແຕ່ລະໄລຍະ, ສຸມໃສ່ລົງເລິກປັບປຸງແກ້ໄຂບັນຫາທີ່ເກີດຂຶ້ນໂດຍທົ່ວໄປ ແລະເກີດຂຶ້ນແລ້ວເກີດຂຶ້ນອີກ ເພື່ອຊຸກຍູ້ການກໍ່ສ້າງແບບແຜນເປັນປົກກະຕິ ແລະເປັນເວລາຍາວນານ. ຕ້ອງເພີ່ມທະວີການກໍ່ສ້າງວິໄນຂອງພັກ, ເຕືອນໃຫ້ພະນັກງານການນຳໂດຍສະເພາະແມ່ນພະນັກງານການນຳຂັ້ນສູງຕ້ອງມີຄວາມເຂັ້ມງວດຕໍ່ຕົນເອງ, ມີຄວາມເຂັ້ມງວດ

ຕໍ່ໜ້າທີ່ຮັບຜິດຊອບຂອງຕົນ, ມີຄວາມເຂັ້ມງວດຕໍ່ຂົງເຂດວຽກງານທີ່ຄຸ້ມຄອງໂດຍຕົນເອງ, ສຳລັບບັນຫາທີ່ລະເມີດວິໄນພັກ ເກີດຂຶ້ນເທື່ອໃດກໍຕ້ອງຈັດການເທື່ອນັ້ນໃຫ້ໄດ້. ຕ້ອງຍຶດໝັ້ນກຳແໜ້ນວຽກງານສະຕິພັກ, ແບບແຜນພັກ ແລະວິໄນພັກໄປພ້ອມກັນ, ປັບປຸງພື້ນຖານໃຫ້ໝັ້ນຄົງຈາກດ້ານແນວຄິດ, ຍົກສູງສະຕິພັກແລະຄວາມຕື່ນຕົວ, ເພີ່ມທະວີຄວາມສາມາດໃນການປ້ອງກັນບໍ່ເຊື່ອມຄຸນປ່ຽນທາດ, ສ້າງແບບແຜນເຂັ້ມແຂງທີ່ບໍ່ເສຍທາດຂາດຄຸນໃນຍາມຮັ່ງມີ, ໜັກແໜ້ນບໍ່ຫວັ່ນໄຫວຄອນແຄນໃນຍາມທຸກຍາກ, ບໍ່ຈຳນົນຕໍ່ຄວາມຮຸນແຮງແລະມະຫາອຳນາດ.

**(ເຈັດ) ເດັດຂາດເອົາຊະນະບັ້ນບຸກຂໍ້ຫຍຸ້ງຍາກ ແລະບັ້ນຍາວນານໃນການຕໍ່ສູ້ຕ້ານກັບການສໍ້ລາດບັງຫຼວງ.** ການສໍ້ລາດບັງຫຼວງເປັນພະຍາດຮ້າຍແຮງທີ່ສຸດ ທີ່ກະທົບຕໍ່ພະລັງຊີວິດ ແລະກຳລັງສູ້ຮົບຂອງພັກ, ການຕ້ານການສໍ້ລາດບັງຫຼວງ ເປັນການປະຕິວັດໂດຍຕົນເອງທີ່ເຖິງຖອງທີ່ສຸດ. ຂໍພຽງແຕ່ມີເງື່ອນໄຂທີ່ສາມາດພາໃຫ້ເກີດບັນຫາສໍ້ລາດບັງຫຼວງ, ການຕໍ່ສູ້ຕ້ານການສໍ້ລາດບັງຫຼວງກໍບໍ່ສາມາດຢຸດສະງັກໄດ້, ຕ້ອງມີການຕໍ່ສູ້ຕະຫຼອດໄປ. ຕ້ອງຍຶດໝັ້ນຊຸກຍູ້ວຽກງານຕາມທິດ "ບໍ່ກ້າສໍ້ລາດບັງຫຼວງ, ບໍ່ສາມາດສໍ້ລາດບັງຫຼວງ ແລະບໍ່ຢາກສໍ້ລາດບັງຫຼວງ" ໄປພ້ອມກັນ, ຕ້ອງອອກແຮງພ້ອມກັນ, ອອກແຮງສຸມໃສ່ເປົ້າໝາຍດຽວກັນ ແລະອອກແຮງໂດຍລວມກັນ. ຕ້ອງຕ້ານ ແລະລົງໂທດການສໍ້ລາດບັງຫຼວງດ້ວຍທ່າທີບໍ່ໂຍະຍານແມ່ນແຕ່ໜ້ອຍດຽວ, ໃຊ້ຄວາມແຮງຫຼາຍກວ່າເກົ່າເຂົ້າໃນການສະກັດກັ້ນບໍ່ໃຫ້ເກີດການສໍ້ລາດບັງຫຼວງເພີ່ມຂຶ້ນ ແລະຍິ່ງຕ້ອງກຳຈັດປາກົດການສໍ້ລາດບັງຫຼວງທີ່ມີຢູ່ໃນປັດຈຸບັນຢ່າງບັງເກີດຜົນກວ່າເກົ່າ, ເດັດດ່ຽວສືບສວນລົງໂທດຕໍ່ການສໍ້ລາດບັງຫຼວງທີ່ບັນຫາການເມືອງ ແລະບັນຫາເສດຖະກິດເຊື່ອມສານເຂົ້າກັນ, ເດັດດ່ຽວປ້ອງກັນບໍ່ໃຫ້ພະນັກງານການນຳກາຍເປັນຜູ້ຕາງໜ້າ ແລະຕົວແທນໃຫ້ກຸ່ມຜົນປະໂຫຍດ ແລະກຸ່ມອິດທິກຳລັງຕ່າງໆ, ດັດດ່ຽວປັບແກ້ບັນຫາທີ່ນັກການເມືອງກັບນັກທຸລະກິດສົມຮູ້ຮ່ວມຄິດກັນທຳລາຍສະພາບການເມືອງ ແລະສະພາບແວດລ້ອມການພັດທະນາເສດຖະກິດໂດຍບໍ່ປ່ອຍປະລະເລີຍຢ່າງເດັດຂາດ. ຕ້ອງລົງເລິກແກ້ໄຂການສໍ້

ລາດບັງຫຼວງທີ່ເກີດຂຶ້ນຢູ່ໃນຂົງເຂດທີ່ມີສິດອຳນາດລວມສູນ, ເງິນທຶນລວມສູນ ແລະຊັບພະຍາກອນລວມສູນ, ເດັດດ່ຽວລົງໂທດຕໍ່ການສໍ້ລາດບັງຫຼວງຂອງພະນັກງານຂັ້ນຮາກຖານທີ່ຢູ່ອ້ອມຂ້າງປະຊາຊົນ, ສືບສວນແລະແກ້ໄຂບັນຫາທີ່ຄອບຄົວ ລູກຫຼານກໍຄືຍາດພີ່ນ້ອງ ແລະພະນັກງານຜູ້ໃກ້ຊິດຂອງພະນັກງານການນຳໃນການສໍ້ລາດບັງຫຼວງ ແລະສະແຫວງຫາຜົນປະໂຫຍດສ່ວນຕົວໂດຍນຳໃຊ້ຖານະບົດບາດແລະອິດທິພົນຂອງຜູ້ກ່ຽວຢ່າງເຂັ້ມງວດ, ຍຶດໝັ້ນໃນການສືບສວນສອບສວນຜູ້ທີ່ກິນສິນບົນແລະຜູ້ໃຫ້ສິນບົນໄປພ້ອມກັນ, ລົງໂທດຕໍ່ການສໍ້ລາດບັງຫຼວງແບບໃໝ່ ແລະແບບເຊື່ອງຊ້ອນ. ຕ້ອງລົງເລິກການຮ່ວມມືສາກົນໃນດ້ານການຕ້ານການສໍ້ລາດບັງຫຼວງ, ສ້າງກົນໄກໄລ່ຈັບ, ປ້ອງກັນບໍ່ໃຫ້ຜູ້ກ່ຽວໂຕນໜີ ແລະໄລ່ຮິບຂອງກາງທີ່ຢູ່ຕ່າງປະເທດທີ່ເປັນອັນໜຶ່ງອັນດຽວກັນ. ຕ້ອງລົງເລິກການປັບປຸງເຖິງກົກເຖິງຮາກ, ຊຸກຍູ້ການສ້າງກົດໝາຍກ່ຽວກັບການຕ້ານສໍ້ລາດບັງຫຼວງລະດັບຊາດ, ເພີ່ມທະວີການສ້າງສາວັດທະນະທຳປອດໃສຂາວສະອາດໃນຍຸກໃໝ່, ສຶກສາອົບຮົມ ແລະນຳພາສະມາຊິກພັກ ແລະພະນັກງານອັນມະຫາສານ ເພີ່ມທະວີສະຕິຕື່ນຕົວໃນການບໍ່ຄິດຢາກສໍ້ລາດບັງຫຼວງ, ກາຍເປັນຄົນທີ່ປອດໃສຂາວສະອາດ ແລະເຮັດວຽກຢ່າງຊື່ສັດບໍລິສຸດ, ເຮັດໃຫ້ການລົງໂທດມີຄວາມເຂັ້ມງວດ, ການໃຊ້ສິດອຳນາດເປັນລະບຽບແບບແຜນ ແລະການສຶກສາອົບຮົມ ຊີ້ນຳນຳພາປະສານສົມທົບກັນຢ່າງແໜ້ນແຟ້ນ ເພື່ອໃຫ້ໄດ້ຮັບໝາກຜົນດ້ານລະບຽບການຫຼາຍກວ່າເກົ່າ ແລະມີປະສິດທິຜົນດ້ານການຄຸ້ມຄອງໃຫຍ່ກວ່າເກົ່າ.

ບັນດາສະຫາຍ! ຍຸກສະໄໝກຳລັງສົ່ງສຽງຮຽກຮ້ອງສູ່ພວກເຮົາ, ປະຊາຊົນກໍມີຄວາມຄອງຄອຍຕໍ່ພວກເຮົາ, ມີແຕ່ຍຶດໝັ້ນອຸດົມການຢ່າງສະເໝີຕົ້ນສະເໝີປາຍ, ຫ້າວຫັນກ້າວໄປຂ້າງໜ້າ, ຈຶ່ງບໍ່ເຮັດໃຫ້ຍຸກສະໄໝຜິດຫວັງ, ບໍ່ເຮັດໃຫ້ປະຊາຊົນຜິດຫວັງ. ທົ່ວພັກຕ້ອງຈົດຈຳໄວ້ຢ່າງໜັກແໜ້ນວ່າ, ການຍຶດໝັ້ນການນຳພາຮອບດ້ານຂອງພັກ ແມ່ນເສັ້ນທາງທີ່ຕ້ອງເດີນໄປໃນການຍຶດໝັ້ນ ແລະພັດທະນາ

ສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ, ສັງຄົມນິຍົມທີ່ມີສີສັນພິເສດຂອງຈີນ ແມ່ນເສັ້ນທາງທີ່ຕ້ອງເດີນໄປໃນການບັນລຸການຟື້ນຟູຄວາມຈະເລີນຮຸ່ງເຮືອງທີ່ຍິ່ງໃຫຍ່ຂອງປະຊາຊາດຈີນ, ຄວາມສາມັກຄີກັນບາກບັ່ນສູ້ຊົນ ແມ່ນເສັ້ນທາງທີ່ຕ້ອງເດີນໄປຂອງປະຊາຊົນຈີນໃນການປະດິດສ້າງພາລະກິດອັນຍິ່ງໃຫຍ່ທາງປະຫວັດສາດ, ການຜັນຂະຫຍາຍແນວຄວາມຄິດການພັດທະນາແບບໃໝ່ ແມ່ນເສັ້ນທາງທີ່ຕ້ອງເດີນໄປໃນການສ້າງປະເທດເຮົາໃຫ້ພັດທະນາຢ່າງເຂັ້ມແຂງໃນຍຸກໃໝ່ ແລະການຄຸ້ມຄອງພັກຢ່າງເຂັ້ມງວດຮອບດ້ານ ແມ່ນເສັ້ນທາງທີ່ຕ້ອງເດີນໄປໃນການຮັກສາພະລັງຊີວິດຊີວາຂອງພັກຕະຫຼອດໄປ ແລະຜ່ານການສອບເສັງຄັ້ງໃໝ່ເປັນຢ່າງດີ ເຊິ່ງທັງໝົດນີ້ແມ່ນຄວາມຮັບຮູ້ສຳຄັນທີ່ສຸດທີ່ມີລັກສະນະກົດເກນ ທີ່ພວກເຮົາສະຫຼຸບອອກຈາກພຶດຕິກຳມາເປັນເວລາຍາວນານ, ສະນັ້ນ ພວກເຮົາຕ້ອງຖະນຸຖະໜອມເປັນພິເສດ ແລະຍຶດໝັ້ນຕະຫຼອດໄປ, ດ້ວຍຄວາມມຸ່ງໝັ້ນອັນໜັກແໜ້ນ ເພື່ອນຳພາ ແລະຮັບປະກັນກຳປັ່ນອັນຍິ່ງໃຫຍ່ແຫ່ງສັງຄົມນິຍົມທີ່ມີສີສັນພິເສດຂອງຈີນສາມາດແຊ່ງກັບຟ້າຝົນລົມແດງ, ເດີນໄປໄກຢ່າງໜັກແໜ້ນ.

ຄວາມສາມັກຄີຄືກ້ອນກຳລັງ, ຄວາມສາມັກຄີພາໃຫ້ໄດ້ຮັບໄຊຊະນະ. ການສ້າງປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານ, ຕ້ອງເສີມຂະຫຍາຍພະລັງແຮງປະດິດສ້າງອັນຍິ່ງໃຫຍ່ຂອງປະຊາຊົນເປັນລ້ານເປັນຕື້ຄົນຢ່າງເຕັມສ່ວນ. ທົ່ວພັກຕ້ອງຍຶດໝັ້ນຈຸດປະສົງກົກຮາກທີ່ຮັບໃຊ້ປະຊາຊົນຢ່າງ ສຸດອົກສຸດໃຈ, ສ້າງທັດສະນະມະຫາຊົນຢ່າງໜັກແໜ້ນ, ຜັນຂະຫຍາຍແນວທາງມະຫາຊົນ, ເຄົາລົບຈິດໃຈປະດິດສ້າງຂອງປະຊາຊົນ, ຍຶດໝັ້ນເຮັດທຸກສິ່ງຢ່າງເພື່ອປະຊາຊົນ ແລະ ອີງໃສ່ປະຊາຊົນ, ມາຈາກປະຊາຊົນ ແລະເຂົ້າເຖິງປະຊາຊົນ, ຮັກສາສາຍພົວພັນແບບກາຍອິນຊີກັບປະຊາຊົນຢ່າງສະເໝີຕົ້ນສະເໝີປາຍ,ຮັບເອົາການຕຳນິແລະຕິດຕາມກວດກາຈາກປະຊາຊົນຢ່າງສະເໝີຕົ້ນສະເໝີປາຍ, ຮ່ວມລົມຫາຍໃຈ, ຮ່ວມຊາຕາກຳ ແລະຮ່ວມຈິດຮ່ວມໃຈກັບປະຊາຊົນຢ່າງສະເໝີຕົ້ນສະເໝີປາຍ, ປັບປຸງມະຫາສາມັກຄີຂອງປະຊາຊົນບັນດາເຜົ່າໃນທົ່ວປະເທດໃຫ້ໝັ້ນຄົງເລື້ອຍໆ,ເພີ່ມທະວີມະຫາຄວາມ

ສາມັກຄີຂອງລູກຫຼານປະຊາຊາດຈີນຢູ່ພາຍໃນແລະຕ່າງປະເທດໃຫ້ກາຍເປັນກຳລັງແຮງສັງລວມອັນເຂັ້ມແຂງແຫ່ງການຮ່ວມຈິດຮ່ວມໃຈກັນເພື່ອບັນລຸຄວາມໃຝ່ຝັນຂອງຈີນ.

ຊາວໜຸ່ມເຂັ້ມແຂງ, ປະເທດຊາດກໍຈະເຂັ້ມແຂງ. ຊາວໜຸ່ມຈີນໃນປັດຈຸບັນພວມຢູ່ໃນໄລຍະທີ່ດີທີ່ສຸດ ແລະມີເວທີສະແດງຄວາມສາມາດທີ່ກວ້າງຂວາງທີ່ສຸດ, ທັງມີອະນາຄົດໃນການບັນລຸຄວາມໃຝ່ຝັນທີ່ຮຸ່ງເຮືອງທີ່ສຸດ. ທົ່ວພັກຕ້ອງຖືວຽກງານຊາວໜຸ່ມເປັນວຽກງານທີ່ມີລັກສະນະຍຸດທະສາດ, ໃຫ້ການຝຶກອົບຮົມດ້ານແນວຄິດຕໍ່ຊາວໜຸ່ມດ້ວຍທິດສະດີວິທະຍາສາດຂອງພັກ, ສິ່ງແຮງຈູງໃຈໃຫ້ແກ່ຊາວໜຸ່ມດ້ວຍອຸດົມການແຕ່ຫົວທີແລະພາລະກຳຂອງພັກ, ກາຍເປັນຜູ້ຮູ້ໃຈຂອງຊາວໜຸ່ມ, ຜູ້ມີຄວາມຫ້າວຫັນໃນການເຮັດວຽກຊາວໜຸ່ມ ແລະຜູ້ນຳທາງຂອງຊາວໜຸ່ມ. ຊາວໜຸ່ມທັງຫຼາຍຄວນຟັງຄວາມຂອງພັກ ແລະໄປຕາມພັກຢ່າງເດັດດ່ຽວໝຽວແໜ້ນ, ຕັ້ງຄວາມໃຝ່ຝັນຢູ່ໃນໃຈ ແຕ່ກໍຄວນເຮັດແທ້ທຳຈິງ, ກ້າຄິດກ້າເຮັດແລະກໍຮູ້ວິທີໃນການເຮັດແລະເຮັດໃຫ້ສຳເລັດຜົນ, ຕ້ອງຕັ້ງເປົ້າໝາຍໃຫ້ກາຍເປັນຊາວໜຸ່ມຜູ້ດີເດັ່ນໃນຍຸກໃໝ່ທີ່ມີອຸດົມການ, ກ້າຮັບຜິດຊອບ, ອົດທົນ ແລະບາກບັ່ນສູ້ຊົນ, ໃຫ້ໄວໜຸ່ມສ້າງຜົນງານທີ່ສະຫງ່າລາສີໃນພຶດຕິກຳທີ່ຟົດຟື້ນແຫ່ງການສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານ.

ບັນດາສະຫາຍ! ພັກໄດ້ສ້າງພາລະກິດທີ່ຍິ່ງໃຫຍ່ໃນຮອບ 100 ປີທ່າມກາງການສູ້ຊົນອັນຍິ່ງໃຫຍ່ ແລະຍ່ອມຈະສ້າງພາລະກິດທີ່ຍິ່ງໃຫຍ່ຄັ້ງໃໝ່ ໃນທ່າມກາງການສູ້ຊົນອັນຍິ່ງໃຫຍ່ຄັ້ງໃໝ່ເຊັ່ນດຽວກັນ. ທົ່ວພັກ, ທົ່ວກອງທັບ ແລະປະຊາຊົນບັນດາເຜົ່າໃນທົ່ວປະເທດຕ້ອງສາມັກຄີກັນຢ່າງແໜ້ນແຟ້ນຢູ່ອ້ອມຂ້າງສູນກາງພັກ, ຈົດຈຳຄຳວ່າ: ນ້ຳເຕົ້າເປົ່າເຮັດໃຫ້ປະເທດປະສົບຄວາມເສຍຫາຍ, ການເຮັດແທ້ທຳຈິງສາມາດສ້າງຊາດໃຫ້ຈະເລີນ, ຕ້ອງມີຄວາມໝັ້ນໃຈອັນເດັດດ່ຽວ, ຮ່ວມແຮງຮ່ວມໃຈກັນ, ເຮັດວຽກຢ່າງທໍລະຫົດອົດທົນ, ບຸກໜ້າບືນຕົວ, ສາມັກຄີສູ້ຊົນເພື່ອສ້າງສາປະເທດສັງຄົມນິຍົມທັນສະໄໝຢ່າງຮອບດ້ານ ແລະຊຸກຍູ້ການຟື້ນຟູຄວາມຈະເລີນຮຸ່ງເຮືອງທີ່ຍິ່ງໃຫຍ່ຂອງປະຊາຊາດ

ຈີນຢ່າງຮອບດ້ານ!